ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 008 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 23 ມັງກອນ 2025

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 146/ສພຊ, ລົງວັນທີ 11 ທັນວາ 2024 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 9 ມັງກອນ 2025.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານປະເທດ

**ທອງລຸນ ສີສຸລິດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 146 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 11 / 12 / 24

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ
# (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ໃນວາລະຂອງກອງປະຊຸມ ຄັ້ງວັນທີ 4 ທັນວາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 11 ທັນວາ 2024.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ ເລກທີ 67 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 11 ທັນວາ 2024

# ກົດໝາຍ
# ວ່າດ້ວຍການດຳເນີນຄະດີແພ່ງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການດຳເນີນຄະດີ ເພື່ອເຮັດໃຫ້ການພິຈາລະນາແກ້ໄຂ ການຮ້ອງຟ້ອງ ແລະ ການຮ້ອງຂໍ ທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ອື່ນໆ ຖືກຕ້ອງຕາມຄວາມເປັນຈິງ, ສອດຄ່ອງກັບກົດໝາຍ ແລະ ມີຄວາມຍຸຕິທຳ ແນໃສ່ ປົກປັກຮັກສາລະບອບເສດຖະກິດ-ສັງຄົມ, ປົກປ້ອງກຳມະສິດຂອງ ລັດ, ລວມໝູ່, ອົງການຈັດຕັ້ງ, ວິສາຫະກິດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ ເພີ່ມທະວີນິຕິທຳ, ຈຳກັດ ແລະ ສະກັດກັ້ນການລະເມີດກົດໝາຍ, ສຶກສາອົບຮົມສະຕິເຄົາລົບ ແລະ ປະຕິບັດກົດໝາຍ ຢ່າງເຂັ້ມງວດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການດຳເນີນຄະດີແພ່ງ**

ຄະດີແພ່ງ ແມ່ນ ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນ ທີ່ມີລັກສະນະຊັບສົມບັດ ເປັນຕົ້ນ ກຳມະສິດກ່ຽວກັບວັດຖຸສິ່ງຂອງ, ເງິນ, ຄຳ, ຊັບສິນທາງປັນຍາ ແລະ ບາງສາຍພົວພັນສ່ວນຕົວ ທີ່ບໍ່ມີລັກສະນະຊັບສົມບັດ ເປັນຕົ້ນ ຊື່, ນາມສະກຸນ, ກຽດສັກສີ.

ການດຳເນີນຄະດີແພ່ງ ແມ່ນ ການເຄື່ອນໄຫວ ຂອງສານ ແລະ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ເພື່ອພິຈາລະນາແກ້ໄຂ ການຮ້ອງຟ້ອງ ແລະ ການຮ້ອງຂໍ ທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຮ້ອງຟ້ອງ** ໝາຍເຖິງ ການສະເໜີໃຫ້ສານພິຈາລະນາແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ;

2. **ການຮ້ອງຂໍ** ໝາຍເຖິງ ການສະເໜີໃຫ້ສານພິຈາລະນາ ຮັບຮູ້, ຢັ້ງຢືນ, ປະກາດ, ຊີ້ຂາດ ຫຼື ຕັດສິນບັນຫາໃດໜຶ່ງ ທີ່ບໍ່ເປັນຂໍ້ຂັດແຍ່ງ ເປັນຕົ້ນ ການຮັບຮູ້ເປັນຜູ້ຫາຍສາບສູນ, ການຢັ້ງຢືນໃບຕາດິນເສຍຫາຍ ຫຼື ການປະກາດເປັນຜູ້ເສຍຊີວິດ;

3. **ການໂຕ້ແຍ່ງ** ໝາຍເຖິງ ການຊີ້ແຈງຂອງຄູ່ຄວາມຝ່າຍໃດໜຶ່ງ ຕໍ່ຂໍ້ສະເໜີ ຫຼື ຫຼັກຖານ ທີ່ຄູ່ຄວາມຝ່າຍກົງກັນຂ້າມຍົກຂຶ້ນ ໃນໄລຍະການດຳເນີນຄະດີ ກ່ອນການເປີດປະຊຸມສານ;

4. **ການໂຕ້ຖຽງ** ໝາຍເຖິງ ການຊີ້ແຈງຂອງຄູ່ຄວາມຝ່າຍໃດໜຶ່ງ ຕໍ່ຂໍ້ສະເໜີ ຫຼື ຫຼັກຖານ ທີ່ຄູ່ຄວາມຝ່າຍກົງກັນຂ້າມຍົກຂຶ້ນ ໃນທີ່ປະຊຸມສານ;

5. **ການສອບສວນ** ໝາຍເຖິງ ການສອບຖາມ ຫຼື ການເອົາຄຳໃຫ້ການຂອງສານ ກ່ອນການເປີດປະຊຸມສານ;

6. **ຄຳໃຫ້ການ** ໝາຍເຖິງ ຂໍ້ມູນທີ່ໄດ້ຈາກການສອບສວນ ຄູ່ຄວາມ ແລະ ຜູ້ທີ່ກ່ຽວຂ້ອງອື່ນ;

7. **ການໄຕ່ສວນ** ໝາຍເຖິງ ການສອບຖາມຂອງຄະນະສານ ໃນທີ່ປະຊຸມສານ;

8. **ຄຳຕົກລົງຂອງສານ** ໝາຍເຖິງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານ;

9. **ຄຳສັ່ງຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດ ຫຼື ອາຍັດ ຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງພາຕົວ, ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍ ແລະ ຄຳສັ່ງອື່ນ;

10. **ຄຳຊີ້ຂາດຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານ ກ່ຽວກັບ ການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະນາ ແລະ ຄຳຊີ້ຂາດອື່ນ;

11. **ຄຳຕັດສິນຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານທີ່ຕັດສິນເປັນຂັ້ນຕົ້ນ;

12. **ຄຳພິພາກສາຂອງສານ** ໝາຍເຖິງ ໜຶ່ງໃນປະເພດຄຳຕົກລົງຂອງສານທີ່ຕັດສິນເປັນ ຂັ້ນອຸທອນ ແລະ ຂັ້ນລົບລ້າງ;

13. **ການຂໍອຸທອນ** ໝາຍເຖິງ ການຈອງ ຫຼື ການຍື່ນຄຳຮ້ອງ ຂໍອຸທອນ ຫຼື ການສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳຕັດສິນ ຂອງສານຂັ້ນຕົ້ນ;

14. **ຄຳຮ້ອງຂໍອຸທອນ** ໝາຍເຖິງ ຄຳຮ້ອງຂອງ ຄູ່ຄວາມ ຫຼື ບຸກຄົນທີສາມ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ອ້າງເຫດຜົນ ໃນການບໍ່ພໍໃຈຕໍ່ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນ;

15. **ການຂໍລົບລ້າງ** ໝາຍເຖິງ ການຈອງ ຫຼື ການຍື່ນຄຳຮ້ອງ ຂໍລົບລ້າງ ຫຼື ການສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ ຂອງສານຂັ້ນອຸທອນ;

16. **ຄຳຮ້ອງຂໍລົບລ້າງ** ໝາຍເຖິງ ຄຳຮ້ອງຂອງ ຄູ່ຄວາມ ຫຼື ບຸກຄົນທີສາມ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ ທີ່ອ້າງເຫດຜົນທາງດ້ານກົດໝາຍໃນການບໍ່ພໍໃຈ ຕໍ່ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ ຂອງສານຂັ້ນອຸທອນ;

17. **ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ** ໝາຍເຖິງ ຄຳຕັດສິນ, ຄຳພິພາກສາຂອງສານ ຊຶ່ງໂຈດ, ຈຳເລີຍ, ບຸກຄົນທີສາມ ບໍ່ໄດ້ ຂໍອຸທອນ, ຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ, ຄຳພິພາກສາຂັ້ນລົບລ້າງຂອງ ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ;

18. **ການຍຶດຊັບ** ໝາຍເຖິງ ການເອົາຊັບເຄື່ອນທີ່ ຊຶ່ງພົວພັນກັບຄະດີ, ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ ຫຼື ເພື່ອຮັບປະກັນການ ຮ້ອງຟ້ອງ ຫຼື ຟ້ອງແຍ່ງ ມາຮັກສາໄວ້ໃນສະຖານທີ່ ທີ່ເໝາະສົມ ຕາມຄຳສັ່ງຂອງສານ;

19. **ການອາຍັດຊັບ** ໝາຍເຖິງ ການບໍ່ອະນຸຍາດໃຫ້ ຊື້ ຂາຍ, ມອບ, ໂອນ, ແລກປ່ຽນ, ຊວດຈຳ, ຈຳນຳ, ຈຳນອງ, ຄ້ຳປະກັນ, ຕໍ່ເຕີມ, ສ້ອມແປງ, ທຳລາຍ ຫຼື ປ່ຽນແປງ ແລະ ອື່ນໆ ກ່ຽວກັບຊັບເຄື່ອນທີ່ ຫຼື ຊັບຄົງທີ່ ລວມທັງບັນຊີເງິນຝາກຢູ່ທະນາຄານ ທີ່ພົວພັນກັບຄະດີ ຕາມຄຳສັ່ງຂອງສານ;

20. **ຜູ້ຊຳນານງານ** ໝາຍເຖິງ ບຸກຄົນທີ່ ມີຄວາມຊຳນານງານ, ມີບົດຮຽນ ແລະ ມີປະສົບການ ໃນດ້ານໃດໜຶ່ງທີ່ແນ່ນອນ;

21. **ພະນັກງານອື່ນຂອງສານ** ໝາຍເຖິງ ຜູ້ຮັບຜິດຊອບໃນການດຳເນີນຄະດີແພ່ງ ຂອງສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້;

22. **ການຈຳກັດບໍລິເວນ** ໝາຍເຖິງ ການບໍ່ໃຫ້ຄູ່ຄວາມຝ່າຍໃດໜຶ່ງ ເຂົ້າ ຫຼື ອອກ ສະຖານທີ່ໃດໜຶ່ງ ຫຼື ບໍ່ໃຫ້ອອກນອກປະເທດ ຕາມຄຳສັ່ງຂອງສານ;

23. **ໝາຍຮຽກ** ໝາຍເຖິງ ໜັງສືຂອງສານ ທີ່ຮຽກຕົວ ໂຈດ, ຈຳເລີຍ, ບຸກຄົນທີສາມ ແລະ ຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີ ໃຫ້ເຂົ້າມາສານ;

24. **ໝາຍເຊີນ** ໝາຍເຖິງ ໜັງສືຂອງສານ ທີ່ເຊີນ ຫົວໜ້າອົງການໄອຍະການປະຊາຊົນ, ຜູ້ຕາງໜ້າອົງການຈັດຕັ້ງ ຫຼື ວິສາຫະກິດ ເຂົ້າຮ່ວມໃນການດຳເນີນຄະດີຂອງສານ;

25. **ເອກະສານອື່ນຂອງສານ** ໝາຍເຖິງ ເອກະສານທີ່ກ່ຽວຂ້ອງກັບການດຳເນີນຄະດີ ເຊັ່ນ ໝາຍພາຕົວ, ບົດບັນທຶກປະຊຸມສານ, ບົດບັນທຶກຄຳໃຫ້ການ;

26. **ຂໍ້ມູນຂອງຄູ່ຄວາມ** ໝາຍເຖິງ ຊື່, ນາມສະກຸນ, ອາຍຸ, ອາຊີບ, ທີ່ຢູ່ ແລະ ຂໍ້ມູນຕິດຕໍ່ ຂອງ ໂຈດ ແລະ ຈຳເລີຍ;

27. **ຂໍ້ເທັດຈິງ** ໝາຍເຖິງ ເຫດການ ທີ່ຄູ່ຄວາມສະເໜີຕໍ່ສານ ທີ່ຕິດພັນກັບເງື່ອນໄຂທີ່ພາໃຫ້ເກີດສິດທວງ ຊຶ່ງຕ້ອງໄດ້ຜ່ານການ ໂຕ້ແຍ່ງ, ໂຕ້ຖຽງຢ່າງລະອຽດ, ສິ້ນສຸດຂະບວນການ, ພິສູດ ແລະ ຢັ້ງຢືນ ໂດຍຂໍ້ມູນ ຫຼັກຖານ ໄດ້ວ່າຖືກຕ້ອງຕາມຄວາມເປັນຈິງ;

28. **ປະເດັນຂັດແຍ່ງ** ໝາຍເຖິງ ບັນຫາທີ່ຄູ່ຄວາມ ບໍ່ເປັນເອກະພາບກັນ ກ່ຽວກັບຂໍ້ເທັດຈິງ ທີ່ພາໃຫ້ເກີດສິດທວງ ທີ່ສານຕ້ອງໄດ້ຊອກຫາ ຂໍ້ມູນ ຫຼັກຖານ ມາພິສູດ;

29. **ຮອບດ້ານ** ໝາຍເຖິງ ການດຳເນີນຄະດີ ຕ້ອງພິຈາລະນາທຸກຫຼັກຖານ ທີ່ໂຈດຮ້ອງຟ້ອງ, ຈຳເລີຍແກ້ຟ້ອງ ຫຼື ຟ້ອງແຍ່ງ ລວມທັງຫຼັກຖານຂອງບຸກຄົນທີສາມ;

30. **ຄົບຖ້ວນ** ໝາຍເຖິງ ການເກັບກຳ ຂໍ້ມູນ ຫຼັກຖານ ທັງໝົດ ທີ່ກ່ຽວຂ້ອງກັບເຫດການຂອງຄະດີ;

31. **ພາວະວິໄສ** ໝາຍເຖິງ ການດຳເນີນຄະດີຕ້ອງຢູ່ບົນພື້ນຖານ ຂໍ້ມູນ ຫຼັກຖານ, ກົດໝາຍ ແລະ ຄວາມຍຸຕິທຳ;

32. **ເຫດການຂອງຄະດີ** ໝາຍເຖິງ ເຫດການທີ່ ໂຈດ ແລະ ຈຳເລີຍ ຮັບຮູ້ຕໍ່ ຄະດີ ແລະ ເຫດການທີ່ເປັນປະເດັນຂັດແຍ່ງໃນຄະດີ;

33. **ສິດທວງ** ໝາຍເຖິງ ສິດຂອງຝ່າຍໜຶ່ງ ຊຶ່ງຮຽກຮ້ອງໃຫ້ອີກຝ່າຍໜຶ່ງ ປະຕິບັດພັນທະຕໍ່ຕົນ ຕາມສັນຍາ ຫຼື ກົດໝາຍ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານດຳເນີນຄະດີແພ່ງ

ລັດ ສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານດຳເນີນຄະດີແພ່ງ ດ້ວຍການວາງນະໂຍບາຍ, ກຳນົດລະບຽບການ, ສະໜອງງົບປະມານ, ປະກອບບຸກຄະລາກອນ, ພາຫະນະ ແລະ ອຸປະກອນຮັບໃຊ້ເຂົ້າໃນການດຳເນີນຄະດີ ເພື່ອເຮັດໃຫ້ການພິຈາລະນາຕັດສິນຄະດີ ມີຄວາມຖືກຕ້ອງ ແລະ ເປັນທຳ.

ລັດ ສົ່ງເສີມການ ໂຄສະນາ, ສຶກສາອົບຮົມກົດໝາຍ ໃຫ້ປະຊາຊົນຮັບຮູ້, ເຂົ້າໃຈ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນເຂົ້າເຖິງຂະບວນການຍຸຕິທຳ ແລະ ຮັບປະກັນໃຫ້ຄູ່ຄວາມໄດ້ ນຳໃຊ້ສິດ ແລະ ປະຕິບັດພັນທະຂອງຕົນໃນການດຳເນີນຄະດີຢ່າງຖືກຕ້ອງ.

**ມາດຕາ 5 (ປັບປຸງ) ການປົກປ້ອງ**

ຜູ້ພິພາກສາ, ພະນັກງານອື່ນຂອງສານ ລວມທັງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ປະຕິບັດ ໜ້າທີ່, ພັນທະ ແລະ ນຳໃຊ້ສິດ ຖືກຕ້ອງຕາມກົດໝາຍ ຕ້ອງໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການນາບຂູ່ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການດຳເນີນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ ທີ່ພົວພັນກັບ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ທີ່ມີຂໍ້ຂັດແຍ່ງເກີດຂຶ້ນ ຢູ່ໃນດິນແດນ ຂອງ ສປປ ລາວ ລວມທັງຂໍ້ຂັດແຍ່ງຂອງພົນລະເມືອງລາວດ້ວຍກັນ ທີ່ເກີດຂຶ້ນຢູ່ນອກດິນແດນຂອງ ສປປ ລາວ ແລະ ຂໍ້ຂັດແຍ່ງຂອງຄົນຕ່າງປະເທດດ້ວຍກັນ ທີ່ໄດ້ກຳນົດໄວ້ໃນສັນຍາ ໃຫ້ແກ້ໄຂ ຕາມຂະບວນການຍຸຕິທຳ ຂອງ ສປປ ລາວ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການ ພົວພັນ ຮ່ວມມື ກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານດຳເນີນ ຄະດີແພ່ງ ດ້ວຍການ ແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ, ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ຜູ້ພິພາກສາ ແລະ ພະນັກງານອື່ນຂອງສານ ໂດຍສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ຫຼັກການພື້ນຖານໃນການດຳເນີນຄະດີແພ່ງ

**ມາດຕາ 8 (ປັບປຸງ) ຫຼັກການພື້ນຖານໃນການດຳເນີນຄະດີແພ່ງ**

ການດຳເນີນຄະດີແພ່ງ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສິດ ແລະ ພັນທະຂອງສານ ໃນການພິຈາລະນາຕັດສິນຄະດີ;
2. ການພິຈາລະນາຄະດີສາມຂັ້ນ;
3. ຄວາມສະເໝີພາບຂອງຄູ່ຄວາມຕໍ່ໜ້າ ກົດໝາຍ ແລະ ສານ;
4. ຄວາມຮັບຜິດຊອບໃນການ ຍື່ນຫຼັກຖານ ແລະ ຢັ້ງຢືນຂໍ້ເທັດຈິງ;
5. ການໂຕ້ແຍ່ງ ແລະ ການໂຕ້ຖຽງ;
6. ການພິຈາລະນາຄະດີເປັນໝູ່ຄະນະ;
7. ຄວາມເປັນເອກະລາດຂອງຜູ້ພິພາກສາ;
8. ພາສາທີ່ໃຊ້ໃນການດຳເນີນຄະດີ;
9. ການໄຕ່ສວນຄະດີໃນທີ່ປະຊຸມສານ;
10. ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ;
11. ການດຳເນີນຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ;
12. ການໄກ່ເກ່ຍ;
13. ການຂໍຖອນຕົວ ຫຼື ການຄ້ານຕົວ;

14. ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ.

**ມາດຕາ 9 (ປັບປຸງ) ສິດ ແລະ ພັນທະຂອງສານ ໃນການພິຈາລະນາຕັດສິນຄະດີ**

ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີ ບົນພື້ນຖານການ ເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ.

ເມື່ອມີສາເຫດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 171 ຂອງກົດໝາຍສະບັບນີ້ ສານມີພັນທະທຳການ ໄກ່ເກ່ຍ ຫຼື ພິຈາລະນາຕັດສິນ ພາຍຫຼັງໄດ້ ເກັບກຳ, ກວດກາ, ຊັ່ງຊາ ແລະ ຕີລາຄາ ຂໍ້ມູນ ຫຼັກຖານ ແລ້ວ.

**ມາດຕາ 10 (ໃໝ່) ການພິຈາລະນາຄະດີສາມຂັ້ນ**

ສານປະຊາຊົນພິຈາລະນາຄະດີ ສາມຂັ້ນ ຄື ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ.

ສານຂັ້ນຕົ້ນ ແລະ ຂັ້ນອຸທອນ ພິຈາລະນາຄະດີຕາມ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ. ການພິຈາລະນາບັນຫາຫຼັກຖານ ໃຫ້ສິ້ນສຸດຢູ່ສານຂັ້ນອຸທອນ.

ສານຂັ້ນລົບລ້າງ ພິຈາລະນາຄະດີ ແຕ່ທາງດ້ານກົດໝາຍ ແລະ ເປັນຂັ້ນສຸດທ້າຍ ຂອງການດຳເນີນຄະດີແພ່ງ.

**ມາດຕາ 11 (ປັບປຸງ) ຄວາມສະເໝີພາບຂອງຄູ່ຄວາມຕໍ່ໜ້າ ກົດໝາຍ ແລະ ສານ**

ການດຳເນີນຄະດີແພ່ງ ຕ້ອງປະຕິບັດບົນພື້ນຖານຄວາມສະເໝີພາບຂອງ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ຕໍ່ໜ້າ ກົດໝາຍ ແລະ ສານ ໂດຍບໍ່ຈຳແນກ ເພດ, ເຊື້ອຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ-ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ບັນຫາອື່ນ.

ສານປະຊາຊົນ ອຳນວຍຄວາມສະດວກໃຫ້ ພົນລະເມືອງລາວ, ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ໂດຍສະເພາະຄູ່ຄວາມໃນຄະດີ ໄດ້ປະຕິບັດສິດສະເໝີພາບໃນການຕໍ່ສູ້ຄະດີ ດ້ວຍການ ສະເໜີ ແລະ ປະກອບ ຂໍ້ມູນ ຫຼັກຖານ ຕໍ່ສານ ໃຫ້ຄົບຖ້ວນ, ຮອບດ້ານ ເພື່ອຮັບປະກັນການຕັດສິນຄະດີ ໃຫ້ມີຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ກົດໝາຍ.

**ມາດຕາ 12 (ໃໝ່) ຄວາມຮັບຜິດຊອບໃນການ ຍື່ນຫຼັກຖານ ແລະ ຢັ້ງຢືນຂໍ້ເທັດຈິງ**

ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ມີຄວາມຮັບຜິດຊອບໃນການ ຊອກຫາ, ເກັບກຳ ຂໍ້ມູນ ຫຼັກຖານທີ່ກ່ຽວຂ້ອງກັບຄະດີ ມາຍື່ນຕໍ່ສານໃຫ້ຄົບຖ້ວນ ແລະ ມີຄວາມຮັບຜິດຊອບຢັ້ງຢືນ ເຫດການ, ປະເດັນຂັດແຍ່ງ ຫຼື ຂໍ້ສະເໜີຕໍ່ສານ ໃຫ້ເຫັນຂໍ້ເທັດຈິງ ແລະ ມີບ່ອນອີງທາງດ້ານກົດໝາຍ.

ບຸກຄົນ ຫຼື ການຈັດຕັ້ງ ຕ້ອງໃຫ້ຄວາມຮ່ວມມື ໃນການສະໜອງ ຂໍ້ມູນ ຫຼັກຖານ ທີ່ຢູ່ໃນການຄຸ້ມຄອງຂອງຕົນ ແລະ ຊີ້ແຈງຂໍ້ເທັດຈິງກ່ຽວກັບຄະດີ.

**ມາດຕາ 13 ການໂຕ້ແຍ່ງ ແລະ ການໂຕ້ຖຽງ**

ໃນການດຳເນີນຄະດີ ສານຕ້ອງຮັບປະກັນ ໃຫ້ຄູ່ຄວາມໄດ້ມີຄຳເຫັນ ຫຼື ຊີ້ແຈງຂໍ້ກ່າວອ້າງຂອງຕົນ ຫຼື ໂຕ້ແຍ່ງຕໍ່ຫຼັກຖານຂອງຝ່າຍກົງກັນຂ້າມ.

ໃນການໄຕ່ສວນຂອງຄະນະສານ ຕ້ອງຮັບປະກັນໃຫ້ຄູ່ຄວາມໄດ້ນຳສະເໜີຫຼັກຖານ ແລະ ອະທິບາຍຊີ້ແຈງຂໍ້ມູນ ຫຼັກຖານ ຂອງຕົນ ຫຼື ໂຕ້ຖຽງ ຕໍ່ຫຼັກຖານຂອງຝ່າຍກົງກັນຂ້າມ.

**ມາດຕາ 14 (ປັບປຸງ) ການພິຈາລະນາຄະດີເປັນໝູ່ຄະນະ**

ຄະນະສານຕັດສິນ ຂອງສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນ ນະຄອນຫຼວງ, ແຂວງ, ສານປະຊາຊົນເຂດ ປະກອບດ້ວຍ ຜູ້ພິພາກສາສາມຄົນ, ໃນນັ້ນ ຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນ ເປັນຄະນະ.

ຄຳຕົກລົງຂອງຄະນະສານ ຕ້ອງຖືເອົາຕາມສຽງສ່ວນຫຼາຍ ແລະ ສອດຄ່ອງກັບກົດໝາຍ.

ໃນການພິຈາລະນາຕັດສິນຄະດີ ຄະນະສານຕ້ອງວາງຕົວເປັນກາງ.

ການພິຈາລະນາຄະດີ ຕ້ອງຮັບປະກັນຄວາມລັບ.

ສໍາລັບຄະດີທີ່ມີມູນຄ່າບໍ່ສູງ ຫຼື ໂຈດ ແລະ ຈໍາເລີຍ ຮັບຮູ້ນໍາກັນແລ້ວ ໃຫ້ຜູ້ພິພາກສາຜູ້ດຽວ ພິຈາລະນາຕັດສິນ ເປັນຂັ້ນຕົ້ນກໍໄດ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

**ມາດຕາ 15 ຄວາມເປັນເອກະລາດຂອງຜູ້ພິພາກສາ**

ໃນການໄຕ່ສວນຄະດີ ແລະ ລົງຄໍາຕັດສິນ ຜູ້ພິພາກສາຕ້ອງເປັນເອກະລາດ ແລະ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ.

**ມາດຕາ 16 ພາສາທີ່ໃຊ້ໃນການດໍາເນີນຄະດີ**

ໃນການດໍາເນີນຄະດີ ໃຫ້ໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ທີ່ບໍ່ຮູ້ພາສາລາວ, ມີສິດໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານການແປພາສາ.

**ມາດຕາ 17 ການໄຕ່ສວນຄະດີໃນທີ່ປະຊຸມສານ**

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງດໍາເນີນຢ່າງເປີດເຜີຍ, ເວັ້ນເສຍແຕ່ກໍລະນີ ທີ່ຄະດີຫາກກ່ຽວຂ້ອງກັບຄວາມລັບ ຂອງລັດ ຫຼື ຂອງສັງຄົມ ເປັນຕົ້ນ ສາຍຜົວພັນຄອບຄົວ ທີ່ແຕະຕ້ອງເຖິງຊີວິດສ່ວນຕົວຂອງຜົວ ຫຼື ເມຍ, ຄະດີເດັກ ຊຶ່ງຕ້ອງດໍາເນີນຢ່າງປິດລັບ.

ການອ່ານຄໍາຕັດສິນຂອງສານ ບໍ່ວ່າໃນກໍລະນີໃດ ຕ້ອງດໍາເນີນຢ່າງເປີດເຜີຍ.

**ມາດຕາ 18 ການບໍ່ອະນຸຍາດໃຫ້ເຂົ້າຮ່ວມໃນການພິຈາລະນາຄະດີດຽວກັນ**

ຜູ້ພິພາກສາ ທີ່ໄດ້ເຂົ້າຮ່ວມໃນການພິຈາລະນາຕັດສິນຄະດີຄັ້ງໜຶ່ງແລ້ວ ຈະບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຕັດສິນຄະດີນັ້ນ ເປັນຄັ້ງທີສອງອີກ ບໍ່ວ່າຢູ່ສານຂັ້ນໃດ, ເວັ້ນເສຍແຕ່ໃນກໍລະນີ ໄດ້ກໍານົດໄວ້ໃນກົດໝາຍ ຫຼື ໄດ້ກໍານົດໄວ້ໃນຄໍາພິພາກສາຂອງສານຂັ້ນເທິງ.

**ມາດຕາ 19 ການດໍາເນີນຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ**

ສານ ຕ້ອງນໍາໃຊ້ບັນດາມາດຕະການ ທີ່ໄດ້ກໍານົດໄວ້ໃນກົດໝາຍ ເພື່ອໃຫ້ການເກັບກໍາ ຂໍ້ມູນ ຫຼັກຖານທີ່ກ່ຽວຂ້ອງກັບຄະດີ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແນໃສ່ເຮັດໃຫ້ການກໍານົດ ເຫດການ, ປະເດັນຂັດແຍ່ງໃນຄະດີ ມີຄວາມແຈ້ງຂາວ, ຊັດເຈນ ຮັບປະກັນໃຫ້ການຕັດສິນ ມີຄວາມຖືກຕ້ອງ ແລະ ຍຸຕິທໍາ.

ສານ ຕ້ອງແຈ້ງ ສິດ ແລະ ພັນທະ ຂອງຄູ່ຄວາມ ໃນການຕໍ່ສູ້ຄະດີ ແລະ ປະກອບຫຼັກຖານຕໍ່ສານ, ແນະນໍາໃຫ້ຄູ່ຄວາມປະຕິບັດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 20 ການໄກ່ເກ່ຍ**

ສານ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການໄກ່ເກ່ຍ ຄູ່ຄວາມໂດຍການຊອກທຸກເງື່ອນໄຂ ແລະ ວິທີການ ເພື່ອໃຫ້ຄູ່ຄວາມສາມາດຕົກລົງກັນດ້ວຍດີ ຢູ່ໃນທຸກຂັ້ນຕອນຂອງການດໍາເນີນຄະດີ ແລະ ສານທຸກຂັ້ນ.

**ມາດຕາ 21 ການຂໍຖອນຕົວ ແລະ ການຄ້ານຕົວ**

ຜູ້ພິພາກສາ, ຫົວໜ້າ ຫຼື ຜູ້ໄດ້ຮັບມອບໝາຍຈາກຫົວໜ້າອົງການໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ, ຜູ້ຊໍານານງານ ຫຼື ຜູ້ແປພາສາ ທີ່ເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງ ກັບຄູ່ຄວາມຝ່າຍໃດໜຶ່ງ

ຕ້ອງຂໍຖອນຕົວອອກຈາກການດຳເນີນຄະດີນັ້ນ. ຖ້າຫາກຜູ້ກ່ຽວບໍ່ຍອມຖອນຕົວອອກ ຄູ່ຄວາມຝ່າຍໃດໜຶ່ງ ກໍມີສິດສະເໜີຄ້ານຕົວຜູ້ກ່ຽວອອກຈາກການດຳເນີນຄະດີ.

**ມາດຕາ 22 (ປັບປຸງ) ຂອບເຂດການພິຈາລະນາ ຄຳຮ້ອງຟ້ອງ ຫຼື ຄຳຮ້ອງຂໍ**

ຄະນະສານ ຕ້ອງນຳເອົາ ຄຳຮ້ອງຟ້ອງ, ຄຳຟ້ອງແຍ່ງ ຂອງໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຄຳຮ້ອງຂໍ ມາພິຈາລະນາ. ບັນຫາໃດທີ່ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ບໍ່ໄດ້ຮ້ອງຟ້ອງ, ຟ້ອງແຍ່ງ ຫຼື ຮ້ອງຂໍນັ້ນ ຄະນະສານ ນຳມາພິຈາລະນາຕັດສິນໃຫ້ບໍ່ໄດ້, ເວັ້ນເສຍແຕ່ ຄະດີທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່, ສັງຄົມ ແລະ ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

## ພາກທີ III
## ສິດ ແລະ ໜ້າທີ່ ໃນການດຳເນີນຄະດີຂອງສານ
## ໝວດທີ 1
## ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ຂອງສານປະຊາຊົນແຕ່ລະຂັ້ນ

**ມາດຕາ 23 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານປະຊາຊົນເຂດ**

ສານປະຊາຊົນເຂດ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີ ເປັນຕົ້ນຕໍ;
2. ພິຈາລະນາຕັດສິນຄະດີ ເປັນຂັ້ນຕົ້ນ:

2.1. ຄະດີແພ່ງ, ຄະດີແຮງງານ ທີ່ມີມູນຄ່າການຮ້ອງຟ້ອງ ແລະ ຄະດີ ກ່ຽວກັບສາຍຜົວເມຍ ທີ່ມີຂໍ້ຂັດແຍ່ງເລື່ອງ ສິນສົມສ້າງ, ໜີ້ສິນ ບໍ່ເກີນ 1,000,000,000 (ໜຶ່ງຕື້) ກີບ;

2.2. ຄະດີບໍ່ມີມູນຄ່າ, ຍົກເວັ້ນຄະດີການຄ້າ ແລະ ຄະດີເດັກ;

2.3. ຄະດີອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

3. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳຕັດສິນ ເປັນຂັ້ນຕົ້ນ;
4. ສົ່ງສຳນວນຄະດີ ທີ່ຢູ່ໃນສິດອຳນາດຂອງຕົນ ໃຫ້ສານປະຊາຊົນ ນະຄອນຫຼວງ, ແຂວງ ພິຈາລະນາຕັດສິນເປັນຂັ້ນຕົ້ນ ເມື່ອເຫັນວ່າຄະດີ ມີຄວາມສຳຄັນ ແລະ ມີຄວາມຫຍຸ້ງຍາກເປັນພິເສດ ພາຍຫຼັງໄດ້ຮັບຄວາມເຫັນດີຈາກປະທານສານປະຊາຊົນດັ່ງກ່າວ;
5. ສົ່ງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດ, ຄຳຕັດສິນໃຫ້ປະຕິບັດພາງ ໄປຍັງຫ້ອງ ຫຼື ກອງ ປະຕິບັດຄຳຕັດສິນຂອງສານ;
6. ສົ່ງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ໃຫ້ສານປະຊາຊົນຂັ້ນເທິງ, ອົງການໄອຍະການປະຊາຊົນເຂດ ເພື່ອກວດກາ ແລະ ສົ່ງໃຫ້ອົງການອື່ນ ທີ່ກ່ຽວຂ້ອງ ຮັບຮູ້ ແລະ ປະຕິບັດ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 24 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານປະຊາຊົນ ນະຄອນຫຼວງ, ແຂວງ**

ສານປະຊາຊົນ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍ ຄູ່ຄວາມໃນຄະດີ;
2. ພິຈາລະນາຕັດສິນ ເປັນຂັ້ນຕົ້ນ ຄະດີທີ່ມີມູນຄ່າການຮ້ອງຟ້ອງ ເກີນກວ່າ 1,000,000,000 (ໜຶ່ງຕື້) ກີບ ແລະ ຄະດີທີ່ບໍ່ຂຶ້ນກັບ ສິດອຳນາດຂອງສານປະຊາຊົນເຂດ;

3. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ກ່ຽວກັບການດຳເນີນຄະດີ;

4. ພິຈາລະນາພິພາກສາເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ຂອງສານປະຊາຊົນເຂດ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ ເຂດ ຫຼື ນະຄອນຫຼວງ, ແຂວງ, ຍົກເວັ້ນການນຳໃຊ້ມາດຕະການຂອງສານ;

5. ທວງເອົາສຳນວນຄະດີທີ່ເຫັນວ່າ ມີຄວາມສຳຄັນ ຫຼື ມີຄວາມຫຍຸ້ງຍາກເປັນພິເສດ ຈາກສານປະຊາຊົນເຂດ ມາພິຈາລະນາຕັດສິນເປັນຂັ້ນຕົ້ນດ້ວຍຕົນເອງ ຕາມການຕົກລົງຂອງຄະນະປະທານ;

6. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ປະຕິບັດພາງ ໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ;

7. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງຕົນ ໃຫ້ສານປະຊາຊົນຂັ້ນເທິງ, ອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ເພື່ອກວດກາ ແລະ ສົ່ງໃຫ້ອົງການອື່ນ ທີ່ກ່ຽວຂ້ອງ ຮັບຮູ້ ແລະ ປະຕິບັດ;

8. ພິຈາລະນາຕັດສິນ ຮັບຮູ້ ຫຼື ບໍ່ຮັບຮູ້ ຄຳຕົກລົງ ຫຼື ຄຳຕັດສິນ ຂອງສານ ຫຼື ຂອງຄະນະກຳມະການຕັດສິນຕ່າງປະເທດ;

9. ຄະດີອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 25 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານປະຊາຊົນພາກ**

ສານປະຊາຊົນພາກ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍ ຄູ່ຄວາມໃນຄະດີ;

2. ພິຈາລະນາພິພາກສາ ເປັນຂັ້ນອຸທອນ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ຂອງສານປະຊາຊົນນະຄອນຫຼວງ, ແຂວງ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຫຼື ພາກ ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ບໍ່ສະເໜີຄັດຄ້ານ, ຍົກເວັ້ນການນຳໃຊ້ມາດຕະການຂອງສານ;

3. ພິຈາລະນາພິພາກສາເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄຳພິພາກສາຂອງສານປະຊາຊົນ ນະຄອນຫຼວງ, ແຂວງ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ຫຼື ພາກ ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງ, ແຂວງ ບໍ່ສະເໜີຄັດຄ້ານ;

4. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ທີ່ພົວພັນກັບການດຳເນີນຄະດີ;

5. ສົ່ງ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດ ພ້ອມດ້ວຍສຳນວນຄະດີ ໃຫ້ສານປະຊາຊົນ ນະຄອນຫຼວງ, ແຂວງ;

6. ສົ່ງ ຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ ຂັ້ນລົບລ້າງ ພ້ອມດ້ວຍສຳນວນຄະດີ ໃຫ້ສານປະຊາຊົນເຂດ ເພື່ອອ່ານໃຫ້ຄູ່ຄວາມຮັບຊາບ;

7. ສົ່ງ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຂອງຕົນໃຫ້ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນພາກ ເພື່ອກວດກາ ແລະ ສົ່ງໃຫ້ອົງການອື່ນ ທີ່ກ່ຽວຂ້ອງ ຮັບຮູ້ ແລະ ປະຕິບັດ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 26 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສານປະຊາຊົນສູງສຸດ**

ສານປະຊາຊົນສູງສຸດ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ສຶກສາອົບຮົມ, ໄກ່ເກ່ຍ ຄູ່ຄວາມໃນຄະດີ;

2. ພິຈາລະນາພິພາກສາ ເປັນຂັ້ນລົບລ້າງທາງດ້ານກົດໝາຍ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຂອງສານປະຊາຊົນພາກ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນພາກ ຫຼື ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໃນກໍລະນີ ຫົວໜ້າອົງການໄອຍະການປະຊາຊົນພາກບໍ່ສະເໜີຄັດຄ້ານ;

3. ພິຈາລະນາການຮື້ຟື້ນ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

4. ພິຈາລະນາອອກ ຄຳສັ່ງ, ຄຳຊີ້ຂາດ ທີ່ພົວພັນກັບການດຳເນີນຄະດີ;

5. ສົ່ງ ຄຳສັ່ງ, ຄຳຊີ້ຂາດ, ຄຳພິພາກສາ ຂັ້ນລົບລ້າງ ຫຼື ການຮື້ຟື້ນຄະດີ ພ້ອມດ້ວຍສຳນວນຄະດີໃຫ້ສານປະຊາຊົນເຂດ ຫຼື ສານປະຊາຊົນ ນະຄອນຫຼວງ, ແຂວງ ເພື່ອອ່ານໃຫ້ຄູ່ຄວາມຮັບຊາບ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 27 ສິດອຳນາດທາງດ້ານພື້ນທີ່**

ສານປະຊາຊົນ ບ່ອນເຫດການ ຫຼື ຂໍ້ຂັດແຍ່ງໄດ້ເກີດຂຶ້ນ ຫຼື ບ່ອນຊັບທີ່ເປັນພື້ນຖານຕັ້ງຢູ່ ຫຼື ບ່ອນຈຳເລີຍຢູ່ ຫຼື ອາໄສຢູ່ນັ້ນ ເປັນສານທີ່ມີສິດອຳນາດຕັດສິນ.

**ມາດຕາ 28 ການຂັດແຍ່ງກ່ຽວກັບສິດອຳນາດສານ**

ເມື່ອມີການຂັດແຍ່ງກ່ຽວກັບສິດອຳນາດ ໃນການພິຈາລະນາຄະດີ ລະຫວ່າງສານດ້ວຍກັນ ວ່າສານໃດມີສິດອຳນາດ ຫຼື ບໍ່ມີສິດອຳນາດ ພິຈາລະນາຄະດີນັ້ນ ໃຫ້ສານປະຊາຊົນບ່ອນໄດ້ຮັບຄຳຮ້ອງຟ້ອງ ສະເໜີຂຶ້ນໄປຫາສານປະຊາຊົນສູງສຸດ ເພື່ອພິຈາລະນາອອກຄຳຊີ້ຂາດ ກ່ຽວກັບສິດອຳນາດດັ່ງກ່າວ.

**ມາດຕາ 29 (ປັບປຸງ) ການຂັດແຍ່ງກ່ຽວກັບສິດອຳນາດຂອງຄະນະສານ**

ໃນກໍລະນີ ມີການຂັດແຍ່ງ ກ່ຽວກັບສິດອຳນາດ ໃນການພິຈາລະນາຄະດີ ລະຫວ່າງຄະນະສານດ້ວຍກັນນັ້ນ ຄະນະສານບ່ອນໄດ້ຮັບຄຳຮ້ອງຟ້ອງ ສະເໜີຂຶ້ນໄປໃຫ້ປະທານສານປະຊາຊົນບ່ອນກ່ຽວຂ້ອງ ພິຈາລະນາອອກຄຳຊີ້ຂາດກ່ຽວກັບສິດອຳນາດດັ່ງກ່າວ ແລ້ວໃຫ້ລົບລ້າງຄະດີນັ້ນອອກຈາກບັນຊີການຂຶ້ນຟ້ອງ ພ້ອມທັງໂອນຄະດີນັ້ນໄປຂຶ້ນຟ້ອງຢູ່ຄະນະສານໃໝ່.

**ມາດຕາ 30 ການໂອນຄະດີໃຫ້ສານອື່ນດຳເນີນ**

ເມື່ອສານປະຊາຊົນໃດໜຶ່ງ ຫາກໄດ້ດຳເນີນຄະດີແລ້ວ ເຫັນວ່າຄະດີດັ່ງກ່າວ ບໍ່ຕົກຢູ່ໃນສິດອຳນາດຂອງຕົນ ສານດັ່ງກ່າວຕ້ອງອອກຄຳຊີ້ຂາດ ໂອນຄະດີນັ້ນໃຫ້ສານອື່ນທີ່ມີສິດອຳນາດ ເປັນຜູ້ດຳເນີນຕາມກົດໝາຍພ້ອມທັງແຈ້ງໃຫ້ຄູ່ຄວາມຮັບຊາບ ແລະ ໃຫ້ລົບລ້າງຄະດີດັ່ງກ່າວ ອອກຈາກບັນຊີການຂຶ້ນຟ້ອງ ແລ້ວສະຫຼຸບຄ່າທຳນຽມສານ ແລະ ເງິນວາງສານ ພ້ອມກັບສຳນວນຄະດີໄປຍັງສານທີ່ມີສິດອຳນາດ.

ໃນກໍລະນີ ສານທີ່ຖືກໂອນຄະດີໃຫ້ນັ້ນ ບໍ່ຮັບເອົາມາພິຈາລະນາ ສານທີ່ໂອນຄະດີ ຕ້ອງສະເໜີຕໍ່ປະທານສານປະຊາຊົນສູງສຸດ ເພື່ອອອກຄຳຊີ້ຂາດ.

**ມາດຕາ 31 (ປັບປຸງ) ຄະດີບໍ່ມີມູນຄ່າ**

ຄະດີບໍ່ມີມູນຄ່າ ແມ່ນ ຄະດີກ່ຽວກັບສາຍພົວພັນທາງແພ່ງ ທີ່ບໍ່ສາມາດກຳນົດມູນຄ່າຂອງການຮ້ອງຟ້ອງ ເປັນຕົ້ນ ຄະດີກ່ຽວກັບ ການຮັບຮູ້ການເປັນພໍ່, ການຮ້ອງຂໍຍົກເລີກ ຫຼື ລົບລ້າງສັນຍາ, ການຢັ້ງຢືນໃບຕາດິນເສຍຫາຍ, ການທວງໃຫ້ຍົກຍ້າຍອອກຈາກ ທີ່ດິນ ແລະ ເຮືອນ.

**ມາດຕາ 32 (ປັບປຸງ) ກຳນົດເວລາສຳລັບການພິຈາລະນາຕັດສິນຄະດີ**

ການຄົ້ນຄວ້າ ແລະ ຕັດສິນຄະດີ ຕ້ອງດຳເນີນ ແລະ ພິຈາລະນາໃຫ້ສຳເລັດ ພາຍໃນເວລາ ດັ່ງນີ້:

1. ຢູ່ສານຂັ້ນຕົ້ນ ໃຫ້ສຳເລັດພາຍໃນເວລາ ເກົ້າເດືອນ ນັບແຕ່ວັນຜູ້ພິພາກສາ ໄດ້ຮັບສຳນວນຄະດີ ເປັນຕົ້ນໄປ;

2. ຢູ່ສານຂັ້ນອຸທອນ ໃຫ້ສຳເລັດພາຍໃນເວລາ ສີ່ເດືອນ ນັບແຕ່ວັນຜູ້ພິພາກສາ ໄດ້ຮັບສຳນວນຄະດີ ເປັນຕົ້ນໄປ;

3. ຢູ່ສານຂັ້ນລົບລ້າງ ໃຫ້ສຳເລັດພາຍໃນເວລາ ສາມເດືອນ, ສຳລັບການຮື້ຟື້ນຄະດີ ຕ້ອງໃຫ້ສຳເລັດພາຍໃນເວລາ ສອງເດືອນ ນັບແຕ່ວັນຜູ້ພິພາກສາ ໄດ້ຮັບສຳນວນຄະດີ ເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດພິຈາລະນາຕັດສິນ ໃຫ້ສຳເລັດຕາມກຳນົດເວລາ ຍ້ອນສາເຫດພາວະວິໄສນັ້ນ ຜູ້ພິພາກສາທີ່ຮັບຜິດຊອບຄະດີດັ່ງກ່າວ ຕ້ອງສະເໜີຕໍ່ປະທານສານປະຊາຊົນບ່ອນກ່ຽວຂ້ອງ ເພື່ອພິຈາລະນາອອກຄຳສັ່ງຕໍ່ກຳນົດເວລາ ຄົ້ນຄວ້າ ແລະ ຕັດສິນ ແຕ່ການຕໍ່ເວລານັ້ນ ແມ່ນບໍ່ໃຫ້ກາຍສາມເດືອນ, ຍົກເວັ້ນຄະດີທີ່ມີຄວາມຫຍຸ້ງຍາກສັບສົນ ຕາມການຕົກລົງຂອງຄະນະປະທານສານບ່ອນກ່ຽວຂ້ອງ.

ການໂຈະ ແລະ ການເລື່ອນ ການດຳເນີນຄະດີ ບໍ່ໃຫ້ນັບເຂົ້າໃນກຳນົດເວລາ ຂອງການຄົ້ນຄວ້າ ແລະ ຕັດສິນຄະດີ.

## ໝວດທີ 2
## ສິດອຳນາດຂອງຄະນະສານແພ່ງ

**ມາດຕາ 33 (ປັບປຸງ) ສິດອຳນາດຂອງຄະນະສານແພ່ງ ໃນການພິຈາລະນາການຮ້ອງຟ້ອງ**

ຄະນະສານແພ່ງ ມີສິດອຳນາດ ພິຈາລະນາຕັດສິນຄະດີ ດັ່ງນີ້:

1. ຂໍ້ຂັດແຍ່ງກ່ຽວກັບກຳມະສິດ ແລະ ມູນມໍລະດົກ;

2. ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງແພ່ງ, ຍົກເວັ້ນຂໍ້ຂັດແຍ່ງທາງການຄ້າ ທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງກົດໝາຍສະບັບນີ້;

3. ຂໍ້ຂັດແຍ່ງກ່ຽວກັບການທວງເອົາການໃຊ້ແທນຄ່າເສຍຫາຍ;

4. ຂໍ້ຂັດແຍ່ງກ່ຽວກັບສາຍພົວພັນທາງດ້ານບໍລິຫານ ທີ່ບໍ່ນອນໃນສິດອຳນາດຂອງຄະນະສານປົກຄອງ.

**ມາດຕາ 34 (ປັບປຸງ) ສິດອຳນາດຂອງຄະນະສານແພ່ງ ໃນການພິຈາລະນາການຮ້ອງຂໍ**

ຄະນະສານແພ່ງ ມີສິດອຳນາດ ພິຈາລະນາຕັດສິນ ກ່ຽວກັບ:

1. ການຮ້ອງຂໍ ໃຫ້ສານພິຈາລະນາ ແຕ່ງຕັ້ງເປັນຜູ້ຄຸ້ມຄອງ ຊັບ ຫຼື ມູນມໍລະດົກ;

2. ການຮ້ອງຂໍ ໃຫ້ສານພິຈາລະນາຕັດສິນຢັ້ງຢືນໃບຕາດິນເສຍຫາຍ;

3. ການຮ້ອງຂໍ ໃຫ້ຮິບຊັບ ເຊັ່ນ ຊັບສິ່ງຂອງທີ່ບໍ່ມີເຈົ້າຂອງ, ການເກັບຊັບສິ່ງຂອງທີ່ຕົກເຮ່ຍ, ການພົບພໍ້ວັດຖຸທີ່ມີຄ່າ ຫຼື ວັດຖຸບູຮານ;

4. ການຮ້ອງຂໍ ໃຫ້ສານພິຈາລະນາ ຮັບຮູ້ຄຳຕັດສິນຂອງສານ ຫຼື ຂອງຄະນະກຳມະການຕັດສິນຕ່າງປະເທດ ກ່ຽວກັບຄະດີແພ່ງ;

5. ການຮ້ອງຂໍອອກຄຳຊີ້ຂາດ ເພື່ອປະຕິບັດ ສັນຍາກູ້ຢືມ ແລະ ສັນຍາ ຊື້ ຂາຍ ທີ່ໄດ້ຮັບການຢັ້ງຢືນທະບຽນສານຢ່າງຖືກຕ້ອງ;

6. ການຮ້ອງຂໍອື່ນ ກ່ຽວກັບຄະດີແພ່ງ.

ສຳລັບ ການອອກຄຳຊີ້ຂາດ ກ່ຽວກັບ ສັນຍາກູ້ຢືມ ແລະ ສັນຍາ ຊື້ ຂາຍ ທີ່ໄດ້ຮັບການຢັ້ງຢືນທະບຽນສານຢ່າງຖືກຕ້ອງນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 3
## ສິດອຳນາດຂອງຄະນະສານການຄ້າ

### ມາດຕາ 35 (ປັບປຸງ) ສິດອຳນາດຂອງຄະນະສານການຄ້າ ໃນການພິຈາລະນາການຮ້ອງຟ້ອງ

ຄະນະສານການຄ້າ ມີສິດອຳນາດ ພິຈາລະນາຕັດສິນຄະດີ ດັ່ງນີ້:

1. ສັນຍາຮຸ້ນສ່ວນ;

2. ສັນຍາທາງດ້ານທຸລະກິດ, ການຄ້າທາງເອເລັກໂຕຣນິກ ຫຼື ເອກະສານການຄ້າ ເປັນຕົ້ນ ໃບສັນຍາໃຊ້ໜີ້, ພັນທະບັດແລກເງິນ, ແຊັກ;

3. ການກູ້ຢືມເງິນນຳ ທະນາຄານ ຫຼື ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

4. ການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ ແລະ ການຊຳລະສະສາງ;

5. ການສົ່ງອອກ ຫຼື ນຳເຂົ້າສິນຄ້າ, ການປະກັນໄພ;

6. ຂໍ້ຂັດແຍ່ງ ແລະ ຄຳຮ້ອງຟ້ອງ ກ່ຽວກັບການລະເມີດຊັບສິນທາງປັນຍາ ເຊັ່ນ ລິຂະສິດ, ເຄື່ອງໝາຍການຄ້າ, ສິດທິບັດ ແລະ ການກະທຳອື່ນ ທີ່ພາໃຫ້ເກີດການແຂ່ງຂັນທີ່ບໍ່ເປັນທຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ;

7. ຂໍ້ຂັດແຍ່ງກ່ຽວກັບ ການປົກປ້ອງຜູ້ຊົມໃຊ້ ແລະ ວຽກງານລາຍເຊັນເອເລັກໂຕຣນິກ.

### ມາດຕາ 36 (ປັບປຸງ) ສິດອຳນາດຂອງຄະນະສານການຄ້າ ໃນການພິຈາລະນາການຮ້ອງຂໍ

ຄະນະສານການຄ້າ ມີສິດອຳນາດ ພິຈາລະນາຕັດສິນ ກ່ຽວກັບ:

1. ການຮ້ອງຂໍໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ການຮ້ອງຂໍໃຫ້ປະກາດ ການລົ້ມລະລາຍຂອງ ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ແລະ ບໍລິສັດປະກັນໄພ;

3. ການຮ້ອງຂໍໃຫ້ຢັ້ງຢືນ ຫຼື ບັງຄັບປະຕິບັດຄຳຕົກລົງ ຫຼື ຄຳຕັດສິນຂອງສານ ຫຼື ຂອງຄະນະກຳມະການຕັດສິນຕ່າງປະເທດ, ຄຳຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຮ້ອງຂໍໃຫ້ ອອກ ຄຳສັ່ງຍຶດ, ອາຍັດຊັບ ຫຼື ການນຳໃຊ້ມາດຕະການອື່ນ ຂອງຄະນະກຳມະການຕັດສິນຂອງ ສູນ, ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ຫຼື ສະເພາະກິດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ກົດໝາຍວ່າດ້ວຍຊັບສິນທາງປັນຍາ;

5. ການຮ້ອງຂໍ ໃຫ້ນຳໃຊ້ມາດຕະການຕໍ່ ນິຕິບຸກຄົນທີ່ຖືກຍຸບເລີກ, ການຟື້ນຟູ ແລະ ການລົ້ມລະລາຍ ຂອງວິສາຫະກິດ;

6. ການຮ້ອງຂໍກ່ຽວກັບການປົກປ້ອງສິດທາງດ້ານຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຊັບສິນທາງປັນຍາ;

7. ການຮ້ອງຂໍອື່ນ ກ່ຽວກັບຄະດີການຄ້າ.

**ມາດຕາ 37 ການດຳເນີນຄະດີຂອງຄະນະສານການຄ້າ**

ມີແຕ່ສານປະຊາຊົນ ນະຄອນຫຼວງ, ແຂວງ ເທົ່ານັ້ນ ຈຶ່ງມີສິດພິຈາລະນາຄະດີການຄ້າເປັນຂັ້ນຕົ້ນ.

ຄະນະສານການຄ້າ ຕ້ອງພິຈາລະນາຕັດສິນຄະດີ ຢ່າງຖືກຕ້ອງ, ວ່ອງໄວ ແລະ ຍຸຕິທຳ ເພື່ອຮັບປະກັນປະສິດທິພາບ ຂອງການດຳເນີນທຸລະກິດ.

ໃນການພິຈາລະນາຄະດີການຄ້າ ຕ້ອງຮັກສາຄວາມລັບຂອງ ບຸກຄົນ, ອົງການຈັດຕັ້ງ ແລະ ວິສາຫະກິດທີ່ເຂົ້າຮ່ວມໃນການດຳເນີນຄະດີ.

ການດຳເນີນຄະດີການຄ້າ ໃຫ້ອີງໃສ່ກົດໝາຍກ່ຽວກັບ ທຸລະກິດ, ການຄ້າ, ຊັບສິນທາງປັນຍາ ແລະ ກົດໝາຍອື່ນ ລວມທັງພາກປະຕິບັດທາງດ້ານການຄ້າ ພາຍໃນ ແລະ ສາກົນ.

ນອກຈາກນີ້ ຄະນະສານການຄ້າ ຍັງຕ້ອງໄດ້ປະຕິບັດຕາມຫຼັກການທົ່ວໄປ ຂອງການດຳເນີນຄະດີແພ່ງ.

**ມາດຕາ 38 ການທວງໜີ້ກ່ອນການຮ້ອງຟ້ອງ**

ກ່ອນການຮ້ອງຟ້ອງຄະດີການຄ້າຕໍ່ສານ ເຈົ້າໜີ້ຕ້ອງທວງໃຫ້ລູກໜີ້ໃຊ້ແທນໜີ້ສິນ, ໄລ່ລຽງໜີ້ສິນ ຫຼື ໄກ່ເກ່ຍກັນເສຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ ຈຶ່ງຮ້ອງຟ້ອງ ພ້ອມທັງສະເໜີຕໍ່ສານ ເພື່ອໃຫ້ລູກໜີ້ນຳເອົາເອກະສານ ຫຼື ບັນຊີຊັບສົມບັດ ຂອງຕົນ ມາແຈ້ງຕໍ່ສານ ແລະ ສະເໜີໃຫ້ອອກຄຳສັ່ງ ຍຶດ ຫຼື ອາຍັດ ຊັບ ເພື່ອຮັບປະກັນການໃຊ້ແທນໜີ້ສິນນັ້ນ.

**ມາດຕາ 39 ການໄກ່ເກ່ຍຄູ່ຄວາມ ຢູ່ຄະນະສານການຄ້າ**

ກ່ອນຈະນຳເອົາຄະດີອອກຕັດສິນນັ້ນ ຄະນະສານການຄ້າ ຕ້ອງຄົ້ນຄວ້າ ຊອກຫາວິທີທາງ ເພື່ອທຳການໄກ່ເກ່ຍ ໃຫ້ຄູ່ຄວາມຕົກລົງແກ້ໄຂຂໍ້ຂັດແຍ່ງນຳກັນ.

ເມື່ອມີການຕົກລົງກັນ ກ່ຽວກັບການໃຊ້ແທນໜີ້ສິນ ລະຫວ່າງ ເຈົ້າໜີ້ ແລະ ລູກໜີ້ແລ້ວ ໃຫ້ອອກຄຳສັ່ງປະຕິບັດໂດຍທັນທີ. ໃນການໃຊ້ແທນໜີ້ສິນນັ້ນ ໃຫ້ຊຳລະໝົດເທື່ອດຽວ ຖ້າຫາກບໍ່ມີຄວາມສາມາດຊຳລະໝົດເທື່ອດຽວໄດ້ ກໍໃຫ້ຊຳລະເປັນງວດ ແຕ່ໃນງວດທຳອິດນັ້ນ ຕ້ອງຊຳລະກ່ອນ ຢ່າງໜ້ອຍບໍ່ໃຫ້ຫຼຸດ ໜຶ່ງສ່ວນສາມຂອງໜີ້ສິນທັງໝົດ, ເວັ້ນເສຍແຕ່ມີການຕົກລົງກັນ ໄວ້ເປັນຢ່າງອື່ນ.

**ມາດຕາ 40 (ປັບປຸງ) ການພິຈາລະນາຜົນການແກ້ໄຂ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຜົນການແກ້ໄຂຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເຊັ່ນ ຄຳຕົກລົງຂອງ <u>ຄູ່ກໍລະນີໃນ</u>ການໄກ່ເກ່ຍ, ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແລະ ຄຳຕັດສິນຂອງຄະນະກຳມະການຕັດສິນ ທີ່ບໍ່ໄດ້ຮັບການປະຕິບັດນັ້ນ ຄູ່ກໍລະນີ ມີສິດຮ້ອງຂໍຕໍ່ສານ ເພື່ອພິຈາລະນາ.

ເມື່ອໄດ້ຮັບຄຳຮ້ອງຂໍ ຂອງຄູ່ກໍລະນີແລ້ວ ສານປະຊາຊົນ ຕ້ອງພິຈາລະນາອອກຄຳຊີ້ຂາດ ພາຍໃນເວລາສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງຂໍ ເປັນຕົ້ນໄປ.

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນ ຕ້ອງກວດເບິ່ງການດຳເນີນການແກ້ໄຂຂໍ້ຂັດແຍ່ງນັ້ນໄດ້ປະຕິບັດຖືກຕ້ອງຕາມ ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ, ບໍ່ແຕະຕ້ອງເຖິງ ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ ຫຼື ບໍ່. ຖ້າເຫັນວ່າ

ຖືກຕ້ອງແລ້ວ ສານປະຊາຊົນຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານປະຊາຊົນ ມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດອຸທອນໄດ້.

ຖ້າສານປະຊາຊົນ ຫາກເຫັນວ່າ ຜົນການແກ້ໄຂຂອງ ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລະເມີດກົດໝາຍແລ້ວ ສານປະຊາຊົນ ກໍຈະລົງຄຳຊີ້ຂາດບໍ່ຢັ້ງຢືນເອົາ ເປັນຕົ້ນ ໃນກໍລະນີ ດັ່ງນີ້:

1. ຄູ່ກໍລະນີໃດໜຶ່ງ ບໍ່ມີຄວາມສາມາດທາງດ້ານການປະພຶດ;

2. ຜົນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຂັດກັບກົດໝາຍຂອງ ສປປ ລາວ;

3. ຜົນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຍັງບໍ່ທັນມີຜົນບັງຄັບຕໍ່ຄູ່ກໍລະນີ ຫຼື ຖືກຍົກເລີກ ຫຼື ຖືກໂຈະໂດຍສານ;

4. ຂໍ້ຂັດແຍ່ງດັ່ງກ່າວ ບໍ່ສາມາດແກ້ໄຂໄດ້ ດ້ວຍກົດໝາຍຂອງ ສປປ ລາວ;

5. ຄູ່ກໍລະນີ ບໍ່ໄດ້ຕົກລົງໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການໄກ່ເກ່ຍ, ການຕັດສິນ ຫຼື ການຕົກລົງນັ້ນເປັນໂມຄະ;

6. ການປະກອບ ຜູ້ໄກ່ເກ່ຍ, ຜູ້ຕັດສິນ, ຄະນະກຳມະການໄກ່ເກ່ຍ, ກຳມະການຕັດສິນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ ແລະ ກົດໝາຍ;

7. ການດຳເນີນການໄກ່ເກ່ຍ ຫຼື ການຕັດສິນ ບໍ່ສອດຄ່ອງກັບລະບຽບການ, ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບໍ່ນຳໃຊ້ລະບຽບການ, ກົດໝາຍໃນການແກ້ໄຂ ຕາມທີ່ຄູ່ກໍລະນີໄດ້ຕົກລົງກັນໄວ້ໃນສັນຍາ;

8. ຂໍ້ມູນ ຫຼັກຖານ ທີ່ຖືເປັນພື້ນຖານໃນການຕັດສິນຄະດີນັ້ນ ມີການປອມແປງ ຫຼື ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຫຼື ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຫຼື ມີການລຳອຽງ ຊຶ່ງສິ່ງຜົນກະທົບຕໍ່ການຕັດສິນ;

9. ຂໍ້ຂັດແຍ່ງບໍ່ຢູ່ໃນຂອບເຂດສິດທີ່ຕ້ອງນຳມາພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

10. ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ ຊຶ່ງບໍ່ໄດ້ຮັບການແກ້ໄຂ.

ຄູ່ກໍລະນີ ມີສິດຕົກລົງໃຫ້ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມກົດໝາຍ.

### ມາດຕາ 41 (ປັບປຸງ) ຄະດີການຄ້າ ຫຼັງການຕັດສິນ

ພາຍຫຼັງສານໄດ້ຕັດສິນຄະດີການຄ້າແລ້ວ ຖ້າຫາກບໍ່ມີການຂໍອຸທອນ ຫຼື ສະເໜີຄັດຄ້ານ ຄຳຕັດສິນກໍຈະຖືກສົ່ງໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ ບ່ອນກ່ຽວຂ້ອງ ເພື່ອປະຕິບັດໃຫ້ສຳເລັດໂດຍໄວ.

## ໝວດທີ 4
## ສິດອຳນາດຂອງຄະນະສານຄອບຄົວ

### ມາດຕາ 42 (ປັບປຸງ) ສິດອຳນາດຂອງຄະນະສານຄອບຄົວ ໃນການພິຈາລະນາຄຳຮ້ອງຟ້ອງ

ຄະນະສານຄອບຄົວ ມີສິດອຳນາດ ພິຈາລະນາຕັດສິນຄະດີ ດັ່ງນີ້:

1. ສາຍຜົວເມຍ ເຊັ່ນ ການຢ່າຮ້າງ, ການແບ່ງປັນສິນສົມສ້າງ ແລະ ໜີ້ສິນຂອງຄູ່ຜົວເມຍ;

2. ການຮ້ອງຟ້ອງທວງເອົາຄ່າລ້ຽງດູລູກ;

3. ການຮ້ອງຟ້ອງ ທວງເອົາຄ່າລ້ຽງດູ ຜົວ ຫຼື ເມຍ, ພໍ່ ແມ່ ແລະ ລູກທີ່ພົ້ນກະສຽນອາຍຸ ແຕ່ຂາດຄວາມສາມາດໃນການອອກແຮງງານ ຫຼື ເປັນບ້າເສຍຈິດ;

4. ສາຍພົວພັນຄອບຄົວ ເປັນຕົ້ນ ການຮັບຮູ້ການເປັນສາຍຍາດ;

5. ການຮ້ອງຟ້ອງເອົາ ລູກ ຫຼື ເດັກ ມາຢູ່ໃນການຄຸ້ມຄອງ;

6. ການປົດສິດ, ການຄືນສິດ ໃນການເປັນ ພໍ່, ແມ່ ແລະ ລູກ;

7. ການເປັນລູກລ້ຽງ;

8. ການຮັບຮູ້ເດັກເປັນລູກ ຫຼື ຮັບຮູ້ການເປັນພໍ່ ຫຼື ການປະຕິເສດການເປັນພໍ່;

9. ຜົນປະໂຫຍດຂອງເດັກ ເຊັ່ນ ການໃສ່ ຊື່, ນາມສະກຸນ ແລະ ສັນຊາດ ຂອງເດັກ;

10. ຄວາມເສຍຫາຍທີ່ເນື່ອງມາຈາກ ການບໍ່ປະຕິບັດຕາມ ການໝັ້ນໝາຍ, ການສູ່ຂໍ, ການຮ່ວມປະເວນີກັນກ່ອນການເປັນຜົວເມຍ ແລະ ອື່ນໆ.

## ມາດຕາ 43 ສິດອຳນາດຂອງຄະນະສານຄອບຄົວ ໃນການພິຈາລະນາການຮ້ອງຂໍ

ຄະນະສານຄອບຄົວ ມີສິດອຳນາດ ພິຈາລະນາ ດັ່ງນີ້:

1. ການຮ້ອງຂໍ ໃຫ້ລົບລ້າງການແຕ່ງດອງເປັນໂມຄະ ຫຼື ຍົກເລີກການແຕ່ງດອງທີ່ບໍ່ສອດຄ່ອງກັບກົດໝາຍ;
2. ການຮ້ອງຂໍໃຫ້ສານຮັບຮູ້ການຢ່າຮ້າງ ດ້ວຍຄວາມສະໝັກໃຈ;
3. ການຮ້ອງຂໍໃຫ້ຮັບຮູ້ການແບ່ງປັນສິນສົມສ້າງ ພາຍຫຼັງການຢ່າຮ້າງດ້ວຍຄວາມສະໝັກໃຈ;
4. ການຮ້ອງຂໍໃຫ້ສານພິຈາລະນາ ການປ່ຽນແປງສິດໃນການຄຸ້ມຄອງລູກ ພາຍຫຼັງການຢ່າຮ້າງ;
5. ການຮ້ອງຂໍໃຫ້ສານອອກມາດຕະການຈຳກັດສິດ ຂອງພໍ່ ຫຼື ແມ່ ຕໍ່ເດັກ;
6. ການຮ້ອງຂໍໃຫ້ສານອອກມາດຕະການ ຕໍ່ ພໍ່ ຫຼື ແມ່ ໃນການເບິ່ງແຍງລ້ຽງດູເດັກ ພາຍຫຼັງການຢ່າຮ້າງ;
7. ການຮ້ອງຂໍບັນຫາອື່ນ ກ່ຽວກັບຄະດີຄອບຄົວ.

## ມາດຕາ 44 ການໄກ່ເກ່ຍຄູ່ຄວາມ ຢູ່ຄະນະສານຄອບຄົວ

ກ່ອນການພິຈາລະນາຕັດສິນຄະດີຢ່າຮ້າງນັ້ນ ສານຕ້ອງພະຍາຍາມທຳການໄກ່ເກ່ຍ ໃຫ້ຄູ່ຜົວເມຍຄືນດີກັນ ໂດຍເຊີນເອົາ ພໍ່ ແມ່ ແລະ ຍາດພີ່ນ້ອງ ຂອງຄູ່ຄວາມນັ້ນເຂົ້າມາສານ ເພື່ອປຶກສາຫາລື ຫຼື ຊ່ວຍເຫຼືອສານໃນການສຶກສາອົບຮົມໄກ່ເກ່ຍ ໃຫ້ຄູ່ຄວາມໄດ້ເຂົ້າອົກເຂົ້າໃຈ ແລະ ປະນີປະນອມກັນ ກ້າວໄປເຖິງໃຫ້ຄູ່ ຜົວ ເມຍໄດ້ຢູ່ຮ່ວມກັນຕໍ່ໄປ.

ຖ້າຄູ່ຜົວເມຍ ຫາກຄືນດີກັນໄດ້ ສານກໍເຮັດບົດບັນທຶກໄວ້ ແລ້ວໃຫ້ຖອນຄຳຮ້ອງຂໍຢ່າຮ້າງ.

ໃນກໍລະນີ ບໍ່ສາມາດຕົກລົງກັນໄດ້ ສານຈະໃຫ້ເວລາໄປຄົ້ນຄິດ ພາຍໃນເວລາ ສາມເດືອນ.

ຖ້າວ່າຄູ່ ຜົວ ເມຍ ຫາກບໍ່ສາມາດຄືນດີກັນໄດ້ ຕາມເວລາທີ່ສານໄດ້ກຳນົດໃຫ້ນັ້ນແລ້ວ ສານກໍຈະພິຈາລະນາຕັດສິນ ກ່ຽວກັບຄຳຮ້ອງຂໍຢ່າຮ້າງຕາມກົດໝາຍ.

## ມາດຕາ 45 (ປັບປຸງ) ການແບ່ງປັນສິນສົມສ້າງ ແລະ ການຄຸ້ມຄອງລູກ

ການແບ່ງປັນສິນສົມສ້າງ ຂອງຄູ່ ຜົວ ເມຍ ໃຫ້ປະຕິບັດຕາມປະມວນກົດໝາຍແພ່ງ.

ໃນກໍລະນີ ມີການຢ່າຮ້າງກັນ ເດັກທີ່ມີອາຍຸຕ່ຳກວ່າ ເຈັດປີ ສານຈະມອບໃຫ້ເດັກນັ້ນຢູ່ນຳຜູ້ເປັນແມ່, ເວັ້ນເສຍແຕ່ຜູ້ເປັນແມ່ ຫາກບໍ່ຮັບເອົາເດັກ ຫຼື ບໍ່ມີເງື່ອນໄຂໃນການລ້ຽງດູເດັກຕໍ່ໄປ. ສຳລັບເດັກທີ່ມີອາຍຸແຕ່ເຈັດປີ ຂຶ້ນໄປນັ້ນ ໃຫ້ຖາມຄວາມສະໝັກໃຈຂອງເດັກເສຍກ່ອນ.

ໃນກໍລະນີ ພໍ່ ແລະ ແມ່ ຫາກບໍ່ຮັບເອົາເດັກ ຫຼື ບໍ່ເໝາະສົມໃນການລ້ຽງດູເດັກແລ້ວ ສານກໍຈະພິຈາລະນາມອບເດັກໃຫ້ ບຸກຄົນທີສາມ ເປັນຜູ້ຄຸ້ມຄອງລ້ຽງດູ.

## ມາດຕາ 46 (ປັບປຸງ) ການພິຈາລະນາຄ່າລ້ຽງດູ

ເມື່ອມີການຮ້ອງຂໍເອົາຄ່າລ້ຽງດູລູກ ໃນກໍລະນີ ມີການຢ່າຮ້າງນັ້ນ ຖ້າຫາກມີສິນສົມສ້າງ ກໍໃຫ້ແບ່ງເອົາໜຶ່ງສ່ວນສາມ ຂອງສິນສົມສ້າງ ເພື່ອເປັນຄ່າລ້ຽງດູລູກ. ໃນກໍລະນີ ສິນສົມສ້າງ ຫາກບໍ່ພຽງພໍ ກັບຄ່າລ້ຽງດູລູກ

ກໍໃຫ້ຜູ້ມີພັນທະລ້ຽງດູ ສືບຕໍ່ຈ່າຍຄ່າລ້ຽງດູລູກແຕ່ລະຄົນ ເປັນແຕ່ລະເດືອນ ຕາມອັດຕາຄ່າຄອງຊີບໃນແຕ່ລະໄລຍະ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ.

ໃນກໍລະນີ ບໍ່ມີສິນສົມສ້າງ ສານກໍຕ້ອງຕັດສິນໃຫ້ຝ່າຍຜູ້ມີພັນທະລ້ຽງດູນັ້ນ ຈ່າຍຄ່າລ້ຽງດູລູກແຕ່ລະຄົນ ເປັນແຕ່ລະເດືອນ ຕາມອັດຕາຄ່າຄອງຊີບໃນແຕ່ລະໄລຍະ ໂດຍເອົາເຄິ່ງໜຶ່ງຂອງເງິນເດືອນຕໍ່າສຸດ ຂອງພະນັກງານລັດ ເປັນພື້ນຖານຂອງການຄິດໄລ່. ຖ້າສິນສົມສ້າງຫາກເປັນເຮືອນ ທີ່ຄອບຄົວດໍາລົງຊີວິດຢູ່ນັ້ນ ຜົວ ຫຼື ເມຍ ທີ່ມີລູກຢູ່ນໍານັ້ນ ມີບຸລິມະສິດໃນການໄດ້ຮັບເຮືອນດັ່ງກ່າວ. ຖ້າມູນຄ່າເຮືອນ ຫາກສູງກວ່າພູດຂອງຜູ້ມີພັນທະລ້ຽງດູລູກໄດ້ຮັບນັ້ນ ກໍໃຫ້ຜູ້ໄດ້ຮັບເຮືອນນັ້ນສົ່ງມູນຄ່າທີ່ເກີນ ໃຫ້ແກ່ອີກຝ່າຍໜຶ່ງ.

ສໍາລັບການລ້ຽງດູ ຜົວ ຫຼື ເມຍ ພາຍຫຼັງການຢ່າຮ້າງກັນນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍແພ່ງ.

**ມາດຕາ 47 (ປັບປຸງ) ການປົດສິດໃນການເປັນ ພໍ່, ແມ່ ແລະ ລູກ**

ການປົດສິດໃນການເປັນ ພໍ່, ແມ່ ຂອງເດັກ ຕາມຄໍາສະເໜີຂອງ ພໍ່, ແມ່, ຍາດໃກ້ຊິດ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຈະດໍາເນີນໄດ້ກໍຕໍ່ເມື່ອຫາກລູກບໍ່ທັນເຖິງກະສຽນອາຍຸ ສິບແປດປີ ຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍແພ່ງ.

ການພິຈາລະນາ ກ່ຽວກັບການປົດສິດໃນການເປັນລູກນັ້ນ ຈະດໍາເນີນໄດ້ກໍຕໍ່ເມື່ອລູກຜູ້ນັ້ນ ຫາກເຖິງກະສຽນອາຍຸ ສິບແປດປີແລ້ວ ແລະ ເປັນລູກເນລະຄຸນ ເປັນຕົ້ນ ທໍາຮ້າຍຮ່າງກາຍ, ບັງຄັບ ນາບຂູ່ ພໍ່, ແມ່, ບໍ່ປະຕິບັດພັນທະໃນການລ້ຽງດູ ພໍ່, ແມ່ ຕາມຄໍາຕັດສິນຂອງສານ ແລະ ອື່ນໆ.

**ມາດຕາ 48 (ປັບປຸງ) ການພິຈາລະນາກ່ຽວກັບສາຍຜົວພັນຄອບຄົວ**

ການພິຈາລະນາກ່ຽວກັບການຢ່າຮ້າງ, ການເອົາເດັກມາເປັນລູກລ້ຽງ, ການຮັບຮູ້ການເປັນພໍ່, ພັນທະໃນການລ້ຽງດູ ພໍ່, ແມ່ ແລະ ລູກ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນປະມວນກົດໝາຍແພ່ງ.

## ໝວດທີ 5
## ສິດອໍານາດຂອງຄະນະສານເດັກ

**ມາດຕາ 49 ສິດອໍານາດຂອງຄະນະສານເດັກ ໃນການພິຈາລະນາການຮ້ອງຟ້ອງ**

ຄະນະສານເດັກ ມີສິດອໍານາດພິຈາລະນາຄະດີ ດັ່ງນີ້:

1. ການໃຊ້ແທນຄ່າເສຍຫາຍ ເນື່ອງມາຈາກການກະທໍາຂອງເດັກ ທີ່ມີອາຍຸຕໍ່າກວ່າ ສິບແປດປີ;
2. ແຮງງານເດັກ;
3. ການກະທໍາລະຫວ່າງເດັກດ້ວຍກັນ;
4. ການລະເມີດສິດທິຂອງເດັກ.

ໃນໄລຍະເວລາຂອງການດໍາເນີນຄະດີເດັກ ເຖິງວ່າເດັກນັ້ນ ຈະມີຄວາມສາມາດທາງດ້ານການປະພຶດ ຫຼື ມີອາຍຸຄົບ ສິບແປດປີ ແລ້ວກໍຕາມ ກໍໃຫ້ຄະນະສານດັ່ງກ່າວ ສືບຕໍ່ພິຈາລະນາຈົນກວ່າຄະດີຈະສໍາເລັດ. ຖ້າຫາກມີການຂໍອຸທອນ ແລະ ຂໍລົບລ້າງ ກໍໃຫ້ຄະນະສານເດັກ ຂອງສານຂັ້ນເທິງ ມີສິດອໍານາດພິຈາລະນາຕໍ່ໄປ.

**ມາດຕາ 50 ສິດອໍານາດຂອງຄະນະສານເດັກ ໃນການພິຈາລະນາການຮ້ອງຂໍ**

ຄະນະສານເດັກ ມີສິດອໍານາດພິຈາລະນາ ດັ່ງນີ້:

1. ການຮ້ອງຂໍໃຫ້ພິຈາລະນາແຕ່ງຕັ້ງຜູ້ປົກຄອງເດັກ;
2. ການຮ້ອງຂໍໃຫ້ພິຈາລະນາ ອອກມາດຕະການຄຸ້ມຄອງ, ສຶກສາອົບຮົມເດັກ;

3. ການຮ້ອງຂໍໃຫ້ນຳໃຊ້ມາດຕະການຕໍ່ເດັກ ທີ່ກະທຳຜິດ;
4. ການຮ້ອງຂໍໃຫ້ແຕ່ງຕັ້ງຜູ້ຄຸ້ມຄອງຊັບສິນບັດຂອງເດັກ;
5. ການຮ້ອງຂໍໃຫ້ນຳໃຊ້ມາດຕະການ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ;
6. ການຮ້ອງຂໍອື່ນ ກ່ຽວກັບຄະດີເດັກ.

**ມາດຕາ 51 ການພິຈາລະນາຄະດີເດັກ**

ໃນການພິຈາລະນາຄະດີເດັກ ທີ່ກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນອື່ນ ຕ້ອງໃຫ້ ພໍ່, ແມ່ ຫຼື ຜູ້ປົກຄອງ ເຂົ້າຮ່ວມນຳ ເພື່ອເປັນຜູ້ຮັບຜິດຊອບຕໍ່ຄ່າເສຍຫາຍທາງແພ່ງ.

ສຳລັບ ການພິຈາລະນາບັນຫາອື່ນ ໃນຄະດີເດັກນັ້ນ ໃຫ້ດຳເນີນຕາມລະບຽບການທົ່ວໄປ ແລະ ຕາມ ຂໍ້ມູນ ຫຼັກຖານ ຕົວຈິງ.

## ໝວດທີ 6
## ສິດອຳນາດຂອງຄະນະສານແຮງງານ

**ມາດຕາ 52 (ປັບປຸງ) ຄະດີກ່ຽວກັບແຮງງານ**

ຄະດີກ່ຽວກັບແຮງງານ ຊຶ່ງສານຈະພິຈາລະນາຕັດສິນໄດ້ນັ້ນ ກໍຕໍ່ເມື່ອອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຫາກບໍ່ສາມາດແກ້ໄຂໄດ້ ມີ ດັ່ງນີ້:

1. ຂໍ້ຂັດແຍ່ງ ກ່ຽວກັບສັນຍາແຮງງານ;
2. ຂໍ້ຂັດແຍ່ງ ກ່ຽວກັບເງິນອຸດໜູນ ເນື່ອງມາຈາກການຍົກເລີກສັນຍາແຮງງານ ໂດຍບໍ່ຖືກຕ້ອງ;
3. ຂໍ້ຂັດແຍ່ງ ກ່ຽວກັບການຮ້ອງຂໍຄ່າເສຍຫາຍ ຈາກອຸບປະຕິເຫດແຮງງານ ຫຼື ພະຍາດອາຊີບ;
4. ຂໍ້ຂັດແຍ່ງ ກ່ຽວກັບເງິນເດືອນ ຫຼື ຄ່າແຮງງານຂອງຜູ້ອອກແຮງງານ;
5. ຂໍ້ຂັດແຍ່ງ ກ່ຽວກັບສະຫວັດດີການແຮງງານ;
6. ຂໍ້ຂັດແຍ່ງອື່ນ ກ່ຽວກັບແຮງງານ.

**ມາດຕາ 53 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບແຮງງານ**

ຂໍ້ຂັດແຍ່ງ ທາງດ້ານກົດໝາຍ ຫຼື ທາງດ້ານຜົນປະໂຫຍດ ລະຫວ່າງ ຜູ້ອອກແຮງງານ ກັບ ຜູ້ໃຊ້ແຮງງານ ຕ້ອງພິຈາລະນາແກ້ໄຂໃຫ້ຖືກຕ້ອງຕາມ ກົດໝາຍວ່າດ້ວຍແຮງງານ, ກົດໝາຍວ່າດ້ວຍການປະກັນສັງຄົມ, ກົດໝາຍວ່າດ້ວຍກຳມະບານລາວ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ກົດລະບຽບພາຍໃນຂອງຫົວໜ່ວຍແຮງງານ ແລະ ລະບຽບການອອກແຮງງານ ດ້ວຍການເຂົ້າຮ່ວມຂອງທັງສອງຝ່າຍ ຫຼື ຜູ້ຕາງໜ້າ.

ໃນກໍລະນີ ສອງຝ່າຍ ຫາກສາມາດຕົກລົງກັນໄດ້ ທັງໝົດ ຫຼື ບາງສ່ວນນັ້ນແລ້ວ ກໍໃຫ້ເຮັດບົດບັນທຶກ ໂດຍແຕ່ລະຝ່າຍພ້ອມດ້ວຍພະຍານ ເຊັນຢັ້ງຢືນຮັບຮູ້ ແລ້ວສົ່ງບົດບັນທຶກດັ່ງກ່າວ ໃຫ້ການຈັດຕັ້ງກຳມະບານ, ອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຂັ້ນຂອງຕົນ ພາຍໃນເວລາ ຫ້າວັນ ນັບແຕ່ວັນ ໄດ້ເຊັນບົດບັນທຶກ ນັ້ນເປັນຕົ້ນໄປ ເພື່ອຈັດຕັ້ງປະຕິບັດ.

ໃນກໍລະນີ ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ຫາກບໍ່ປະຕິບັດຕາມບົດບັນທຶກນັ້ນ ກໍມີສິດຮ້ອງຂໍໃຫ້ ອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ເພື່ອພິຈາລະນາແກ້ໄຂ.

ໃນກໍລະນີ ອົງການຄຸ້ມຄອງແຮງງານ ຫຼື ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງກ່ຽວກັບແຮງງານ ຫາກບໍ່ ສາມາດແກ້ໄຂໄດ້ ຫຼື ແກ້ໄຂໄດ້ບາງສ່ວນ ພາຍໃນເວລາ ສິບຫ້າວັນແລ້ວ ຄູ່ກໍລະນີທີ່ບໍ່ພໍໃຈ ກໍມີສິດຍື່ນຄຳຮ້ອງ ຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນ.

**ມາດຕາ 54 ການດຳເນີນຄະດີແຮງງານ**

ສານປະຊາຊົນ ຕ້ອງນຳເອົາຂໍ້ຂັດແຍ່ງ ກ່ຽວກັບແຮງງານ ມາຄົ້ນຄວ້າ, ໄກ່ເກ່ຍ ແລະ ຕັດສິນ ຕາມຂັ້ນຕອນຂອງກົດໝາຍ.

## ພາກທີ IV
## ຜູ້ດຳເນີນຄະດີ
### ໝວດທີ 1
### ຜູ້ຮັບຜິດຊອບ ໃນການດຳເນີນຄະດີ ຂອງສານປະຊາຊົນ

**ມາດຕາ 55 ຜູ້ຮັບຜິດຊອບ ໃນການດຳເນີນຄະດີແພ່ງ ຂອງສານປະຊາຊົນ**

ຜູ້ຮັບຜິດຊອບໃນການດຳເນີນຄະດີແພ່ງ ປະກອບດ້ວຍ:

1. ປະທານ, ບັນດາຮອງປະທານ ສານ;
2. ຫົວໜ້າຄະນະສານ, ຮອງຫົວໜ້າຄະນະສານ;
3. ຜູ້ພິພາກສາ;
4. ຜູ້ຊ່ວຍຜູ້ພິພາກສາ;
5. ຈ່າສານ;
6. ພະນັກງານວິຊາການ.

**ມາດຕາ 56 ສິດ ແລະ ໜ້າທີ່ ຂອງປະທານ ແລະ ບັນດາຮອງປະທານ ສານ**

ໃນການດຳເນີນຄະດີ ປະທານ ແລະ ບັນດາຮອງປະທານ ສານ ມີ ສິດ ແລະ ໜ້າທີ່ ໃນການຊຸກຍູ້, ຕິດຕາມ ການປະຕິບັດແຜນການດຳເນີນຄະດີ ຂອງແຕ່ລະຄະນະສານ, ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໃນຂອບເຂດຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສານປະຊາຊົນ.

ປະທານ ແລະ ບັນດາຮອງປະທານ ສານ ມີສິດນັ່ງເປັນປະທານ ໃນທຸກຄະນະສານຕັດສິນ ຂອງສານປະຊາຊົນຂັ້ນຂອງຕົນ.

**ມາດຕາ 57 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າ ຄະນະສານ**

ຫົວໜ້າຄະນະສານ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ກວດກາ ແລະ ແຈກຢາຍ ສຳນວນຄະດີ ໃຫ້ຜູ້ພິພາກສາຄົ້ນຄວ້າ;
2. ຕິດຕາມ ກວດກາ ແລະ ຊຸກຍູ້ ການດຳເນີນຄະດີ ໃຫ້ມີຄວາມວ່ອງໄວ.

ຮອງຫົວໜ້າຄະນະສານ ມີໜ້າທີ່ຊ່ວຍຫົວໜ້າຄະນະສານ ໃນການປະຕິບັດໜ້າທີ່ ແລະ ອາດຈະໄດ້ຮັບໜ້າທີ່ໃດໜຶ່ງສະເພາະ ຕາມການມອບໝາຍຂອງຫົວໜ້າຄະນະສານ. ໃນກໍລະນີ ຫົວໜ້າຄະນະສານບໍ່ຢູ່ ຫຼື ຕິດຂັດແມ່ນຮອງຫົວໜ້າຄະນະສານ ຜູ້ໄດ້ຮັບມອບໝາຍເປັນຜູ້ປະຕິບັດໜ້າທີ່ແທນ.

ນອກຈາກນີ້ ຫົວໜ້າ ແລະ ຮອງຫົວໜ້າ ຄະນະສານ ໃນຖານະທີ່ເປັນຜູ້ພິພາກສາ ກໍຍັງມີ ສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 58 ຂອງກົດໝາຍສະບັບນີ້.

**ມາດຕາ 58 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ**

ຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ກຳນົດແຜນການຄົ້ນຄວ້າຄະດີ ທີ່ຕົນຮັບຜິດຊອບ;
2. ຄົ້ນຄວ້າສຳນວນຄະດີ ທີ່ໄດ້ຮັບມອບໝາຍ;
3. ມອບສຳນວນຄະດີ ໃຫ້ຜູ້ຊ່ວຍຜູ້ພິພາກສາ ທຳການຄົ້ນຄວ້າ;
4. ເອົາຄຳໃຫ້ການຂອງ ໂຈດ, ຈຳເລີຍ ແລະ ບຸກຄົນອື່ນ ທີ່ເຂົ້າຮ່ວມໃນການດຳເນີນຄະດີ;
5. ຮັບຟັງ, ຄົ້ນຄວ້າ ຄຳສະເໜີ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
6. ເກັບກຳ ຂໍ້ມູນ ຫຼັກຖານ ກ່ຽວກັບຄະດີ ເປັນຕົ້ນ ລົງເກັບກຳຂໍ້ມູນ, ກວດກາບັນຫາທີ່ຂັດແຍ່ງໃນຄະດີ;
7. ຄົ້ນຄວ້າການອອກ ຄຳສັ່ງ, ຄຳຊີ້ຂາດ ຫຼື ການນຳໃຊ້ມາດຕະການໃດໜຶ່ງ;
8. ຄົ້ນຄວ້າການຕົກລົງໂຈະການດຳເນີນຄະດີ;
9. ໄກ່ເກ່ຍ ຫຼື ທຳການຊ້ອງໜ້າຄູ່ຄວາມ ໃນຄະດີ;
10. ນັ່ງເປັນຄະນະສານຕັດສິນຄະດີ;
11. ນັ່ງພິຈາລະນາຕັດສິນຄະດີ ຜູ້ດຽວ;
12. ອອກໝາຍຮຽກຄູ່ຄວາມ ຫຼື ໝາຍເຊີນຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີ ເຂົ້າມາ ໃຫ້ການ, ຊີ້ແຈງກ່ຽວກັບຄະດີ;
13. ຂຽນຄຳຕັດສິນ ຫຼື ຄຳພິພາກສາໃນຄະດີທີ່ຕົນຮັບຜິດຊອບ;
14. ໄດ້ຮັບການ ບຳລຸງ, ຍົກລະດັບ ກ່ຽວກັບ ວຽກງານດຳເນີນຄະດີ ແລະ ວຽກງານຜູ້ພິພາກສາ;
15. ໄດ້ຮັບການປົກປ້ອງຕາມກົດໝາຍຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ສ່ວນຕົວ ຫຼື ຄອບຄົວ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 (ໃໝ່) ສິດ ແລະ ໜ້າທີ່ ຂອງຜູ້ພິພາກສາ ໃນການພິຈາລະນາຕັດສິນຄະດີຜູ້ດຽວ**

ຄະດີທີ່ນຳມາພິຈາລະນາຕັດສິນ ໂດຍຜູ້ພິພາກສາຜູ້ດຽວ ມີ ດັ່ງນີ້:

1. ຄະດີແພ່ງ

1.1. ຂໍ້ຂັດແຍ່ງທີ່ມີມູນຄ່າບໍ່ເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ;

1.2. ຂໍ້ຂັດແຍ່ງທີ່ມີມູນຄ່າເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ແຕ່ ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ;

1.3. ຂໍ້ຂັດແຍ່ງທີ່ບໍ່ມີມູນຄ່າ, ການຂໍຍົກເລີກ ຫຼື ລົບລ້າງສັນຍາ ທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບມູນຄ່າຂອງສັນຍາ ຫຼື ຊັບສິນ, ການທວງໃຫ້ຍົກຍ້າຍອອກຈາກ ທີ່ດິນ ແລະ ເຮືອນ ທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບກຳມະສິດ, ການຂໍທາງຜ່ານທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບການທົດແທນຄ່າເສຍຫາຍຂອງຊັບສິນ;

1.4. ການຮ້ອງຂໍໃຫ້ຢັ້ງຢືນ ໃບຕາດິນ ຫຼື ເອກະສານອື່ນ ເສຍຫາຍ, ການຮ້ອງຂໍໃຫ້ຮັບຮູ້ວ່າ ບຸກຄົນໃດໜຶ່ງເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ແລະ ການຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ເສຍຊີວິດ.

2. ຄະດີຄອບຄົວ

2.1. ສາຍ ຜົວ ເມຍ ທີ່ບໍ່ມີຂໍ້ຂັດແຍ່ງກ່ຽວກັບ ຊັບເດີມ, ສິນສົມສ້າງ, ໜີ້ສິນ ແລະ ການລ້ຽງດູລູກ;

2.2. ສາຍ ຜົວ ເມຍ ທີ່ມີມູນຄ່າຂໍ້ຂັດແຍ່ງກ່ຽວກັບ ຊັບເດີມ, ສິນສົມສ້າງ ຫຼື ໜີ້ສິນບໍ່ເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ;

2.3. ສາຍ ຜົວ ເມຍ ທີ່ມີມູນຄ່າຂໍ້ຂັດແຍ່ງກ່ຽວກັບ ຊັບເດີມ, ສິນສົມສ້າງ ຫຼື ໜີ້ສິນເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ແຕ່ ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ;

2.4. ການເປັນລູກລ້ຽງ;

2.5. ການປົດສິດໃນການເປັນ ພໍ່, ແມ່ ແລະ ລູກ;

2.6. ຂໍ້ຂັດແຍ່ງກ່ຽວກັບຜົນປະໂຫຍດຂອງເດັກ ເຊັ່ນ ການໃສ່ຊື່, ນາມສະກຸນ ແລະ ສັນຊາດຂອງເດັກ.

3. ຄະດີເດັກ

3.1. ການໃຊ້ແທນຄ່າເສຍຫາຍ ທີ່ມີມູນຄ່າບໍ່ເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ເນື່ອງຈາກການກະທຳຂອງເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ;

3.2. ການຮ້ອງຂໍໃຫ້ພິຈາລະນາອອກມາດຕະການ ຄຸ້ມຄອງ, ສຶກສາອົບຮົມ ເດັກ.

4. ຄະດີແຮງງານ

4.1. ຂໍ້ຂັດແຍ່ງທີ່ມີມູນຄ່າບໍ່ເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ;

4.2. ຂໍ້ຂັດແຍ່ງທີ່ມີມູນຄ່າເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ ແຕ່ ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງຜູ້ຊ່ວຍຜູ້ພິພາກສາ**

ຜູ້ຊ່ວຍຜູ້ພິພາກສາ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ຊ່ວຍຜູ້ພິພາກສາ ໃນການຄົ້ນຄວ້າສຳນວນຄະດີ;
2. ຊ່ວຍຜູ້ພິພາກສາ ໃນການເອົາຄຳໃຫ້ການ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ;
3. ຊ່ວຍຜູ້ພິພາກສາ ໃນການເກັບກຳ ຂໍ້ມູນ ຫຼັກຖານ ກ່ຽວກັບຄະດີ ເປັນຕົ້ນ ລົງເກັບກຳຂໍ້ມູນ, ກວດກາບັນຫາ ທີ່ຂັດແຍ່ງໃນຄະດີ;
4. ເຂົ້າຮ່ວມໃນການ ໄກ່ເກ່ຍ ຫຼື ທຳການຊ້ອງໜ້າຄູ່ຄວາມໃນຄະດີ;
5. ສະຫຼຸບ, ລາຍງານ ຄະດີທີ່ຕົນຮັບຜິດຊອບຄົ້ນຄວ້າ ຕໍ່ຜູ້ພິພາກສາ;
6. ຊ່ວຍຜູ້ພິພາກສາ ໃນການຂຽນ ຄຳຕັດສິນ ແລະ ຄຳພິພາກສາ ຂອງສານ;
7. ໄດ້ຮັບການ ບຳລຸງ, ຍົກລະດັບກ່ຽວກັບວຽກງານດຳເນີນຄະດີ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;
8. ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນສ່ວນຕົວ ຫຼື ຄອບຄົວ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຈ່າສານ**

ຈ່າສານ ມີ ສິດ ແລະ ໜ້າທີ່ ໃນການດຳເນີນຄະດີ ດັ່ງນີ້:

1. ຮັບ ແລະ ກວດກາ ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ ແລະ ເອກະສານອື່ນ ທີ່ກ່ຽວຂ້ອງກັບຄະດີ;
2. ປະກອບສຳນວນ, ຂຶ້ນຟ້ອງ, ເຮັດບັນຊີຄະດີ, ຈັດລຽງເອກະສານ ໃນສຳນວນຄະດີ;
3. ເຂົ້າຮ່ວມ ບັນທຶກການເອົາຄຳໃຫ້ການ, ການໄກ່ເກ່ຍ ແລະ ການໄຕ່ສວນ;
4. ກະກຽມການປະຊຸມສານ, ກວດກາຜູ້ເຂົ້າຮ່ວມ, ປະກາດລະບຽບປະຊຸມສານ ໃຫ້ຜູ້ເຂົ້າຮ່ວມໃນການດຳເນີນຄະດີປະຕິບັດ;

5. ອະທິບາຍ, ຊີ້ແຈງເຫດຜົນ ໃຫ້ຄູ່ຄວາມໃນຄະດີເຂົ້າໃຈ ກ່ຽວກັບຜົນການຕັດສີນ ຫຼື ຜິພາກສາຄະດີ ຂອງສານ ພ້ອມທັງແຈ້ງສິດໃນການ ຂໍອຸທອນ ຫຼື ຂໍລືບລ້າງ;

6. ແຈ້ງຄຳພິພາກສາ ຂອງສານຂັ້ນລົບລ້າງ ໃຫ້ຄູ່ຄວາມຮັບຊາບ;

7. ເຊັນຢັ້ງຢືນສຳເນົາ ຄຳຕັດສີນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມກົດໝາຍ;

8. ເຮັດບັນຊີ, ເກັບມ້ຽນຂອງກາງຄະດີ, ເກັບ, ຄຸ້ມຄອງເງິນຄ່າທຳນຽມສານ ແລະ ເງິນວາງສານ ຕາມກົດໝາຍ, ສະຫຼຸບສະຖິຕິຄະດີ, ສົ່ງຄຳຕັດສີນ, ຄຳພິພາກສາ ຫຼື ເອກະສານອື່ນຂອງສານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ;

9. ໄດ້ຮັບການ ບຳລຸງ, ຍົກລະດັບກ່ຽວກັບ ກົດໝາຍ, ວຽກງານຈ່າສານ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;

10. ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ສ່ວນຕົວ ຫຼື ຄອບຄົວ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ.

### ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະນັກງານວິຊາການ

ພະນັກງານວິຊາການ ແມ່ນ ຜູ້ໄດ້ຜ່ານວິຊາຊີບກົດໝາຍ ທີ່ເຮັດວຽກຢູ່ຄະນະສານໃດໜຶ່ງ ຂອງສານປະຊາຊົນ.

ພະນັກງານວິຊາການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊ່ວຍວຽກຈ່າສານ ໃນການດຳເນີນຄະດີ;
2. ເຂົ້າຮ່ວມໃນການດຳເນີນຄະດີ ແລະ ບັນທຶກຄຳໃຫ້ການ;
3. ຊ່ວຍວຽກຈ່າສານໃນການປະຊຸມສານ;
4. ເຂົ້າຮ່ວມໃນການເກັບກຳ ຂໍ້ມູນ ຫຼັກຖານ, ການໄກ່ເກ່ຍ ແລະ ເຮັດບົດບັນທຶກຕ່າງໆ;
5. ລົງລາຍເຊັນໃນບົດບັນທຶກຄຳໃຫ້ການ, ເອກະສານອື່ນຕາມໜ້າທີ່ ຫຼື ຕາມການມອບໝາຍ;
6. ໄດ້ຮັບການ ບຳລຸງ, ຍົກລະດັບ ກ່ຽວກັບວຽກງານກົດໝາຍ ແລະ ວຽກງານອື່ນທີ່ຕົນຮັບຜິດຊອບ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 2
## ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຂອງອົງການໄອຍະການປະຊາຊົນ

### ມາດຕາ 63 (ປັບປຸງ) ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຂອງອົງການໄອຍະການປະຊາຊົນ

ຜູ້ເຂົ້າຮ່ວມໃນການດຳເນີນຄະດີແພ່ງ ຂອງອົງການໄອຍະການປະຊາຊົນ ປະກອບດ້ວຍ:

1. ຫົວໜ້າອົງການໄອຍະການປະຊາຊົນ, ບັນດາຮອງຫົວໜ້າອົງການໄອຍະການປະຊາຊົນ;
2. ພະນັກງານໄອຍະການປະຊາຊົນ;
3. ຜູ້ຊ່ວຍພະນັກງານໄອຍະການປະຊາຊົນ.

### ມາດຕາ 64 (ປັບປຸງ) ພາລະບົດບາດຂອງອົງການໄອຍະການປະຊາຊົນໃນການດຳເນີນຄະດີແພ່ງ

ອົງການໄອຍະການປະຊາຊົນ ເຂົ້າຮ່ວມໃນການດຳເນີນຄະດີແພ່ງໃນຖານະ ເປັນຜູ້ຕິດຕາມກວດກາການປະຕິບັດກົດໝາຍຂອງສານ ແລະ ເປັນຜູ້ຕາງໜ້າໂຈດໃນຄະດີແພ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ

ເພື່ອປົກປ້ອງຜົນປະໂຫຍດ ຂອງລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

**ມາດຕາ 65 (ປັບປຸງ) ການຕິດຕາມກວດກາ ການປະຕິບັດກົດໝາຍຂອງສານ ໂດຍອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ມີສິດເຂົ້າຮ່ວມ ໃນການດຳເນີນຄະດີແພ່ງ ເພື່ອຕິດຕາມກວດກາການປະຕິບັດກົດໝາຍຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້ ແນໃສ່ເຮັດໃຫ້ຄະດີຖືກດຳເນີນຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງ ແລະ ຍຸຕິທຳ.

ຜູ້ເຂົ້າຮ່ວມ ໃນການດຳເນີນຄະດີແພ່ງ ຂອງອົງການໄອຍະການປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂໍ້ 1 ແລະ ຂໍ້ 2 ຂອງກົດໝາຍສະບັບນີ້ ສາມາດເຂົ້າຮ່ວມ ແລະ ຖະແຫຼງໃນທີ່ປະຊຸມສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ.

**ມາດຕາ 66 (ປັບປຸງ) ການເປັນຜູ້ຕາງໜ້າໂຈດ ໃນຄະດີແພ່ງ ຂອງອົງການໄອຍະການປະຊາຊົນ**

ໃນກໍລະນີຄະດີແພ່ງ ຫາກແຕະຕ້ອງເຖິງຜົນປະໂຫຍດ ຂອງລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ແຕ່ຫາກບໍ່ມີ ອົງການຈັດຕັ້ງ ຫຼື ວິສາຫະກິດ ຫຼື ບຸກຄົນທີ່ກ່ຽວຂ້ອງ ທຳການຮ້ອງຟ້ອງຕໍ່ສານ, ຫົວໜ້າອົງການໄອຍະການປະຊາຊົນ ກໍມີສິດຍື່ນຄຳຮ້ອງຟ້ອງຕໍ່ສານໃນຖານະເປັນຜູ້ຕາງໜ້າໂຈດໃນຄະດີແພ່ງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ນຳໃຊ້ສິດ ແລະ ປະຕິບັດພັນທະດັ່ງດຽວກັນກັບຄູ່ຄວາມໃນຄະດີ.

## ພາກທີ V
## ການເຂົ້າຮ່ວມໃນການດຳເນີນຄະດີ
### ໝວດທີ 1
### ຜູ້ເຂົ້າຮ່ວມໃນການດຳເນີນຄະດີ

**ມາດຕາ 67 (ປັບປຸງ) ຜູ້ເຂົ້າຮ່ວມໃນການດຳເນີນຄະດີ**

ຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ ມີ ດັ່ງນີ້:

1. ຄູ່ຄວາມ;
2. ບຸກຄົນທີສາມ;
3. ພະຍານ;
4. ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ;
5. ຜູ້ແປພາສາ;
6. ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ.

**ມາດຕາ 68 (ປັບປຸງ) ຄູ່ຄວາມໃນຄະດີ**

ຄູ່ຄວາມໃນຄະດີ ແມ່ນ ໂຈດ ແລະ ຈຳເລີຍ.

ໂຈດ ແມ່ນ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ຮ້ອງຟ້ອງຕໍ່ສານວ່າ ສິດ ແລະ ຜົນປະໂຫຍດຂອງຕົນໄດ້ຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງ ຫຼື ຮ້ອງຂໍ ໃຫ້ສານພິຈາລະນາບັນຫາໃດໜຶ່ງ.

ຈຳເລີຍ ແມ່ນ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ຖືກຮ້ອງຟ້ອງວ່າ ໄດ້ລະເມີດ ຫຼື ໂຕ້ແຍ່ງ ສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ.

**ມາດຕາ 69 (ປັບປຸງ) ເງື່ອນໄຂການເປັນຄູ່ຄວາມ**

ບຸກຄົນ ທີ່ເປັນຄູ່ຄວາມໃນຄະດີ ຕ້ອງແມ່ນບຸກຄົນທີ່ມີອາຍຸ ສິບແປດປີ ຂຶ້ນໄປ ແລະ ບໍ່ເປັນບ້າເສຍຈິດ. ສຳລັບ ບຸກຄົນທີ່ມີອາຍຸຕ່ຳກວ່າ ສິບແປດປີ ຫຼື ຜູ້ເປັນບ້າເສຍຈິດ ຕ້ອງໃຫ້ມີ ພໍ່, ແມ່ ຫຼື ຜູ້ປົກຄອງ ເຂົ້າຮ່ວມເປັນຜູ້ຕາງໜ້າຄູ່ຄວາມໃນການດຳເນີນຄະດີ.

ການຈັດຕັ້ງ ສາມາດເປັນຄູ່ຄວາມໃນຄະດີ ຖ້າຫາກການຈັດຕັ້ງນັ້ນ ໄດ້ຈົດທະບຽນເປັນນິຕິບຸກຄົນຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ຫຼື ກົດໝາຍຂອງປະເທດທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 376 ຂອງກົດໝາຍສະບັບນີ້.

ບຸກຄົນອື່ນ ສາມາດເຂົ້າມາເປັນຄູ່ຄວາມໃນຄະດີ ໃນຖານະເປັນຜູ້ຕາງໜ້າ ຖ້າຫາກໄດ້ຮັບການມອບໝາຍຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 70 (ປັບປຸງ) ສິດ ແລະ ພັນທະ ຂອງຄູ່ຄວາມ**

ຄູ່ຄວາມ ມີຄວາມເທົ່າທຽມກັນໃນການດຳເນີນຄະດີ.

ຄູ່ຄວາມ ມີສິດ ດັ່ງນີ້:

1. ຍື່ນ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍ;
2. ສະເໜີຄ້ານຕົວ ຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ແລະ ຜູ້ແປພາສາ;
3. ຊອກຫາ ແລະ ສະເໜີຫຼັກຖານ, ຂໍໄກ່ເກ່ຍ, ເຂົ້າຮ່ວມຊ້ອງໜ້າໃນການສອບສວນ;
4. ຮ້ອງຂໍ ໃຫ້ສານພິຈາລະນາ ນຳໃຊ້ມາດຕະການຮັບປະກັນການຮ້ອງຟ້ອງ ຫຼື ມາດຕະການຊົ່ວຄາວ;
5. ສະເໜີໃຫ້ສານ ພິຈາລະນາຕັດສິນລັບຫຼັງ;
6. ຮ້ອງຂໍໃຫ້ສານເກັບກຳ ຂໍ້ມູນ ຫຼັກຖານ ໃນກໍລະນີ ຄູ່ຄວາມບໍ່ສາມາດນຳມາສະເໜີຕໍ່ສານໄດ້ດ້ວຍຕົນເອງ, ການສະເໜີໃຫ້ສອບຖາມພະຍານ, ການແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທຳການພິສູດ ລວມທັງການຮ້ອງຂໍໃຫ້ພິສູດຄືນໃໝ່, ການລົງກວດກາບັນຫາທີ່ຂັດແຍ່ງ ແລະ ອື່ນໆ;
7. ຊັກຖາມບຸກຄົນອື່ນທີ່ເຂົ້າຮ່ວມໃນຄະດີ;
8. ຂໍເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ທີ່ຈຳເປັນອອກຈາກສຳນວນຄະດີ ແຕ່ຕ້ອງຮັກສາຄວາມລັບທາງດ້ານການຄ້າ ຫຼື ຂໍ້ມູນອື່ນທີ່ເປັນຄວາມລັບ;
9. ເອົາ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການຕໍ່ສູ້ຄະດີ;
10. ໃຫ້ການກ່ຽວກັບຄະດີ ເປັນລາຍລັກອັກສອນ ຫຼື ທາງປາກເປົ່າ ໃນເວລາທຳການສອບສວນ ແລະ ໃນທີ່ປະຊຸມສານ;
11. ສະເໜີໃຫ້ສານ ນຳເອົາບຸກຄົນທີສາມເຂົ້າມາຮ່ວມ ໃນການດຳເນີນຄະດີ;
12. ສະເໜີ ໂຈະ ຫຼື ເລື່ອນ ການດຳເນີນຄະດີ;
13. ຂໍອຸທອນ, ຂໍລົບລ້າງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ, ຍົກເວັ້ນຄຳຕົກລົງຂອງສານທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
14. ຮ້ອງທຸກ ຕໍ່ການກະທຳ ຫຼື ຄຳສັ່ງ ຂອງຜູ້ພິພາກສາ ທີ່ຕົນເຫັນວ່າບໍ່ຖືກຕ້ອງ;
15. ທວງໃຫ້ປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
16. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຄູ່ຄວາມ ມີພັນທະ ດັ່ງນີ້:

1. ເຂົ້າມາສະເໜີຕົວດ້ວຍຕົນເອງ ຫຼື ໃຫ້ຜູ້ຕາງໜ້າເຂົ້າມາ ຕາມໝາຍຮຽກຂອງສານ;
2. ຊອກຫາຫຼັກຖານມາຢັ້ງຢືນເຫດການ ຊຶ່ງຕົນຖືເປັນບ່ອນອີງໃນການ ຮ້ອງຟ້ອງ, ແກ້ຟ້ອງ, ຟ້ອງແຍ່ງ ຫຼື ການຮ້ອງຂໍ;

3. ເຂົ້າຮ່ວມໃນການໄຕ່ສວນຄະດີ, ປະຕິບັດຕາມຄໍາສັ່ງຂອງສານ ແລະ ລະບຽບການ ໃນທີ່ປະຊຸມສານ;

4. ເຂົ້າຮ່ວມ ແລະ ນໍາໃຊ້ສິດ ໃນການດໍາເນີນຄະດີ ດ້ວຍຄວາມບໍລິສຸດໃຈ;

5. ນໍາເງິນມາວາງສານ, ເສຍຄ່າທໍານຽມສານ ທີ່ກ່ຽວຂ້ອງກັບການດໍາເນີນຄະດີ ຕາມການຄິດໄລ່ຂອງສານ ແລະ ເສຍຄ່າທໍານຽມຂອງຜູ້ເສຍຄະດີ ຕາມຄໍາຕັດສິນຂອງສານ;

6. ປະຕິບັດຄໍາຕົກລົງຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;

7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 71 (ປັບປຸງ) ສິດ ແລະ ພັນທະ ຂອງໂຈດ**

ນອກຈາກ ສິດ ແລະ ພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້ແລ້ວ ໂຈດຍັງມີສິດ ປ່ຽນແປງເປົ້າໝາຍຂອງຄໍາຮ້ອງຟ້ອງ, ເພີ່ມ ຫຼື ຫຼຸດ ມູນຄ່າໃນຄໍາຮ້ອງຟ້ອງ ຫຼື ຖອນຄໍາຮ້ອງຟ້ອງ ແລະ ມີພັນທະເຂົ້າມາສານຕາມໝາຍຮຽກຂອງສານ, ຖ້າຫາກໂຈດໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກເຖິງ ສາມຄັ້ງ ຊຶ່ງແຕ່ລະຄັ້ງ ບໍ່ໄດ້ສະເໜີເຫດຜົນທີ່ໜ້າເຊື່ອຖືໄດ້ ສານຈະບໍ່ນໍາເອົາຄະດີດັ່ງກ່າວມາພິຈາລະນາ ແລະ ໃຫ້ໂຈດເສຍສິດ ໃນການຮ້ອງຟ້ອງຄະດີນັ້ນ.

ສານ ບໍ່ອະນຸຍາດໃຫ້ໂຈດຖອນຄໍາຮ້ອງຟ້ອງ ແລະ ຕົກລົງກັນໂດຍດີກັບຈໍາເລີຍ ຖ້າວ່າການຖອນ ແລະ ການຕົກລົງນັ້ນ ຫາກຂັດກັບກົດໝາຍ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ລະເມີດຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດ ອັນຊອບທໍາຂອງບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

**ມາດຕາ 72 ສິດ ແລະ ພັນທະ ຂອງຈໍາເລີຍ**

ນອກຈາກ ສິດ ແລະ ພັນທະ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້ແລ້ວ ຈໍາເລີຍຍັງມີສິດ ຮັບຮູ້ ຫຼື ປະຕິເສດ ຄໍາຮ້ອງຟ້ອງຂອງໂຈດທັງໝົດ ຫຼື ບາງສ່ວນ, ຟ້ອງແຍ່ງ ຖ້າຫາກເຫັນວ່າ ໂຈດຍັງມີພັນທະໃດໜຶ່ງ ທີ່ຕ້ອງປະຕິບັດຕໍ່ຕົນ ແລະ ມີພັນທະເຂົ້າມາສານຕາມໝາຍຮຽກຂອງສານ, ຖ້າຫາກຈໍາເລີຍບໍ່ເຂົ້າມາຕາມໝາຍຮຽກເຖິງ ສາມຄັ້ງ ໂດຍບໍ່ມີເຫດຜົນ ສານອາດອອກໝາຍພາຕົວ ຫຼື ຕັດສິນຕາມການຮ້ອງຟ້ອງຂອງໂຈດ.

ສານ ບໍ່ອະນຸຍາດໃຫ້ຈໍາເລີຍຮັບຮູ້ຄໍາຮ້ອງຟ້ອງຂອງໂຈດ ແລະ ບໍ່ອະນຸຍາດໃຫ້ຕົກລົງກັນ ໂດຍດີກັບໂຈດ ຖ້າວ່າການຮັບຮູ້ ແລະ ການຕົກລົງນັ້ນ ຫາກຂັດກັບກົດໝາຍ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ລະເມີດສິດ ແລະ ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ ຫຼື ບຸກຄົນອື່ນ.

**ມາດຕາ 73 ບຸກຄົນທີສາມ**

ບຸກຄົນທີສາມ ແມ່ນ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ເຂົ້າຮ່ວມໃນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຕິດພັນກັບຄະດີ ຊຶ່ງພວມຖືກພິຈາລະນາຢູ່ສານ.

ບຸກຄົນທີສາມ ຈະບໍ່ແມ່ນ ໂຈດ ຫຼື ຈໍາເລີຍ ໂດຍກົງໃນຄະດີ ແຕ່ເຂົ້າຮ່ວມໃນການດໍາເນີນຄະດີໃນຖານະເປັນ ຝ່າຍໂຈດ ຫຼື ຝ່າຍຈໍາເລີຍ.

**ມາດຕາ 74 (ປັບປຸງ) ສິດ ແລະ ພັນທະ ຂອງບຸກຄົນທີສາມ**

ບຸກຄົນທີສາມ ປະກອບດ້ວຍ ບຸກຄົນທີສາມທີ່ຍື່ນຄໍາຮ້ອງຟ້ອງດ້ວຍຕົນເອງ ແລະ ບຸກຄົນທີສາມທີ່ບໍ່ຍື່ນຄໍາຮ້ອງຟ້ອງດ້ວຍຕົນເອງ.

ບຸກຄົນທີສາມ ທີ່ໄດ້ຍື່ນຄໍາຮ້ອງຟ້ອງດ້ວຍຕົນເອງ ສາມາດເຂົ້າຮ່ວມໃນຄະດີ ນັບແຕ່ເວລານັ້ນ ຈົນເຖິງການລົງຄໍາຕັດສິນຂອງສານ, ນໍາໃຊ້ສິດ ແລະ ປະຕິບັດພັນທະດັ່ງດຽວກັນກັບໂຈດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້.

ບຸກຄົນທີສາມ ທີ່ບໍ່ໄດ້ຍື່ນຄຳຮ້ອງຟ້ອງດ້ວຍຕົນເອງ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສາມາດເຂົ້າຮ່ວມໃນຄະດີ ເປັນຝ່າຍ ໂຈດ ຫຼື ຈຳເລີຍ;

2. ອາດຖືກນຳມາເຂົ້າຮ່ວມໃນຄະດີ ຕາມຄຳຮ້ອງຂໍຂອງຄູ່ຄວາມ, ຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ຕາມຄຳສະເໜີຂອງສານ;

3. ນຳໃຊ້ສິດ ແລະ ປະຕິບັດພັນທະ ດັ່ງດຽວກັນກັບຄູ່ຄວາມ, ເວັ້ນເສຍແຕ່ສິດໃນການປ່ຽນແປງເປົ້າໝາຍຂອງຄຳຮ້ອງຟ້ອງ, ສິດໃນການ ເພີ່ມ ຫຼື ຫຼຸດ ມູນຄ່າໃນຄຳຮ້ອງຟ້ອງ, ສິດໃນການຖອນຄຳຮ້ອງຟ້ອງ, ສິດໃນການຮັບຮູ້ຄຳຮ້ອງຟ້ອງ ຫຼື ຕົກລົງກັນໂດຍດີ ແລະ ສິດໃນການທວງໃຫ້ປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

## ມາດຕາ 75 ບຸກຄົນທີສາມ ກ່ຽວກັບການຟື້ນຟູວຽກງານຄືນ

ໃນການຮ້ອງຂໍກ່ຽວກັບການຟື້ນຟູວຽກງານຄືນ ໃຫ້ກຳມະກອນ ຫຼື ຜູ້ອອກແຮງງານ ທີ່ຖືກ ໄລ່ອອກຈາກວຽກ ຫຼື ຍົກຍ້າຍ ໂດຍບໍ່ຖືກຕ້ອງນັ້ນ ສານຈະໃຫ້ຜູ້ອອກຄຳສັ່ງ ໄລ່ ຫຼື ຍົກຍ້າຍ ກຳມະກອນ ຫຼື ຜູ້ອອກແຮງງານນັ້ນ ເຂົ້າຮ່ວມໃນນາມບຸກຄົນທີສາມ. ເມື່ອເຫັນວ່າ ການໄລ່ອອກຈາກວຽກ ຫຼື ການຍົກຍ້າຍນັ້ນ ຫາກເປັນການລະເມີດກົດໝາຍແລ້ວ ສານຈະຕົກລົງໃຫ້ຜູ້ຖືກໄລ່ອອກ ຫຼື ຍົກຍ້າຍ ເຂົ້າເຮັດວຽກງານຄືນ ພ້ອມທັງໃຫ້ຜູ້ອອກຄຳສັ່ງນັ້ນ ທົດແທນຄ່າເສຍຫາຍທັງໝົດແກ່ຜູ້ກ່ຽວ.

## ມາດຕາ 76 (ປັບປຸງ) ການສືບຕໍ່ແທນຕົວ ໃນການດຳເນີນຄະດີ

ສານ ຈະອະນຸຍາດ ໃຫ້ມີການສືບຕໍ່ແທນຕົວ ຄູ່ຄວາມຝ່າຍໃດໜຶ່ງ ໃນກໍລະນີ ດັ່ງນີ້:

1. ຄູ່ຄວາມໄດ້ເສຍຊີວິດ, ເວັ້ນເສຍແຕ່ການຮ້ອງຟ້ອງ ຫຼື ການຮ້ອງຂໍ ກ່ຽວກັບສິດສ່ວນຕົວ ທີ່ບໍ່ສາມາດປະຕິບັດແທນໄດ້ ເປັນຕົ້ນ ການປົດສິດໃນການເປັນ ພໍ່, ແມ່ ແລະ ລູກ;

2. ນິຕິບຸກຄົນ ທີ່ເປັນຄູ່ຄວາມນັ້ນ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ;

3. ໂຈດ ຫຼື ຈຳເລີຍ ໄດ້ມອບ ສິດ ຫຼື ພັນທະ ໃຫ້ບຸກຄົນອື່ນນຳໃຊ້ ຫຼື ປະຕິບັດແທນ ຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍແພ່ງ.

ການສືບຕໍ່ແທນຕົວ ອາດຈະມີຂຶ້ນໃນທຸກຂັ້ນຕອນຂອງການດຳເນີນຄະດີ.

ສິດ, ພັນທະ ແລະ ທຸກການກະທຳຜ່ານມາຂອງຄູ່ຄວາມໃນຄະດີນັ້ນ ມີຜົນບັງຄັບສຳລັບຜູ້ສືບຕໍ່ແທນຕົວ.

## ມາດຕາ 77 ວິທີການດຳເນີນການສືບຕໍ່ແທນຕົວໃນການດຳເນີນຄະດີ

ເມື່ອຄູ່ຄວາມຝ່າຍໃດໜຶ່ງຫາກໄດ້ ເສຍຊີວິດ, ຍຸບເລີກ ຫຼື ລົ້ມລະລາຍ ຫຼື ໄດ້ມອບສິດໃຫ້ຜູ້ອື່ນປະຕິບັດແທນແລ້ວ ຜູ້ສືບທອດ ຫຼື ຜູ້ໄດ້ຮັບມອບສິດ ຕ້ອງເຮັດໜັງສືສະເໜີ ພ້ອມດ້ວຍເອກະສານຢັ້ງຢືນ ກ່ຽວກັບບັນຫາດັ່ງກ່າວ ສະເໜີຕໍ່ສານປະຊາຊົນ ທີ່ພວມດຳເນີນຄະດີ ເພື່ອພິຈາລະນາ.

ສານປະຊາຊົນ ຕ້ອງອອກຄຳສັ່ງໃຫ້ປ່ຽນຕົວຄູ່ຄວາມ ແລະ ມອບຄຳສັ່ງນັ້ນໃຫ້ຈ່າສານ ເພື່ອປ່ຽນຕົວຄູ່ຄວາມໃນຄະດີຢູ່ປຶ້ມຂຶ້ນຟ້ອງ ລວມທັງເສື້ອປົກສຳນວນຄະດີ ແລະ ຄັດຕິດຄຳສັ່ງນັ້ນໄວ້ໃນສຳນວນຄະດີ.

## ມາດຕາ 78 (ໃໝ່) ຄວາມຮັບຜິດຊອບຂອງຜູ້ສືບຕໍ່ແທນຕົວ

ຜູ້ສືບຕໍ່ແທນຕົວ ມີຄວາມຮັບຜິດຊອບໃນການ ນຳໃຊ້ສິດ ແລະ ປະຕິບັດພັນທະ ໃນການດຳເນີນຄະດີດັ່ງດຽວກັນກັບຄູ່ຄວາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້.

ຜູ້ສືບຕໍ່ແທນຕົວ ໃນການດຳເນີນຄະດີ ຈະບໍ່ມີຄວາມຮັບຜິດຊອບຕໍ່ ໜີ້ສິນ, ຄ່າເສຍຫາຍ ທີ່ຕົນບໍ່ມີຂໍ້ຜູກພັນທາງແພ່ງ ເປັນຕົ້ນ ຜູ້ສືບທອດມູນມໍຣະດົກ ທີ່ໄດ້ສະລະມູນມໍຣະດົກ.

**ມາດຕາ 79 (ປັບປຸງ) ພະຍານ**

ພະຍານ ແມ່ນ ບຸກຄົນຜູ້ໄດ້ຮູ້ເຫັນເຫດການຕົວຈິງຂອງ ຂໍ້ຂັດແຍ່ງ ຫຼື ສະພາບຂອງຄະດີ.

ຄົນ ຫູໜວກ, ປາກກືກ, ຄົນປັນຍາອ່ອນ, ເສຍຈິດ, ເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ, ຍາດພີ່ນ້ອງໃກ້ຊິດຂອງຄູ່ຄວາມຝ່າຍໃດໜຶ່ງ ອາດຈະນຳມາໃຫ້ການ ເພື່ອເອົາເປັນຂໍ້ມູນ ແຕ່ບໍ່ໃຫ້ຖືວ່າເປັນພະຍານ.

**ມາດຕາ 80 ສິດ ແລະ ພັນທະຂອງພະຍານ**

ພະຍານ ມີສິດ ດັ່ງນີ້:

1. ໃຫ້ການຕໍ່ສານ;
2. ເບິ່ງບົດບັນທຶກຄຳໃຫ້ການຂອງຕົນ ທີ່ໄດ້ໃຫ້ການໄປແລ້ວ;
3. ສະເໜີດັດແປງ, ເພີ່ມ ບົດບັນທຶກຄຳໃຫ້ການຂອງຕົນ ຫຼື ໃຫ້ການເພີ່ມ;
4. ຮ້ອງທຸກຕໍ່ການກະທຳ ທີ່ບໍ່ຖືກຕ້ອງຂອງຜູ້ພິພາກສາ;
5. ໄດ້ຮັບການປົກປ້ອງຕາມກົດໝາຍ ຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດສັກສີ ແລະ ຊັບສິນຍ້ອນການໃຫ້ການຂອງຕົນ.

ພະຍານ ມີພັນທະ ດັ່ງນີ້:

1. ເຂົ້າມາສະເໜີຕົວ ຕາມໝາຍຮຽກຂອງສານ;
2. ໃຫ້ການຢ່າງຖືກຕ້ອງຕາມເຫດການຕົວຈິງ;
3. ຮັບຜິດຊອບຕາມກົດໝາຍ ຕໍ່ການໃຫ້ການເທັດ ຫຼື ບໍ່ຍອມໃຫ້ການ, ສານຈະເອົາຄຳໃຫ້ການຂອງພະຍານໃນບ່ອນຢູ່ຂອງຜູ້ກ່ຽວເອງກໍໄດ້ ໃນກໍລະນີຜູ້ກ່ຽວຫາກ ເຈັບເປັນ, ເຖົ້າແກ່, ເສຍອົງຄະ ຫຼື ບໍ່ສາມາດເຂົ້າມາສານຕາມໝາຍຮຽກຍ້ອນມີຄວາມຈຳເປັນ.

ບຸກຄົນທີ່ຮ້ອງຂໍໃຫ້ຮຽກເອົາຕົວພະຍານເຂົ້າມາສານນັ້ນ ຕ້ອງເລົ່າເຫດການໃນຄະດີ ທີ່ພົວພັນກັບພະຍານນັ້ນຕໍ່ສານ ໂດຍບອກ ຊື່, ນາມສະກຸນ ແລະ ບ່ອນຢູ່ ຂອງພະຍານນັ້ນຢ່າງຈະແຈ້ງ ພ້ອມທັງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນ ເຂົ້າຮ່ວມໃນການດຳເນີນຄະດີ ຕາມກົດໝາຍ.

**ມາດຕາ 81 ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ**

ຜູ້ຊ່ຽວຊານ ແມ່ນ ບຸກຄົນທີ່ມີຄວາມຮູ້ ແລະ ປະສົບການທາງດ້ານວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາທີ່ພົວພັນກັບວິຊາສະເພາະຂອງຕົນ.

ເມື່ອເຫັນວ່າ ມີຄວາມຈຳເປັນຕ້ອງທຳການພິສູດຫຼັກຖານ ທີ່ມີການສົງໄສກ່ຽວກັບ ບັນຫາວິທະຍາສາດ, ເຕັກນິກ, ການຄ້າ, ບັນຊີ ແລະ ອື່ນໆແລ້ວ ສານຕ້ອງອອກຄຳສັ່ງແຕ່ງຕັ້ງຜູ້ຊ່ຽວຊານໃຫ້ທຳການພິສູດ ຕາມຄຳຮ້ອງຂໍຂອງບຸກຄົນທີ່ເຂົ້າຮ່ວມໃນຄະດີ ຫຼື ຕາມຄຳເຫັນຂອງສານ.

ຜູ້ຊ່ຽວຊານ ຕ້ອງດຳເນີນການພິສູດຫຼັກຖານນັ້ນ ຢູ່ໃນຂອບເຂດທີ່ໄດ້ກຳນົດໄວ້ໃນຄຳສັ່ງ. ພາຍຫຼັງໄດ້ທຳການພິສູດແລ້ວ ຜູ້ຊ່ຽວຊານຕ້ອງເຮັດບົດສະຫຼຸບໃຫ້ຄຳເຫັນໃນນາມຂອງຕົນ ແລ້ວສົ່ງໄປໃຫ້ສານຕາມເວລາທີ່ໄດ້ກຳນົດໄວ້ ແລະ ຕ້ອງຮັບຜິດຊອບຕໍ່ຄຳເຫັນດັ່ງກ່າວ.

ການພິສູດ ອາດຈະເຮັດໂດຍຜູ້ຊ່ຽວຊານ ຫຼາຍຄົນ ຫຼື ຫຼາຍເທື່ອ ກໍໄດ້.

ໃນການພິສູດຄືນໃໝ່ນັ້ນ ຕ້ອງໃຫ້ມີຈຳນວນຜູ້ຊ່ຽວຊານ ຫຼາຍກວ່າເທື່ອຜ່ານມາ.

ໃນກໍລະນີ ບໍ່ມີຜູ້ຊ່ຽວຊານ ອາດຈະແຕ່ງຕັ້ງ ຜູ້ຊຳນານງານ ດຳເນີນການກໍໄດ້.

**ມາດຕາ 82 ສິດ ແລະ ພັນທະຂອງຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ**

ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ ມີສິດ ດັ່ງນີ້:

1. ທວງເອົາ ຂໍ້ມູນ ຫຼັກຖານ ເພີ່ມ ເພື່ອໃຫ້ການພິສູດມີຄວາມ ຖືກຕ້ອງ ແລະ ຊັດເຈນ;
2. ໄດ້ຮັບຄ່າຕອບແທນ ແລະ ຄ່າໃຊ້ຈ່າຍໃນການພິສູດຫຼັກຖານ ຕາມຄໍາສັ່ງຂອງສານ;
3. ໃຫ້ການຊີ້ແຈງຕໍ່ສານ ກ່ຽວກັບຜົນການພິສູດ;
4. ເພີ່ມ, ດັດແປງ ຜົນການພິສູດຫຼັກຖານ ຖ້າເຫັນວ່າມີຂໍ້ມູນໃໝ່ກ່ຽວກັບການພິສູດ;
5. ໄດ້ຮັບການປົກປ້ອງ ຕາມກົດໝາຍ ຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ທີ່ກ່ຽວຂ້ອງກັບການພິສູດຫຼັກຖານ ແລະ ໃນເວລາພິສູດຫຼັກຖານ.

ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ ມີພັນທະ ດັ່ງນີ້:

1. ພິສູດຫຼັກຖານ ແລະ ໃຫ້ຄໍາເຫັນຢ່າງຖືກຕ້ອງ ຕາມຫຼັກວິຊາສະເພາະ;
2. ສົ່ງບົດສະຫຼຸບຜົນການພິສູດຫຼັກຖານ ຕາມເວລາທີ່ໄດ້ກໍານົດໄວ້ໃນຄໍາສັ່ງຂອງສານ;
3. ເຂົ້າມາໃຫ້ການຊີ້ແຈງຕໍ່ສານ ຕາມການເຊີນຂອງສານ;
4. ຮັບຜິດຊອບຕໍ່ການພິສູດຂອງຕົນ;
5. ຮັກສາຄວາມລັບຕໍ່ຜົນການພິສູດ ຕາມຄໍາສັ່ງຂອງສານ.

**ມາດຕາ 83 ຜູ້ແປພາສາ**

ຜູ້ແປພາສາ ແມ່ນ ບຸກຄົນ ທີ່ມີຄວາມຮູ້, ຄວາມສາມາດ ຫຼື ປະສົບການໃນການແປພາສາໃດໜຶ່ງ ຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີ ທີ່ບໍ່ຮູ້ພາສາລາວ.

ຜູ້ແປພາສາ ຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະ ມີພັນທະໃນການຮັກສາຄວາມລັບໃນຄະດີ.

**ມາດຕາ 84 ສິດ ແລະ ພັນທະຂອງຜູ້ແປພາສາ**

ຜູ້ແປພາສາ ມີສິດ ດັ່ງນີ້:

1. ຮັບຮູ້, ສຶກສາຄົ້ນຄວ້າຂໍ້ມູນກ່ຽວກັບຄະດີ ກ່ອນການແປພາສາ;
2. ໄດ້ຮັບຄ່າຕອບແທນໃນການແປພາສາ ຕາມລະບຽບການ;
3. ໄດ້ຮັບການປົກປ້ອງ ຕາມກົດໝາຍຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນ ທີ່ກ່ຽວຂ້ອງກັບການແປພາສາ ໃນການດໍາເນີນຄະດີ.

ຜູ້ແປພາສາ ມີພັນທະ ດັ່ງນີ້:

1. ແປພາສາໃຫ້ຖືກຕ້ອງ ຕາມເນື້ອໃນຂອງການເວົ້າ ຫຼື ໃຫ້ການ ແລະ ເອກະສານ;
2. ເຂົ້າມາແປພາສາ ຕາມການແຕ່ງຕັ້ງຂອງສານ;
3. ຮັບຜິດຊອບຕໍ່ການແປຂອງຕົນ;
4. ຮັກສາຄວາມລັບກ່ຽວກັບຄະດີ ຕາມຄໍາສັ່ງຂອງສານ.

**ມາດຕາ 85 ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ**

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ແມ່ນ ບຸກຄົນທີ່ເຂົ້າຮ່ວມໃນການດໍາເນີນຄະດີ ເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທໍາຂອງຄູ່ຄວາມ.

ຜູ້ປົກປ້ອງອື່ນ ອາດແມ່ນຜູ້ຕາງໜ້າ ອົງການຈັດຕັ້ງ, ວິສາຫະກິດ, ຜົວ ຫຼື ເມຍ, ພໍ່, ແມ່, ຜູ້ປົກຄອງ ຫຼື ຍາດພີ່ນ້ອງໃກ້ຊິດ.

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີສິດເຂົ້າຮ່ວມໃນການດຳເນີນຄະດີ ໃນທຸກຂັ້ນຕອນຂອງການດຳເນີນຄະດີ.

**ມາດຕາ 86 (ປັບປຸງ) ສິດ ແລະ ພັນທະ ຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ**

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີສິດ ດັ່ງນີ້:

1. ປຶກສາຫາລືກັບຄູ່ຄວາມ;
2. ຍື່ນ ຄຳຮ້ອງຟ້ອງ, ຄຳຮ້ອງຂໍ ຫຼື ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ໃນຄະດີ;
3. ຂໍເບິ່ງເອກະສານ ຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ ທີ່ຈຳເປັນອອກຈາກສຳນວນຄະດີ ແຕ່ຕ້ອງຮັກສາຄວາມລັບທາງດ້ານການຄ້າ ຫຼື ຂໍ້ມູນອື່ນ ທີ່ເປັນຄວາມລັບ;
4. ສະເໜີ ແລະ ປະກອບຫຼັກຖານ ທີ່ກ່ຽວຂ້ອງກັບຄະດີ ຕໍ່ສານ;
5. ເຂົ້າຮ່ວມໃນການໄຕ່ສວນຄະດີ ແລະ ໃຫ້ຄຳເຫັນໃນທີ່ປະຊຸມສານ;
6. ສະເໜີຄ້ານຕົວ ຜູ້ພິພາກສາ, ພະນັກງານໄອຍະການປະຊາຊົນ, ຈ່າສານ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ, ຜູ້ແປພາສາ;
7. ຮ້ອງທຸກຕໍ່ ການປະພຶດ ແລະ ການກະທຳ ຂອງຜູ້ພິພາກສາ ທີ່ຕົນເຫັນວ່າ ບໍ່ຖືກຕ້ອງ;
8. ຂໍອຸທອນ, ຂໍລົບລ້າງ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ, ຍົກເວັ້ນ ຄຳຕົກລົງຂອງສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
9. ໄດ້ຮັບການປົກປ້ອງ ຕາມກົດໝາຍ ຈາກການນາບຂູ່ ຕໍ່ ຊີວິດ, ສຸຂະພາບ, ກຽດຊື່ສຽງ ແລະ ຊັບສິນຍ້ອນການຕໍ່ສູ້ຄະດີໃຫ້ລູກຄວາມຂອງຕົນ;
10. ນຳໃຊ້ສິດອື່ນ ຕາມກົດໝາຍ.

ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີພັນທະ ດັ່ງນີ້:

1. ນຳໃຊ້ທຸກວິທີການປົກປ້ອງ ທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມຜູ້ທີ່ຕົນປົກປ້ອງ;
2. ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍແກ່ຄູ່ຄວາມຜູ້ທີ່ຕົນປົກປ້ອງ;
3. ປະກອບສ່ວນຊອກຫາຫຼັກຖານ ເພື່ອໃຫ້ການດຳເນີນຄະດີ ຖືກຕ້ອງ ແລະ ຍຸຕິທຳ ບົນພື້ນຖານການປະຕິບັດ ຈັນຍາບັນ, ຈັນຍາທຳ ຂອງຕົນ;
4. ປະຕິບັດພັນທະອື່ນຕາມກົດໝາຍ.

## ໝວດທີ 2
## ຜູ້ຕາງໜ້າໃນການດຳເນີນຄະດີ

**ມາດຕາ 87 ຜູ້ຕາງໜ້າໃນການດຳເນີນຄະດີ**

ຜູ້ຕາງໜ້າໃນການດຳເນີນຄະດີ ແມ່ນ ຜູ້ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ແທນຄູ່ຄວາມ ໃນເວລາດຳເນີນຄະດີ.

ຜູ້ຕາງໜ້າ ໃນການດຳເນີນຄະດີ ປະກອບດ້ວຍ ຜູ້ຕາງໜ້າຕາມກົດໝາຍ ແລະ ຜູ້ຕາງໜ້າຕາມການມອບໝາຍ.

**ມາດຕາ 88 (ປັບປຸງ) ຜູ້ຕາງໜ້າຕາມກົດໝາຍ**

ຜູ້ຕາງໜ້າຕາມກົດໝາຍ ແມ່ນ ບຸກຄົນທີ່ມີສິດຕໍ່ສູ້ຄະດີ ໂດຍບໍ່ມີ ການແຕ່ງຕັ້ງ ຫຼື ການມອບໝາຍ ຈາກຜູ້ທີ່ຕົນປົກປ້ອງ.

ຜູ້ຕາງໜ້າຕາມກົດໝາຍ ແມ່ນ ບຸກຄົນ ດັ່ງນີ້:

1. ຜູ້ຕາງໜ້າເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດຂອງ ເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຊຶ່ງແມ່ນ ພໍ່, ແມ່ ຫຼື ຜູ້ປົກຄອງຂອງຜູ້ກ່ຽວ;

2. ຜູ້ຕາງໜ້າ ຜູ້ຫາຍສາບສູນ ຊຶ່ງແມ່ນ ຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງຊັບສິ່ງຂອງຂອງຜູ້ຫາຍສາບສູນ;

3. ຜູ້ຕາງໜ້າຜູ້ສືບທອດ ຊຶ່ງແມ່ນຜູ້ປົກຄອງທີ່ຖືກແຕ່ງຕັ້ງໃຫ້ຮັກສາ ແລະ ຄຸ້ມຄອງມູນມໍຣະດົກຂອງຜູ້ສືບທອດຂອງເຈົ້າມູນມໍຣະດົກ ທີ່ໄດ້ເສຍຊີວິດ ຫຼື ຖືກສານຕັດສິນວ່າ ເປັນຜູ້ເສຍຊີວິດ ຖ້າວ່າມູນມໍຣະດົກນັ້ນຫາກຍັງບໍ່ທັນມີບຸກຄົນໃດຮັບເອົາ;

4. ຜົວ ຫຼື ເມຍ ເປັນຜູ້ຕາງໜ້າກັນ ກ່ຽວກັບສິນສົມສ້າງ ແລະ ໜີ້ສິນ, ນອກຈາກນີ້ ຜູ້ຄອບຄອງຊັບສິ່ງຂອງບຸກຄົນອື່ນຢ່າງຖືກຕ້ອງ ກໍຖືວ່າເປັນຜູ້ຕາງໜ້າຕາມກົດໝາຍ.

**ມາດຕາ 89 (ປັບປຸງ) ສິດ ແລະ ພັນທະຂອງຜູ້ຕາງໜ້າຕາມກົດໝາຍ**

ຜູ້ຕາງໜ້າຕາມກົດໝາຍ ມີ ສິດ ແລະ ພັນທະ ດັ່ງດຽວກັນກັບຄູ່ຄວາມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 70 ຂອງກົດໝາຍສະບັບນີ້.

ຜູ້ຕາງໜ້າຕາມກົດໝາຍ ນໍາໃຊ້ສິດ ແລະ ປະຕິບັດພັນທະ ແທນຄູ່ຄວາມໃນຄະດີ ແລະ ເຮັດໃນນາມເປັນຕົວແທນຂອງຄູ່ຄວາມ ທັງມີສິດຊີ້ຂາດ ສິດໃນກໍາມະສິດ ເພື່ອຜົນປະໂຫຍດຂອງຜູ້ທີ່ຕົນປົກປ້ອງ.

**ມາດຕາ 90 ຜູ້ຕາງໜ້າຕາມການມອບໝາຍ**

ຜູ້ຕາງໜ້າຕາມການມອບໝາຍ ແມ່ນ ບຸກຄົນທີ່ມີສິດຕໍ່ສູ້ຄະດີ ໂດຍມີການແຕ່ງຕັ້ງ ຫຼື ການມອບໝາຍ ຈາກຜູ້ທີ່ຕົນປົກປ້ອງ ຫຼື ຈາກສານປະຊາຊົນ.

ຜູ້ຕາງໜ້າຕາມການມອບໝາຍ ມີ ດັ່ງນີ້:

1. ທະນາຍຄວາມ;

2. ພະນັກງານ ຫຼື ກໍາມະກອນ ຂອງອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ຖືກມອບໝາຍໃນຄະດີທີ່ກ່ຽວຂ້ອງກັບ ອົງການຈັດຕັ້ງ ຫຼື ວິສາຫະກິດນັ້ນ;

3. ບຸກຄົນທີ່ຖືກມອບໝາຍຈາກບັນດາຄູ່ຄວາມໃນຄະດີຝ່າຍດຽວກັນ;

4. ບຸກຄົນທີ່ສານແຕ່ງຕັ້ງໃຫ້ເປັນຜູ້ຕາງໜ້າ ໃນຄະດີທີ່ກ່ຽວຂ້ອງ;

5. ຍາດພີ່ນ້ອງໃກ້ຊິດຂອງ ໂຈດ, ຈໍາເລີຍ ຫຼື ບຸກຄົນທີສາມ ທີ່ໄດ້ຮັບມອບໝາຍ.

**ມາດຕາ 91 ສິດ ແລະ ພັນທະຂອງຜູ້ຕາງໜ້າ ຕາມການມອບໝາຍ**

ຜູ້ຕາງໜ້າຕາມການມອບໝາຍ ມີ ສິດ ແລະ ພັນທະໃນຂອບເຂດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາມອບໝາຍ.

ຜູ້ຕາງໜ້າ ຕ້ອງຮັກສາຄວາມລັບຂອງຄູ່ຄວາມ ແລະ ຊອກຫາ ຂໍ້ມູນ ຫຼັກຖານ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ມອບໝາຍໃຫ້ຕົນເປັນຜູ້ຕາງໜ້າຢູ່ສານ.

**ມາດຕາ 92 (ປັບປຸງ) ການມອບໝາຍໃຫ້ຜູ້ຕາງໜ້າ ໃນການດຳເນີນຄະດີ**

ການມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມ ໃນການດຳເນີນຄະດີຢູ່ສານ ແມ່ນ ການມອບສິດ ແລະ ພັນທະຂອງຄູ່ຄວາມ ໃຫ້ບຸກຄົນໃດໜຶ່ງ ປະຕິບັດແທນຕົນຢູ່ສານ. ການມອບໝາຍນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີການຢັ້ງຢືນຈາກອົງການຈັດຕັ້ງ ບ່ອນຜູ້ມອບໝາຍສັງກັດຢູ່ ເຊັ່ນ ອົງການຈັດຕັ້ງ ຫຼື ວິສາຫະກິດ, ອົງການທະບຽນສານ ຫຼື ຫ້ອງການບ້ານ, ສະຖາບັນ, ໂຮງຮຽນ, ໂຮງໝໍ, ຄ້າຍຄຸມຂັງ ແລະ ບ່ອນອື່ນ.

ການມອບໝາຍ ທີ່ເຮັດໃນນາມນິຕິບຸກຄົນ ຕ້ອງອອກໃຫ້ໂດຍຫົວໜ້າອົງການຈັດຕັ້ງ ຫຼື ວິສາຫະກິດທີ່ກ່ຽວຂ້ອງ.

ສຳລັບ ການແຕ່ງຕັ້ງຜູ້ຕາງໜ້າໂດຍສານນັ້ນ ຈະມີຂຶ້ນໃນກໍລະນີຄູ່ຄວາມຝ່າຍໃດໜຶ່ງ ບໍ່ມີຄວາມສາມາດມອບໝາຍໃຫ້ບຸກຄົນໃດໜຶ່ງໄດ້ ເປັນຕົ້ນ ເປັນຜູ້ທຸກຍາກ, ຜູ້ດ້ອຍໂອກາດ.

**ມາດຕາ 93 ການບໍ່ອະນຸຍາດໃຫ້ເປັນຜູ້ຕາງໜ້າ ໃນການດຳເນີນຄະດີ**

ການບໍ່ອະນຸຍາດໃຫ້ບຸກຄົນໃດໜຶ່ງເປັນຜູ້ຕາງໜ້າ ໃນການດຳເນີນຄະດີຢູ່ສານ ມີກໍລະນີ ດັ່ງນີ້:

1. ບຸກຄົນທີ່ບໍ່ໄດ້ຮັບການມອບສິດຢ່າງຖືກຕ້ອງຈາກຄູ່ຄວາມ;
2. ບຸກຄົນທີ່ເປັນຜູ້ຕາງໜ້າ ໃຫ້ຄູ່ຄວາມຝ່າຍໃດໜຶ່ງແລ້ວ ໃນຄະດີດຽວກັນ;
3. ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ;
4. ຜູ້ຮັບຜິດຊອບໃນການດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 55 ຂອງກົດໝາຍສະບັບນີ້.

**ມາດຕາ 94 (ປັບປຸງ) ການສິ້ນສຸດການເປັນຜູ້ຕາງໜ້າໃນການດຳເນີນຄະດີ**

ຜູ້ຕາງໜ້າຕາມກົດໝາຍ ຈະສິ້ນສຸດລົງ ເມື່ອບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງ ຫາກບັນລຸນິຕິພາວະ ຫຼື ມີອາຍຸຮອດ ສິບແປດປີ ຫຼື ບຸກຄົນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໄດ້ກັບຄືນສູ່ສະພາບເດີມ ແລະ ສາມາດເຂົ້າຮ່ວມໃນການດຳເນີນຄະດີດ້ວຍຕົນເອງໄດ້.

ຜູ້ຕາງໜ້າຕາມການມອບໝາຍ ຈະສິ້ນສຸດລົງ ເມື່ອຜູ້ກ່ຽວໄດ້ ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ໃນການດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນສັນຍາມອບໝາຍ ຫຼື ຄູ່ຄວາມໄດ້ຍົກເລີກສັນຍາໃຫ້ຜູ້ກ່ຽວ ເປັນຜູ້ຕາງໜ້າ.

ຄູ່ຄວາມ ຕ້ອງແຈ້ງໃຫ້ສານຢ່າງເປັນລາຍລັກອັກສອນ ກ່ຽວກັບການຍົກເລີກຜູ້ຕາງໜ້າໃນການດຳເນີນຄະດີຢູ່ສານ.

ຜູ້ມອບໝາຍທີ່ຍົກເລີກສັນຍາ ກ່ຽວກັບການໃຫ້ເປັນຜູ້ຕາງໜ້າ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ສານຮັບຊາບ ກ່ຽວກັບການຍົກເລີກເປັນຜູ້ຕາງໜ້າ ໃນການຕໍ່ສູ້ຄະດີຢູ່ສານ.

## ພາກທີ VI
## ຫຼັກຖານໃນຄະດີ

**ມາດຕາ 95 (ປັບປຸງ) ຫຼັກຖານ**

ຫຼັກຖານໃນຄະດີທາງແພ່ງ ແມ່ນ ບັນດາຂໍ້ມູນ ເປັນຕົ້ນ ວັດຖຸ, ເອກະສານ, ບຸກຄົນ ທີ່ພົວພັນກັບຄະດີ ຊຶ່ງຄູ່ຄວາມ ຫຼື ບຸກຄົນທີສາມ ນຳມາຍື່ນ ແລະ ສະເໜີຕໍ່ສານ ຫຼື ທີ່ສານລົງເກັບກຳດ້ວຍຕົນເອງ ເພື່ອຊ່ວຍໃຫ້ສານສາມາດກຳນົດເຫດການທີ່ພາໃຫ້ມີການ ຮ້ອງຟ້ອງ, ຮ້ອງຂໍ, ການແກ້ຟ້ອງ ຫຼື ການຟ້ອງແຍ່ງ ແລະ ເຫດການອື່ນທີ່ມີຄວາມໝາຍສຳຄັນ ເພື່ອເປັນບ່ອນອີງໃຫ້ແກ່ສານໃນການຕັດສີນຄະດີຢ່າງຖືກຕ້ອງ.

**ມາດຕາ 96 (ປັບປຸງ) ທີ່ມາຂອງຫຼັກຖານ**

ທີ່ມາຂອງຫຼັກຖານ ມີ ດັ່ງນີ້:

1. ເອກະສານ, ວັດຖຸສິ່ງຂອງ ແລະ ສຽງ;
2. ການວາງສະແດງວັດຖຸສິ່ງຂອງຕ່າງໆ;
3. ການໃຫ້ການຂອງຄູ່ຄວາມ, ບຸກຄົນທີສາມ, ພະຍານໃນຄະດີ;
4. ການຢັ້ງຢືນຈາກອົງການທະບຽນສານ;
5. ບົດສະຫຼຸບ ຫຼື ບົດລາຍງານຂອງ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ລວມທັງຂໍ້ມູນຈາກປະເທດ ທີ່ ສປປ ລາວ ເປັນພາຄີ ໃນສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບວຽກງານຍຸຕິທຳ;
6. ບົດບັນທຶກການລົງກວດກາບັນຫາທີ່ຂັດແຍ່ງ;
7. ຜົນການຕີລາຄາຊັບສົມບັດທີ່ຂັດແຍ່ງ;
8. ທີ່ມາອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 97 ປະເພດຫຼັກຖານ**

ຫຼັກຖານໃນຄະດີ ແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ແຮງງານ ປະກອບດ້ວຍ:

1. ຫຼັກຖານທາງດ້ານວັດຖຸ;
2. ຫຼັກຖານທາງດ້ານເອກະສານ;
3. ຫຼັກຖານທາງດ້ານບຸກຄົນ.

ຫຼັກຖານທາງດ້ານວັດຖຸ ໄດ້ມາຈາກວັດຖຸສິ່ງຂອງ ທີ່ພົວພັນກັບຂໍ້ຂັດແຍ່ງ ເຊັ່ນ ພາຫະນະ, ເຮືອ, ຜົນລະປູກ ແລະ ວັດຖຸສິ່ງຂອງອື່ນ.

ຫຼັກຖານທາງດ້ານເອກະສານ ໄດ້ມາຈາກໜັງສືຢັ້ງຢືນກຳມະສິດ, ສັນຍາ, ຮູບພາບ, ບັນຊີຊັບສິນ ແລະ ເອກະສານອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງ.

ຫຼັກຖານທາງດ້ານບຸກຄົນ ໄດ້ມາຈາກຄຳໃຫ້ການຂອງຄູ່ຄວາມ, ຄຳໃຫ້ການ ແລະ ການຢັ້ງຢືນຂອງພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ທີ່ພົວພັນກັບຂໍ້ຂັດແຍ່ງ.

**ມາດຕາ 98 ຫຼັກຖານທາງດ້ານ ວັດຖຸ ຫຼື ເອກະສານ**

ບຸກຄົນຜູ້ສະເໜີຫຼັກຖານດ້ວຍຕົນເອງ ຫຼື ສະເໜີໃຫ້ສານທວງເອົາຫຼັກຖານໃດໜຶ່ງ ຊຶ່ງເປັນ ເອກະສານ ຫຼື ວັດຖຸນັ້ນ ມີພັນທະຊີ້ແຈງກ່ຽວກັບເຫດການ ຫຼື ທີ່ມາຂອງຫຼັກຖານ ເພື່ອເປັນບ່ອນອີງໃນການພິຈາລະນາຄະດີຂອງສານ.

ຖ້າວ່າຫຼັກຖານທາງດ້ານວັດຖຸ ຫຼື ເອກະສານ ທີ່ກ່ຽວຂ້ອງກັບຄະດີນັ້ນ ຫາກໄດ້ມາຈາກບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດທີ່ບໍ່ໄດ້ເຂົ້າຮ່ວມໃນຄະດີແລ້ວ ຫຼັກຖານດັ່ງກ່າວ ກໍຈະຖືກສົ່ງຄືນ ແຕ່ສານຕ້ອງໄດ້ສຳເນົາເອກະສານດັ່ງກ່າວໄວ້ໃນສຳນວນຄະດີ.

ວັດຖຸ ຫຼື ເອກະສານ ທີ່ເປັນຫຼັກຖານນັ້ນ ຕ້ອງໃຫ້ເບິ່ງເຫັນໄດ້, ຈັບບາຍໄດ້ ຫຼື ຟັງສຽງໄດ້ ຫຼື ໃຫ້ອ່ານໄດ້.

**ມາດຕາ 99 (ປັບປຸງ) ຫຼັກຖານທາງດ້ານບຸກຄົນ**

ຄຳໃຫ້ການຂອງຄູ່ຄວາມ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີ ຈະຖືກກວດກາ ແລະ ຕີລາຄາພ້ອມກັນກັບຫຼັກຖານທີ່ເກັບກຳໄດ້ໃນຄະດີ.

ເຫດການ ຫຼື ຂໍ້ມູນ ຊຶ່ງຄູ່ຄວາມອ້າງຂຶ້ນເປັນພື້ນຖານ ໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງຂອງຕົນນັ້ນ ສານນຳໃຊ້ດຸນພິນິດຂອງຕົນ ເພື່ອພິຈາລະນາຕາມຄວາມເປັນຈິງ. ສານຈະຖືວ່າເຫດ

ການ ຫຼື ຂໍ້ມູນນັ້ນ ເປັນຄວາມຈິງໄດ້ກໍຕໍ່ເມື່ອ ສານຫາກເຊື່ອວ່າຄຳກ່າວອ້າງຂອງຄູ່ຄວາມຖືກຕ້ອງ ຕາມເຫດການຕົວຈິງຂອງຄະດີ.

**ມາດຕາ 100 ຫຼັກຖານໃນຄະດີການຄ້າ**

ຫຼັກຖານໃນຄະດີການຄ້າ ນອກຈາກໄດ້ກຳນົດໄວ້ ໃນປະເພດຫຼັກຖານທົ່ວໄປແລ້ວ ຍັງແມ່ນເອກະສານ, ວັດຖຸສິ່ງຂອງ ຫຼື ຂໍ້ມູນ ຂ່າວສານ ທາງດ້ານການຄ້າ ໃນການດຳເນີນຄະດີ ເຊັ່ນ ເອກະສານທາງເອເລັກໂຕຣນິກ, ຮູບພາບ, ການຟັງໂທລະສັບ, ໂທລະສານ, ອິນເຕີເນັດ ຫຼື ເຄື່ອງມືອື່ນທາງດ້ານວິທະຍາສາດ.

**ມາດຕາ 101 (ປັບປຸງ) ພັນທະໃນການສະເໜີຫຼັກຖານຂອງ ຄູ່ຄວາມ ແລະ ບຸກຄົນທີສາມ**

ຄູ່ຄວາມ ແລະ ບຸກຄົນທີສາມ ມີພັນທະຊອກຫາຫຼັກຖານໃນຄະດີ ແລ້ວນຳມາສະເໜີຕໍ່ສານປະຊາຊົນ.

ໂຈດ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ຄຳຮ້ອງຟ້ອງ, ຄຳຮ້ອງຂໍຂອງຕົນ.

ຈຳເລີຍ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອຢັ້ງຢືນເຫດການ ຊຶ່ງເປັນພື້ນຖານໃຫ້ແກ່ ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງ ຂອງຕົນ.

ບຸກຄົນທີສາມ ມີພັນທະສະເໜີຫຼັກຖານທຸກຢ່າງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ.

ກ່ອນສານຈະພິຈາລະນາຄຳຮ້ອງຟ້ອງຂອງໂຈດນັ້ນ ສານຈະກວດກາເບິ່ງວ່າ ໂຈດມີຫຼັກຖານພຽງພໍ ຫຼື ບໍ່ ຖ້າວ່າບໍ່ພຽງພໍແລ້ວ ສານຈະແນະນຳໃຫ້ໂຈດຊອກຫາຫຼັກຖານມາຕື່ມ, ຖ້າຫາກບໍ່ມີຫຼັກຖານອັນໃດແລ້ວ ສານກໍຈະບໍ່ພິຈາລະນາໃຫ້.

ຖ້າວ່າຫຼັກຖານທີ່ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ສະເໜີນັ້ນ ຫາກບໍ່ພຽງພໍແລ້ວ ສານກໍຈະແນະນຳໃຫ້ບຸກຄົນດັ່ງກ່າວ ຊອກຫາຫຼັກຖານມາເພີ່ມ ຫຼື ສານຈະລົງເກັບກຳຫຼັກຖານ ຕາມການສະເໜີຂອງ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫຼື ຕາມຄຳເຫັນຂອງສານ ກໍໄດ້.

**ມາດຕາ 102 (ໃໝ່) ຄວາມຮັບຜິດຊອບໃນການພິສູດຂໍ້ເທັດຈິງ**

ໂຈດ ແລະ ຈຳເລີຍ ຫຼື ບຸກຄົນທີສາມ ຕ້ອງຊອກຫາ, ນຳສະເໜີ ຂໍ້ມູນ ຫຼັກຖານ ທີ່ເຊື່ອຖືໄດ້ ແລະ ບັນຫາທາງດ້ານກົດໝາຍຕໍ່ສານ ເພື່ອພິສູດຂໍ້ເທັດຈິງ ຫຼື ຄວາມເປັນຈິງໃນປະເດັນ, ບັນຫາທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງຕໍ່ສານ, ຍົກເວັ້ນ ຜູ້ຮ້ອງຟ້ອງ ທີ່ເປັນຜູ້ຊົມໃຊ້, ຜູ້ອອກແຮງງານ ຊຶ່ງບໍ່ມີຄວາມຮັບຜິດຊອບໃນການພິສູດ, ແຕ່ແມ່ນ ນິຕິບຸກຄົນ ຫຼື ບໍລິສັດ, ຜູ້ສະໜອງສິນຄ້າ ຫຼື ຜູ້ໃຊ້ແຮງງານ ທີ່ມີຄວາມຮັບຜິດຊອບໃນການຢັ້ງຢືນ, ພິສູດວ່າສິນຄ້າມີຄຸນນະພາບ ແລະ ການປະຕິບັດຕາມກົດໝາຍຖືກຕ້ອງຕໍ່ຜູ້ອອກແຮງງານ.

ຄູ່ຄວາມຝ່າຍໃດ ທີ່ໄດ້ໂຕ້ແຍ່ງຄືນ ຫຼື ປະຕິເສດ ການຮັບຮູ້ເຫດການ ແຕ່ການປະຕິເສດຂໍ້ເທັດຈິງການຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງ ລວມທັງ ຂໍ້ມູນ ຫຼັກຖານ ຂອງອີກຝ່າຍໜຶ່ງນັ້ນ ຕ້ອງຍື່ນສະເໜີການໂຕ້ແຍ່ງຄືນ ຢ່າງເປັນລາຍລັກອັກສອນ ພ້ອມດ້ວຍ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ ຕໍ່ສານ ເພື່ອຢັ້ງຢືນການໂຕ້ແຍ່ງຄືນດັ່ງກ່າວ.

ຄູ່ຄວາມທີ່ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງ ຫຼື ໂຕ້ແຍ່ງຄືນນັ້ນ ຕ້ອງນຳເອົາ ຂໍ້ມູນ ຫຼັກຖານມາພິສູດໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ຖ້າຫຼັກຖານຫາກບໍ່ຄົບຖ້ວນ ສານຈະພິຈາລະນາຕາມ ຂໍ້ມູນຫຼັກຖານ ທີ່ມີໃນສຳນວນຄະດີ.

**ມາດຕາ 103 (ໃໝ່) ຂໍ້ມູນ ຫຼັກຖານ ທີ່ບໍ່ຈຳເປັນຕ້ອງພິສູດ**

ຂໍ້ມູນ ຫຼັກຖານ ທີ່ບໍ່ຈຳເປັນຕ້ອງພິສູດ ມີ ດັ່ງນີ້:

1. ຂໍ້ມູນ ຫຼັກຖານ ທີ່ຈະແຈ້ງ ແລະ ຮັບຮູ້ທົ່ວໄປ ໂດຍສາທາລະນະ;
2. ຂໍ້ມູນ ຫຼັກຖານ ທີ່ສານຂັ້ນຕົ້ນໄດ້ພິສູດ ແລະ ໄດ້ຕັດສິນ, ພິພາກສາ ຮັບຮູ້ ໃນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
3. ສັນຍາກູ້ຢືມ ແລະ ສັນຍາ ຊື້ ຂາຍ ທີ່ໄດ້ຮັບການຢັ້ງຢືນທະບຽນສານຢ່າງຖືກຕ້ອງຕາມກົດໝາຍ;
4. ຂໍ້ມູນ ຫຼັກຖານ ທີ່ຄູ່ຄວາມຮັບຮູ້ນຳກັນແລ້ວ ລວມທັງການຮັບຮູ້ຂອງຜູ້ຕາງໜ້າທີ່ປະຕິບັດຖືກຕ້ອງຕາມຂອບເຂດຂອງການຕາງໜ້າ.

**ມາດຕາ 104 (ປັບປຸງ) ການຍື່ນຫຼັກຖານຕໍ່ສານ**

ຄູ່ຄວາມ ຕ້ອງຍື່ນຫຼັກຖານທັງໝົດ ຢູ່ສານຂັ້ນຕົ້ນ.

ຄູ່ຄວາມ ຕ້ອງຍື່ນຫຼັກຖານ ທີ່ກ່ຽວຂ້ອງກັບການ ຮ້ອງຟ້ອງ, ຮ້ອງຂໍ, ແກ້ຟ້ອງ, ຟ້ອງແຍ່ງ ຂອງຕົນຕໍ່ສານນັບແຕ່ສານໄດ້ຮັບ ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ແກ້ຟ້ອງ ຫຼື ຟ້ອງແຍ່ງ ມາພິຈາລະນາຈົນເຖິງການປິດການໂຕ້ຖຽງໃນທີ່ປະຊຸມສານຂອງສານຂັ້ນຕົ້ນ.

ຫຼັກຖານທາງດ້ານເອກະສານທີ່ຍື່ນຕໍ່ສານ ຕ້ອງເປັນຕົ້ນສະບັບ, ຖ້າຫາກບໍ່ມີຕົ້ນສະບັບ ຫຼື ມີຄວາມຫຍຸ້ງຍາກ ໃນການນຳເອົາຕົ້ນສະບັບມາສະເໜີຕໍ່ສານ ກໍໃຫ້ມີການຢັ້ງຢືນການສຳເນົາ, ຮູບຖ່າຍ ຫຼື ວິທີອື່ນມາຢັ້ງຢືນຕໍ່ສານ. ສຳລັບເອກະສານທີ່ເປັນພາສາຕ່າງປະເທດ ຕ້ອງໄດ້ແປເປັນພາສາລາວ ແລະ ຢັ້ງຢືນຄວາມຖືກຕ້ອງຂອງການແປຈາກອົງການທະບຽນສານ.

**ມາດຕາ 105 ການມອບຮັບ ຂໍ້ມູນ ຫຼັກຖານ**

ຜູ້ຍື່ນ ຂໍ້ມູນ ຫຼັກຖານ ຕໍ່ສານ ຕ້ອງເຮັດໃບສະເໜີ ໂດຍບົ່ງບອກລາຍການ, ລັກສະນະຂອງຫຼັກຖານ, ຈຳນວນໜ້າເອກະສານ ແລະ ອື່ນໆ. ສານຕ້ອງກວດກາຫຼັກຖານດັ່ງກ່າວ ຖ້າເຫັນວ່າຖືກຕ້ອງຕາມລາຍການທີ່ບົ່ງໄວ້ໃນໃບສະເໜີນັ້ນແລ້ວ ກໍໃຫ້ສານເຮັດບົດບັນທຶກມອບຮັບຫຼັກຖານຢ່າງຖືກຕ້ອງ.

ບົດບັນທຶກມອບຮັບ ຂໍ້ມູນ ຫຼັກຖານ ຕ້ອງບົ່ງບອກ ວັນ, ເວລາ ແລະ ສະຖານທີ່ມອບຮັບ ຂໍ້ມູນຫຼັກຖານ ຊື່ ຜູ້ມອບ ແລະ ຜູ້ຮັບ, ລັກສະນະ, ປະເພດ ແລະ ຈຳນວນ ຂໍ້ມູນ ຫຼັກຖານ ໂດຍເຮັດເປັນສາມສະບັບແລ້ວໃຫ້ ຜູ້ມອບ ແລະ ຜູ້ຮັບ ລົງລາຍເຊັນຢັ້ງຢືນ ແລະ ປະທັບຕາຂອງສານ ແລ້ວມອບໃຫ້ຜູ້ຍື່ນ ຂໍ້ມູນ ຫຼັກຖານເກັບໄວ້ໜຶ່ງສະບັບ, ສ່ວນອີກໜຶ່ງສະບັບເກັບຮັກສາໄວ້ໃນສຳນວນຄະດີ ແລະ ອີກໜຶ່ງສະບັບຮັກສາໄວ້ໃນສານຂັ້ນຕົ້ນທີ່ກ່ຽວຂ້ອງ.

**ມາດຕາ 106 (ໃໝ່) ການປິດຮັບ ຂໍ້ມູນ ຫຼັກຖານ**

ການປິດຮັບ ຂໍ້ມູນ ຫຼັກຖານ ຕ້ອງເຮັດເປັນລາຍລັກອັກສອນ ໂດຍໃຫ້ຄູ່ຄວາມ ລົງລາຍເຊັນ ແລະ/ຫຼື ແປະໂປ້ມື ເພື່ອຢັ້ງຢືນວ່າ ຕົນໄດ້ຍື່ນ ຂໍ້ມູນ ຫຼັກຖານ ຄົບຖ້ວນທັງໝົດຕໍ່ສານຂັ້ນຕົ້ນແລ້ວ.

**ມາດຕາ 107 ການໂຕ້ແຍ່ງກ່ຽວກັບ ຂໍ້ມູນ ຫຼັກຖານ**

ຄູ່ຄວາມຝ່າຍທີ່ໂຕ້ແຍ່ງ ກ່ຽວກັບ ຂໍ້ມູນ ຫຼັກຖານ ຂອງຄູ່ຄວາມຝ່າຍກົງກັນຂ້າມ ຕ້ອງນຳເອົາ ຂໍ້ມູນຫຼັກຖານ ມາສະເໜີ ຫຼື ມາຢັ້ງຢືນຄວາມເປັນຈິງຕໍ່ສານ.

ທຸກ ຂໍ້ມູນ ຫຼັກຖານ ທີ່ຄູ່ຄວາມສະເໜີນັ້ນ ສານຕ້ອງແຈ້ງ ໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຊາບເພື່ອໂຕ້ແຍ່ງ.

**ມາດຕາ 108 (ປັບປຸງ) ວິທີການເກັບກຳ ຂໍ້ມູນ ຫຼັກຖານ**

ວິທີການເກັບກຳ ຂໍ້ມູນ ຫຼັກຖານ ຂອງສານ ມີ ດັ່ງນີ້:

1. ຮຽກບຸກຄົນທີ່ກ່ຽວຂ້ອງມາໃຫ້ການຕໍ່ສານ;
2. ລົງກວດກາບັນຫາທີ່ຂັດແຍ່ງ;
3. ແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທຳການພິສູດ;
4. ປະເມີນຊັບທີ່ເປັນເປົ້າໝາຍຂັດແຍ່ງ ຫຼື ມູນຄ່າການຮ້ອງຟ້ອງ;
5. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ຊີ້ແຈງ ຫຼື ຢັ້ງຢືນ ຫຼື ສະໜອງ ຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງ;
6. ມອບໃຫ້ສານອື່ນ ເກັບກຳ ຂໍ້ມູນ ຫຼັກຖານ ແລະ ສອບສວນແທນ.

**ມາດຕາ 109 (ປັບປຸງ) ການເອົາຄຳໃຫ້ການ**

ເມື່ອສານເຫັນວ່າຄູ່ຄວາມໃນຄະດີ ຍັງບໍ່ທັນໄດ້ຊີ້ແຈງບັນຫາໃດໜຶ່ງຢ່າງລະອຽດໃນ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍ ແລະ ຕ້ອງໄດ້ສອບສວນ ໂຈດ, ຈຳເລີຍ, ພະຍານ ຫຼື ບຸກຄົນອື່ນນັ້ນ ສານກໍຈະຮຽກບຸກຄົນດັ່ງກ່າວ ເຂົ້າມາໃຫ້ການຕໍ່ສານ ຕາມປະເດັນສອບສວນ ທີ່ໄດ້ກະກຽມໄວ້.

ຄູ່ຄວາມ, ບຸກຄົນທີສາມ ໃນຄະດີ ສາມາດໃຫ້ການຊີ້ແຈງເພີ່ມດ້ວຍການຂຽນ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ, ຄຳຟ້ອງແຍ່ງ ຫຼື ຄຳຮ້ອງຂໍເພີ່ມ ມາຍື່ນຕໍ່ສານ. ຖ້າຄູ່ຄວາມບໍ່ສາມາດຂຽນ ຫຼື ບໍ່ຕ້ອງການຂຽນ ກໍສາມາດເຂົ້າມາໃຫ້ການຢູ່ສານໂດຍກົງ.

ຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີ ສາມາດເຮັດຄຳຊີ້ແຈງບັນຫາ ເປັນລາຍລັກອັກສອນ ແລ້ວສົ່ງໃຫ້ສານ ຫຼື ເຂົ້າມາໃຫ້ການຕໍ່ສານໂດຍກົງກໍໄດ້.

ການເອົາຄຳໃຫ້ການຂອງເດັກ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຕ້ອງໃຫ້ ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງຂອງຜູ້ກ່ຽວເຂົ້າຮ່ວມນຳ.

ການສອບສວນ ໃຫ້ດຳເນີນຢູ່ຫ້ອງການສານປະຊາຊົນ, ຖ້າຫາກມີຄວາມຈຳເປັນ ຈະລົງສອບສວນ ແລະ ບັນທຶກຄຳໃຫ້ການຢູ່ບ່ອນຢູ່ຂອງຜູ້ກ່ຽວຂ້ອງໃນຄະດີກໍໄດ້.

**ມາດຕາ 110 (ໃໝ່) ການເອົາຄຳໃຫ້ການຜ່ານທາງເອເລັກໂຕຣນິກ**

ຄູ່ຄວາມ, ພະຍານ ຫຼື ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ສະດວກເຂົ້າມາໃຫ້ການຢູ່ສານໂດຍກົງໄດ້ ສາມາດສະເໜີຕໍ່ສານ ເພື່ອເອົາຄຳໃຫ້ການຜ່ານທາງ ໂທລະສັບ, ແອບພລີເຄເຊີນ, ວີດີໂອຄອນເຟີເຣັນ ຫຼື ຕາມຮູບແບບ ຫຼື ຊ່ອງທາງເອເລັກໂຕຣນິກອື່ນ ທີ່ສານໄດ້ກຳນົດ.

ສານຈະບັນທຶກຄຳໃຫ້ການດ້ວຍການ ອັດສຽງ, ບັນທຶກພາບໄວ້ ແລ້ວຄັດຈ້ອນເປັນຄຳໃຫ້ການເປັນລາຍລັກອັກສອນ ແລ້ວໃຫ້ຈ່າສານເປັນຜູ້ຢັ້ງຢືນການບັນທຶກຄຳໃຫ້ການດັ່ງກ່າວໄວ້ເປັນຫຼັກຖານ.

ຄ່າໃຊ້ຈ່າຍໃນການເອົາຄຳໃຫ້ການຜ່ານທາງເອເລັກໂຕຣນິກ ເປັນຄວາມຮັບຜິດຊອບຂອງຄູ່ຄວາມຝ່າຍທີ່ສະເໜີ ຕາມການຄິດໄລ່ຂອງສານ ທີ່ມີການໃຊ້ຈ່າຍຕົວຈິງ.

**ມາດຕາ 111 (ໃໝ່) ການກະກຽມ ແລະ ດຳເນີນການເອົາຄຳໃຫ້ການ**

ຜູ້ພິພາກສາ ທີ່ຮັບຜິດຊອບສຳນວນຄະດີ ຕ້ອງໄດ້ກຽມປະເດັນສອບສວນ ແຕ່ລະເປົ້າໝາຍຢ່າງລະອຽດ, ຊັດເຈນ ແລະ ເປັນປະໂຫຍດໃຫ້ການແກ້ໄຂຄະດີ ກ່ອນຈະອອກໝາຍຮຽກເປົ້າໝາຍທີ່ຈະສອບສວນນັ້ນເຂົ້າມາໃຫ້ການ. ໃນກໍລະນີເປົ້າໝາຍທີ່ຈະມາໃຫ້ການມີຫຼາຍຄົນ ຕ້ອງໄດ້ເຮັດປະເດັນສອບສວນ ແຕ່ລະເປົ້າໝາຍໃຫ້ລະອຽດ, ອາດຈະສອບສວນພ້ອມກັນ ຫຼື ແຍກສອບສວນເປັນແຕ່ລະເປົ້າໝາຍກໍໄດ້.

ໃນການເອົາຄຳໃຫ້ການ ຜູ້ພິພາກສາ ເປັນຜູ້ສອບສວນ ແລະ ຈ່າສານ ຫຼື ພະນັກງານວິຊາການ ເປັນຜູ້ບັນທຶກ.

### ມາດຕາ 112 (ປັບປຸງ) ບົດບັນທຶກຄຳໃຫ້ການ

ບົດບັນທຶກຄຳໃຫ້ການ ຕ້ອງບົ່ງບອກ ສະຖານທີ່, ວັນ, ເວລາ, ຊື່ ແລະ ນາມສະກຸນ ຂອງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ, ຈ່າສານ ຫຼື ພະນັກງານວິຊາການ, ຊື່ ແລະ ນາມສະກຸນ, ຊີວະປະຫວັດຫຍໍ້ ຂອງຜູ້ໃຫ້ການ ແລະ ບັນຫາອື່ນ ຊຶ່ງໄດ້ກຳນົດໄວ້ໃນແບບພິມ.

ເມື່ອເອົາຄຳໃຫ້ການສິ້ນສຸດແລ້ວ ຜູ້ພິພາກສາ ຕ້ອງອ່ານເນື້ອໃນຂອງບົດບັນທຶກໃຫ້ຜູ້ໃຫ້ການຟັງ ຫຼື ໃຫ້ຜູ້ກ່ຽວອ່ານເອົາເອງກໍໄດ້. ຫຼັງຈາກນັ້ນ ບັນດາຜູ້ເຂົ້າຮ່ວມໃນການເອົາຄຳໃຫ້ການ ຕ້ອງພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໃສ່ແຕ່ລະໜ້າ. ໃນກໍລະນີ ເອົາຄຳໃຫ້ການຂອງ ເດັກທີ່ຍັງບໍ່ທັນພົ້ນກະສຽນອາຍຸ, ຄົນຫູໜວກ, ປາກກືກ ແລະ ຄົນປັນຍາອ່ອນ, ເສຍຈິດ ຕ້ອງໃຫ້ຜູ້ປົກຄອງ ຫຼື ຜູ້ປົກປ້ອງ ລົງລາຍເຊັນ ແລະ ແປະໂປ້ມືໃສ່ ເພື່ອຢັ້ງຢືນຄຳໃຫ້ການດັ່ງກ່າວ.

ຖ້າມີການຂີດຂ້າ, ປ່ຽນແປງ ຫຼື ເພີ່ມ ຂໍ້ຄວາມໃນບົດບັນທຶກນັ້ນ ຜູ້ພິພາກສາ, ຈ່າສານ ຫຼື ພະນັກງານວິຊາການ ແລະ ຜູ້ໃຫ້ການ ຕ້ອງລົງລາຍເຊັນ ແລະ ແປະໂປ້ມື ຢັ້ງຢືນໄວ້ຕໍ່ໜ້າແຖວບ່ອນຂີດຂ້າ ຫຼື ເພີ່ມນັ້ນ. ຖ້າຄຳໃຫ້ການມີຫຼາຍໜ້າ ຕ້ອງໃຫ້ມີການເຊັນຢັ້ງຢືນ ແລະ ແປະໂປ້ມືຂອງຜູ້ເຂົ້າຮ່ວມໃສ່ແຕ່ລະໜ້າ.

ໃນກໍລະນີ ຜູ້ໃຫ້ການຫາກບໍ່ຍອມລົງລາຍເຊັນ ແລະ ບໍ່ຍອມແປະໂປ້ມືນັ້ນ ຜູ້ພິພາກສາຕ້ອງໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ.

ບົດບັນທຶກຄຳໃຫ້ການນັ້ນ ໃຫ້ເຮັດເປັນ ສອງສະບັບ, ສະບັບໜຶ່ງ ປະກອບໃສ່ສຳນວນຄະດີ ແລະ ອີກສະບັບໜຶ່ງ ມອບໃຫ້ຜູ້ໃຫ້ການ.

ໃນກໍລະນີຈຳເປັນ ການເອົາຄຳໃຫ້ການອາດຈະບັນທຶກດ້ວຍການ ບັນທຶກສຽງ ຫຼື ບັນທຶກວິດີໂອ ໄວ້ເພື່ອເປັນຂໍ້ມູນກໍໄດ້.

### ມາດຕາ 113 (ປັບປຸງ) ການຊ້ອງໜ້າ

ສານ ອາດຮຽກຄູ່ຄວາມ ຫຼື ບຸກຄົນທີ່ກ່ຽວຂ້ອງໃນຄະດີ ເຂົ້າມາຊ້ອງໜ້າກັນຢູ່ສານ ເພື່ອຊີ້ແຈງບັນຫາທີ່ກ່ຽວຂ້ອງ ພ້ອມທັງໂຕ້ແຍ່ງຫຼັກຖານ ຕາມການສະເໜີຂອງຄູ່ຄວາມຝ່າຍໃດໜຶ່ງ.

ການຊ້ອງໜ້າແຕ່ລະຄັ້ງ ຕ້ອງເຮັດບົດບັນທຶກຊ້ອງໜ້າ ແລະ ຜູ້ເຂົ້າຮ່ວມແຕ່ລະຄົນ ຕ້ອງເຊັນຢັ້ງຢືນດັ່ງດຽວກັນກັບບົດບັນທຶກຄຳໃຫ້ການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 112 ຂອງກົດໝາຍສະບັບນີ້.

### ມາດຕາ 114 (ປັບປຸງ) ການລົງກວດກາບັນຫາທີ່ຂັດແຍ່ງ

ສານ ລົງກວດກາບັນຫາທີ່ຂັດແຍ່ງ ຕາມການສະເໜີຂອງຄູ່ຄວາມຝ່າຍໃດໜຶ່ງ ຫຼື ຕາມຄຳເຫັນຂອງສານກໍໄດ້ ແຕ່ຕ້ອງເຮັດຊ້ອງໜ້າຄູ່ຄວາມ, ຫ້ອງການບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ສານ ຕ້ອງຄິດໄລ່ຄ່າໃຊ້ຈ່າຍ ກ່ຽວກັບການລົງກວດກາບັນຫາທີ່ຂັດແຍ່ງ ແລ້ວແຈ້ງໃຫ້ ຜູ້ຮ້ອງຂໍ ຫຼື ໂຈດນຳເງິນຄ່າໃຊ້ຈ່າຍດັ່ງກ່າວ ມາມອບຕາມການຄິດໄລ່. ທຸກການໃຊ້ຈ່າຍຕ້ອງສະຫຼຸບ ເປັນລາຍລັກອັກສອນ ແລະ ໃຫ້ວິນິດໄສລົງໃນ ຄຳຕັດສິນ ຫຼື ຄຳພິພາກສາ.

### ມາດຕາ 115 (ປັບປຸງ) ບົດບັນທຶກການກວດກາບັນຫາທີ່ຂັດແຍ່ງ

ບົດບັນທຶກການກວດກາບັນຫາທີ່ຂັດແຍ່ງ ຕ້ອງເຮັດຢ່າງລະອຽດ ກ່ຽວກັບລັກສະນະ, ຈຸດພິເສດ ຫຼື ສະພາບ, ບ່ອນທີ່ຂັດແຍ່ງ ແລ້ວໃຫ້ຜູ້ເຂົ້າຮ່ວມ ແຕ່ລະຄົນເຊັນ ແລະ ແປະໂປ້ມື ພ້ອມທັງໃຫ້ນາຍບ້ານບ່ອນກ່ຽວຂ້ອງເຊັນ ແລະ ປະທັບຕາຢັ້ງຢືນ.

ການກວດກາບັນຫາທີ່ຂັດແຍ່ງ ຕ້ອງໃຫ້ຈ່າສານ ຫຼື ພະນັກງານວິຊາການ ເປັນຜູ້ເຮັດບົດບັນທຶກ, ໃຫ້ພະນັກງານທີ່ກ່ຽວຂ້ອງ ວັດແທກ, ແຕ້ມແຜນວາດ, ຖ່າຍຮູບ, ຄິດໄລ່ ຫຼື ປະເມີນລາຄາ ຕາມການຊີ້ນຳຂອງຜູ້ພິພາກສາ ບົນພື້ນຖານການໃຫ້ ຂໍ້ມູນ, ການຊີ້ບອກ ແລະ ຄຳເຫັນຂອງຄູ່ຄວາມ.

**ມາດຕາ 116 (ໃໝ່) ການປະເມີນຊັບທີ່ເປັນເປົ້າໝາຍຂັດແຍ່ງ ຫຼື ມູນຄ່າການຮ້ອງຟ້ອງ**

ຜູ້ຮ້ອງຟ້ອງ ຫຼື ຟ້ອງແຍ່ງ ຕ້ອງກຳນົດມູນຄ່າຊັບທີ່ເປັນເປົ້າໝາຍຂັດແຍ່ງ ຫຼື ມູນຄ່າການຮ້ອງຟ້ອງຕໍ່ສານ ໂດຍອີງຕາມມູນຄ່າຕົວຈິງ ຫຼື ມູນຄ່າທີ່ລັດກຳນົດອອກ.

ໃນກໍລະນີຄູ່ຄວາມຝ່າຍໃດໜຶ່ງໂຕ້ແຍ່ງ ຫຼື ບໍ່ຍອມຮັບ ການກຳນົດມູນຄ່າດັ່ງກ່າວ ຕ້ອງສະເໜີຕໍ່ສານພິຈາລະນາແຕ່ງຕັ້ງຄະນະກຳມະການປະເມີນມູນຄ່າ ຖ້າຄູ່ຄວາມຫາກບໍ່ຍອມຮັບຜົນການປະເມີນ ມີສິດສະເໜີແຕ່ງຕັ້ງຄະນະກຳມະການປະເມີນຄືນ ໂດຍປະຕິບັດຕາມຫຼັກການ ແລະ ວິທີການພິສູດຫຼັກຖານ.

ຄ່າໃຊ້ຈ່າຍໃນການປະເມີນມູນຄ່າ ເປັນຄວາມຮັບຜິດຊອບຂອງຜູ້ສະເໜີ.

ບົດລາຍງານ ຫຼື ບົດບັນທຶກການປະເມີນ ຕ້ອງເຊັນຢັ້ງຢືນຈາກຄະນະກຳມະການດັ່ງກ່າວ ແລະ ໃຫ້ປະຕິບັດຄືກັນກັບການກວດກາບັນຫາທີ່ຂັດແຍ່ງ.

**ມາດຕາ 117 (ປັບປຸງ) ການສົ່ງ ຂໍ້ມູນ ຫຼັກຖານ ໃຫ້ພິສູດ ຫຼື ຢັ້ງຢືນ**

ຜ່ານການດຳເນີນຄະດີ ຖ້າຫາກມີ ຂໍ້ມູນ ຫຼັກຖານ ໃດບໍ່ຈະແຈ້ງ, ມີຂໍ້ສົງໄສ, ຊໍ້າກັນ, ຂັດກັນ ຊຶ່ງມີຄວາມຈຳເປັນຕ້ອງທຳການພິສູດ ເປັນຕົ້ນ ຕົວໜັງສື, ລາຍເຊັນ, ລາຍໂປ້ມື, ຕາປະທັບ, ຊັບສິ່ງຂອງ ຫຼື ສະຖານທີ່ຕ່າງໆ ຕາມຄຳສະເໜີຂອງຄູ່ຄວາມຝ່າຍໃດໜຶ່ງ ຫຼື ຕາມຄຳເຫັນຂອງສານແລ້ວ ສານຕ້ອງສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອທຳການພິສູດ ຫຼື ຢັ້ງຢືນ ພ້ອມທັງບົ່ງບອກບັນຫາ ຫຼື ເປົ້າໝາຍຂອງການພິສູດ ຫຼື ການຢັ້ງຢືນນັ້ນໃຫ້ລະອຽດ, ກຳນົດເວລາພິສູດ ຫຼື ຢັ້ງຢືນ ພ້ອມທັງຄັດຕິດຂໍ້ມູນເອກະສານທີ່ຈະພິສູດນັ້ນ ແລະ ຕ້ອງແຈ້ງໃຫ້ຄູ່ຄວາມ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງຮັບຊາບ.

ພາກສ່ວນທີ່ກ່ຽວຂ້ອງ ຕ້ອງທຳການພິສູດໃຫ້ສຳເລັດ ບໍ່ໃຫ້ເກີນ ສາມເດືອນ ນັບແຕ່ວັນໄດ້ຮັບໜັງສືສະເໜີຂອງສານເປັນຕົ້ນໄປ, ເວັ້ນເສຍແຕ່ ມີຄວາມຫຍຸ້ງຍາກ ຫຼື ມີຫຼາຍອັນຕ້ອງພິສູດ ແຕ່ບໍ່ໃຫ້ເກີນ ສີ່ເດືອນ.

**ມາດຕາ 118 (ປັບປຸງ) ບົດສະຫຼຸບຜົນ ການພິສູດ ຫຼື ການຢັ້ງຢືນ**

ບົດສະຫຼຸບຜົນ ການພິສູດ ຫຼື ການຢັ້ງຢືນ ຕ້ອງບົ່ງບອກລັກສະນະ, ຈຸດພິເສດ, ຂໍ້ສົງໄສ ຂອງ ຂໍ້ມູນຫຼັກຖານ ທີ່ພິສູດ ຫຼື ຢັ້ງຢືນ ຕາມຫຼັກວິຊາການ. ເມື່ອທຳການພິສູດສຳເລັດແລ້ວ ຕ້ອງເຮັດບົດສະຫຼຸບ, ເຊັນຢັ້ງຢືນ ແລະ ປະທັບຕາ ແລ້ວສົ່ງໃຫ້ສານ ພາຍໃນເວລາ ສາມວັນ.

**ມາດຕາ 119 (ໃໝ່) ຜົນສະທ້ອນການພິສູດ ຫຼັກຖານ ຕົວໜັງສື, ລາຍເຊັນ, ລາຍໂປ້ມື, ຕາປະທັບ ປອມ**

ເມື່ອມີການໂຕ້ແຍ່ງວ່າ ເອກະສານຫຼັກຖານ ຕົວໜັງສື, ລາຍເຊັນ, ລາຍໂປ້ມື, ຕາປະທັບ ປອມນັ້ນຜູ້ສະເໜີຫຼັກຖານດັ່ງກ່າວ ສາມາດຖອນ ຫຼື ບໍ່ນຳໃຊ້ເປັນຫຼັກຖານຕໍ່ສານ, ຖ້າບໍ່ຖອນ ກໍໃຫ້ດຳເນີນການພິສູດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 117 ຂອງກົດໝາຍສະບັບນີ້, ຖ້າຜົນພິສູດອອກມາເປັນເອກະສານປອມສານຈະສະເໜີໃຫ້ອົງການໄອຍະການປະຊາຊົນດຳເນີນຄະດີຕາມກົດໝາຍ ແລະ ໃຫ້ຜູ້ສະເໜີຫຼັກຖານດັ່ງກ່າວຮັບຜິດຊອບຕໍ່ຄ່າເສຍຫາຍທີ່ເກີດຂຶ້ນ ພ້ອມທັງຄ່າໃຊ້ຈ່າຍໃນການພິສູດຫຼັກຖານ.

ເມື່ອຍັງມີການພິສູດຫຼັກຖານດັ່ງກ່າວ ທີ່ມີຜົນສະທ້ອນຕໍ່ການດຳເນີນຄະດີແພ່ງ ກໍຕ້ອງໄດ້ໂຈະທັງການດຳເນີນຄະດີແພ່ງ ແລະ ການດຳເນີນຄະດີອາຍາ ຖ້າຫາກມີ.

**ມາດຕາ 120 (ປັບປຸງ) ການສະເໜີໃຫ້ສະໜອງ ຂໍ້ມູນ ຫຼັກຖານ**

ໃນການເກັບກຳ ຂໍ້ມູນ ຫຼັກຖານ ຖ້າສານເຫັນວ່າ ຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງກັບຄະດີຢູ່ໃນການຄຸ້ມຄອງ, ປົກປັກຮັກສາ ຂອງອົງການຈັດຕັ້ງໃດໜຶ່ງ ຫຼື ບຸກຄົນ ທີ່ຄູ່ຄວາມບໍ່ສາມາດນຳມາຍື່ນຕໍ່ສານໄດ້ ສານຈະເຮັດໜັງສືສະເໜີໃຫ້ອົງການຈັດຕັ້ງ ຫຼື ບຸກຄົນນັ້ນ ສະໜອງ ຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງໃຫ້ສານ ຕາມການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງສານ.

ເມື່ອຕ້ອງການເອກະສານ ທີ່ເປັນສະບັບເດີມ ສານຕ້ອງເຮັດບົດບັນທຶກມອບຮັບເປັນລາຍລັກອັກສອນ, ເມື່ອສານໄດ້ກວດກາ, ນຳໃຊ້ຫຼັກຖານເຫຼົ່ານັ້ນແລ້ວ ສານຕ້ອງສົ່ງຫຼັກຖານຄືນໃຫ້ ອົງການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງ.

ອົງການຈັດຕັ້ງ ຫຼື ບຸກຄົນ ທີ່ກ່ຽວຂ້ອງ ຕ້ອງສະໜອງ ຂໍ້ມູນ ຫຼັກຖານ ຕາມການສະເໜີຂອງສານ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບໜັງສືສະເໜີຂອງສານເປັນຕົ້ນໄປ, ຖ້າອົງການຈັດຕັ້ງ ຫຼື ບຸກຄົນທີ່ກ່ຽວຂ້ອງ ຫາກບໍ່ສາມາດຕອບສະໜອງ ຂໍ້ມູນ ຫຼັກຖານ ນັ້ນໄດ້ ກໍຕ້ອງແຈ້ງຄືນໃຫ້ສານເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 121 (ປັບປຸງ) ການມອບໝາຍຂອງສານໃຫ້ເກັບກຳ ຂໍ້ມູນ ຫຼັກຖານ**

ໃນກໍລະນີ ມີຄວາມຈຳເປັນໃຫ້ແກ່ການເກັບກຳ ຂໍ້ມູນ ຫຼັກຖານ ຢູ່ ນະຄອນຫຼວງ, ແຂວງ ຫຼື ເມືອງ, ນະຄອນ ອື່ນ ສານທີ່ພິຈາລະນາຄະດີນັ້ນ ມີສິດມອບໝາຍໃຫ້ສານປະຊາຊົນ ນະຄອນຫຼວງ, ແຂວງ ຫຼື ສານປະຊາຊົນເຂດ ທີ່ກ່ຽວຂ້ອງ ເປັນຜູ້ດຳເນີນການເກັບກຳ ຂໍ້ມູນ ຫຼັກຖານ ໃຫ້ຕົນ.

ໃນການມອບໝາຍນັ້ນ ຕ້ອງບອກເຖິງເນື້ອໃນຂອງຄະດີ ໂດຍຫຍໍ້ ແລະ ຫຼັກຖານ ຊຶ່ງສານທີ່ຮັບມອບໝາຍນັ້ນຄວນເກັບກຳ. ການມອບໝາຍດັ່ງກ່າວ ມີຜົນບັງຄັບປະຕິບັດ ສຳລັບສານທີ່ຮັບມອບໝາຍເທົ່ານັ້ນ ແລະ ໃຫ້ປະຕິບັດພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບການມອບໝາຍເປັນຕົ້ນໄປ.

ບົດບັນທຶກ ແລະ ຫຼັກຖານທີ່ເກັບກຳໄດ້ທັງໝົດ ຕ້ອງສົ່ງໃຫ້ສານທີ່ພິຈາລະນາຄະດີນັ້ນໃນທັນໃດ.

ໂຈດ ຫຼື ຜູ້ຮ້ອງຂໍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ໃນການໃຫ້ສານອື່ນ ເກັບກຳ ຂໍ້ມູນ ຫຼັກຖານ.

**ມາດຕາ 122 ການມອບໝາຍໃຫ້ສານອື່ນເອົາຄຳໃຫ້ການແທນ**

ເມື່ອຄູ່ຄວາມ, ພະຍານ ຫຼື ບຸກຄົນອື່ນ ທີ່ເຂົ້າຮ່ວມໃນຄະດີຫາກບໍ່ສາມາດເຂົ້າມາໃຫ້ການຕໍ່ສານ ເນື່ອງຈາກຢູ່ທ້ອງຖິ່ນຕ່າງກັນ ຫຼື ຍ້ອນສາເຫດອື່ນແລ້ວ ສານທີ່ດຳເນີນຄະດີນັ້ນ ຈະສົ່ງປະເດັນສອບສວນໃຫ້ສານທ້ອງຖິ່ນອື່ນບ່ອນທີ່ບຸກຄົນດັ່ງກ່າວຢູ່ນັ້ນ ເອົາຄຳໃຫ້ການແທນ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບປະເດັນສອບສວນ ເປັນຕົ້ນໄປ. ພາຍຫຼັງສອບສວນແລ້ວ ບົດບັນທຶກຄຳໃຫ້ການ ຕ້ອງສົ່ງໃຫ້ສານທີ່ມອບໝາຍນັ້ນໃນທັນໃດ.

**ມາດຕາ 123 (ປັບປຸງ) ການຄຸ້ມຄອງ ຂໍ້ມູນ ຫຼັກຖານ**

ເມື່ອເຫັນວ່າ ຂໍ້ມູນ ຫຼັກຖານ ພວມຈະຖືກທຳລາຍ, ຢູ່ໃນສະພາບສ່ຽງ ທີ່ຈະຖືກທຳລາຍ ຫຼື ອາດມີຄວາມຫຍຸ້ງຍາກໃນການເກັບກຳໃນຕໍ່ໜ້າ ຄູ່ຄວາມອາດຮ້ອງຂໍຕໍ່ສານໃຫ້ອອກຄຳສັ່ງໃດໜຶ່ງ ເພື່ອຄຸ້ມຄອງ ຂໍ້ມູນ ຫຼັກຖານ ດັ່ງກ່າວ. ການຄຸ້ມຄອງ ຂໍ້ມູນ ຫຼັກຖານ ອາດຈະເຮັດດ້ວຍຫຼາຍຮູບການ ເຊັ່ນ ການສຳເນົາ, ການຖ່າຍຮູບ, ການບັນທຶກສຽງ, ບັນທຶກວີດີໂອ, ການບັນທຶກ ຂໍ້ມູນ ຫຼັກຖານ, ການນຳ ຂໍ້ມູນ ຫຼັກຖານ ມາຮັກສາໄວ້ທີ່ປອດໄພ ຫຼື ໃຫ້ຄູ່ຄວາມຝ່າຍໃດໜຶ່ງ ປົກປັກຮັກສາ, ຄຸ້ມຄອງຫຼັກຖານດັ່ງກ່າວ.

ສຳລັບ ຂໍ້ມູນ ຫຼັກຖານ ທາງດ້ານບຸກຄົນ ເປັນຕົ້ນ ພະຍານທີ່ຖືກ ນາບຂູ່, ບັງຄັບ ຫຼື ກົດດັນ ໃນຮູບການໃດໜຶ່ງທີ່ເຮັດໃຫ້ຜູ້ກ່ຽວ ບໍ່ສະດວກ ຫຼື ບໍ່ສາມາດໃຫ້ການຕາມຄວາມເປັນຈິງຕໍ່ສານ ກໍຈະໄດ້ຮັບການປົກປ້ອງຕາມກົດໝາຍ.

**ມາດຕາ 124 ການຊັ່ງຊາຕີລາຄາຫຼັກຖານ**

ສານ ຕ້ອງກວດກາ, ຊັ່ງຊາຕີລາຄາຫຼັກຖານ ດ້ວຍຄວາມໝັ້ນໃຈຂອງຕົນ ບົນພື້ນຖານການພິຈາລະນາເຫດການຂອງຄະດີທັງໝົດ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.

ຫຼັກຖານຈະມີຄຸນຄ່າໃຊ້ໄດ້ ກໍຕໍ່ເມື່ອສານໄດ້ກວດກາ, ຕີລາຄາ ແລະ ຮັບຮູ້ແລ້ວເທົ່ານັ້ນ. ສານຕ້ອງເອົາການຮັບຮູ້ຫຼັກຖານ ທີ່ເປັນເອກະພາບຂອງຄູ່ຄວາມເປັນຫຼັກ ໃນການພິຈາລະນາ.

**ມາດຕາ 125 ການນຳໃຊ້ຫຼັກຖານ**

ທຸກຫຼັກຖານ ທີ່ສານເຊື່ອຖືວ່າ ມີເຫດຜົນພຽງພໍ ສານຕ້ອງນຳໃຊ້ເຂົ້າໃນການພິຈາລະນາຕັດສິນ ຫຼື ພິພາກສາຄະດີ.

ຫຼັກຖານຂອງຄູ່ຄວາມ ທີ່ສານເຫັນວ່າ ມີເຫດຜົນ ຫຼື ບໍ່ມີເຫດຜົນ ກໍໃຫ້ວິນິດໄສລົງໃນຄຳຕັດສິນ ຫຼື ຄຳພິພາກສາຂອງສານ.

**ມາດຕາ 126 ລະບຽບການພິຈາລະນາ ຂໍ້ມູນ ຫຼັກຖານ**

ໃນເວລາດຳເນີນຄະດີ ຢູ່ສານຂັ້ນຕົ້ນ ນັບແຕ່ໄດ້ຮັບສຳນວນຄະດີ ຈົນເຖິງປິດການໂຕ້ຖຽງໃນທີ່ປະຊຸມສານ ຄະນະສານຕ້ອງຖາມຄູ່ຄວາມວ່າ ຂໍ້ມູນ ຫຼັກຖານ ທີ່ຍື່ນມານັ້ນ ຄົບຖ້ວນ ແລ້ວ ຫຼື ບໍ່, ຖ້າຫາກບໍ່ທັນຄົບຖ້ວນ ກໍຈະໃຫ້ຜູ້ກ່ຽວນຳເອົາມາສະເໜີເພີ່ມ ພາຍໃນເວລາ ທີ່ສານເຫັນວ່າເໝາະສົມ. ຖ້າຫາກຄົບຖ້ວນ ແລະ ພຽງພໍແລ້ວສານກໍຈະນຳເອົາຄະດີອອກພິຈາລະນາຕັດສິນ.

## ພາກທີ VII

## ມາດຕະການຂອງສານ

### ໝວດທີ 1

### ມາດຕະການຮັບປະກັນການຮ້ອງຟ້ອງ

**ມາດຕາ 127 (ປັບປຸງ) ປະເພດມາດຕະການຮັບປະກັນການຮ້ອງຟ້ອງ**

ມາດຕະການຮັບປະກັນການຮ້ອງຟ້ອງ ແບ່ງອອກເປັນປະເພດ ດັ່ງນີ້:

1. ຍຶດ ຫຼື ອາຍັດຊັບ;
2. ບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງ;
3. ບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ;
4. ອອກມາດຕະການອື່ນ ເພື່ອຮັບປະກັນການຮ້ອງຟ້ອງ.

ໃນກໍລະນີ ມີການຟ້ອງແຍ່ງ ມາດຕະການດັ່ງກ່າວ ກໍສາມາດນຳໃຊ້ໄດ້ດັ່ງດຽວກັນ.

ການລະເມີດມາດຕະການ ທີ່ໄດ້ກ່າວໄວ້ເທິງນີ້ ຈະມີຄວາມຮັບຜິດຊອບຕາມກົດໝາຍ.

ສານ ສາມາດອອກມາດຕະການຮັບປະກັນການຮ້ອງຟ້ອງ ພາຍຫຼັງສານຮັບເອົາຄຳຮ້ອງຟ້ອງ ມາພິຈາລະນາ.

**ມາດຕາ 128 ການຍຶດຊັບ**

ໃນກໍລະນີ ໄດ້ຮູ້ແຈ້ງກ່ຽວກັບ ປະເພດ, ຈຳນວນ, ບັນຊີຊັບ ຫຼື ສະຖານທີ່ເກັບມ້ຽນວັດຖຸສິ່ງຂອງ, ສິນຄ້າ ຫຼື ປະເພດສັງຫາລິມະຊັບອື່ນ ທີ່ພົວພັນກັບຄະດີ, ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ ຫຼື ເພື່ອຮັບປະກັນການຮ້ອງຟ້ອງ ຫຼື ການຟ້ອງແຍ່ງ ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດໜຶ່ງ ຫຼື ຕາມຄຳເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ, ລວມໝູ່ ແລະ ສັງຄົມແລ້ວ ສານຈະອອກຄຳສັ່ງຍຶດຊັບດັ່ງກ່າວ ມາຮັກສາໄວ້ໃນສະຖານທີ່ເໝາະສົມ.

**ມາດຕາ 129 ການອາຍັດຊັບ**

ໃນກໍລະນີ ໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ, ບັນຊີ ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ທີ່ພົວພັນກັບຄະດີ, ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ ຫຼື ເພື່ອຮັບປະກັນການຮ້ອງຟ້ອງ ຫຼື ການຟ້ອງແຍ່ງ ຕາມຄຳຮ້ອງຂໍຂອງຄູ່ຄວາມຝ່າຍໃດໜຶ່ງ ຫຼື ຕາມຄຳເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງລັດ, ລວມໝູ່ ແລະ ສັງຄົມແລ້ວ ສານຈະອອກຄຳສັ່ງອາຍັດຊັບ.

**ມາດຕາ 130 (ປັບປຸງ) ການບໍ່ອະນຸຍາດໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງ**

ເມື່ອເຫັນວ່າ ຄູ່ຄວາມໃດໜຶ່ງໃນຄະດີ ມີການເຄື່ອນໄຫວ ຫຼື ກະທຳສິ່ງໃດໜຶ່ງ ທີ່ບໍ່ຖືກຕ້ອງ ຊຶ່ງກ່ຽວຂ້ອງກັບຄະດີ ເຊັ່ນ ການນາບຂູ່ ຄູ່ຄວາມ ຫຼື ພະຍານ, ການທຳລາຍຫຼັກຖານນັ້ນ ສານອາດຈະອອກຄຳສັ່ງໃຫ້ຄູ່ຄວາມທີ່ກ່ຽວຂ້ອງຢຸດເຊົາ ການເຄື່ອນໄຫວ ຫຼື ການກະທຳດັ່ງກ່າວ ຕາມການຮ້ອງຂໍຂອງຄູ່ຄວາມອີກຝ່າຍໜຶ່ງ ຫຼື ຕາມຄຳເຫັນຂອງສານ.

**ມາດຕາ 131 ການບໍ່ອະນຸຍາດໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນໃດໜຶ່ງ**

ເມື່ອເຫັນວ່າ ຄູ່ຄວາມຝ່າຍໃດໜຶ່ງໃນຄະດີ ປະຕິບັດຂໍ້ຜູກພັນໃດໜຶ່ງ ທີ່ບໍ່ຖືກຕ້ອງ ຊຶ່ງພົວພັນໃນຄະດີກັບຜູ້ອື່ນ ເຊັ່ນ ການເຮັດສັນຍາຊ້ຳຊ້ອນກັນ ສານຈະອອກຄຳສັ່ງໃຫ້ຄູ່ຄວາມທີ່ກ່ຽວຂ້ອງ ຢຸດເຊົາການປະຕິບັດຂໍ້ຜູກພັນດັ່ງກ່າວ ຕາມການຮ້ອງຂໍຂອງຄູ່ຄວາມອີກຝ່າຍໜຶ່ງ ຫຼື ຕາມຄຳເຫັນຂອງສານ.

**ມາດຕາ 132 ການຈຳກັດບໍລິເວນຕໍ່ຄູ່ຄວາມ**

ເພື່ອຮັບປະກັນ ໃຫ້ແກ່ການດຳເນີນຄະດີ ເປັນຕົ້ນ ການເຂົ້າມາໃຫ້ການຊີ້ແຈງ ຂໍ້ມູນ ຫຼັກຖານ ຕໍ່ສານ ສານອາດຈະອອກມາດຕະການ ບໍ່ອະນຸຍາດໃຫ້ຄູ່ຄວາມ ອອກຈາກພື້ນທີ່ໃດໜຶ່ງ ຫຼື ອອກນອກປະເທດ, ເວັ້ນເສຍແຕ່ກໍລະນີຈຳເປັນ ແຕ່ຄູ່ຄວາມທີ່ກ່ຽວຂ້ອງ ຕ້ອງຊີ້ແຈງເຫດຜົນເປັນລາຍລັກອັກສອນ ແລະ ນຳຫຼັກຊັບມາຄ້ຳປະກັນໄວ້ນຳສານຕາມການກຳນົດຂອງສານ.

**ມາດຕາ 133 (ປັບປຸງ) ໝາຍພາຕົວ**

ໝາຍພາຕົວ ແມ່ນ ຄຳສັ່ງຂອງສານ ເພື່ອໃຫ້ເຈົ້າໜ້າທີ່ຕຳຫຼວດ ນຳເອົາຕົວ ຈຳເລີຍ, ພະຍານ ເຂົ້າມາພົບກັບຜູ້ພິພາກສາຕາມ ວັນ, ເວລາ, ສະຖານທີ່ ທີ່ໄດ້ກຳນົດໄວ້ໃນໝາຍພາຕົວນັ້ນ.

ໃນກໍລະນີ ຈຳເລີຍ, ບຸກຄົນທີສາມ ຝ່າຍຈຳເລີຍ, ພະຍານ ຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ໂດຍບໍ່ມີເຫດຜົນພຽງພໍ ສານຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວເຂົ້າມາສານ. ໃນການພາຕົວນັ້ນ ຕ້ອງປະສານສົມທົບກັບຫ້ອງການບ້ານ, ນອກຈາກນີ້ແລ້ວ ຜູ້ກ່ຽວອາດຈະຖືກດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

**ມາດຕາ 134 (ປັບປຸງ) ເນື້ອໃນຄຳຮ້ອງຂໍໃຫ້ອອກມາດຕະການ**

ຄຳຮ້ອງຂໍ ໃຫ້ອອກມາດຕະການ ເພື່ອຮັບປະກັນການຮ້ອງຟ້ອງ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຊື່ ຂອງສານ ທີ່ຈະຍື່ນຄຳຮ້ອງຂໍເຖິງ;
2. ຊື່ ແລະ ນາມສະກຸນ, ທີ່ຢູ່, ການພົວພັນໃນຄະດີ ຂອງຜູ້ຍື່ນຄຳຮ້ອງຂໍ;
3. ຂໍ້ມູນລະອຽດ ກ່ຽວກັບຊັບສິ່ງຂອງ, ຊື່ ແລະ ນາມສະກຸນ, ທີ່ຢູ່, ການພົວພັນໃນຄະດີຂອງບຸກຄົນທີ່ກ່ຽວຂ້ອງກັບການອອກມາດຕະການ;
4. ສະຫຼຸບເຫດການໂດຍຫຍໍ້ຂອງຄະດີ ແລະ ເຫດຜົນຂອງການຮ້ອງຂໍ;
5. ເອກະສານທີ່ພົວພັນກັບການຮ້ອງຂໍ;
6. ວັນ, ເດືອນ, ປີ ທີ່ຍື່ນຄຳຮ້ອງຂໍ;

7. ລາຍເຊັນຂອງຜູ້ຮ້ອງຂໍ ແລະ ການຢັ້ງຢືນ ຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
8. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 135 (ປັບປຸງ) ການພິຈາລະນາອອກມາດຕະການຮັບປະກັນການຮ້ອງຟ້ອງ**

ເມື່ອໄດ້ຮັບຄຳຮ້ອງຂໍ ອອກມາດຕະການຮັບປະກັນການຮ້ອງຟ້ອງແລ້ວ, ສານຕ້ອງມອບໃຫ້ຜູ້ພິພາກສາທີ່ຮັບຜິດຊອບຄະດີ ນຳເອົາຄຳຮ້ອງຂໍ ພ້ອມດ້ວຍ ຂໍ້ມູນ ຫຼັກຖານ ທີ່ກ່ຽວຂ້ອງ ມາຄົ້ນຄວ້າພິຈາລະນາ.

ການພິຈາລະນາຄຳຮ້ອງຂໍຍຶດ ຫຼື ອາຍັດຊັບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 128 ແລະ ມາດຕາ 129 ຂອງກົດໝາຍສະບັບນີ້ ແລະ ຕາມກົດໝາຍອື່ນທີ່ກ່ຽວຂ້ອງ ນອກຈາກຈະພິຈາລະນາ ຂໍ້ມູນ ຫຼັກຖານທີ່ກ່ຽວຂ້ອງແລ້ວ ເມື່ອມີຄວາມຈຳເປັນ ກໍຕ້ອງລົງກວດກາສະຖານທີ່ ຫຼື ຊັບສິ່ງຂອງທີ່ສະເໜີ ຍຶດ ຫຼື ອາຍັດ ນັ້ນ. ຊັບສິ່ງຂອງທີ່ ຍຶດ ຫຼື ອາຍັດ ນັ້ນ ຕ້ອງໃຫ້ເໝາະສົມກັບມູນຄ່າການຮ້ອງຟ້ອງ.

ການອອກມາດຕະການຮັບປະກັນການຮ້ອງຟ້ອງຂອງສານ ໃຫ້ອອກເປັນຄຳສັ່ງຂອງຄະນະສານ.

**ມາດຕາ 136 (ປັບປຸງ) ການປ່ຽນແປງ ຫຼື ການລົບລ້າງມາດຕະການຮັບປະກັນການຮ້ອງຟ້ອງ**

ການປ່ຽນແປງ ຫຼື ການລົບລ້າງ ມາດຕະການຮັບປະກັນການຮ້ອງຟ້ອງໃດໜຶ່ງ ຕ້ອງພິຈາລະນາໃນທີ່ປະຊຸມສານ ໂດຍການເຂົ້າຮ່ວມຂອງບຸກຄົນທີ່ກ່ຽວຂ້ອງໃນຄະດີນັ້ນ ແຕ່ການບໍ່ເຂົ້າຮ່ວມຂອງບຸກຄົນດັ່ງກ່າວ ກໍຈະບໍ່ພາໃຫ້ເປັນອຸປະສັກຕໍ່ການພິຈາລະນານັ້ນໄດ້.

ສານ ອາດຈະປ່ຽນແປງ ຫຼື ລົບລ້າງມາດຕະການຮັບປະກັນການຮ້ອງຟ້ອງ ຕາມຄຳຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ ຫຼື ຕາມຄຳເຫັນຂອງສານ ຖ້າຫາກແມ່ນຜົນປະໂຫຍດຂອງ ລັດ ຫຼື ສັງຄົມ.

ໃນກໍລະນີ ສານຫາກບໍ່ໄດ້ພິຈາລະນາ ປ່ຽນແປງ ຫຼື ລົບລ້າງຕາມຄຳຮ້ອງຂໍແລ້ວ ມາດຕະການທີ່ສານວາງອອກນັ້ນ ກໍຈະມີຜົນບັງຄັບປະຕິບັດ ຈົນກວ່າຈະມີຄຳສັ່ງປິດການປະຕິບັດຄຳຕັດສິນຂອງສານ.

ການຮ້ອງຂໍ ຫຼື ການສະເໜີໃຫ້ພິຈາລະນາ ຄຳສັ່ງປ່ຽນແປງ ຫຼື ລົບລ້າງ ມາດຕະການຮັບປະກັນການຮ້ອງຟ້ອງນັ້ນ ໃຫ້ຍື່ນຕໍ່ສານທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາ.

**ມາດຕາ 137 (ປັບປຸງ) ການຮ້ອງຂໍ ຫຼື ການສະເໜີໃຫ້ພິຈາລະນາຄຳສັ່ງຄືນໃໝ່**

ຄູ່ຄວາມ, ບຸກຄົນທີສາມ ມີສິດຮ້ອງຂໍ ຕໍ່ສານທີ່ກ່ຽວຂ້ອງພິຈາລະນາຄືນໃໝ່ ຄຳສັ່ງກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ ພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຊາບ ຄຳສັ່ງ ເປັນຕົ້ນໄປ.

ອົງການໄອຍະການປະຊາຊົນ ມີສິດສະເໜີຕໍ່ສານທີ່ກ່ຽວຂ້ອງພິຈາລະນາຄືນໃໝ່ ຄຳສັ່ງ ກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ ທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກ, ບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຊາບຄຳສັ່ງເປັນຕົ້ນໄປ.

ໃນກໍລະນີ ສານຂັ້ນອຸທອນ ຫຼື ສານຂັ້ນລົບລ້າງ ເປັນຜູ້ອອກຄຳສັ່ງ ກໍໃຫ້ປະຕິບັດດັ່ງດຽວກັນກັບສານຂັ້ນຕົ້ນ.

**ມາດຕາ 138 (ປັບປຸງ) ຜົນບັງຄັບຂອງຄຳສັ່ງ ກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ**

ຄຳສັ່ງຂອງຄະນະສານ ກ່ຽວກັບມາດຕະການຮັບປະກັນການຮ້ອງຟ້ອງ ມີຜົນບັງຄັບປະຕິບັດນັບແຕ່ວັນອອກຄຳສັ່ງນັ້ນ ເປັນຕົ້ນໄປ ເຖິງຈະມີການ ຮ້ອງຂໍ ຫຼື ສະເໜີ ໃຫ້ພິຈາລະນາຄືນໃໝ່ກໍຕາມ ແລະ ມີຜົນສັກສິດຄືກັນກັບຄຳຕົກລົງອື່ນຂອງສານ. ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ທີ່ມີການລະເມີດເນື້ອໃນໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງດັ່ງກ່າວ ຕ້ອງຮັບຜິດຊອບຕໍ່ກົດໝາຍ ແລະ ຜົນເສຍຫາຍທັງໝົດ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 139 (ປັບປຸງ) ການປະຕິບັດມາດຕະການຮັບປະກັນການຮ້ອງຟ້ອງ**

ການປະຕິບັດ ຄຳສັ່ງ ຍຶດ ຫຼື ອາຍັດຊັບ ຂອງສານ ສານຕ້ອງຮຽກຄູ່ຄວາມເຂົ້າຮ່ວມ ເພື່ອແຈ້ງ ແລະ ຕິດຄຳສັ່ງຂອງສານໄວ້ບ່ອນຊັບສິ່ງຂອງຕັ້ງຢູ່, ຫ້ອງການບ້ານ, ສານປະຊາຊົນ ແລະ ຂະແໜງການທີ່ກ່ຽວຂ້ອງ.

ການປະຕິບັດມາດຕະການອື່ນຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 130, 131 ແລະ ມາດຕາ 132 ຂອງກົດໝາຍສະບັບນີ້ ສານຕ້ອງຮຽກຄູ່ຄວາມມາຮັບຊາບ ແລະ ແຈ້ງຄຳສັ່ງດັ່ງກ່າວ ຕໍ່ອົງການປົກຄອງທ້ອງຖິ່ນ, ບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ. ສຳລັບການປະຕິບັດໝາຍພາຕົວ ນອກຈາກຈະແຈ້ງຕໍ່ອົງການປົກຄອງທ້ອງຖິ່ນ, ບ້ານແລ້ວ ຍັງຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຕຳຫຼວດທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ ແລະ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນມາດຕາ 133 ຂອງກົດໝາຍສະບັບນີ້.

ຄູ່ຄວາມ ທີ່ຮ້ອງຂໍໃຫ້ອອກມາດຕະການຮັບປະກັນການຮ້ອງຟ້ອງ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆ ກ່ຽວກັບການປະຕິບັດມາດຕະການດັ່ງກ່າວຕາມລະບຽບການວາງອອກ.

## ໝວດທີ 2
## ມາດຕະການຮີບດ່ວນຊົ່ວຄາວຂອງສານ

**ມາດຕາ 140 ການນຳໃຊ້ມາດຕະການຮີບດ່ວນຊົ່ວຄາວຂອງສານ**

ສານ ອາດຈະນຳໃຊ້ມາດຕະການບັງຄັບໃດໜຶ່ງ ໃນກໍລະນີຊັບສິ່ງຂອງຂັດແຍ່ງກັນນັ້ນ ມີຄວາມຈຳເປັນຕ້ອງມີການຄຸ້ມຄອງ ຫຼື ຊື້ຂາຍຢ່າງຮີບດ່ວນ ເນື່ອງຈາກວ່າຊັບສິ່ງຂອງດັ່ງກ່າວຈະມີການປ່ຽນຮູບ ຫຼື ເສື່ອມເສຍຄຸນນະພາບກ່ອນການຕັດສິນຄະດີ.

ສານ ຈະອອກຄຳສັ່ງມອບສິດ ຄຸ້ມຄອງ ຫຼື ຊື້ຂາດ ໃນຊັບສິ່ງຂອງນັ້ນ ໃຫ້ ຄູ່ຄວາມຝ່າຍໃດໜຶ່ງ ຫຼື ບຸກຄົນໃດໜຶ່ງ ກໍໄດ້.

**ມາດຕາ 141 ການນຳໃຊ້ມາດຕະການຕໍ່ຄົນເສຍຈິດ**

ສານ ອາດຈະນຳໃຊ້ມາດຕະການປິ່ນປົວ ຕໍ່ຜູ້ກໍ່ຄວາມເສຍຫາຍ ຫຼື ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍທີ່ເປັນຄົນເສຍຈິດ ກ່ອນ ຫຼື ພາຍຫຼັງ ສານໄດ້ອອກຄຳຕັດສິນ ຫຼື ຄຳພິພາກສາແລ້ວ ດ້ວຍການອອກຄຳສັ່ງໃຫ້ໄປປິ່ນປົວທີ່ ໂຮງໝໍໂລກຈິດ ຫຼື ສະຖານທີ່ປິ່ນປົວສະເພາະ.

ພາຍຫຼັງ ໄດ້ປິ່ນປົວດີແລ້ວ ຕ້ອງນຳເອົາຜູ້ກໍ່ຄວາມເສຍຫາຍ ຫຼື ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍນັ້ນ ມາດຳເນີນຄະດີ ຫຼື ນຳມາປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານຕໍ່ໄປ.

**ມາດຕາ 142 ການນຳໃຊ້ມາດຕະການຂອງສານຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ**

ສານ ຈະນຳໃຊ້ມາດຕະການ ຍຶດ ຫຼື ອາຍັດ ຊັບຂອງນິຕິບຸກຄົນ ທີ່ເປັນ ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍ ຊຶ່ງໄດ້ຖືກຍຸບເລີກ ກ່ອນ ຫຼື ພາຍຫຼັງ ສານໄດ້ອອກ ຄຳຕັດສິນ ຫຼື ຄຳພິພາກສາແລ້ວ ດ້ວຍການອອກຄຳສັ່ງ ຍຶດ ຫຼື ອາຍັດຊັບ.

ເມື່ອອອກຄຳສັ່ງ ຍຶດ ຫຼື ອາຍັດ ຊັບແລ້ວ ຕ້ອງທຳການແກ້ໄຂບັນຫາດັ່ງກ່າວ ກັບຜູ້ຮັບຜິດຊອບ ຫຼື ຜູ້ຄຸ້ມຄອງຊັບສິ່ງຂອງ ຂອງນິຕິບຸກຄົນ ທີ່ໄດ້ຖືກຍຸບເລີກນັ້ນໃຫ້ສຳເລັດ ໃນກຳນົດເວລາບໍ່ໃຫ້ເກີນ ສາມສິບວັນ ພາຍຫຼັງສານໄດ້ຕັດສິນເປັນຕົ້ນໄປ.

ສຳລັບ ການຊຳລະສະສາງໜີ້ສິນ ໃນກໍລະນີ ວິສາຫະກິດໄດ້ລົ້ມລະລາຍນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 143 (ປັບປຸງ) ການນໍາໃຊ້ມາດຕະການ ຂອງສານຕໍ່ ຜົວ ຫຼື ເມຍ**

ສານ ອາດນໍາໃຊ້ມາດຕະການດ້ວຍການອອກຄໍາສັ່ງຕັດເງິນເດືອນ ຫຼື ລາຍໄດ້ ຫຼື ຍຶດ ຫຼື ອາຍັດ ຊັບທີ່ຕົກເປັນພູດຂອງ ຜົວ ຫຼື ເມຍ ເພື່ອເປັນພັນທະໃນການຈ່າຍຄ່າເບິ່ງແຍງລ້ຽງດູ ຜົວ ຫຼື ເມຍ ແລະ ລູກ ຜູ້ບໍ່ພົ້ນກະສຽນອາຍຸ ທີ່ຢູ່ນໍາ ເມຍ ຫຼື ຜົວ.

**ມາດຕາ 144 (ປັບປຸງ) ການນໍາໃຊ້ມາດຕະການຂອງສານຕໍ່ເດັກ**

ສານ ອາດນໍາໃຊ້ມາດຕະການ ດ້ວຍການອອກຄໍາສັ່ງໃຫ້ຜູ້ປົກຄອງຂອງເດັກທີ່ມີຄະດີ ຊຶ່ງບໍ່ພົ້ນກະສຽນອາຍຸ ດັ່ງນີ້:

1. ຕິດຕາມການປະພຶດຂອງເດັກ;
2. ຄຸ້ມຄອງ, ຄວບຄຸມ ເດັກ ໃນລະຫວ່າງການພິຈາລະນາຄະດີ;
3. ນໍາເອົາເດັກໄປ ກວດ, ປິ່ນປົວພະຍາດ;
4. ສຶກສາອົບຮົມ ແລະ ເບິ່ງແຍງດູແລ ເດັກ ໃນເວລາພິຈາລະນາຄະດີ;
5. ລາຍງານຄວາມເປັນຈິງ ລວມທັງໃຫ້ຄໍາເຫັນຕໍ່ສານໃນຄະດີເດັກ;
6. ບໍ່ໃຫ້ນໍາເອົາເດັກໄປເຮັດວຽກງານໜັກ ຫຼື ວຽກອື່ນທີ່ເປັນອັນຕະລາຍຕໍ່ສຸຂະພາບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍແຮງງານ.

**ມາດຕາ 145 (ປັບປຸງ) ມາດຕະການຊົ່ວຄາວອື່ນຂອງສານ**

ນອກຈາກ ມາດຕະການຊົ່ວຄາວຂອງສານ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 140 ຫາ ມາດຕາ 144 ຂອງກົດໝາຍສະບັບນີ້ແລ້ວ ເມື່ອເຫັນວ່າມີຄວາມຈໍາເປັນຕ້ອງ ຄຸ້ມຄອງ ຫຼື ນໍາໃຊ້ ຊັບທີ່ຂັດແຍ່ງກັນນັ້ນ ສານສາມາດອອກຄໍາສັ່ງໃຫ້ຝ່າຍໃດໜຶ່ງ ຄຸ້ມຄອງ ຫຼື ນໍາໃຊ້ ຊັບສິ່ງຂອງດັ່ງກ່າວຊົ່ວຄາວກ່ອນກໍໄດ້ ຈົນກວ່າມີຄໍາສັ່ງປ່ຽນແປງ ຫຼື ມີຄໍາຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 146 (ປັບປຸງ) ຜົນບັງຄັບໃຊ້ມາດຕະການຂອງສານ**

ຄໍາສັ່ງຂອງສານ ກ່ຽວກັບການນໍາໃຊ້ມາດຕະການຮີບດ່ວນຊົ່ວຄາວນັ້ນ ໃຫ້ປະຕິບັດໃນທັນໃດ.

ຄໍາສັ່ງດັ່ງກ່າວ ຈະສິ້ນສຸດລົງ ພາຍຫຼັງ ສານໄດ້ອອກຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ. ຊັບສິ່ງຂອງທີ່ຖືກຄຸ້ມຄອງ ຫຼື ຊື້ຂາດ ຫຼື ຍຶດ ຫຼື ອາຍັດຊັບ ດ້ວຍຄໍາສັ່ງນັ້ນແລ້ວ ກໍຈະນໍາມາໃຊ້ແທນຄ່າເສຍຫາຍຕາມຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ.

**ມາດຕາ 147 ການຮ້ອງຂໍໃຫ້ອອກມາດຕະການຮີບດ່ວນຊົ່ວຄາວ**

ຄູ່ຄວາມໃນຄະດີ ມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ອອກມາດຕະການຮີບດ່ວນຊົ່ວຄາວ ຢ່າງດຽວ ຫຼື ຫຼາຍຢ່າງກໍໄດ້ເພື່ອ ປົກປ້ອງຫຼັກຖານ, ຄຸ້ມຄອງ, ນໍາໃຊ້ ຫຼື ຊື້ຂາດ ຊັບທີ່ຂັດແຍ່ງໃດໜຶ່ງ ໂດຍບໍ່ໃຫ້ມີຄວາມເສຍຫາຍ.

## ພາກທີ VIII

## ການອອກ, ການສົ່ງ ແລະ ການແຈ້ງ ໝາຍຮຽກ ແລະ ເອກະສານອື່ນຂອງສານ

**ມາດຕາ 148 ເນື້ອໃນຂອງໝາຍຮຽກ**

ໝາຍຮຽກ ຕ້ອງມີເນື້ອໃນ ດັ່ງນີ້:

1. ຊື່ ຂອງສານປະຊາຊົນ;
2. ຊື່ ແລະ ນາມສະກຸນ ຂອງຜູ້ຖືກຮຽກ;

3. ຜູ້ຖືກຮຽກເຂົ້າມາສານ ພົວພັນກັບຄະດີເລື່ອງໃດ, ໃນຖານະ ແລະ ຈຸດປະສົງໃດ;
4. ສະຖານທີ່ ແລະ ວັນເວລາເຂົ້າມາສານ;
5. ຂໍ້ແນະນຳໃຫ້ຜູ້ຖືກຮຽກນັ້ນ ປະຕິບັດສິ່ງໃດໜຶ່ງ ເປັນຕົ້ນ ນຳເອົາຫຼັກຖານເຂົ້າມາສານ;
6. ຄຳເຕືອນໃຫ້ຮູ້ກ່ຽວກັບຜົນສະທ້ອນຂອງຜູ້ຖືກຮຽກ ທີ່ບໍ່ເຂົ້າມາສານ.

ສຳລັບ ໝາຍເຊີນ ກໍໃຫ້ປະຕິບັດດັ່ງດຽວກັນກັບໝາຍຮຽກ.

**ມາດຕາ 149 (ປັບປຸງ) ການອອກໝາຍຮຽກ**

ຜູ້ພິພາກສາ ທີ່ຮັບຜິດຊອບໃນການດຳເນີນຄະດີ ເປັນຜູ້ກຳລົງເປົ້າໝາຍຜູ້ມາໃຫ້ການຕໍ່ສານ ເຊັ່ນ ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ຕາມການຮ້ອງຂໍຂອງຄູ່ຄວາມ ພ້ອມທັງກຳນົດວັນເວລາ ແລະ ກະກຽມປະເດັນສອບສວນ ແລ້ວອອກໝາຍຮຽກບຸກຄົນດັ່ງກ່າວ ເຂົ້າມາໃຫ້ການຕໍ່ສານ.

ໝາຍຮຽກ ຕ້ອງເຮັດເປັນສາມສະບັບ ຄື ໜຶ່ງສະບັບ ເອົາໃຫ້ຜູ້ທີ່ກ່ຽວຂ້ອງ, ໜຶ່ງສະບັບ ເອົາໄວ້ໃນ ສຳນວນຄະດີ ແລະ ອີກໜຶ່ງສະບັບ ໃຫ້ເກັບມ້ຽນໄວ້ຢູ່ສຳເນົາຂອງຈ່າສານ.

**ມາດຕາ 150 (ປັບປຸງ) ການສົ່ງໝາຍຮຽກ**

ໝາຍຮຽກ ທີ່ສົ່ງໃຫ້ຜູ້ຖືກຮຽກນັ້ນ ຕ້ອງໃຫ້ຜູ້ກ່ຽວ ເຊັນຊື່ ຫຼື ແປະໂປ້ມື ໃສ່ປຶ້ມບັນທຶກການສົ່ງເອກະສານ. ໃນກໍລະນີສົ່ງໂດຍກົງນັ້ນ ຖ້າວ່າຜູ້ກ່ຽວຫາກບໍ່ຍອມ ເຊັນຊື່ ຫຼື ແປະໂປ້ມືໃສ່ນັ້ນ ກໍໃຫ້ຜູ້ນຳສົ່ງໝາຍເຫດໄວ້.

ໝາຍຮຽກ ຕ້ອງສົ່ງໃຫ້ຜູ້ຖືກຮຽກນັ້ນ ໄດ້ຮັບກ່ອນວັນນັດໝາຍເຂົ້າມາສານ ຢ່າງໜ້ອຍ ສາມວັນ.

ການສົ່ງເອກະສານອື່ນຂອງສານ ກໍໃຫ້ປະຕິບັດດັ່ງດຽວກັນກັບການສົ່ງໝາຍຮຽກ.

**ມາດຕາ 151 (ປັບປຸງ) ຮູບການສົ່ງ ແລະ ແຈ້ງໝາຍຮຽກ**

ການສົ່ງ ແລະ ແຈ້ງໝາຍຮຽກ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການສົ່ງໂດຍກົງໃຫ້ຜູ້ຖືກຮຽກ ຫຼື ຜ່ານບ້ານ;
2. ການສົ່ງຜ່ານທາງ ໄປສະນີ, ຂົນສົ່ງ ຫຼື ໂທລະຄົມມະນາຄົມ;
3. ການສົ່ງ ແລະ ແຈ້ງດ້ວຍການຕິດປະກາດ;
4. ການສົ່ງ ແລະ ແຈ້ງຜ່ານພາຫະນະສື່ມວນຊົນ.

**ມາດຕາ 152 (ປັບປຸງ) ການສົ່ງໂດຍກົງໃຫ້ຜູ້ຖືກຮຽກ ຫຼື ຜ່ານບ້ານ**

ໝາຍຮຽກ ຕ້ອງສົ່ງໂດຍກົງໃຫ້ຜູ້ຖືກຮຽກ ຫຼື ຜ່ານບ້ານບ່ອນຜູ້ກ່ຽວສັງກັດຢູ່ ຕາມທີ່ຢູ່ໃນສຳນວນຄະດີ. ໃນກໍລະນີ ຜູ້ຖືກຮຽກເປັນພະນັກງານ ອາດສົ່ງຫາອົງການຈັດຕັ້ງບ່ອນຜູ້ກ່ຽວສັງກັດນັ້ນກໍໄດ້.

ການສົ່ງໂດຍກົງ ຕ້ອງດຳເນີນການໂດຍພະນັກງານຂອງສານ.

**ມາດຕາ 153 (ປັບປຸງ) ການສົ່ງຜ່ານທາງ ໄປສະນີ, ຂົນສົ່ງ ຫຼື ໂທລະຄົມມະນາຄົມ**

ໃນກໍລະນີຜູ້ເຂົ້າຮ່ວມ ໃນການດຳເນີນຄະດີ ຫາກຢູ່ຫ່າງໄກ ສານອາດສົ່ງໝາຍຮຽກ ຫຼື ເອກະສານອື່ນ ຜ່ານທາງໄປສະນີ, ຂົນສົ່ງ ຫຼື ໂທລະຄົມມະນາຄົມ ກໍໄດ້.

ສຳລັບໝາຍຮຽກ ທີ່ສົ່ງໃຫ້ຜູ້ຖືກຮຽກ ທີ່ຢູ່ເຂດຊົນນະບົດ, ຫ່າງໄກສອກຫຼີກນັ້ນ ຕ້ອງສົ່ງຜ່ານບ້ານ ເພື່ອມອບໃຫ້ຜູ້ຖືກຮຽກ ແລ້ວໃຫ້ຜູ້ກ່ຽວເຊັນຊື່ ຫຼື ແປະໂປ້ມືໃສ່. ຖ້າວ່າຜູ້ກ່ຽວຫາກບໍ່ຍອມເຊັນຊື່ ຫຼື ແປະໂປ້ມື ໃສ່ໝາຍຮຽກນັ້ນ ກໍໃຫ້ນາຍບ້ານ ໝາຍເຫດໄວ້ ແລະ ຮັບຜິດຊອບສົ່ງໝາຍຮຽກດັ່ງກ່າວ ຄືນໃຫ້ສານ.

ໝາຍຮຽກ ຫຼື ເອກະສານອື່ນ ທີ່ສົ່ງຜ່ານທາງ ໄປສະນີ, ຂົນສົ່ງ ຫຼື ໂທລະຄົມມະນາຄົມ ໃຫ້ຖືເອົາວັນ ທີ່ຜູ້ກ່ຽວໄດ້ຮັບ.

**ມາດຕາ 154 (ປັບປຸງ) ການສົ່ງ ແລະ ແຈ້ງ ດ້ວຍການຕິດປະກາດ**

ການສົ່ງ ຫຼື ແຈ້ງ ໝາຍຮຽກຂອງສານ ດ້ວຍການຕິດປະກາດ ເຮັດຂຶ້ນໃນກໍລະນີຜູ້ຖືກຮຽກນັ້ນ ມີການຍ້າຍບ່ອນຢູ່ເລື້ອຍໆ ຊຶ່ງມີຄວາມຫຍຸ້ງຍາກ ຕໍ່ການສົ່ງໝາຍຮຽກຂອງສານ ຫຼື ໃນກໍລະນີການສົ່ງໂດຍກົງ, ການສົ່ງຜ່ານທາງ ໄປສະນີ ຫຼື ໂທລະຄົມມະນາຄົມ ບໍ່ສາມາດດຳເນີນການໄດ້.

ການຕິດປະກາດ ໃຫ້ນຳເອົາໝາຍຮຽກສະບັບຕົ້ນຕິດໄວ້ຢູ່ ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງ, ຫ້ອງການບ້ານ ແລະ ສະຖານທີ່ບ່ອນຜູ້ທີ່ກ່ຽວຂ້ອງ ອາໄສຢູ່ສຸດທ້າຍ.

ການຕິດປະກາດ ຕ້ອງປະສານສົມທົບກັບຫ້ອງການບ້ານ ບ່ອນຜູ້ທີ່ກ່ຽວຂ້ອງຢູ່ສຸດທ້າຍ ແລະ ເຮັດບົດບັນທຶກການຕິດປະກາດ ໂດຍບົ່ງບອກວັນເວລາ ແລະ ຜູ້ເຂົ້າຮ່ວມໃນການຕິດປະກາດ ພ້ອມລົງລາຍເຊັນຢັ້ງຢືນ.

ການຕິດປະກາດ ໃຫ້ໃຊ້ເວລາ ສາມສິບວັນ ນັບແຕ່ວັນຕິດປະກາດ ເປັນຕົ້ນໄປ.

**ມາດຕາ 155 (ປັບປຸງ) ການສົ່ງ ແລະ ແຈ້ງຜ່ານພາຫະນະສື່ມວນຊົນ**

ໃນກໍລະນີ ຈຳເລີຍເອົາຕົວຫຼົບໜີຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ ຊຶ່ງຮູບການຕິດປະກາດ ບໍ່ຮັບປະກັນວ່າຈຳເລີຍຈະຮັບຊາບໝາຍຮຽກນັ້ນ ສານອາດແຈ້ງຜ່ານພາຫະນະສື່ມວນຊົນກໍໄດ້.

ການແຈ້ງຜ່ານພາຫະນະສື່ມວນຊົນ ໃຫ້ໃຊ້ເວລາ ສາມວັນ ນັບແຕ່ວັນອອກວິທະຍຸ, ໂທລະພາບ ຫຼື ໜັງສືພິມໃດໜຶ່ງ ແລະ ອື່ນໆ ເປັນຕົ້ນໄປ.

**ມາດຕາ 156 ການໃຊ້ຈ່າຍສຳລັບການສົ່ງ ແລະ ແຈ້ງໝາຍຮຽກ**

ຄ່າໃຊ້ຈ່າຍສຳລັບການສົ່ງ ແລະ ແຈ້ງໝາຍຮຽກຂອງສານ ດ້ວຍການສົ່ງ ຫຼື ແຈ້ງດ້ວຍການຕິດປະກາດ ຫຼື ຜ່ານພາຫະນະສື່ມວນຊົນ ເປັນຄວາມຮັບຜິດຊອບຂອງຜູ້ຮ້ອງຂໍ.

**ມາດຕາ 157 (ປັບປຸງ) ຜົນສະທ້ອນຂອງການສົ່ງ ແລະ ແຈ້ງ ດ້ວຍການຕິດປະກາດ ຫຼື ຜ່ານພາຫະນະສື່ມວນຊົນ**

ພາຍຫຼັງໝົດກຳນົດ ຂອງການຕິດປະກາດ ຫຼື ຜ່ານພາຫະນະສື່ມວນຊົນແລ້ວ ສານຕ້ອງນຳເອົາຄະດີດັ່ງກ່າວອອກພິຈາລະນາຕັດສິນ ບົນພື້ນຖານ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ. ຫຼັງຈາກສານຕັດສິນແລ້ວ ຕ້ອງນຳເອົາຄຳຕັດສິນນັ້ນໄປຕິດປະກາດ ຢູ່ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງ, ຫ້ອງການບ້ານ ແລະ ບ່ອນຢູ່ສຸດທ້າຍຂອງຄູ່ຄວາມ ເປັນເວລາ ສາມສິບວັນ ນັບແຕ່ວັນຕິດປະກາດເປັນຕົ້ນໄປ, ເມື່ອໝົດກຳນົດເວລາດັ່ງກ່າວ ຖືວ່າຄຳຕັດສິນນັ້ນ ໃຊ້ໄດ້ຢ່າງເດັດຂາດ, ເວັ້ນເສຍແຕ່ຄູ່ຄວາມຫາກຮ້ອງຂໍອຸທອນ ຫຼື ຂໍຄັດຄ້ານ ພາຍໃນເວລາ ຊາວວັນ ນັບແຕ່ວັນຮັບຊາບ ຫຼື ຮັບຮູ້ຄຳຕັດສິນ ຫຼື ເຂົ້າມາສະເໜີຕົວຕໍ່ສານ ໃນໄລຍະເວລາຂອງການຕິດປະກາດນັ້ນເປັນຕົ້ນໄປ.

**ມາດຕາ 158 ພັນທະເຂົ້າມາສານຕາມໝາຍຮຽກ**

ບຸກຄົນ ທີ່ໄດ້ຮັບໝາຍຮຽກ ຕ້ອງເຂົ້າມາສານຕາມ ວັນ, ເວລາ, ສະຖານທີ່ ຕາມທີ່ໄດ້ກຳນົດໄວ້ໃນໝາຍຮຽກ.

ຖ້າໂຈດ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍໂຈດ ຫາກໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າມາສານຕາມໝາຍຮຽກ ແລະ ບໍ່ໄດ້ສະເໜີເຫດຜົນທີ່ເຊື່ອຖືໄດ້ ເຖິງສາມຄັ້ງແລ້ວ ສານຈະອອກຄຳສັ່ງຊັດມ້ຽນຄະດີ ແລະ ໃຫ້ໂຈດເສຍສິດໃນການຮ້ອງຟ້ອງຄະດີນັ້ນ.

ໃນກໍລະນີ ຈຳເລີຍ ຫຼື ຜູ້ຕາງໜ້າ ຫຼື ບຸກຄົນທີສາມຝ່າຍຈຳເລີຍ ຫາກບໍ່ເຂົ້າມາສານຕາມໝາຍຮຽກເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ຫຼື ບໍ່ເຂົ້າມາສານຍ້ອນວ່າຜູ້ກ່ຽວຍ້າຍໜີຈາກບ່ອນຢູ່ເດີມ ໂດຍບໍ່ແຈ້ງບ່ອນຢູ່ໃໝ່ໃຫ້ຫ້ອງການບ້ານຮູ້ນຳແລ້ວ ສານມີສິດອອກໝາຍພາຕົວ ຫຼື ຕັດສິນລັບຫຼັງຈຳເລີຍກໍໄດ້.

**ມາດຕາ 159 (ປັບປຸງ) ການດຳເນີນການ ເມື່ອຄູ່ຄວາມເຂົ້າມາສານ ຕາມໝາຍຮຽກ**

ເມື່ອຄູ່ຄວາມ ຫຼື ຜູ້ຕາງໜ້າຂອງຄູ່ຄວາມ ຫາກໄດ້ເຂົ້າມາສານ ຕາມໝາຍຮຽກແລ້ວ ສານຕ້ອງໄດ້ ກວດກາ, ເອົາຄຳໃຫ້ການ, ຟັງຄຳອະທິບາຍ, ແນະນຳ ຫຼື ເບິ່ງຫຼັກຖານຕ່າງໆ ໃນຄະດີ. ໃນກໍລະນີຈຳເປັນກໍອາດ ຈະມີການສອບຖາມຊ້ອງໜ້າກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 113 ຂອງກົດໝາຍສະບັບນີ້.

## ພາກທີ IX
## ເງິນວາງສານ ແລະ ຄ່າທຳນຽມສານ

**ມາດຕາ 160 (ປັບປຸງ) ເງິນວາງສານ ແລະ ຄ່າທຳນຽມສານ**

ເງິນວາງສານ ແມ່ນ ເງິນທີ່ ຄູ່ຄວາມ ຫຼື ບຸກຄົນທີສາມ ໃນຄະດີແພ່ງ ນຳມາວາງໄວ້ຢູ່ສານໃນເວລາຍື່ນ ຄຳຮ້ອງຟ້ອງ, ຄຳຮ້ອງຂໍ, ຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ ຫຼື ຄຳຮ້ອງຂໍຮື້ຟື້ນ ເພື່ອໃຊ້ຈ່າຍໃນການດຳເນີນ ຄະດີ.

ຄ່າທຳນຽມສານ ແມ່ນ ຄ່າທຳນຽມທີ່ຄູ່ຄວາມ ຫຼື ບຸກຄົນທີ່ສາມ ຕ້ອງໄດ້ຈ່າຍເຂົ້າໃນການດຳເນີນຄະດີ ຊຶ່ງປະກອບດ້ວຍ ອາກອນຂອງລັດ, ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍໃຫ້ແກ່ຜູ້ຖືກເຊີນເຂົ້າຮ່ວມ ໃນການດຳເນີນຄະດີ ແລະ ຄ່າເອກະສານ ຫຼື ສຳເນົາເອກະສານຕ່າງໆ.

**ມາດຕາ 161 (ປັບປຸງ) ການເກັບເງິນວາງສານ**

ສານ ຂັ້ນຕົ້ນ ຫຼື ຂັ້ນອຸທອນ ຫຼື ຂັ້ນລົບລ້າງ ຫຼື ການຮື້ຟື້ນ ໃຫ້ເກັບເງິນວາງສານ ຕາມກົດໝາຍວ່າດ້ວຍ ຄ່າທຳນຽມສານ

ເງິນວາງສານຈະຖືກນຳໃຊ້ ໃນກໍລະນີ ດັ່ງນີ້:

1. ການສົ່ງໝາຍຮຽກ;
2. ການສົ່ງເອກະສານ ແລະ ສຳນວນຄະດີ;
3. ຄ່າໃຊ້ຈ່າຍໃຫ້ນາຍບ້ານສົ່ງໝາຍຮຽກກັບຄືນໃຫ້ສານ;
4. ການໃຊ້ຈ່າຍອື່ນ ທີ່ເຫັນວ່າມີຄວາມຈຳເປັນ ໃນການດຳເນີນຄະດີແພ່ງ.

ການໃຊ້ຈ່າຍເງິນວາງສານ ຕ້ອງເຮັດບັນຊີຕິດຕາມ ແລະ ສະຫຼຸບກ່ອນນຳເອົາຄະດີຂຶ້ນໄຕ່ສວນໃນທີ່ ປະຊຸມສານ, ໃນກໍລະນີ ເງິນວາງສານນັ້ນຫາກເຫຼືອຈາກການໃຊ້ຈ່າຍແລ້ວ ຕ້ອງສົ່ງຄືນໃຫ້ຜູ້ທີ່ກ່ຽວຂ້ອງ.

ການເກັບ, ການຄຸ້ມຄອງ ແລະ ການນຳໃຊ້ເງິນວາງສານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 162 (ໃໝ່) ຄວາມຮັບຜິດຊອບ ຕໍ່ຄ່າໃຊ້ຈ່າຍໃນການດຳເນີນຄະດີລະຫວ່າງປະເທດ**

ຜູ້ຮ້ອງຂໍຢູ່ຕ່າງປະເທດທີ່ສະເໜີໃຫ້ສານ ແຫ່ງ ສປປ ລາວ ດຳເນີນການເກັບກຳ ຂໍ້ມູນ ຫຼັກຖານ, ຮັບຊາບຄຳຮ້ອງຟ້ອງ ແລະ ອື່ນໆ ໃນການດຳເນີນຄະດີ ຕ້ອງຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການດຳເນີນຄະດີດັ່ງກ່າວ, ຍົກເວັ້ນໃນກໍລະນີ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫາກໄດ້ກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 163 (ປັບປຸງ) ການເກັບເງິນຄ່າທຳນຽມສານ**

ນອກຈາກ ຄ່າທຳນຽມຂອງຜູ້ເສຍຄະດີ ຕາມຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງເປັນຄວາມຮັບຜິດຊອບ ຂອງຜູ້ເສຍຄະດີແລ້ວ ຄ່າໃຊ້ຈ່າຍໃນການດຳເນີນຄະດີ, ຄ່າໃຊ້ຈ່າຍສຳລັບຜູ້ຖືກເຊີນເຂົ້າຮ່ວມ ໃນການດຳເນີນຄະດີ, ຄ່າເອກະສານ ແລະ ຄ່າສຳເນົາເອກະສານຕ່າງໆນັ້ນ ຜູ້ຮ້ອງຂໍໃຫ້ສານປະກອບຫຼັກຖານ ເປັນຜູ້ຈ່າຍກ່ອນ. ໃນກໍລະນີສານເຫັນວ່າ ມີຄວາມຈຳເປັນໃນການ ລົງເກັບກຳຂໍ້ມູນ, ພິສູດຫຼັກຖານ ຫຼື ຮຽກເອົາ ພະຍານ ຫຼື ບຸກຄົນໃດໜຶ່ງທີ່ກ່ຽວຂ້ອງໃນຄະດີມາໃຫ້ການນັ້ນ ໃຫ້ໂຈດເປັນຜູ້ຈ່າຍກ່ອນ.

ຄູ່ຄວາມທີ່ຂໍອຸທອນ ຫຼື ຂໍລົບລ້າງ ຕ້ອງຮັບຜິດຊອບຕໍ່ຄ່າຂໍອຸທອນ ຫຼື ຂໍລົບລ້າງ. ສໍາລັບຄ່າໃຊ້ຈ່າຍໃນການດໍາເນີນຄະດີຢູ່ສານຂັ້ນອຸທອນ ຫຼື ສານຂັ້ນລົບລ້າງນັ້ນ ຜູ້ຮ້ອງຂໍເປັນຜູ້ຈ່າຍກ່ອນ. ໃນກໍລະນີສານເຫັນວ່າມີຄວາມຈໍາເປັນ ກໍໃຫ້ຜູ້ຮ້ອງຂໍອຸທອນ ຫຼື ຂໍລົບລ້າງ ເປັນຜູ້ຈ່າຍກ່ອນ.

**ມາດຕາ 164 (ປັບປຸງ) ການເກັບເງິນວາງສານ ແລະ ຄ່າທໍານຽມສານ ຂອງສານແຕ່ລະຂັ້ນ**

ສານຂັ້ນຕົ້ນ ເກັບເງິນວາງສານ ແລະ ຄ່າທໍານຽມສານ ທີ່ກ່ຽວຂ້ອງກັບການດໍາເນີນຄະດີຢູ່ ສານຂັ້ນຕົ້ນ ແລະ ຄ່າຂໍອຸທອນ.

ສານຂັ້ນອຸທອນ ເກັບເງິນວາງສານ ແລະ ຄ່າທໍານຽມສານ ທີ່ກ່ຽວຂ້ອງກັບການດໍາເນີນຄະດີ ຢູ່ສານຂັ້ນອຸທອນ ແລະ ຄ່າຂໍລົບລ້າງ.

ສານຂັ້ນລົບລ້າງ ແລະ ການຮື້ຟື້ນ ເກັບຄ່າທໍານຽມສານ ທີ່ກ່ຽວຂ້ອງກັບການດໍາເນີນຄະດີ ຢູ່ສານຂັ້ນລົບລ້າງ ເມື່ອມີຄວາມຈໍາເປັນ.

ການເກັບຄ່າທໍານຽມສານ ຕ້ອງເຮັດໃບຮັບເງິນ ຊຶ່ງບົ່ງບອກເຖິງຈໍານວນ ແລະ ເປົ້າໝາຍການນໍາໃຊ້ ໂດຍມີການເຊັນຢັ້ງຢືນຈາກ ຜູ້ມອບ ແລະ ຜູ້ຮັບ.

**ມາດຕາ 165 (ປັບປຸງ) ການຄຸ້ມຄອງຄ່າທໍານຽມສານຢູ່ສານປະຊາຊົນ**

ຈ່າສານ ເປັນຜູ້ຄຸ້ມຄອງຄ່າທໍານຽມສານ ຢູ່ສານປະຊາຊົນຂັ້ນຂອງຕົນ.

ຄ່າຂໍອຸທອນ, ຄ່າຂໍລົບລ້າງ ແລະ ຄ່າຂໍຮື້ຟື້ນ ເມື່ອເກັບແລ້ວ ຕ້ອງເຮັດ ໃບມອບເງິນ, ໃບຮັບເງິນ ຄັດຕິດໄວ້ໃນສໍານວນຄະດີ ແລະ ນໍາເອົາເງິນດັ່ງກ່າວ ມອບເຂົ້າງົບປະມານແຫ່ງລັດ.

**ມາດຕາ 166 (ປັບປຸງ) ການນໍາໃຊ້ຄ່າທໍານຽມສານ**

ການນໍາໃຊ້ຄ່າທໍານຽມສານ ເຂົ້າໃນການດໍາເນີນຄະດີ ຕ້ອງບົນພື້ນຖານລະບຽບການ ແລະ ມີການຕົກລົງຂອງຄະນະສານທີ່ກ່ຽວຂ້ອງ.

ການນໍາໃຊ້ຄ່າທໍານຽມສານ ຕ້ອງມີແຜນການ, ມີເປົ້າໝາຍ, ມີໃບມອບ-ຮັບ ຢ່າງຖືກຕ້ອງ ແລະ ສະຫຼຸບເປັນລາຍລັກອັກສອນ ໃຫ້ສໍາເລັດກ່ອນການນໍາເອົາຄະດີອອກໄຕ່ສວນໃນທີ່ປະຊຸມສານ.

ຄະນະສານ ຕ້ອງວິນິດໄສລະອຽດ ກ່ຽວກັບການໃຊ້ຈ່າຍຄ່າທໍານຽມສານ ລົງໃນຄໍາຕັດສິນ ຫຼື ຄໍາພິພາກສາ.

ຜູ້ເສຍຄະດີ ຕ້ອງຮັບຜິດຊອບຕໍ່ຄ່າທໍານຽມສານ ຕາມຄໍາຕັດສິນ ຫຼື ຄໍາພິພາກສາ.

# ພາກທີ X
# ການດໍາເນີນຄະດີຢູ່ສານຂັ້ນຕົ້ນ
## ໝວດທີ 1
## ການຮ້ອງຟ້ອງ ຫຼື ຮ້ອງຂໍຕໍ່ສານ

**ມາດຕາ 167 ສານປະຊາຊົນທີ່ຕັດສິນເປັນຂັ້ນຕົ້ນ**

ສານປະຊາຊົນເຂດ ແລະ ສານປະຊາຊົນ ນະຄອນຫຼວງ, ແຂວງ ມີສິດຕັດສິນຄະດີ ເປັນຂັ້ນຕົ້ນ ຕາມຂໍ້ມູນ ຫຼັກຖານ ແລະ ຕາມກົດໝາຍ.

**ມາດຕາ 168 ການຮ້ອງຟ້ອງ ແລະ ການຮ້ອງຂໍຕໍ່ສານ**

ສານປະຊາຊົນ ພິຈາລະນາການຮ້ອງຟ້ອງ ແລະ ການຮ້ອງຂໍ ຂອງບຸກຄົນ ຫຼື ການຈັດຕັ້ງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ການຮ້ອງຟ້ອງ ເພື່ອໃຫ້ແກ້ໄຂບັນຫາໃດໜຶ່ງ ທີ່ເປັນຂໍ້ຂັດແຍ່ງ;

2. ການຮ້ອງຂໍ ເພື່ອໃຫ້ຢັ້ງຢືນ ຫຼື ຮັບຮູ້ບັນຫາໃດໜຶ່ງ ທີ່ບໍ່ເປັນຂໍ້ຂັດແຍ່ງ ຫຼື ການຮ້ອງຂໍໃຫ້ສານຕັດສິນ.

**ມາດຕາ 169 ສິດໃນການຮ້ອງຟ້ອງ ແລະ ການຮ້ອງຂໍຕໍ່ສານ**

ບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງຟ້ອງຕໍ່ສານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອໃຫ້ແກ້ໄຂຂໍ້ຂັດແຍ່ງ ຫຼື ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຖືກລະເມີດ ຫຼື ຖືກໂຕ້ແຍ່ງຈາກຜູ້ອື່ນ.

ບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ພິຈາລະນາຢັ້ງຢືນ ຫຼື ຮັບຮູ້ບັນຫາໃດໜຶ່ງ ຊຶ່ງບໍ່ເປັນຂໍ້ຂັດແຍ່ງ ເຊັ່ນ ການປະກາດເປັນຜູ້ເສຍຊີວິດ, ຜູ້ຫາຍສາບສູນ, ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ, ການຢັ້ງຢືນໃບຕາດິນເສຍຫາຍ, ການຮິບຊັບສິ່ງຂອງທີ່ ບໍ່ມີ ຫຼື ບໍ່ຮູ້ ເຈົ້າຂອງມາເປັນຂອງລັດ ແລະ ບັນຫາອື່ນ.

**ມາດຕາ 170 (ປັບປຸງ) ສິດໃນການຮ້ອງຟ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ**

ອົງການໄອຍະການປະຊາຊົນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ມີສິດຮ້ອງຟ້ອງ ເພື່ອປົກປ້ອງ ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດ ຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ທີ່ຖືກໂຕ້ແຍ່ງ ຫຼື ຖືກລະເມີດໂດຍບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

ອົງການໄອຍະການປະຊາຊົນ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ຫຼື ຄອບຄົວ ມີສິດຮ້ອງຟ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງ ແມ່ຍິງ ແລະ ເດັກນ້ອຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຖ້າເຫັນວ່າບຸກຄົນດັ່ງກ່າວ ຢູ່ໃນສະພາບທີ່ບໍ່ສາມາດດຳເນີນການຮ້ອງຟ້ອງດ້ວຍຕົນເອງໄດ້.

ຜູ້ຄອບຄອງຊັບສິ່ງຂອງ ຊຶ່ງບໍ່ແມ່ນກຳມະສິດຂອງຕົນ ເປັນຕົ້ນ ຜູ້ເຊົ່າ, ຜູ້ຮັກສາ, ຜູ້ຢືມ ກໍມີສິດຮ້ອງຟ້ອງເຊັ່ນດຽວກັນກັບເຈົ້າກຳມະສິດ ເພື່ອທວງເອົາຊັບສິ່ງຂອງຄືນ, ທວງໃຫ້ຢຸດເຊົາການກີດຂວາງ ຫຼື ລົບລ້າງອຸປະສັກ ຫຼື ການປົກປ້ອງອື່ນ ທີ່ມີການລະເມີດ ຫຼື ໂຕ້ແຍ່ງຈາກ ບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ອັນຈະສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຊຶ່ງເຈົ້າກຳມະສິດບໍ່ຮູ້ ຫຼື ບໍ່ສາມາດຮ້ອງຟ້ອງດ້ວຍຕົນເອງໄດ້.

**ມາດຕາ 171 (ປັບປຸງ) ສາເຫດທີ່ພາໃຫ້ມີການດຳເນີນຄະດີແພ່ງ**

ສານ ຈະດຳເນີນຄະດີໄດ້ ກໍຕໍ່ເມື່ອມີສາເຫດໃດໜຶ່ງ ດັ່ງນີ້:

1. ມີຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ແກ້ໄຂ ຫຼື ປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;

2. ມີຄຳຮ້ອງຂໍຂອງບຸກຄົນ ຫຼື ການຈັດຕັ້ງ ເພື່ອໃຫ້ພິຈາລະນາຮັບຮູ້ບັນຫາໃດໜຶ່ງ;

3. ມີຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ກົດໝາຍອະນຸຍາດໃຫ້ປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;

4. ມີຄຳຮ້ອງຟ້ອງຂອງອົງການໄອຍະການປະຊາຊົນ ເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

## ໝວດທີ 2
## ການຮ້ອງຟ້ອງ

**ມາດຕາ 172 (ປັບປຸງ) ຄຳຮ້ອງຟ້ອງ**

ຄຳຮ້ອງຟ້ອງ ແມ່ນ ເອກະສານຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ສານ ໂດຍອ້າງວ່າຕົນໄດ້ຮັບຄວາມເສຍຫາຍ ຍ້ອນຖືກຜູ້ອື່ນລະເມີດ ຫຼື ໂຕ້ແຍ່ງ ສິດ ແລະ ຜົນປະໂຫຍດ ຂອງຕົນ, ບຸກຄົນ ຫຼື ການຈັດຕັ້ງອື່ນ.

ຄຳຮ້ອງຟ້ອງ ມີເນື້ອໃນ ດັ່ງນີ້:

1. ຊື່ ຂອງສານທີ່ຄຳຮ້ອງຟ້ອງນັ້ນໄດ້ຍື່ນເຖິງ;

2. ຊື່ ແລະ ນາມສະກຸນ, ບ່ອນຢູ່, ຂໍ້ມູນຕິດຕໍ່ ຂອງໂຈດ ແລະ ຈຳເລີຍ. ຖ້າວ່າໂຈດ ຫຼື ຈຳເລີຍ ຫາກແມ່ນນິຕິບຸກຄົນ ກໍໃຫ້ບອກບ່ອນທີ່ສຳນັກງານ ຂອງນິຕິບຸກຄົນນັ້ນຕັ້ງຢູ່ ພ້ອມທັງຊື່ ແລະ ນາມສະກຸນ ແລະ ບ່ອນຢູ່ ຂອງຜູ້ຕາງໜ້າດ້ວຍ;

3. ສິດທວງ ພ້ອມດ້ວຍມາດຕາກົດໝາຍທີ່ກ່ຽວຂ້ອງ ທີ່ເປັນພື້ນຖານໃນສິດທວງນັ້ນ;

4. ເງື່ອນໄຂທີ່ພາໃຫ້ສິດທວງ ເກີດຂຶ້ນ ພ້ອມດ້ວຍຂໍ້ເທັດຈິງທີ່ສະໜັບສະໜູນ;

5. ເຫດການທີ່ເປັນສາເຫດພາໃຫ້ມີ ການຮ້ອງຟ້ອງ ແລະ ຫຼັກຖານຢັ້ງຢືນ ເພື່ອໃຫ້ສານຕັດສີນ;

6. ມູນຄ່າການຮ້ອງຟ້ອງ;

7. ການຮ້ອງຂໍຂອງໂຈດ;

8. ເອກະສານອື່ນ ທີ່ພົວພັນກັບຄະດີ ຄັດຕິດມາພ້ອມຄຳຮ້ອງຟ້ອງ.

ຄຳຮ້ອງຟ້ອງ ໃຫ້ໂຈດ ຫຼື ຜູ້ຕາງໜ້າເຊັນຊື່ ຫຼື ແປະໂປ້ມືໃສ່ ແລະ ຕິດສະແຕັມ.

## ມາດຕາ 173 (ປັບປຸງ) ການຍື່ນຄຳຮ້ອງຟ້ອງ

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຮ້ອງຟ້ອງ ຕ້ອງຂຽນຄຳຮ້ອງຟ້ອງ ຕາມແບບພິມຂອງສານ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ແລ້ວນຳໄປຍື່ນຕໍ່ສານທີ່ມີສິດອຳນາດ ຜ່ານຮູບການ ດັ່ງນີ້:

1. ຍື່ນດ້ວຍຕົນເອງ ຕໍ່ສານໂດຍກົງ;

2. ຍື່ນຜ່ານທາງໄປສະນີ ທີ່ລົງທະບຽນ;

3. ຍື່ນທາງເອເລັກໂຕຣນິກ ທີ່ສານກຳນົດ.

ຄຳຮ້ອງຟ້ອງຕ້ອງເຮັດ ເປັນສອງສະບັບ ຄື ສະບັບຕົ້ນ ແລະ ສະບັບສຳເນົາ.

ຜູ້ຍື່ນຄຳຮ້ອງຟ້ອງ ຕ້ອງຈ່າຍເງິນວາງສານແລ້ວແຕ່ກໍລະນີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຄ່າທຳນຽມສານ. ສຳລັບຜູ້ຕາງໜ້ານັ້ນ ຕ້ອງໃຫ້ມີໃບມອບສັນທະຢ່າງຖືກຕ້ອງ.

## ມາດຕາ 174 (ໃໝ່) ລະບຽບການຮັບຄຳຮ້ອງຟ້ອງ

ຄຳຮ້ອງຟ້ອງ ທີ່ນຳມາຍື່ນຕໍ່ສານດ້ວຍຕົນເອງ ຫຼື ທາງໄປສະນີ ສານຕ້ອງບັນທຶກເອກະສານຂາເຂົ້າ, ສຳລັບຄຳຮ້ອງຟ້ອງທີ່ຜ່ານທາງເອເລັກໂຕຣນິກ ສານຕ້ອງພິມອອກ ແລ້ວບັນທຶກເອກະສານຂາເຂົ້າ ຕາມລະບຽບການ.

ຄຳຮ້ອງຟ້ອງ ທີ່ຍື່ນຕໍ່ສານໂດຍກົງນັ້ນ ສານຕ້ອງກວດກາທັນທີໂດຍໄວ ຖ້າຖືກຕ້ອງແລ້ວ ຕ້ອງບັນທຶກຂາເຂົ້າແລ້ວອອກໜັງສືຢັ້ງຢືນ.

ຄຳຮ້ອງຟ້ອງ ທີ່ຜ່ານໄປສະນີ ຫຼື ເອເລັກໂຕຣນິກ ພາຍຫຼັງສານຮັບແລ້ວ ພາຍໃນເວລາ ສາມວັນ ສານຕ້ອງກວດກາ, ຖ້າຖືກຕ້ອງແລ້ວ ຕ້ອງບັນທຶກຂາເຂົ້າ ແລ້ວແຈ້ງຄືນໃຫ້ຜູ້ຮ້ອງຟ້ອງ.

ໃນກໍລະນີຄຳຮ້ອງຟ້ອງມາຍື່ນນັ້ນ ບໍ່ຖືກຕ້ອງ ຫຼື ມີຂໍ້ບົກພ່ອງ ສານຕ້ອງໃຫ້ຜູ້ຍື່ນຄຳຮ້ອງຟ້ອງນຳໄປແກ້ໄຂຕາມກຳນົດເວລາ, ຖ້າບໍ່ມາແກ້ໄຂ ສານຈະບໍ່ບັນທຶກ ແລະ ບໍ່ຮັບຄຳຮ້ອງຟ້ອງມາພິຈາລະນາ.

## ມາດຕາ 175 ການກວດກາຄຳຮ້ອງຟ້ອງ ແລະ ເອກະສານປະກອບ

ເມື່ອໄດ້ຮັບຄຳຮ້ອງຟ້ອງແລ້ວ ສານຕ້ອງກວດກາຄຳຮ້ອງຟ້ອງນັ້ນວ່າ ໄດ້ປະຕິບັດຕາມລະບຽບການຂອງສານໄດ້ວາງອອກ ຫຼື ບໍ່ ແລະ ເອກະສານປະກອບທີ່ຄັດຕິດມານັ້ນ ຄົບຖ້ວນຕາມລາຍການທີ່ໄດ້ກຳນົດໄວ້ ຫຼື ບໍ່. ເມື່ອເຫັນວ່າຖືກຕ້ອງ ແລະ ຄົບຖ້ວນແລ້ວ ສານຕ້ອງກວດກາເບິ່ງວ່າ ຄະດີດັ່ງກ່າວຕົກຢູ່ໃນສິດອຳນາດຂອງຕົນ ຫຼື ບໍ່, ຖ້າບໍ່ຕົກຢູ່ໃນສິດອຳນາດຂອງຕົນແລ້ວ ສານຈະສົ່ງຄືນ ແລະ ແນະນຳໃຫ້ໄປຍື່ນຕໍ່ສານທີ່ມີສິດ

ອຳນາດ. ນອກຈາກນັ້ນ ສານຍັງຕ້ອງກວດກາເບິ່ງວ່າ ຄະດີທີ່ຍື່ນຕໍ່ສານນັ້ນ ໄດ້ຜ່ານການໄກ່ເກ່ຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ບໍ່, ຖ້າຫາກມີຄວາມຈຳເປັນ ກໍຕ້ອງແນະນຳ ໃຫ້ຄູ່ຄວາມໄປໄກ່ເກ່ຍກັນເສຍກ່ອນ ຈຶ່ງຮັບເອົາມາພິຈາລະນາ.

**ມາດຕາ 176 ເອກະສານ ຫຼື ຫຼັກຖານປະກອບ**

ເອກະສານ ຫຼື ຫຼັກຖານປະກອບ ຊຶ່ງໄດ້ກ່າວອ້າງໃນເນື້ອໃນຄຳຮ້ອງຟ້ອງ ຕ້ອງຄັດຕິດມາພ້ອມກັບການຍື່ນຄຳຮ້ອງຟ້ອງ ເພື່ອເອົາເຂົ້າໃນສຳນວນຄະດີ. ຖ້າວ່າເອກະສານ ຫຼື ຫຼັກຖານ ທີ່ກ່າວອ້າງມານັ້ນ ຫາກຍັງບໍ່ສາມາດນຳມາໄດ້ ກໍໃຫ້ຮັບຄຳຮ້ອງຟ້ອງນັ້ນໄວ້ກ່ອນ ແຕ່ສານຕ້ອງແນະນຳໃຫ້ຜູ້ກ່ຽວຂ້ອງນຳມາປະກອບເຂົ້າໃນສຳນວນຄະດີຕາມພາຍຫຼັງ.

**ມາດຕາ 177 (ປັບປຸງ) ການບໍ່ຮັບເອົາຄຳຮ້ອງຟ້ອງມາພິຈາລະນາ**

ສານ ຈະບໍ່ຮັບເອົາຄຳຮ້ອງຟ້ອງມາພິຈາລະນາ ໃນກໍລະນີ ດັ່ງນີ້:

1. ບັນຫາທີ່ຮ້ອງຟ້ອງນັ້ນ ຫາກຍັງບໍ່ທັນໄດ້ໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;
2. ຂໍ້ຂັດແຍ່ງທາງດ້ານການຄ້າ ທີ່ຍັງບໍ່ທັນໄດ້ຜ່ານການໄກ່ເກ່ຍຈາກ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນສັນຍາ;
3. ບັນຫາທີ່ຮ້ອງຟ້ອງນັ້ນ ບໍ່ຕົກຢູ່ໃນສິດອຳນາດຂອງສານທີ່ຈະນຳມາພິຈາລະນາ;
4. ຄຳຮ້ອງຟ້ອງ ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ຜູ້ບໍ່ມີສິດ ເປັນຜູ້ຕາງໜ້າ;
5. ຄຳຮ້ອງຟ້ອງ ທີ່ບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 172 ຂອງກົດໝາຍສະບັບນີ້.

ສຳລັບ ຂໍ້ 4 ແລະ ຂໍ້ 5 ນັ້ນ ຄູ່ຄວາມສາມາດແກ້ໄຂການຮ້ອງຟ້ອງຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ ເພື່ອໃຫ້ສານຮັບມາພິຈາລະນາ.

**ມາດຕາ 178 (ປັບປຸງ) ການສະເໜີໃຫ້ແກ້ໄຂຂໍ້ບົກພ່ອງໃນຄຳຮ້ອງຟ້ອງ**

ໃນເວລາກວດກາຄຳຮ້ອງຟ້ອງ ຖ້າຫາກເຫັນວ່າຄຳຮ້ອງຟ້ອງນັ້ນບໍ່ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 172 ຂອງກົດໝາຍສະບັບນີ້ ສານຈະສົ່ງຄືນ ແລະ ແນະນຳໃຫ້ຜູ້ຍື່ນຄຳຮ້ອງຟ້ອງນັ້ນ ແກ້ໄຂຂໍ້ບົກພ່ອງເສຍກ່ອນ, ຖ້າຫາກແກ້ໄຂຂໍ້ບົກພ່ອງຄົບຖ້ວນແລ້ວ ຈຶ່ງຮັບເອົາຄຳຮ້ອງຟ້ອງມາພິຈາລະນາ.

**ມາດຕາ 179 (ປັບປຸງ) ການຮັບເອົາຄຳຮ້ອງຟ້ອງມາພິຈາລະນາ**

ຄຳຮ້ອງຟ້ອງຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະຕິບັດຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 172 ຂອງກົດໝາຍສະບັບນີ້ ສານຕ້ອງຮັບມາພິຈາລະນາ.

**ມາດຕາ 180 (ໃໝ່) ການສັງລວມຄຳຮ້ອງຟ້ອງ**

ພາຍຫຼັງສານຮັບຄຳຮ້ອງຟ້ອງແລ້ວ ຕ້ອງມອບໃຫ້ຜູ້ພິພາກສາທີ່ຖືກມອບໝາຍ ສັງລວມເຫດການ, ສິດທວງ, ປະເດັນຮ້ອງຟ້ອງ ພ້ອມດ້ວຍບັນຊີ ຂໍ້ມູນ ຫຼັກຖານ ຂອງໂຈດ ໃນເບື້ອງຕົ້ນໂດຍຫຍໍ້ແລ້ວ ຮຽກໂຈດເຂົ້າມາສານ ເພື່ອຢັ້ງຢືນ ແລະ ຮັບຊາບເຫດການ, ການສັງລວມເຫດການ, ສິດທວງ, ປະເດັນຮ້ອງຟ້ອງ ພ້ອມດ້ວຍບັນຊີ ຂໍ້ມູນ ຫຼັກຖານ ວ່າຖືກຕ້ອງ, ຄົບຖ້ວນຕາມຈຸດປະສົງ ຫຼື ເຈດຈຳນົງຂອງໂຈດທີ່ຮ້ອງຟ້ອງ ຫຼື ບໍ່, ມີອັນເພີ່ມ ຫຼື ປ່ຽນແປງແນວໃດ, ຖ້າຖືກຕ້ອງ, ຄົບຖ້ວນແລ້ວ ກໍເຮັດບົດບັນທຶກໄວ້ເປັນຫຼັກຖານ.

**ມາດຕາ 181 (ປັບປຸງ) ການແຈ້ງຄໍາຮ້ອງຟ້ອງໃຫ້ຜູ້ຖືກຮ້ອງຟ້ອງ**

ພາຍຫຼັງໄດ້ສັງລວມ ແລະ ໂຈດ ຫຼື ຜູ້ຮ້ອງຟ້ອງ ໄດ້ຢັ້ງຢືນເນື້ອໃນການຮ້ອງຟ້ອງແລ້ວ ຜູ້ພິພາກສາຕ້ອງຮຽກຜູ້ຖືກຮ້ອງຟ້ອງມາຮັບຊາບ ແລະ ມອບປະເດັນຮ້ອງຟ້ອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງໃຫ້ຜູ້ຖືກຮ້ອງຟ້ອງ ແລະ ມອບສໍາເນົາຄໍາຮ້ອງຟ້ອງນັ້ນ ໃຫ້ຜູ້ກ່ຽວພ້ອມກໍານົດເວລາໃຫ້ມາຍື່ນຄໍາແກ້ຟ້ອງຕໍ່ສານ.

## ໝວດທີ 3
## ການແກ້ຟ້ອງ ແລະ ຟ້ອງແຍ່ງ

**ມາດຕາ 182 (ປັບປຸງ) ຄໍາແກ້ຟ້ອງ**

ຄໍາແກ້ຟ້ອງ ແມ່ນ ເອກະສານ ຂອງຜູ້ຖືກຮ້ອງຟ້ອງທີ່ຍື່ນຕໍ່ສານ ເພື່ອແກ້ຄໍາຮ້ອງຟ້ອງ ຖ້າຕົນເຫັນວ່າຄໍາຮ້ອງຟ້ອງຫາກບໍ່ມີມູນຄວາມຈິງ ຫຼື ເກີນຄວາມຈິງ ກ່ຽວກັບການທວງເອົາຄ່າເສຍຫາຍ ຫຼື ຊັບສິ່ງຂອງ ຫຼື ຂາດເຫດການໃດໜຶ່ງ ທີ່ບໍ່ສາມາດຈະໃຫ້ສານພິຈາລະນາຕັດສິນໄດ້ນັ້ນ ຜູ້ກ່ຽວມີສິດເຮັດຄໍາແກ້ຟ້ອງດ້ວຍເຫດຜົນພ້ອມທັງສະເໜີ ພະຍານ ແລະ ຫຼັກຖານ ມາຢັ້ງຢືນ.

**ມາດຕາ 183 (ປັບປຸງ) ຂອບເຂດຄວາມຮັບຜິດຊອບໃນການແກ້ຟ້ອງ**

ຜູ້ຖືກຮ້ອງຟ້ອງ ມີຄວາມຮັບຜິດຊອບແກ້ຟ້ອງ ໃນຂອບເຂດປະເດັນຮ້ອງຟ້ອງຂອງໂຈດ ທີ່ສານແຈ້ງໃຫ້ນັ້ນຢ່າງຖືກຕ້ອງ ແລະ ຄົບຖ້ວນທຸກປະເດັນ. ບັນຫາໃດທີ່ບໍ່ເປັນປະເດັນຮ້ອງຟ້ອງ ຂອງໂຈດໃຫ້ຖືເປັນເລື່ອງໜຶ່ງຕ່າງຫາກ ບໍ່ໃຫ້ນໍາມາແກ້ຟ້ອງ.

**ມາດຕາ 184 (ໃໝ່) ກໍານົດເວລາສົ່ງຄໍາແກ້ຟ້ອງ**

ຜູ້ແກ້ຟ້ອງ ມີພັນທະສົ່ງຄໍາແກ້ຟ້ອງໃຫ້ສານ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບປະເດັນ ແລະ ສໍາເນົາ ຄໍາຮ້ອງຟ້ອງຈາກສານ. ໃນກໍລະນີ ຜູ້ຖືກຮ້ອງຟ້ອງ ບໍ່ສາມາດສົ່ງຄໍາແກ້ຟ້ອງຕາມເວລາທີ່ໄດ້ກໍານົດໄວ້ ຜູ້ກ່ຽວກໍມີສິດຮ້ອງຂໍເລື່ອນເວລາ ຫຼື ຮ້ອງຂໍໃຫ້ສານບັນທຶກຄໍາໃຫ້ການຕາງການແກ້ຟ້ອງ ໃນເວລາຜູ້ກ່ຽວເຂົ້າມາສານກໍໄດ້.

**ມາດຕາ 185 (ໃໝ່) ຄໍາຟ້ອງແຍ່ງ ແລະ ຄໍາແກ້ ຄໍາຟ້ອງແຍ່ງ**

ຄໍາຟ້ອງແຍ່ງ ແມ່ນ ເອກະສານຂອງຜູ້ຖືກຮ້ອງຟ້ອງ ຫຼື ຈໍາເລີຍ ທີ່ຍື່ນຕໍ່ສານໃນຄະດີດຽວກັນ ເພື່ອສະເໜີຕໍ່ສານໄລ່ລຽງໜີ້ສິນ ທີ່ເຫັນວ່າ ຜູ້ຮ້ອງຟ້ອງ ຫຼື ໂຈດ ໃນຄະດີດັ່ງກ່າວຍັງມີພັນທະຕໍ່ຕົນ.

ຄໍາຟ້ອງແຍ່ງ ຕ້ອງແຍກອອກຈາກຄໍາແກ້ຟ້ອງ ເປັນສະບັບໜຶ່ງຕ່າງຫາກ.

ຄໍາແກ້ຄໍາຟ້ອງແຍ່ງ ໃຫ້ປະຕິບັດດັ່ງດຽວກັນກັບ ຄໍາແກ້ຟ້ອງ.

**ມາດຕາ 186 (ປັບປຸງ) ການນໍາເອົາບຸກຄົນທີສາມເຂົ້າຮ່ວມໃນການດໍາເນີນຄະດີ**

ຄູ່ຄວາມ ມີຄວາມຮັບຜິດຊອບແຈ້ງຕໍ່ສານ ຖ້າຂໍ້ຂັດແຍ່ງມີສ່ວນພົວພັນເຖິງ ສິດ ແລະ ຜົນປະໂຫຍດ ຫຼື ພັນທະຂອງບຸກຄົນທີສາມ. ສານຕ້ອງນໍາເອົາບຸກຄົນດັ່ງກ່າວເຂົ້າຮ່ວມ ໃນການດໍາເນີນຄະດີ ເພື່ອເຮັດໃຫ້ການດໍາເນີນຄະດີນັ້ນ ຄົບຖ້ວນ, ຮອບດ້ານ ແລະ ສາມາດແກ້ໄຂບັນຫາດັ່ງກ່າວໄປພ້ອມກັນ.

## ໝວດທີ 4
## ການຮ້ອງຟ້ອງຮ່ວມກັນ

### ມາດຕາ 187 ການຮ້ອງຟ້ອງຮ່ວມກັນ ຫຼື ການໂຮມຄະດີ

ເມື່ອເຫັນວ່າ ມີການລະເມີດສິດ ແລະ ຜົນປະໂຫຍດຂອງລວມໝູ່, ຂອງຫຼາຍຄົນ ຫຼື ຂອງສ່ວນລວມ ທີ່ເປັນເຫດການດຽວກັນ, ມາຈາກສາເຫດ ແລະ ການກະທຳອັນດຽວກັນ ຜູ້ຖືກເສຍຫາຍ ສາມາດຍື່ນຄຳຮ້ອງຟ້ອງຮ່ວມກັນ ເພື່ອໃຫ້ສານພິຈາລະນາ. ການຍື່ນຄຳຮ້ອງຟ້ອງຮ່ວມກັນ ອາດຈະເຮັດຄຳຮ້ອງ ໂດຍບົ່ງບອກເຖິງຜົນເສຍຫາຍເປັນແຕ່ລະບຸກຄົນ ຫຼື ລວມກັນກໍໄດ້, ຖ້າຫາກເຮັດລວມກັນ ກໍຕ້ອງໄຈ້ແຍກຄວາມເສຍຫາຍຂອງແຕ່ລະບຸກຄົນ ໃຫ້ລະອຽດ ແລະ ຖືກຕ້ອງ ຕາມຄວາມເປັນຈິງ.

ເມື່ອເຫັນວ່າ ຄະດີໃດໜຶ່ງ ທີ່ພວມດຳເນີນຢູ່ນັ້ນ ມີເປົ້າໝາຍອັນດຽວ ແລະ ພົວພັນກັນກັບຄະດີອື່ນທີ່ພວມດຳເນີນຢູ່ນັ້ນ ສານອາດຈະໂຮມເຂົ້າເປັນຄະດີດຽວ ເພື່ອຄວາມສະດວກ ແລະ ຮັບປະກັນການນຳໃຊ້ກົດໝາຍໃນການຕັດສິນໃຫ້ມີຄວາມຖືກຕ້ອງ ແລະ ເປັນເອກະພາບ.

ຜູ້ຮ້ອງຟ້ອງຫຼາຍຄົນ ສາມາດມອບສິດເປັນລາຍລັກອັກສອນ ໃຫ້ຜູ້ໃດໜຶ່ງເປັນຜູ້ຕາງໜ້າຕໍ່ສູ້ຄະດີ. ການຕໍ່ສູ້ຄະດີຂອງຜູ້ຕາງໜ້ານັ້ນ ຈະມີຜົນຄືກັນກັບຄູ່ຄວາມ ແຕ່ລະຄົນໄດ້ກະທຳເອງ, ຍົກເວັ້ນການກະທຳທີ່ຮຽກຮ້ອງໃຫ້ຜູ້ຮ້ອງຟ້ອງດັ່ງກ່າວ ເປັນຜູ້ກະທຳດ້ວຍຕົນເອງ.

### ມາດຕາ 188 ການດຳເນີນການໂຮມຄະດີ

ການໂຮມຄະດີ ເປັນການຮ້ອງຟ້ອງຮ່ວມກັນ ໂດຍໃຫ້ຄະນະສານອອກ ຄຳຊີ້ຂາດ, ຄຳຊີ້ຂາດດັ່ງກ່າວຕ້ອງແຈ້ງໃຫ້ຄູ່ຄວາມຮັບຊາບ ແຕ່ຄູ່ຄວາມບໍ່ມີສິດຂໍອຸທອນແຕ່ຢ່າງໃດ.

### ມາດຕາ 189 (ປັບປຸງ) ການແຍກຄະດີ

ເມື່ອເຫັນວ່າ ຄະດີທີ່ໂຈດຮ້ອງຟ້ອງຕໍ່ສານນັ້ນ ຫາກມີເປົ້າໝາຍ, ເງື່ອນໄຂຕ່າງກັນ ແລະ ແຕ່ລະເປົ້າໝາຍຂັດແຍ່ງນັ້ນ ບໍ່ກ່ຽວຂ້ອງ ຫຼື ພົວພັນກັນ ຫຼື ມີຈຳເລີຍຫຼາຍຄົນ ຊຶ່ງເປັນອຸປະສັກ ແລະ ພົບຄວາມຫຍຸ້ງຍາກຕໍ່ການເກັບກຳຂໍ້ມູນແລ້ວ ຫົວໜ້າຄະນະສານ ຈະອອກຄຳຊີ້ຂາດ ໃຫ້ແຍກຄະດີດັ່ງກ່າວອອກເປັນ ສອງ ຫຼື ຫຼາຍສຳນວນຄະດີກໍໄດ້. ຄຳຊີ້ຂາດນັ້ນຕ້ອງແຈ້ງໃຫ້ຄູ່ຄວາມຮັບຊາບ ແຕ່ຄູ່ຄວາມບໍ່ມີສິດຮ້ອງຂໍອຸທອນແຕ່ຢ່າງໃດ.

### ມາດຕາ 190 ຜົນສະທ້ອນຂອງ ການໂຮມ ຫຼື ການແຍກ ຄະດີ

ເມື່ອສານ ມີຄຳຊີ້ຂາດໃຫ້ໂຮມຄະດີແລ້ວ ຖືວ່າໂຈດທັງໝົດ ໄດ້ກາຍມາເປັນໂຈດຮ່ວມໃນຄະດີດຽວກັນ ຊຶ່ງສານຕ້ອງໄດ້ຂຶ້ນຟ້ອງເປັນຄະດີໃໝ່, ສ່ວນຄະດີເກົ່າທີ່ໄດ້ຂຶ້ນຟ້ອງແລ້ວນັ້ນ ຖືວ່າໄດ້ຖືກລົບລ້າງ.

ຖ້າຫາກສານປະຊາຊົນໃດໜຶ່ງ ໄດ້ໂອນຄະດີໄປໂຮມຢູ່ໃນສານປະຊາຊົນອື່ນ ສານທີ່ກ່ຽວຂ້ອງຕ້ອງເຮັດຄຳຊີ້ຂາດກ່ຽວກັບການໂອນຄະດີ ແລະ ໃຫ້ລົບບັນຊີຄະດີອອກຈາກບັນທຶກຂຶ້ນຟ້ອງຂອງສານນັ້ນ.

ຖ້າຫາກສານ ໄດ້ແຍກສຳນວນຄະດີໜຶ່ງ ອອກເປັນຫຼາຍສຳນວນຄະດີ ກໍຕ້ອງເຮັດຄຳຊີ້ຂາດ ກ່ຽວກັບການແຍກຄະດີ ແລະ ໃຫ້ຂຶ້ນຟ້ອງຄະດີ ທີ່ແຍກອອກມາ ພ້ອມທັງແຍກຂໍ້ມູນທີ່ກ່ຽວຂ້ອງເຂົ້າໃນແຕ່ລະສຳນວນຄະດີ.

# ໝວດທີ 5
# ການປະກອບສຳນວນຄະດີ ແລະ ການຄົ້ນຄວ້າຄະດີ

**ມາດຕາ 191 (ປັບປຸງ) ການປະກອບສຳນວນຄະດີ**

ຖ້າວ່າ ຄຳຮ້ອງຟ້ອງ ແລະ ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງ ຂອງຄູ່ຄວາມທີ່ຍື່ນຕໍ່ສານນັ້ນ ຫາກປະຕິບັດຖືກຕ້ອງຕາມກົດໝາຍແລ້ວ ສານຕ້ອງປະກອບເປັນສຳນວນຄະດີ ແລະ ຂຶ້ນຟ້ອງຄະດີຕາມລະບຽບການ.

ໃນກໍລະນີ ຜູ້ຖືກຮ້ອງຟ້ອງບໍ່ສົ່ງຄຳແກ້ຟ້ອງ ສານຕ້ອງເອົາຄຳໃຫ້ການຜູ້ກ່ຽວແທນຄຳແກ້ຟ້ອງ, ຫາກຜູ້ກ່ຽວບໍ່ຍອມໃຫ້ການ, ບໍ່ລົງລາຍເຊັນ ສານຕ້ອງເຮັດບົດບັນທຶກຄຳໃຫ້ການໝາຍເຫດໄວ້. ບົດບັນທຶກຄຳໃຫ້ການດັ່ງກ່າວຖືວ່າເປັນຄຳແກ້ຟ້ອງ ແລະ ສາມາດປະກອບເປັນສຳນວນຄະດີ ເພື່ອດຳເນີນຕາມລະບຽບການ.

**ມາດຕາ 192 (ປັບປຸງ) ການບໍ່ນຳເອົາຄະດີມາພິຈາລະນາ**

ສານ ຈະບໍ່ນຳເອົາຄະດີມາພິຈາລະນາ ໃນກໍລະນີ ດັ່ງນີ້:

1. ຄະດີ ທີ່ໄດ້ຖືກຖອນ ແລະ ສານໄດ້ອອກຄຳສັ່ງ ໃຫ້ຖອນ ແລະ ຊັດມ້ຽນແລ້ວ, ຍົກເວັ້ນຄະດີຢ່າຮ້າງ;
2. ຄະດີ ທີ່ມີຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
3. ຄະດີ ໄດ້ຖືກໄກ່ເກ່ຍຢູ່ສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 215 ຂອງກົດໝາຍສະບັບນີ້;
4. ຄະດີ ທີ່ໝົດອາຍຸຄວາມໃນການຮ້ອງຟ້ອງ ໂດຍບໍ່ມີການໂຕ້ແຍ່ງ.

ໃນການບໍ່ນຳເອົາຄະດີມາພິຈາລະນານັ້ນ ຕ້ອງອອກເປັນຄຳຊີ້ຂາດ ຂອງຫົວໜ້າຄະນະສານ.

**ມາດຕາ 193 ການຮັບຮູ້ ແລະ ການຖອນ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ**

ຄູ່ຄວາມ ມີສິດຮັບຮູ້ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ທັງໝົດ ຫຼື ບາງສ່ວນ. ການຮັບຮູ້ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງນັ້ນ ເປັນສາເຫດທີ່ພາໃຫ້ສານຕັດສິນ ໂດຍບໍ່ມີການໄຕ່ສວນຄະດີ ໃນທີ່ປະຊຸມສານກໍໄດ້.

ຄູ່ຄວາມ ມີສິດຖອນ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ທັງໝົດ ຫຼື ບາງສ່ວນ. ໃນກໍລະນີທີ່ໄດ້ຖອນບາງສ່ວນນັ້ນ ສານຈະພິຈາລະນາຕັດສິນ ພຽງແຕ່ສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ. ຖ້າຫາກໄດ້ຖອນທັງໝົດ ກໍຈະພາໃຫ້ຄະດີນັ້ນສິ້ນສຸດລົງ, ຍົກເວັ້ນຄະດີຢ່າຮ້າງ.

ໃນກໍລະນີການຖອນ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ທັງໝົດ ແລະ ການຖອນດັ່ງກ່າວ ບໍ່ຂັດກັບຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສັງຄົມ ແລະ ກົດໝາຍ ສານກໍອອກຄຳສັ່ງໃຫ້ຖອນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ. ໃນກໍລະນີມີການຖອນຄຳຮ້ອງຟ້ອງທັງໝົດ ແລະ ບໍ່ມີຄຳຟ້ອງແຍ່ງຂອງຈຳເລີຍ ສານຈະອອກຄຳສັ່ງຊັດມ້ຽນຄະດີ.

ການຖອນ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ທັງໝົດ ຫຼື ບາງສ່ວນ ສາມາດປະຕິບັດໄດ້ກ່ອນປິດການໂຕ້ຖຽງຢູ່ທີ່ປະຊຸມສານຂັ້ນຕົ້ນ.

**ມາດຕາ 194 (ປັບປຸງ) ການດຳເນີນການເມື່ອມີການຮັບຮູ້ ຫຼື ປະຕິເສດ**

ໃນເວລາດຳເນີນຄະດີ ຖ້າຫາກວ່າ ມີການຮັບຮູ້ ຫຼື ປະຕິເສດ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງບາງສ່ວນ ສານຈະກຳນົດປະເດັນຂັດແຍ່ງ ແລະ ສອບສວນໃນສ່ວນທີ່ຍັງບໍ່ຮັບຮູ້ ຫຼື ປະຕິເສດ.

ບັນຫາທີ່ໂຈດ ແລະ ຈຳເລີຍ ຮັບຮູ້ນຳກັນແລ້ວ ສານກໍບໍ່ຈຳເປັນຊອກຫາຫຼັກຖານ ຖ້າຫາກການຮັບຮູ້ນັ້ນບໍ່ຂັດກັບຜົນປະໂຫຍດຂອງ ລັດ, ລວມໝູ່ ຫຼື ສັງຄົມ ແລະ ກົດໝາຍ.

ໃນກໍລະນີ ຄູ່ຄວາມຫາກຮັບຮູ້ທັງໝົດ ສານກໍຈະຮຽກໂຈດ ແລະ ຈຳເລີຍ ເຂົ້າມາຊ່ອງໜ້າກັນ ເພື່ອສຶກສາອົບຮົມໄກ່ເກ່ຍ ຖ້າຕົກລົງກັນໄດ້ ຕ້ອງເຮັດບົດບັນທຶກການໄກ່ເກ່ຍ ແລ້ວອອກຄຳສັ່ງປະຕິບັດ, ຖ້າຫາກຕົກລົງກັນບໍ່ໄດ້ ຈຶ່ງໃຫ້ທຳການພິຈາລະນາຕັດສິນ ຕາມກົດໝາຍ.

**ມາດຕາ 195 (ປັບປຸງ) ກຳນົດເວລາຂອງການດຳເນີນຄະດີ**

ເມື່ອໄດ້ຮັບຄຳຮ້ອງຟ້ອງແລ້ວ ສານຕ້ອງເລີ່ມດຳເນີນຄະດີ ຕາມກຳນົດເວລາ ດັ່ງນີ້:

1. ຄະດີແພ່ງ ແລະ ຄະດີຄອບຄົວ ໃຫ້ເລີ່ມດຳເນີນຢ່າງຊ້າ ສາມສິບວັນ;
2. ຄະດີກ່ຽວກັບແຮງງານ ໃຫ້ເລີ່ມດຳເນີນຢ່າງຊ້າ ຊາວວັນ;
3. ຄະດີການຄ້າ ແລະ ຄະດີເດັກ ໃຫ້ເລີ່ມດຳເນີນຢ່າງຊ້າ ສິບຫ້າວັນ.

**ມາດຕາ 196 (ປັບປຸງ) ການຄົ້ນຄວ້າຄະດີ**

ພາຍຫຼັງ ໄດ້ຂຶ້ນຟ້ອງເປັນຄະດີແລ້ວ ປະທານສານ ຈະມອບໃຫ້ຫົວໜ້າຄະນະສານທີ່ກ່ຽວຂ້ອງ ເພື່ອມອບໃຫ້ຜູ້ພິພາກສາຜູ້ໃດໜຶ່ງ ທຳການຄົ້ນຄວ້າ ໂດຍສຸມໃສ່ປະເດັນ ດັ່ງນີ້:

1. ກຳນົດເຫດການຂອງຄະດີ;
2. ກຳນົດສິດທວງ ແລະ ເງື່ອນໄຂທີ່ພາໃຫ້ເກີດສິດທວງ;
3. ກຳນົດປະເດັນຂັດແຍ່ງ;
4. ກຳນົດ ຂໍ້ມູນ ຫຼັກຖານ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີ.

**ມາດຕາ 197 (ໃໝ່) ການໂຈະການດຳເນີນຄະດີ**

ການໂຈະການດຳເນີນຄະດີ ແມ່ນ ການຢຸດເຊົາການດຳເນີນຄະດີໄວ້ຊົ່ວຄາວ ດ້ວຍສາເຫດໃດໜຶ່ງ ດັ່ງນີ້:

1. ຄະດີ ທີ່ມີສ່ວນພົວພັນກັບການດຳເນີນຄະດີອື່ນ ຊຶ່ງຜົນການຕັດສິນຄະດີນັ້ນ ຈະມີຜົນກະທົບ ຫຼື ເປັນຜົນປະໂຫຍດໃຫ້ແກ່ການພິຈາລະນາຄະດີດັ່ງກ່າວ;
2. ຄະດີທີ່ມີ ໂຈດ ຫຼື ຈຳເລີຍ ໄດ້ເສຍຊີວິດ ຊຶ່ງຍັງບໍ່ທັນມີຜູ້ສືບຕໍ່ແທນຕົວ;
3. ໂຈດ, ຈຳເລີຍ ທີ່ເສຍຄວາມສາມາດທາງດ້ານການປະພຶດ ທີ່ຍັງບໍ່ທັນໄດ້ຮັບການແຕ່ງຕັ້ງຜູ້ປົກຄອງ;
4. ອົງການຈັດຕັ້ງ ຫຼື ວິສາຫະກິດ ຫາກຖືກໂຮມ ຫຼື ຍຸບເລີກ ທີ່ຍັງບໍ່ທັນມີຄວາມຊັດເຈນໃນການເປັນຜູ້ຕາງໜ້າ ຫຼື ຜູ້ສືບຕໍ່ແທນຕົວ;
5. ກໍລະນີອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

ຄຳສັ່ງໂຈະ ແລະ ຄຳສັ່ງສືບຕໍ່ ການດຳເນີນຄະດີ ອອກໂດຍຄະນະສານ ແລະ ມີຜົນບັງຄັບປະຕິບັດໃນທັນໃດ.

ເມື່ອສາເຫດຂອງການໂຈະ ໄດ້ຮັບການແກ້ໄຂແລ້ວ ຄະນະສານ ຕ້ອງອອກຄຳສັ່ງສືບຕໍ່ການດຳເນີນຄະດີຕາມກົດໝາຍ.

**ມາດຕາ 198 (ປັບປຸງ) ການຖອນຕົວ ແລະ ການຄ້ານຕົວ ຈາກການຄົ້ນຄວ້າຄະດີ**

ຖ້າຜູ້ພິພາກສາ ຫາກເປັນຍາດພີ່ນ້ອງ, ໝູ່ຄູ່ຮັກແພງ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດໜຶ່ງ ຕ້ອງຂໍຖອນຕົວຈາກການຄົ້ນຄວ້າຄະດີນັ້ນ.

ຖ້າຜູ້ກ່ຽວ ຫາກບໍ່ຍອມຖອນຕົວແລ້ວ ຄູ່ຄວາມຝ່າຍໃດໜຶ່ງ ກໍມີສິດສະເໜີຄ້ານຕົວຜູ້ກ່ຽວອອກຈາກການຄົ້ນຄວ້າຄະດີນັ້ນ.

**ມາດຕາ 199 ສາເຫດທີ່ພາໃຫ້ມີການຖອນຕົວ ຫຼື ຄ້ານຕົວ ຜູ້ພິພາກສາ**

ຜູ້ພິພາກສາ ຈະຕ້ອງຂໍຖອນຕົວ ຫຼື ຈະຖືກຄ້ານຕົວ ຈາກການຄົ້ນຄວ້າຄະດີ ໃນກໍລະນີ ດັ່ງນີ້:

1. ຖ້າຫາກ ໄດ້ເຂົ້າຮ່ວມ ໃນການດຳເນີນຄະດີນັ້ນກ່ອນແລ້ວ ໃນຖານະເປັນ ພະຍານ, ຜູ້ຊ່ຽວຊານ, ຜູ້ຊຳນານ, ພະນັກງານໄອຍະການປະຊາຊົນ ຫຼື ຈ່າສານ;

2. ຖ້າຫາກເປັນຍາດພີ່ນ້ອງ, ໝູ່ຄູ່ຮັກແພງຂອງຄູ່ຄວາມໃນຄະດີ;
3. ຖ້າຫາກມີຜົນປະໂຫຍດໃນຄະດີນັ້ນ ຈະແມ່ນໂດຍກົງ ຫຼື ທາງອ້ອມ ກໍຕາມ.

**ມາດຕາ 200 (ປັບປຸງ) ການພິຈາລະນາ ເມື່ອມີການຂໍຖອນຕົວ ຫຼື ຖືກຄ້ານຕົວ**

ເມື່ອມີການຂໍຖອນຕົວ ຫຼື ຖືກຄ້ານຕົວ ໃນເວລາຄົ້ນຄວ້າຄະດີ ຄະນະສານ ຕ້ອງພິຈາລະນາສາເຫດທີ່ພາໃຫ້ມີການຂໍຖອນຕົວ ຫຼື ຖືກຄ້ານຕົວດັ່ງກ່າວ ຖ້າຫາກມີເຫດຜົນ ຫົວໜ້າຄະນະສານ ຈະມອບຄະດີໃຫ້ຜູ້ພິພາກສາອື່ນ ເປັນຜູ້ທຳການຄົ້ນຄວ້າ.

**ມາດຕາ 201 (ປັບປຸງ) ການມີສ່ວນຮ່ວມໃນການຄົ້ນຄວ້າຄະດີເບື້ອງຕົ້ນ**

ຜູ້ພິພາກສາ ຕ້ອງຮຽກຄູ່ຄວາມເຂົ້າມາສານ ເພື່ອໃຫ້ຢັ້ງຢືນເຫດການ, ສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ປະເດັນຂັດແຍ່ງ, ສະເໜີບັນຊີ ຂໍ້ມູນ ຫຼັກຖານ ທັງໝົດທີ່ກ່ຽວຂ້ອງກັບຄະດີຂອງແຕ່ລະຝ່າຍ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີ ພ້ອມທັງກຳນົດເວລາໃຫ້ຄູ່ຄວາມ ນຳເອົາ ຂໍ້ມູນ ຫຼັກຖານ ທີ່ຍັງບໍ່ທັນມາຍື່ນຕໍ່ສານນັ້ນມາປະກອບເພີ່ມ.

ການມີສ່ວນຮ່ວມຂອງຄູ່ຄວາມໃນເບື້ອງຕົ້ນ ຕ້ອງເຮັດບົດບັນທຶກເປັນລາຍລັກອັກສອນ ເປັນຕົ້ນ ການນຳເອົາຂໍ້ມູນທີ່ເປັນຜົນປະໂຫຍດໃຫ້ແກ່ ຄຳຮ້ອງຟ້ອງ, ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງ ຂອງຕົນ.

**ມາດຕາ 202 (ໃໝ່) ການສ້າງແຜນການຄົ້ນຄວ້າຄະດີ**

ພາຍຫຼັງ ໂຈດ, ຈຳເລີຍ ໄດ້ຢັ້ງຢືນເຫດການ, ສິດທວງ, ປະເດັນຂັດແຍ່ງ, ສະເໜີບັນຊີ ຂໍ້ມູນ ຫຼັກຖານ ແລະ ບຸກຄົນທີສາມ ທີ່ກ່ຽວຂ້ອງກັບຄະດີຕໍ່ສານແລ້ວ ຜູ້ພິພາກສາທີ່ຮັບຜິດຊອບຄະດີ ຕ້ອງສ້າງແຜນການຄົ້ນຄວ້າຄະດີ ເພື່ອເປັນບ່ອນອີງໃນການຄົ້ນຄວ້າ, ເກັບກຳ ຂໍ້ມູນ ຫຼັກຖານ ໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

ໂຄງປະກອບ ແລະ ເນື້ອໃນແຜນການຄົ້ນຄວ້າຄະດີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 203 (ປັບປຸງ) ການກວດກາ ແລະ ເກັບກຳ ຂໍ້ມູນ ຫຼັກຖານ**

ຜູ້ພິພາກສາ ທີ່ຮັບຜິດຊອບຄະດີ ຕ້ອງກວດກາ ຂໍ້ມູນ ຫຼັກຖານ ທີ່ໂຈດ, ຈຳເລີຍ ນຳມາຍື່ນຕໍ່ສານແລ້ວ ແລະ ຂໍ້ມູນ ຫຼັກຖານ ໃດທີ່ຍັງບໍ່ທັນນຳມາຍື່ນຕໍ່ສານຕາມບັນຊີທີ່ ໂຈດ, ຈຳເລີຍ ສະເໜີຕໍ່ສານນັ້ນ.

ຜູ້ພິພາກສາ ຕ້ອງກຳນົດໃຫ້ໂຈດ ແລະ ຈຳເລີຍ ນຳເອົາ ຂໍ້ມູນ ຫຼັກຖານ ນັ້ນ ມາຍື່ນຕໍ່ສານ ໃນກຳນົດເວລາທີ່ແນ່ນອນ ຕາມແຜນການຄົ້ນຄວ້າຄະດີ. ຂໍ້ມູນ ຫຼັກຖານທີ່ ໂຈດ, ຈຳເລີຍ ບໍ່ສາມາດນຳມາຍື່ນ ຫຼື ເກັບກຳດ້ວຍຕົນເອງໄດ້ ກໍຕ້ອງສະເໜີໃຫ້ສານເກັບກຳໂດຍໜ້າທີ່.

**ມາດຕາ 204 (ໃໝ່) ການພິສູດຂໍ້ມູນ ຫຼັກຖານ**

ຂໍ້ມູນ ຫຼັກຖານ ແຕ່ລະຢ່າງ ທີ່ ໂຈດ ແລະ ຈຳເລີຍ ນຳມາຍື່ນຕໍ່ສານ ຫຼື ສານ ລົງເກັບກຳດ້ວຍຕົນເອງນັ້ນ ຕ້ອງໄດ້ຮັບການພິສູດ ໂດຍແຈ້ງໃຫ້ຄູ່ຄວາມແຕ່ລະຝ່າຍຮັບຊາບ ເພື່ອໃຫ້ຮັບຮູ້ ຫຼື ປະຕິເສດຕໍ່ ຂໍ້ມູນ ຫຼັກຖານ ດັ່ງກ່າວ.

ໃນກໍລະນີ ຄູ່ຄວາມແຕ່ລະຝ່າຍຮັບຮູ້ຕໍ່ ຂໍ້ມູນ ຫຼັກຖານ ກໍຖືວ່າຫຼັກຖານດັ່ງກ່າວເຊື່ອຖືໄດ້ທາງດ້ານກົດໝາຍ, ໃນກໍລະນີມີການປະຕິເສດບໍ່ຮັບຮູ້ ຕ້ອງໃຫ້ເຫດຜົນ ແລະ ນຳຂໍ້ມູນ ຫຼັກຖານ ອື່ນມາຊີ້ແຈງ. ຖ້າໂຈດ, ຈຳເລີຍ ຫາກບໍ່ເປັນເອກະພາບກັນ ຕ້ອງໄດ້ທຳການຊ້ອງໜ້າ. ຜ່ານການຊ້ອງໜ້າແລ້ວ ຫາກຍັງບໍ່ທັນມີຄວາມເອກະພາບໃນປະເດັນໃດໜຶ່ງ ເປັນຕົ້ນ ຕົວໜັງສື, ລາຍເຊັນ, ໂປ້ມື, ຕົວເລກ ຫຼື ບັນຫາທາງວິທະຍາສາດ ຕ້ອງໄດ້ແຕ່ງຕັ້ງ ຜູ້ຊ່ຽວຊານ, ຜູ້ຊຳນານ ຫຼື ສະເໜີພາກສ່ວນທີ່ກ່ຽວຂ້ອງ ທຳການພິສູດ.

ຜົນການພິສູດຂອງ ຜູ້ຊ່ຽວຊານ, ຜູ້ຊຳນານ ທີ່ສິ້ນສຸດແລ້ວນັ້ນ ຖືວ່າເປັນຫຼັກຖານທີ່ຖືກຕ້ອງຕາມກົດໝາຍ ແລະ ຢັ້ງຢືນຂໍ້ເທັດຈິງຂອງຄະດີ.

**ມາດຕາ 205 (ປັບປຸງ) ການກວດກາ ຕີລາຄາຫຼັກຖານ**

ພາຍຫຼັງ ໄດ້ເອົາຄໍາໃຫ້ການຂອງ ຄູ່ຄວາມ, ພະຍານ ແລະ ເກັບກໍາຂໍ້ມູນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງແລ້ວ ຜູ້ພິພາກສາຕ້ອງ ໄຈ້ແຍກ, ຊັ່ງຊາຕີລາຄາ ຂໍ້ມູນດັ່ງກ່າວ ໃຫ້ເປັນຫຼັກຖານ ເພື່ອກໍານົດເຫດການຂອງຄະດີ ໃຫ້ຖືກຕ້ອງຕາມຄວາມເປັນຈິງ ແລະ ສາມາດວາງມາດຕາຂອງກົດໝາຍທີ່ກ່ຽວຂ້ອງໃສ່.

ການກວດກາ ຕີລາຄາຫຼັກຖານ ຕ້ອງດໍາເນີນເປັນແຕ່ລະອັນ, ຫຼັກຖານໃດ ທີ່ເປັນພື້ນຖານ ຫຼື ບໍ່ເປັນພື້ນຖານໃນຄະດີນັ້ນ ກໍໃຫ້ວິນິດໄສລົງໃສ່ຄໍາຕັດສິນຂອງສານ.

**ມາດຕາ 206 (ໃໝ່) ການຢັ້ງຢືນຄວາມຄົບຖ້ວນຂອງຫຼັກຖານ**

ຜູ້ພິພາກສາ ທີ່ຮັບຜິດຊອບສໍານວນຄະດີ ຫາກໄດ້ກວດກາ ຕີລາຄາຫຼັກຖານ ແລະ ເຫັນວ່າ ຂໍ້ມູນຫຼັກຖານ ໄດ້ປະກອບຄົບຖ້ວນຕາມບັນຊີທີ່ ໂຈດ ແລະ ຈໍາເລີຍ ສະເໜີຕໍ່ສານໃນເບື້ອງຕົ້ນນັ້ນແລ້ວ ຜູ້ພິພາກສາຕ້ອງໃຫ້ ໂຈດ, ຈໍາເລີຍ ຢັ້ງຢືນເປັນລາຍລັກອັກສອນ ກ່ອນສະຫຼຸບຜົນການຄົ້ນຄວ້າຄະດີ ນໍາອອກພິຈາລະນາຕັດສິນໃນທີ່ປະຊຸມສານ.

**ມາດຕາ 207 (ປັບປຸງ) ການສະຫຼຸບຜົນການຄົ້ນຄວ້າຄະດີ**

ພາຍຫຼັງປະກອບ ຂໍ້ມູນ ຫຼັກຖານ ຢ່າງຄົບຖ້ວນ, ຮອບດ້ານ ແລະ ໄກ່ເກ່ຍຄູ່ຄວາມແລ້ວ ຜູ້ພິພາກສາທີ່ຮັບຜິດຊອບຄະດີ ຕ້ອງເຮັດບົດສະຫຼຸບຜົນການຄົ້ນຄວ້າຄະດີ ຢ່າງເປັນລາຍລັກອັກສອນ ໂດຍສັງລວມເອົາ ຂັ້ນຕອນຂອງການດໍາເນີນ, ເຫດການຂອງຄະດີ, ສິດທວງ, ປະເດັນຂັດແຍ່ງໃນຄະດີ, ຫຼັກຖານທີ່ປະກອບໃນແຕ່ລະປະເດັນຂັດແຍ່ງ ເພື່ອເປັນບ່ອນອີງໃຫ້ຄະນະສານພິຈາລະນາຕົກລົງ ຕາມກໍລະນີ ດັ່ງນີ້:

1. ນໍາເອົາຄະດີ ອອກໄຕ່ສວນໃນທີ່ປະຊຸມສານ ຖ້າເຫັນວ່າມີ ຂໍ້ມູນ ຫຼັກຖານ ຄົບຖ້ວນ, ຮອບດ້ານ ແລະ ພຽງພໍແລ້ວ;
2. ມອບໃຫ້ຜູ້ຮັບຜິດຊອບຄະດີນັ້ນ ນໍາໄປຄົ້ນຄວ້າ ແລະ ປະກອບຫຼັກຖານຕື່ມ ຖ້າເຫັນວ່າ ຂໍ້ມູນຫຼັກຖານ ຍັງບໍ່ທັນ ຄົບຖ້ວນ, ຮອບດ້ານ ແລະ ພຽງພໍ;
3. ຊັດມ້ຽນຄະດີ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 217 ຂອງກົດໝາຍສະບັບນີ້.

ສໍາລັບຄະດີ ທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຕ້ອງສົ່ງບົດສະຫຼຸບຜົນການຄົ້ນຄວ້າຄະດີ ໃຫ້ຫົວໜ້າອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ.

## ໝວດທີ 6
## ການໄກ່ເກ່ຍຄູ່ຄວາມ

**ມາດຕາ 208 (ປັບປຸງ) ການໄກ່ເກ່ຍຄູ່ຄວາມ**

ຂໍ້ຂັດແຍ່ງເລັກນ້ອຍ, ບໍ່ມີມູນຄ່າສູງ ເຊັ່ນ ສາຍພົວພັນຄອບຄົວ, ກໍາມະສິດກ່ຽວກັບສັດລ້ຽງ, ຂໍທາງຜ່ານ ແລະ ຂໍ້ຂັດແຍ່ງ ທີ່ໄດ້ກໍານົດໄວ້ມາດຕາ 212 ຂອງກົດໝາຍສະບັບນີ້ ຕ້ອງໃຫ້ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ຫຼື ພາກສ່ວນທີ່ກ່ຽວຂ້ອງ ທໍາການໄກ່ເກ່ຍເສຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ ກໍໃຫ້ຫ້ອງການຍຸຕິທໍາຂັ້ນເມືອງ ທໍາການສຶກສາອົບຮົມ, ປະນີປະນອມ ແລະ ໄກ່ເກ່ຍຄູ່ຄວາມຕື່ມອີກ ຕາມລະບຽບການ ຖ້າຫາກໄກ່ເກ່ຍກັນບໍ່ໄດ້ ຈຶ່ງໃຫ້ສານພິຈາລະນາຕາມກົດໝາຍ ຖ້າຫາກມີຄໍາຮ້ອງຟ້ອງ. ເມື່ອຄໍາຮ້ອງຟ້ອງໄດ້ຍື່ນຂຶ້ນສານແລ້ວ ຄະນະສານຈະທໍາການໄກ່ເກ່ຍຄູ່ຄວາມຕື່ມອີກກໍໄດ້.

ສໍາລັບຂໍ້ຂັດແຍ່ງ ທີ່ມີມູນຄ່າສູງນັ້ນ ຄູ່ຄວາມກໍມີສິດສະເໜີ ໃຫ້ທໍາການໄກ່ເກ່ຍ ຕາມທີ່ໄດ້ກໍານົດໄວ້. ໃນມາດຕານີ້ ຫຼື ຮ້ອງຟ້ອງຕໍ່ສານໂດຍກົງກໍໄດ້.

**ມາດຕາ 209 ການໄກ່ເກ່ຍຢູ່ສານ**

ສານ ສາມາດໄກ່ເກ່ຍຄູ່ຄວາມໄດ້ ຕາມການສະເໜີຂອງ ຄູ່ຄວາມຝ່າຍໃດໜຶ່ງ ຫຼື ຕາມຄໍາເຫັນຂອງສານເອງ ເມື່ອເຫັນວ່າ ຈະເປັນຜົນປະໂຫຍດແກ່ຄູ່ຄວາມ ແລະ ການດໍາເນີນຄະດີ.

ການໄກ່ເກ່ຍຢູ່ສານ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຜູ້ພິພາກສາ ຫຼື ຄະນະສານ ຕ້ອງວາງຕົວເປັນກາງ;

2. ການຕົກລົງກັນ ຕ້ອງເກີດຈາກຄວາມສະໝັກໃຈຂອງຄູ່ຄວາມ, ປາສະຈາກການບັງຄັບ, ນາບຂູ່ ຫຼື ດ້ວຍຮູບການໃດໜຶ່ງ ທີ່ເຮັດໃຫ້ຄູ່ຄວາມເຂົ້າໃຈຜິດ ກ່ຽວກັບການຕົກລົງບັນຫາທີ່ກ່ຽວຂ້ອງ;

3. ຜູ້ພິພາກສາ ຫຼື ຄະນະສານ ຕ້ອງເຄົາລົບການຕັດສິນໃຈຂອງຄູ່ຄວາມ ທີ່ບໍ່ຂັດກັບຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ກົດໝາຍ;

4. ການຕົກລົງຂອງຄູ່ຄວາມ ໃນການໄກ່ເກ່ຍ ຕ້ອງເຮັດບົດບັນທຶກ ແລະ ລົງລາຍເຊັນ ໃນທັນໃດ.

**ມາດຕາ 210 (ປັບປຸງ) ຜູ້ເຂົ້າຮ່ວມໃນການໄກ່ເກ່ຍຢູ່ສານ**

ໃນການໄກ່ເກ່ຍຢູ່ສານ ຕ້ອງມີ ຜູ້ພິພາກສາ, ຈ່າສານ ຫຼື ພະນັກງານວິຊາການ, ໂຈດ, ຈໍາເລີຍ ຫຼື ຜູ້ຕາງໜ້າຄູ່ຄວາມ ໃນຄະດີເຂົ້າຮ່ວມ. ໃນກໍລະນີ ຈໍາເປັນ ສານອາດຈະເຊີນຜູ້ຕາງໜ້າອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ, ຜູ້ຕາງໜ້າອົງການຈັດຕັ້ງ ຫຼື ຜູ້ກ່ຽວຂ້ອງອື່ນ ເຂົ້າຮ່ວມນໍາກໍໄດ້.

**ມາດຕາ 211 ຄະດີທີ່ບໍ່ອະນຸຍາດໃຫ້ໄກ່ເກ່ຍ**

ຄະດີທີ່ບໍ່ອະນຸຍາດ ໃຫ້ສານນໍາມາໄກ່ເກ່ຍ ມີ ດັ່ງນີ້:

1. ການຮ້ອງຟ້ອງ ທວງເອົາຊັບສົມບັດຂອງລັດ ຫຼື ຂັດກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ;

2. ການຮ້ອງຟ້ອງ ທວງເອົາຄ່າເສຍຫາຍ ຫຼື ຊັບສິ່ງຂອງ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ເປົ້າໝາຍຂັດແຍ່ງ ບໍ່ແມ່ນກໍາມະສິດຂອງຄູ່ຄວາມໃນຄະດີ;

4. ຂໍ້ຂັດແຍ່ງເກີດຂຶ້ນ ຈາກການລະເມີດສັນຍາ ທີ່ເປັນໂມຄະເດັດຂາດ;

5. ຄະດີທີ່ພົວພັນເຖິງ ສິດ ແລະ ຜົນປະໂຫຍດ ຂອງບຸກຄົນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

**ມາດຕາ 212 (ປັບປຸງ) ຄະດີທີ່ຈໍາເປັນຕ້ອງໃຫ້ມີການໄກ່ເກ່ຍ**

ຄະດີທີ່ຈໍາເປັນຕ້ອງໃຫ້ມີການໄກ່ເກ່ຍ ກ່ອນການຍື່ນຄໍາຮ້ອງຟ້ອງຕໍ່ສານ ມີ ດັ່ງນີ້:

1. ຄະດີກ່ຽວກັບ ກໍາມະສິດສັດ, ການຂໍທາງຜ່ານ, ສາຍພົວເມຍ ແລະ ຄະດີບໍ່ມີມູນຄ່າສູງ;

2. ຄະດີກ່ຽວກັບ ສິດນໍາໃຊ້ທີ່ດິນ, ມູນມໍຣະດົກ, ຄະດີການຄ້າ ແລະ ຄະດີເດັກ;

3. ຄະດີກ່ຽວກັບ ແຮງງານ ແລະ ສາຍພົວພັນທາງດ້ານບໍລິຫານ.

ເມື່ອທໍາການໄກ່ເກ່ຍຄູ່ຄວາມແລ້ວ ແຕ່ບໍ່ສາມາດຕົກລົງກັນໄດ້ ຫຼື ຕົກລົງກັນໄດ້ສ່ວນໃດໜຶ່ງ ຕ້ອງເຮັດບົດບັນທຶກແລ້ວ ຄັດຕິດບົດບັນທຶກດັ່ງກ່າວໄວ້ໃນສໍານວນຄະດີ.

**ມາດຕາ 213 (ປັບປຸງ) ບົດບັນທຶກການໄກ່ເກ່ຍ**

ການໄກ່ເກ່ຍຄະດີ ຢູ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ຫ້ອງການຍຸຕິທຳຂັ້ນເມືອງ, ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ການໄກ່ເກ່ຍຄະດີຢູ່ສານ ຕ້ອງເຮັດບົດບັນທຶກ ແລະ ໃຫ້ຄູ່ຄວາມນັ້ນ ລົງລາຍເຊັນ ແລະ ແປະໂປ້ມືໄວ້ເປັນຫຼັກຖານ.

ບົດບັນທຶກການໄກ່ເກ່ຍ ຢູ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ຫ້ອງການຍຸຕິທຳຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຫາກບໍ່ສາມາດປະຕິບັດໄດ້ ຄູ່ຄວາມສາມາດນຳເອົາຄະດີດັ່ງກ່າວ ມາຮ້ອງຟ້ອງຕໍ່ສານ ເພື່ອດຳເນີນຕາມຂັ້ນຕອນຂອງກົດໝາຍ.

**ມາດຕາ 214 (ປັບປຸງ) ຜົນການໄກ່ເກ່ຍຄູ່ຄວາມ**

ບົດບັນທຶກຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ຫ້ອງການຍຸຕິທຳຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈະມີຜົນໃຊ້ໄດ້ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ມາດຕາ 215 (ປັບປຸງ) ຜົນການໄກ່ເກ່ຍຢູ່ສານ**

ຫົວໜ້າຄະນະສານ ຕ້ອງອອກຄຳສັ່ງປະຕິບັດຜົນການໄກ່ເກ່ຍຢູ່ສານ ພາຍໃນເວລາ ຫ້າວັນ ນັບແຕ່ວັນເຮັດບົດບັນທຶກການໄກ່ເກ່ຍເປັນຕົ້ນໄປ. ຄຳສັ່ງປະຕິບັດດັ່ງກ່າວ ມີຜົນບັງຄັບຄືກັນກັບຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ.

## ໝວດທີ 7
## ການກະກຽມການໄຕ່ສວນຄະດີຂອງສານຂັ້ນຕົ້ນ

**ມາດຕາ 216 ການກະກຽມການໄຕ່ສວນຄະດີ**

ໃນການກະກຽມເປີດປະຊຸມສານ ຕ້ອງກວດເບິ່ງວ່າຄະດີນັ້ນ ມີຫຼັກຖານພຽງພໍແລ້ວ ຫຼື ບໍ່, ມີຄວາມພ້ອມຈະນຳອອກຕັດສິນໄດ້ ຫຼື ບໍ່, ຄົ້ນຄວ້າ ແລະ ກວດເບິ່ງວ່າ ຄະນະສານທີ່ປະກອບຂຶ້ນ ເພື່ອທຳການຕັດສິນນັ້ນມີຜູ້ໃດຈະຂໍຖອນຕົວ. ນອກຈາກນີ້ ຖ້າຫາກເຫັນວ່າຄະດີຍັງມີສ່ວນກ່ຽວພັນກັບບຸກຄົນທີສາມແລ້ວສານຈຳເປັນຕ້ອງໄດ້ນຳຕົວບຸກຄົນດັ່ງກ່າວ ເຂົ້າມາດຳເນີນດັ່ງດຽວກັນກັບ ຄູ່ຄວາມໃນຄະດີ.

ການໄຕ່ສວນຄະດີ ໃນທີ່ປະຊຸມສານ ຕ້ອງໃຫ້ມີການເຂົ້າຮ່ວມຂອງຄູ່ຄວາມໃນຄະດີ, ເວັ້ນເສຍແຕ່ຄະດີກ່ຽວກັບ ຜູ້ຫາຍສາບສູນ ຫຼື ຄົນບ້າເສຍຈິດ ຊຶ່ງບໍ່ຈຳເປັນຈະໃຫ້ເຂົ້າມາສານ. ສຳລັບຄະດີກ່ຽວກັບເດັກນັ້ນຍັງຕ້ອງໃຫ້ ພໍ່, ແມ່ ຫຼື ຜູ້ປົກຄອງເດັກ ເຂົ້າຮ່ວມນຳອີກດ້ວຍ.

ກ່ອນການເປີດປະຊຸມສານນັ້ນ ຈ່າສານ ຕ້ອງໄດ້ກວດເບິ່ງວ່າຄູ່ຄວາມໃນຄະດີ, ບຸກຄົນທີສາມ, ພະຍານ ແລະ ບຸກຄົນອື່ນ ທີ່ຖືກຮຽກນັ້ນ ມາຄົບຖ້ວນແລ້ວ ຫຼື ບໍ່, ນອກຈາກນີ້ ຈ່າສານ ຍັງຕ້ອງໄດ້ປະກາດລະບຽບການຂອງການປະຊຸມສານ ໃຫ້ບຸກຄົນເຫຼົ່ານີ້ປະຕິບັດ.

ລະບຽບການລວມຂອງການປະຊຸມສານ ໄດ້ກຳນົດໄວ້ໃນມາດຕາ 232 ຂອງກົດໝາຍສະບັບນີ້.

**ມາດຕາ 217 ການຊັດມ້ຽນຄະດີ**

ການຊັດມ້ຽນຄະດີ ແມ່ນ ການຢຸດເຊົາການດຳເນີນຄະດີ ເນື່ອງຈາກວ່າ ຜ່ານການດຳເນີນຄະດີ ເຫັນວ່າໂຈດໃນຄະດີນັ້ນ ບໍ່ມີສິດຮ້ອງຟ້ອງກ່ຽວກັບບັນຫາທີ່ກ່ຽວຂ້ອງ, ຄະດີທີ່ທຳການຮ້ອງຟ້ອງຢູ່ນັ້ນ ໄດ້ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດມາກ່ອນແລ້ວ ຫຼື ຄະດີຊຶ່ງໂຈດໄດ້ຖອນຄຳຮ້ອງຟ້ອງແລ້ວ.

ໃນການຊັດມ້ຽນຄະດີນັ້ນ ໃຫ້ອອກເປັນຄຳສັ່ງຂອງຄະນະສານ.

ຄະດີທີ່ຖືກຊັດມ້ຽນໄວ້ແລ້ວນັ້ນ ຈະບໍ່ຖືກນຳມາພິຈາລະນາຄືນໃໝ່ອີກ.

**ມາດຕາ 218 (ໃໝ່) ຄະດີທີ່ໂຈດບໍ່ມີສິດຮ້ອງຟ້ອງ**

ຄະດີທີ່ໂຈດບໍ່ມີສິດຮ້ອງຟ້ອງ ມີ ດັ່ງນີ້:

1. ໂຈດບໍ່ມີກຳມະສິດໃນຊັບ ທີ່ເປັນເປົ້າໝາຍການຮ້ອງຟ້ອງ;
2. ສິດທວງ ຍັງບໍ່ທັນໄດ້ເກີດຂຶ້ນ;
3. ສິດ ແລະ ຜົນປະໂຫຍດຂອງໂຈດ ບໍ່ໄດ້ຖືກລະເມີດ;
4. ກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 219 ການບໍ່ນຳເອົາຄະດີອອກພິຈາລະນາ ໃນທີ່ປະຊຸມສານ**

ຖ້າຫາກ ຜູ້ຮັບຜິດຊອບຄົ້ນຄວ້າຄະດີ ຍັງບໍ່ທັນເກັບກຳ ຂໍ້ມູນ ຫຼັກຖານ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພຽງພໍ ເຮັດໃຫ້ຄະດີຍັງບໍ່ທັນຈະແຈ້ງນັ້ນ ຫົວໜ້າຄະນະສານ ກໍຈະຕົກລົງບໍ່ນຳເອົາຄະດີນັ້ນອອກພິຈາລະນາ ໃນທີ່ປະຊຸມສານ ແລະ ຕ້ອງແນະນຳໃຫ້ຜູ້ຮັບຜິດຊອບຄົ້ນຄວ້າຄະດີ ສືບຕໍ່ເກັບກຳ ຂໍ້ມູນ ຫຼັກຖານ ຕື່ມ ຕາມການຕົກລົງຂອງໝູ່ຄະນະ.

**ມາດຕາ 220 (ປັບປຸງ) ການຕົກລົງນຳເອົາຄະດີ ອອກພິຈາລະນາໃນທີ່ປະຊຸມສານ**

ເມື່ອເຫັນວ່າມີ ຂໍ້ມູນ ຫຼັກຖານ ໃນສຳນວນຄະດີຄົບຖ້ວນ, ພຽງພໍ ທີ່ສາມາດເປັນພື້ນຖານໃຫ້ແກ່ການກຳນົດເຫດການຂອງຄະດີຢ່າງຈະແຈ້ງແລ້ວ ຫົວໜ້າຄະນະສານ ກໍຈະຕົກລົງນຳເອົາຄະດີອອກພິຈາລະນາ ໄຕ່ສວນໃນທີ່ປະຊຸມສານ ແລະ ກຳນົດຜູ້ເຂົ້າຮ່ວມ, ວັນເວລາປະຊຸມສານ ແລະ ມອບໝາຍໃຫ້ຜູ້ພິພາກສາ ທີ່ເປັນຄະນະສານຕັດສິນກະກຽມການໄຕ່ສວນ ໃນທີ່ປະຊຸມສານ.

ການຕົກລົງນຳເອົາຄະດີອອກພິຈາລະນາໄຕ່ສວນ ໃນທີ່ປະຊຸມສານ ຕ້ອງເຮັດເປັນຂໍ້ຕົກລົງຂອງຫົວໜ້າຄະນະສານ ກ່ອນວັນເປີດປະຊຸມສານ.

## ພາກທີ XI

## ການປະຊຸມສານ

### ໝວດທີ 1

### ຂໍ້ບັນຍັດທົ່ວໄປກ່ຽວກັບການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ

**ມາດຕາ 221 (ປັບປຸງ) ການໄຕ່ສວນຄະດີ**

ການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ ຕ້ອງດຳເນີນດ້ວຍ ການຖາມ, ການຟັງ ຫຼື ການສະເໜີ ຂອງຜູ້ເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອເປັນການກວດກາ, ພິສູດ ຂໍ້ມູນ ຫຼັກຖານ ທີ່ເປັນປະເດັນຂັດແຍ່ງ ແລະ ປະເດັນອື່ນທີ່ກ່ຽວຂ້ອງໃນຄະດີ.

ການໄຕ່ສວນຄະດີ ໃນທີ່ປະຊຸມສານຂັ້ນຕົ້ນ ຕ້ອງເຮັດໂດຍກົງ, ທາງປາກເປົ່າ, ຢ່າງເປີດເຜີຍ ຫຼື ປິດລັບ ໃນບາງກໍລະນີ, ມີການໂຕ້ຖຽງ, ເຮັດຢ່າງຕໍ່ເນື່ອງກັນ, ເປັນແຕ່ລະຄະດີ ແລະ ໂດຍບໍ່ມີການສັບປ່ຽນຄະນະສານ; ຖ້າມີການສັບປ່ຽນຄະນະສານນັ້ນ ຕ້ອງດຳເນີນການໄຕ່ສວນຄືນໃໝ່.

ປະທານຄະນະສານ ມີໜ້າທີ່ນຳພາການໄຕ່ສວນຄະດີ ຢ່າງເປັນກາງໃນທີ່ປະຊຸມສານ.

**ມາດຕາ 222 (ປັບປຸງ) ການເຂົ້າຮ່ວມຂອງຄູ່ຄວາມ ແລະ ບຸກຄົນທີສາມໃນທີ່ປະຊຸມສານ**

ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຕ້ອງເຂົ້າຮ່ວມໃນການໄຕ່ສວນຄະດີ ໃນທີ່ປະຊຸມສານ ຕາມການຮຽກຂອງສານ, ຖ້າ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ບໍ່ສາມາດເຂົ້າຮ່ວມປະຊຸມສານ ໂດຍມີເຫດຜົນພຽງພໍ ສານອາດຈະເລື່ອນການໄຕ່ສວນຄະດີ, ໃນກໍລະນີ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າຮ່ວມປະຊຸມສານ ຕາມການຮຽກຂອງສານເຖິງສາມຄັ້ງ ໂດຍບໍ່ມີເຫດຜົນພຽງພໍ ສານສາມາດອອກຄຳສັ່ງ

ຊັດມ້ຽນ ຫຼື ຕັດສິນລັບຫຼັງ ຕາມແຕ່ກໍລະນີ. ການຕັດສິນລັບຫຼັງ ໃນກໍລະນີນີ້ ໃຫ້ຖືວ່າເປັນການຊ້ອງໜ້າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 231 ຂອງກົດໝາຍສະບັບນີ້.

**ມາດຕາ 223 ການດຳເນີນການໄຕ່ສວນ ໂດຍບໍ່ມີການເຂົ້າຮ່ວມຂອງຄູ່ຄວາມ**

ການໄຕ່ສວນ ໂດຍບໍ່ມີການເຂົ້າຮ່ວມຂອງ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ສາມາດດຳເນີນໄດ້ ໃນກໍລະນີ ດັ່ງນີ້:

1. ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ສະເໜີໃຫ້ສານດຳເນີນການໄຕ່ສວນເລີຍ;
2. ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ແຕ່ງຕັ້ງ ຫຼື ມອບສິດໃຫ້ຜູ້ຕາງໜ້າຂອງຕົນ ເຂົ້າຮ່ວມແທນ;
3. ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ຮັບໝາຍຮຽກແລ້ວ ແຕ່ບໍ່ເຂົ້າຮ່ວມ ໂດຍບໍ່ຮູ້ເຫດຜົນ.

**ມາດຕາ 224 ການເຂົ້າຮ່ວມຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ**

ທະນາຍຄວາມ ສາມາດເຂົ້າຮ່ວມໃນການໄຕ່ສວນ ຕາມການຮຽກຂອງສານ ຫຼື ຕາມການມອບໝາຍ ຂອງຄູ່ຄວາມ. ການບໍ່ເຂົ້າຮ່ວມຂອງທະນາຍຄວາມ ຈະບໍ່ເປັນອຸປະສັກຕໍ່ການໄຕ່ສວນ ຖ້າວ່າ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ໄດ້ເຂົ້າຮ່ວມປະຊຸມສານ.

ຜູ້ປົກຄອງຂອງເດັກ ຫຼື ຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຕ້ອງເຂົ້າຮ່ວມການໄຕ່ສວນ ໃນຖານະຜູ້ປົກປ້ອງ. ຖ້າຜູ້ປົກປ້ອງຫາກບໍ່ສາມາດເຂົ້າຮ່ວມໄດ້ ກໍຈະເປັນສາເຫດ ໃຫ້ສານເລື່ອນການໄຕ່ສວນ.

**ມາດຕາ 225 (ປັບປຸງ) ການເຂົ້າຮ່ວມຂອງພະຍານ**

ພະຍານ ມີພັນທະເຂົ້າຮ່ວມປະຊຸມສານ ຕາມການຮຽກ ຫຼື ການເຊີນຂອງສານ ເພື່ອໃຫ້ການຊີ້ແຈງ ລາຍລະອຽດຕໍ່ທີ່ປະຊຸມສານ, ໃນກໍລະນີພະຍານບໍ່ສາມາດເຂົ້າຮ່ວມໄດ້ ແຕ່ບັນຫາດັ່ງກ່າວເຄີຍໄດ້ໃຫ້ການ ຫຼື ໄດ້ສົ່ງຄຳໃຫ້ການເປັນລາຍລັກອັກສອນຕໍ່ສານແລ້ວ ຄະນະສານຕ້ອງນຳເອົາຄຳໃຫ້ການດັ່ງກ່າວຂອງພະຍານນັ້ນ ມາແຈ້ງຕໍ່ທີ່ປະຊຸມສານ.

ເມື່ອພະຍານ ບໍ່ສາມາດເຂົ້າຮ່ວມປະຊຸມສານ ຄະນະສານ ສາມາດພິຈາລະນາ ສືບຕໍ່ການໄຕ່ສວນ ຫຼື ເລື່ອນການໄຕ່ສວນ ໃນກໍລະນີພະຍານນັ້ນ ຫາກມີຄວາມສຳຄັນຕໍ່ຄະດີ.

**ມາດຕາ 226 ການແຍກການໄຕ່ສວນພະຍານ**

ບົນພື້ນຖານການຮ້ອງຂໍຂອງຄູ່ຄວາມ ຫຼື ຕາມຄຳເຫັນຂອງຄະນະສານຕັດສິນ ທີ່ເຫັນວ່າເປັນຜົນປະໂຫຍດຕໍ່ຮູບຄະດີ ຄະນະສານ ອາດຈະພິຈາລະນາ ແຍກການໄຕ່ສວນພະຍານ ເພື່ອເຂົ້າມາໃຫ້ການເປັນແຕ່ລະບຸກຄົນກໍໄດ້.

ເມື່ອໃຫ້ການສິ້ນສຸດແລ້ວ ພະຍານດັ່ງກ່າວ ກໍສາມາດນັ່ງຢູ່ໃນຫ້ອງປະຊຸມສານນັ້ນ, ເມື່ອມີຄວາມຈຳເປັນ ຜູ້ກ່ຽວອາດຈະໃຫ້ການເພີ່ມກ່ຽວກັບບັນຫາໃດໜຶ່ງອີກ ຕໍ່ຄະນະສານ.

**ມາດຕາ 227 (ປັບປຸງ) ການເຂົ້າຮ່ວມຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຫຼື ຜູ້ແປພາສາ**

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຫຼື ຜູ້ແປພາສາ ຕ້ອງເຂົ້າຮ່ວມປະຊຸມສານ ຕາມໝາຍເຊີນຂອງສານ ເພື່ອໃຫ້ຄຳເຫັນຊີ້ແຈງທາງດ້ານວິຊາການ ໃນສາຂາອາຊີບ ຫຼື ປະສົບການທີ່ກ່ຽວຂ້ອງ. ຖ້າຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ບໍ່ສາມາດເຂົ້າຮ່ວມປະຊຸມສານ ຄະນະສານສາມາດ ເປີດ ຫຼື ເລື່ອນ ການໄຕ່ສວນຄະດີ ໂດຍນຳເອົາຄຳເຫັນທີ່ເປັນລາຍລັກອັກສອນຂອງຜູ້ກ່ຽວ ມາແຈ້ງຕໍ່ທີ່ປະຊຸມສານ.

ຜູ້ແປພາສາ ຕ້ອງເຂົ້າຮ່ວມປະຊຸມສານ ເພື່ອປະຕິບັດໜ້າທີ່ ຕາມການແຕ່ງຕັ້ງ. ຖ້າຜູ້ແປພາສາ ບໍ່ສາມາດເຂົ້າຮ່ວມໃນທີ່ປະຊຸມສານໄດ້ ຄະນະສານຕ້ອງເລື່ອນການໄຕ່ສວນໃນທີ່ປະຊຸມສານ.

**ມາດຕາ 228 (ປັບປຸງ) ການເຂົ້າຮ່ວມຂອງອົງການໄອຍະການປະຊາຊົນ**

ຫົວໜ້າອົງການໄອຍະການປະຊາຊົນ ຫຼື ພະນັກງານໄອຍະການປະຊາຊົນທີ່ຖືກແຕ່ງຕັ້ງຈາກຫົວໜ້າອົງການໄອຍະການປະຊາຊົນ ເຂົ້າຮ່ວມປະຊຸມສານຂັ້ນຂອງຕົນ ໃນຄະດີທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ. ຖ້າຫົວໜ້າອົງການໄອຍະການປະຊາຊົນ ຫຼື ພະນັກງານໄອຍະການປະຊາຊົນ ທີ່ເຂົ້າຮ່ວມຫາກຖືກຄ້ານຕົວ ຫຼື ບໍ່ສາມາດເຂົ້າຮ່ວມໄດ້ ສານອາດເລື່ອນການໄຕ່ສວນ ຫຼື ສືບຕໍ່ການໄຕ່ສວນ ຕາມແຕ່ລະກໍລະນີ.

**ມາດຕາ 229 ການເຂົ້າຮ່ວມຂອງອົງການຈັດຕັ້ງ ແລະ ປະຊາຊົນ**

ອົງການຈັດຕັ້ງທີ່ກ່ຽວຂ້ອງ ສາມາດແຕ່ງຕັ້ງຜູ້ຕາງໜ້າເຂົ້າຮ່ວມການໄຕ່ສວນຄະດີ ໃນທີ່ປະຊຸມສານ ເພື່ອສັງເກດການ ຫຼື ມີຄຳເຫັນຕໍ່ທີ່ປະຊຸມສານ ໃນກໍລະນີຄະດີ ທີ່ພົວພັນກັບການຈັດຕັ້ງ ຫຼື ພະນັກງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

ປະຊາຊົນທຸກຄົນ ສາມາດເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອຮັບຟັງ ແລະ ສັງເກດການໄຕ່ສວນຄະດີ ໃນທີ່ປະຊຸມສານ.

ການບໍ່ເຂົ້າຮ່ວມຂອງ ອົງການຈັດຕັ້ງ ຫຼື ປະຊາຊົນ ຈະບໍ່ເປັນອຸປະສັກຕໍ່ການໄຕ່ສວນຄະດີ.

**ມາດຕາ 230 ການໂຈະການໄຕ່ສວນຄະດີ**

ການໂຈະການໄຕ່ສວນຄະດີ ແມ່ນ ການຢຸດການປະຊຸມສານໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ ທີ່ເປັນອຸປະສັກຕໍ່ການໄຕ່ສວນຄະດີນັ້ນ.

ການໄຕ່ສວນຄະດີໃນທີ່ປະຊຸມສານ ອາດຈະໂຈະໄວ້ ໃນກໍລະນີ ຄູ່ຄວາມຝ່າຍໃດໜຶ່ງ ຫາກໄດ້ສູນເສຍຄວາມສາມາດທາງດ້ານການປະພຶດ ຫຼື ຖືກເຈັບເປັນຢ່າງກະທັນຫັນ, ຖ້າວ່າຄູ່ຄວາມຝ່າຍໃດໜຶ່ງຫາກໄດ້ເສຍຊີວິດ, ອົງການຈັດຕັ້ງ ຫຼື ວິສາຫະກິດ ຫາກໄດ້ຖືກຍຸບເລີກໂດຍ ຄູ່ຄວາມຝ່າຍນັ້ນ, ອົງການຈັດຕັ້ງ ຫຼື ວິສາຫະກິດນັ້ນ ຍັງມີຜູ້ສືບທອດ ສິດ ແລະ ພັນທະ ຢູ່ ຫຼື ຖ້າຫາກວ່າມີຄວາມຈຳເປັນຕ້ອງລໍຖ້າໃຫ້ມີການພິຈາລະນາຄະດີອື່ນ ເປັນຕົ້ນ ຄະດີທີ່ມີການຮ້ອງຟ້ອງທາງອາຍາ ຊຶ່ງຜົນການຕັດສີນຄະດີນັ້ນ ຈະມີຜົນກະທົບ ຫຼື ເປັນຜົນປະໂຫຍດໃຫ້ແກ່ຄະດີທີ່ພວມພິຈາລະນາຢູ່.

ການໂຈະການໄຕ່ສວນຄະດີ ຕ້ອງດຳເນີນກ່ອນການປິດການໂຕ້ຖຽງ ໂດຍໃຫ້ຈ່າສານບັນທຶກໄວ້ໃນປຶ້ມປະຊຸມສານ. ໄລຍະເວລາທີ່ໂຈະ ບໍ່ໃຫ້ນັບເຂົ້າໃນກຳນົດເວລາຂອງການດຳເນີນຄະດີ.

**ມາດຕາ 231 ການຕັດສີນຊ້ອງໜ້າ ແລະ ການຕັດສີນລັບຫຼັງ**

ການຕັດສີນຊ້ອງໜ້າ ແມ່ນ ການຕັດສີນຂອງສານ ທີ່ ໂຈດ, ຈຳເລີຍ ແລະ ບຸກຄົນທີສາມ ເຂົ້າຮ່ວມໃນການພິຈາລະນາຄະດີ, ຍົກເວັ້ນການພິຈາລະນາພິພາກສາຄະດີ ຢູ່ສານຂັ້ນລຶບລ້າງ.

ໃນກໍລະນີ ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຫາກໄດ້ຮັບໝາຍຮຽກເຂົ້າມາຮ່ວມປະຊຸມສານແລ້ວ ແຕ່ບໍ່ໄດ້ເຂົ້າມາຮ່ວມ ໂດຍບໍ່ມີເຫດຜົນພຽງພໍ ຫຼື ຜູ້ກ່ຽວໄດ້ສະເໜີໃຫ້ພິຈາລະນາຕັດສີນຄະດີນັ້ນໂລດ, ການພິຈາລະນາຕັດສີນຄະດີດັ່ງກ່າວ ຖືວ່າເປັນການຕັດສີນຊ້ອງໜ້າ, ໃນກໍລະນີນີ້ ຜູ້ກ່ຽວບໍ່ມີສິດຂໍຄັດຄ້ານຄຳຕັດສີນ ພຽງແຕ່ມີສິດຂໍອຸທອນເທົ່ານັ້ນ.

ໃນກໍລະນີ ມີ ຂໍ້ມູນ ຫຼັກຖານ ຄົບຖ້ວນ, ມີຄວາມຈຳເປັນຕ້ອງໄດ້ຕັດສີນຄະດີ ແຕ່ຈຳເລີຍຫຼົບຫຼີກການດຳເນີນຄະດີ, ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຍ້ອນສາເຫດໃດໜຶ່ງ ເຊັ່ນ ໝາຍຮຽກສົ່ງບໍ່ເຖິງມືຜູ້ກ່ຽວ ສານກໍຈະຕັດສີນລັບຫຼັງ ຊຶ່ງຜູ້ກ່ຽວມີສິດຂໍຄັດຄ້ານໄດ້ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສີນເປັນຕົ້ນໄປ. ໃນກໍລະນີນີ້ ຄະນະສານເກົ່າ ຕ້ອງຕັດສີນຄະດີນັ້ນຄືນໃໝ່ ໂດຍຊ້ອງໜ້າຜູ້ກ່ຽວ ຕາມລະບຽບການພິຈາລະນາຄະດີຢູ່ສານ.

**ມາດຕາ 232 (ປັບປຸງ) ລະບຽບການລວມຂອງການປະຊຸມສານ**

ລະບຽບການລວມຂອງການປະຊຸມສານ ມີ ດັ່ງນີ້:

1. ທຸກຄົນຢູ່ໃນຫ້ອງປະຊຸມສານຕ້ອງ ເຄົາລົບຄະນະສານ, ປະຕິບັດຕາມລະບຽບການຂອງຫ້ອງປະຊຸມສານ ແລະ ປະຕິບັດຄຳເຕືອນ ຫຼື ຄຳສັ່ງຂອງ ປະທານຄະນະສານ;

2. ເວລາຄະນະສານເຂົ້າອອກຫ້ອງປະຊຸມສານ ທຸກຄົນຕ້ອງ ຢືນຂຶ້ນເພື່ອເຄົາລົບ ແລະ ຮັກສາຄວາມສະຫງົບ;

3. ການມີຄຳເຫັນແຕ່ລະຄັ້ງຂອງຜູ້ເຂົ້າຮ່ວມປະຊຸມສານ ຕ້ອງໄດ້ຮັບອະນຸຍາດຈາກປະທານຄະນະສານເສຍກ່ອນ. ໃນກໍລະນີຜູ້ມີບັນຫາທາງດ້ານສຸຂະພາບ ປະທານຄະນະສານ ຈະອະນຸຍາດໃຫ້ນັ່ງ ມີຄຳເຫັນ ຫຼື ໃຫ້ການກໍໄດ້;

4. ເດັກບໍ່ອະນຸຍາດໃຫ້ເຂົ້າຮ່ວມປະຊຸມສານ ເວັ້ນເສຍແຕ່ຜູ້ໄດ້ຮັບອະນຸຍາດຈາກສານ;

5. ການ ຖ່າຍວີດີໂອ, ຖ່າຍຮູບ ຫຼື ອັດສຽງ ໃນທີ່ປະຊຸມສານ ຕ້ອງໄດ້ຮັບອະນຸຍາດຈາກສານ;

6. ຜູ້ລະເມີດ ຄຳເຕືອນ ຫຼື ຄຳສັ່ ງຂອງຄະນະສານ ຈະຖືກສັ່ງໃຫ້ອອກຈາກຫ້ອງປະຊຸມສານ.

ລະບຽບການສະເພາະຂອງການປະຊຸມສານ ໄດ້ກຳນົດໄວ້ຕ່າງຫາກ ໂດຍແມ່ນຈ່າສານເປັນຜູ້ແຈ້ງກ່ອນການເປີດປະຊຸມສານ.

**ມາດຕາ 233 (ປັບປຸງ) ການບັນທຶກປະຊຸມສານ**

ໃນທີ່ປະຊຸມສານ ຈ່າສານຕ້ອງບັນທຶກ ຄຳໃຫ້ການ ຫຼື ຄຳເຫັນ ຂອງຜູ້ເຂົ້າຮ່ວມ. ສຳລັບບັນຫາທີ່ສຳຄັນ ປະທານຄະນະສານ ຕ້ອງແນະນຳໃຫ້ຈ່າສານ ຈົດບັນທຶກໃສ່ປຶ້ມປະຊຸມສານ ຢ່າງລະອຽດ.

ພາຍຫຼັງ ປິດປະຊຸມສານແຕ່ລະຄັ້ງ ຈ່າສານ ຕ້ອງອ່ານເນື້ອໃນບົດບັນທຶກປະຊຸມສານໃຫ້ຜູ້ເຂົ້າຮ່ວມ ໂດຍສະເພາະ ໂຈດ, ຈຳເລີຍ, ພະຍານ ໃນຄະດີຮັບຊາບ ພ້ອມທັງໃຫ້ລົງລາຍເຊັນ ແລະ ແປະໂປ້ມືໃສ່ປຶ້ມບັນທຶກປະຊຸມສານ ແລະ ຈ່າສານ ກໍລົງລາຍເຊັນ ແລະ ປະທັບຕາໃສ່.

ໃນກໍລະນີ ຜູ້ເຂົ້າຮ່ວມປະຊຸມສານ ຫາກບໍ່ຍອມ ລົງລາຍເຊັນ ຫຼື ແປະໂປ້ມື ໃສ່ປຶ້ມປະຊຸມສານ ຈ່າສານຕ້ອງບັນທຶກໄວ້.

ບັນທຶກປຶ້ມປະຊຸມສານ ຕ້ອງສຳເນົາໃສ່ສຳນວນຄະດີທີ່ກ່ຽວຂ້ອງ ເພື່ອໃຫ້ສານຂັ້ນເທິງກວດກາ.

**ມາດຕາ 234 ການບໍ່ເຄົາລົບນັບຖືຄະນະສານຕັດສີນ**

ບຸກຄົນທີ່ມີການກະທຳບໍ່ເໝາະສົມ ໃນທີ່ປະຊຸມສານ ເປັນຕົ້ນ ທຳຮ້າຍຮ່າງກາຍກັນ, ນິນທາ, ໃສ່ຮ້າຍ, ໝິ່ນປະໝາດ, ປ້ອຍດ່າ ຄະນະສານ ຫຼື ຜູ້ພິພາກສາ ໃນທີ່ປະຊຸມສານ ຈະຖືວ່າເປັນການບໍ່ເຄົາລົບນັບຖືຄະນະສານຕັດສີນ.

**ມາດຕາ 235 (ປັບປຸງ) ສະທ້ອນຂອງການບໍ່ເຄົາລົບນັບຖືຄະນະສານຕັດສີນ**

ບຸກຄົນທີ່ບໍ່ເຄົາລົບນັບຖືຄະນະສານຕັດສີນ ຈະມີຜົນສະທ້ອນ ດັ່ງນີ້:

1. ຄະນະສານອາດຈະສັ່ງໃຫ້ຜູ້ກ່ຽວ ອອກຈາກຫ້ອງປະຊຸມສານ ຖ້າມີການກະທຳທີ່ບໍ່ເໝາະສົມ;

2. ຄະນະສານຈະສະເໜີອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຜູ້ກ່ຽວຂຶ້ນສານໂດຍກົງ ຖ້າຫາກເປັນການທຳຮ້າຍຮ່າງກາຍກັນ, ການນິນທາ, ການໃສ່ຮ້າຍ, ການໝິ່ນປະໝາດ, ການປ້ອຍດ່າ ຄະນະສານ ຫຼື ຜູ້ພິພາກສາ ໃນທີ່ປະຊຸມສານ;

3. ຄະນະສານຕ້ອງລາຍງານໃຫ້ ຫົວໜ້າອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ ເພື່ອໃຫ້ດຳເນີນຄະດີຕາມກົດໝາຍ ຖ້າຫາກເປັນການທຳຜິດທີ່ເປັນອັນຕະລາຍຮ້າຍແຮງ.

# ໝວດທີ 2
# ຂັ້ນຕອນການເປີດປະຊຸມສານ

**ມາດຕາ 236 ການເລີ່ມປະຊຸມສານ**

ພາຍຫຼັງຄະນະສານເຂົ້າສູ່ຫ້ອງປະຊຸມສານ ເປັນທີ່ຮຽບຮ້ອຍແລ້ວ ຈ່າສານ ຕ້ອງລາຍງານຄວາມພ້ອມໃນການດຳເນີນການປະຊຸມສານ ເປັນຕົ້ນ ຄະດີເລກທີ, ລົງວັນທີ, ກ່ຽວເລື່ອງ, ຄູ່ຄວາມ ແລະ ຜູ້ເຂົ້າມາຮ່ວມ ຫຼື ບໍ່ເຂົ້າມາຮ່ວມ ຕາມໝາຍຮຽກ, ໝາຍເຊີນຂອງສານ ແລ້ວມອບສຳນວນຄະດີໃຫ້ຄະນະສານເປັນຜູ້ດຳເນີນການປະຊຸມສານ.

**ມາດຕາ 237 (ປັບປຸງ) ການເປີດປະຊຸມສານ**

ປະທານຄະນະສານ ເປັນຜູ້ກ່າວເປີດປະຊຸມສານຢ່າງເປັນທາງການ ແລະ ອ່ານຂໍ້ຕົກລົງໃນການນຳເອົາຄະດີອອກມາພິຈາລະນາ ພ້ອມແຈ້ງລາຍຊື່ຕາມລຳດັບ ຄື ປະທານ, ຄະນະສານ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຫຼື ຜູ້ແປພາສາ ໃຫ້ຜູ້ເຂົ້າຮ່ວມປະຊຸມສານ ແລະ ແຈ້ງສິດໃນການຄ້ານຕົວໃຫ້ຄູ່ຄວາມຮັບຊາບ.

**ມາດຕາ 238 (ປັບປຸງ) ການຄ້ານຕົວໃນທີ່ປະຊຸມສານ**

ຄູ່ຄວາມໃນຄະດີ ມີສິດສະເໜີຄ້ານຕົວ ຄະນະສານຕັດສີນ, ຜູ້ພິພາກສາ ໃນຄະນະສານຕັດສີນ, ຈ່າສານ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ.

ໃນກໍລະນີ ມີການສະເໜີຄ້ານຕົວ ຄະນະສານ, ຜູ້ພິພາກສາໃນຄະນະສານຕັດສີນ, ຈ່າສານແລ້ວ ປະທານຄະນະສານ ຕ້ອງປິດການປະຊຸມສານໄວ້ຊົ່ວຄາວ ເພື່ອພິຈາລະນາເຫດຜົນຂອງການສະເໜີຄ້ານຕົວ. ຖ້າການສະເໜີຄ້ານຕົວຫາກມີເຫດຜົນພຽງພໍ ຄະນະສານຕ້ອງປ່ຽນຕົວຜູ້ຖືກຄ້ານຕົວນັ້ນ ຖ້າການສະເໜີຄ້ານຕົວຫາກບໍ່ມີເຫດຜົນພຽງພໍ ຄະນະສານດັ່ງກ່າວກໍຈະສືບຕໍ່ດຳເນີນປະຊຸມສານ ແຕ່ຕ້ອງຊີ້ແຈງເຫດຜົນຂອງການບໍ່ປ່ຽນຕົວ ຕໍ່ທີ່ປະຊຸມສານ.

ໃນກໍລະນີ ການສະເໜີຄ້ານຕົວ ພະນັກງານໄອຍະການປະຊາຊົນ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ ມີເຫດຜົນພຽງພໍ ກໍຈະເປັນສາເຫດໃຫ້ຄະນະສານ ເລື່ອນ ຫຼື ສືບຕໍ່ ການໄຕ່ສວນຄະດີ ຕາມແຕ່ກໍລະນີ.

**ມາດຕາ 239 ການແຈ້ງ ສິດ ແລະ ພັນທະ ຂອງຜູ້ເຂົ້າຮ່ວມ**

ກ່ອນເລີ່ມການໄຕ່ສວນຄະດີໃນທີ່ປະຊຸມສານ ປະທານຄະນະສານຕັດສີນ ຕ້ອງແຈ້ງ ແລະ ອະທິບາຍ ສິດ ແລະ ພັນທະ ຂອງໂຈດ, ຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ໂດຍສະເພາະການນຳສະເໜີ ຂໍ້ມູນຫຼັກຖານ ແລະ ການຊີ້ແຈງບັນຫາຕ່າງໆ ທີ່ກ່ຽວຂ້ອງໃນຄະດີ ຕໍ່ທີ່ປະຊຸມສານ.

**ມາດຕາ 240 ການລາຍງານເນື້ອຄະດີໂດຍຫຍໍ້**

ການໄຕ່ສວນຄະດີ ໃນທີ່ປະຊຸມສານ ຕ້ອງເລີ່ມຕົ້ນຈາກ ການລາຍງານເນື້ອຄະດີ ໂດຍຄະນະສານຜູ້ຮັບຜິດຊອບຄະດີ, ຈາກນັ້ນ ຈຶ່ງໃຫ້ ໂຈດ ຫຼື ບຸກຄົນທີສາມຝ່າຍໂຈດ (ຖ້າມີ) ຢັ້ງຢືນການຮ້ອງຟ້ອງຂອງຕົນ. ຖັດຈາກນັ້ນ ຈຶ່ງໃຫ້ຈຳເລີຍມີຄຳເຫັນວ່າ ຕົນຮັບຮູ້ຄຳຮ້ອງຟ້ອງຂອງໂຈດນັ້ນ ຫຼື ບໍ່. ຖ້າຫາກມີການຟ້ອງແຍ່ງຂອງຈຳເລີຍ ກໍໃຫ້ປະຕິບັດດັ່ງດຽວກັນ.

ໃນກໍລະນີ ຈຳເລີຍ ຫາກໄດ້ປະຕິເສດຄຳຮ້ອງຟ້ອງ ຂອງ ໂຈດ ຫຼື ໂຈດ ຫາກໄດ້ປະຕິເສດຄຳຟ້ອງແຍ່ງຂອງຈຳເລີຍ ແລະ ບໍ່ສາມາດໄກ່ເກ່ຍກັນໄດ້ແລ້ວ ປະທານຄະນະສານ ກໍເລີ່ມໄຕ່ສວນ ໂຈດ ແລະ ບຸກຄົນທີສາມ

ຝ່າຍໂຈດ (ຖ້າມີ) ແລ້ວຈຶ່ງໄຕ່ສວນ ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ (ຖ້າມີ), ຈາກນັ້ນ ຈຶ່ງໄຕ່ສວນ ພະຍານ ແລະ ຜູ້ເຂົ້າຮ່ວມອື່ນຕາມລຳດັບ.

**ມາດຕາ 241 ການຮັບຮູ້ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ**

ເມື່ອ ໂຈດ ຫຼື ຈຳເລີຍ ໄດ້ຢັ້ງຢືນ ການຮ້ອງຟ້ອງ ຫຼື ການຟ້ອງແຍ່ງ ຂອງຕົນແລ້ວ ປະທານຄະນະສານ ຕ້ອງຖາມ ຈຳເລີຍ ຫຼື ໂຈດ ວ່າ ຮັບຮູ້ ຫຼື ປະຕິເສດການຮ້ອງຟ້ອງຂອງໂຈດ ຫຼື ການຟ້ອງແຍ່ງຂອງຈຳເລີຍ ທັງໝົດ ຫຼື ບາງສ່ວນ.

ເມື່ອມີການຮັບຮູ້ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ທັງໝົດແລ້ວ ຄະນະສານຈະພິຈາລະນາຕັດສີນ ໂດຍບໍ່ຕ້ອງດຳເນີນການໄຕ່ສວນແຕ່ຢ່າງໃດ. ຖ້າມີການຮັບຮູ້ບາງສ່ວນ ຄະນະສານກໍຈະພິຈາລະນາໄຕ່ສວນໃນສ່ວນທີ່ບໍ່ຮັບຮູ້ ຫຼື ປະຕິເສດເທົ່ານັ້ນ.

**ມາດຕາ 242 ສິດໃນການປ່ຽນແປງ ຫຼື ເພີ່ມ ຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ**

ເມື່ອຄະນະສານ ໄດ້ລາຍງານເນື້ອຄະດີໂດຍຫຍໍ້ ຕໍ່ທີ່ປະຊຸມສານແລ້ວ ຄະນະສານ ຕ້ອງສະເໜີໃຫ້ໂຈດຢັ້ງຢືນການຮ້ອງຟ້ອງ ຫຼື ໃຫ້ຈຳເລີຍ ຢັ້ງຢືນການຟ້ອງແຍ່ງ ແລະ ຂໍ້ສະເໜີ ທີ່ໄດ້ຂຽນໃນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງນັ້ນຕໍ່ທີ່ປະຊຸມສານ ແຕ່ ໂຈດ ຫຼື ຈຳເລີຍ ຍັງມີສິດ ຖອນ, ປ່ຽນແປງ ຫຼື ເພີ່ມ ຄຳຮ້ອງຟ້ອງ, ຄຳຟ້ອງແຍ່ງຂອງຕົນ ທັງໝົດ ຫຼື ບາງສ່ວນ ກໍໄດ້.

**ມາດຕາ 243 (ປັບປຸງ) ການດຳເນີນການເມື່ອມີການ ຖອນ, ປ່ຽນແປງ ຫຼື ເພີ່ມຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ**

ເມື່ອ ໂຈດ ຫຼື ຈຳເລີຍ ຫາກໄດ້ຖອນຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງແລ້ວ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 193 ຂອງກົດໝາຍສະບັບນີ້.

ຖ້າ ໂຈດ ຫຼື ຈຳເລີຍ ຫາກໄດ້ປ່ຽນແປງ ຫຼື ເພີ່ມຄຳຮ້ອງຟ້ອງ ຫຼື ຄຳຟ້ອງແຍ່ງ ຄະນະສານຕ້ອງພິຈາລະນາການສະເໜີປ່ຽນແປງ ຫຼື ເພີ່ມນັ້ນ ຕາມເຫດຜົນຕົວຈິງ ແລະ ກົດໝາຍ.

**ມາດຕາ 244 ການໄຕ່ສວນ ໂຈດ ແລະ ບຸກຄົນທີສາມຝ່າຍໂຈດ**

ໃນກໍລະນີຈຳເລີຍ ຫາກປະຕິເສດຄຳຮ້ອງຟ້ອງຂອງ ໂຈດ ຫຼື ໂຈດ ຫາກປະຕິເສດຄຳຟ້ອງແຍ່ງຂອງຈຳເລີຍ ແລະ ບໍ່ສາມາດໄກ່ເກ່ຍກັນໄດ້ແລ້ວ ປະທານຄະນະສານ ຈະເລີ່ມໄຕ່ສວນໂຈດ ແລະ ບຸກຄົນທີສາມຝ່າຍໂຈດ (ຖ້າມີ) ຖ້າຫາກມີໂຈດຫຼາຍຄົນ ປະທານຄະນະສານ ກໍຈະໄຕ່ສວນເປັນແຕ່ລະຄົນ.

ເມື່ອຄະນະສານໄຕ່ສວນ ໂຈດ ແລະ ບຸກຄົນທີສາມຝ່າຍໂຈດ ສິ້ນສຸດແລ້ວ ກໍໃຫ້ສິດແກ່ຝ່າຍຈຳເລີຍມີຄຳເຫັນຕໍ່ປະເດັນທີ່ຝ່າຍໂຈດຍົກຂຶ້ນ.

**ມາດຕາ 245 ການໄຕ່ສວນ ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ**

ເມື່ອໄຕ່ສວນຝ່າຍໂຈດແລ້ວ ປະທານຄະນະສານຈະໄຕ່ສວນຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ (ຖ້າມີ) ຖ້າຫາກມີຈຳເລີຍຫຼາຍຄົນ ຄະນະສານກໍຈະໄຕ່ສວນເປັນແຕ່ລະຄົນ.

ການໄຕ່ສວນຈຳເລີຍ ໃຫ້ເຈາະຈີ້ງແຕ່ບັນຫາທີ່ບໍ່ຈະແຈ້ງ ຫຼື ໂຕ້ແຍ່ງ ໃນຄຳແກ້ຟ້ອງ ແລະ ຄຳໃຫ້ການ ຊຶ່ງຈຳເລີຍ ຕ້ອງໄດ້ຊີ້ແຈງ ຫຼື ອະທິບາຍປະເດັນດັ່ງກ່າວ.

ເມື່ອຄະນະສານໄຕ່ສວນ ຈຳເລີຍ ແລະ ບຸກຄົນທີສາມຝ່າຍຈຳເລີຍ ສິ້ນສຸດແລ້ວ ກໍໃຫ້ສິດແກ່ຝ່າຍໂຈດມີຄຳເຫັນຕໍ່ປະເດັນທີ່ຝ່າຍຈຳເລີຍຍົກຂຶ້ນ.

**ມາດຕາ 246 ການໄຕ່ສວນພະຍານ**

ການໄຕ່ສວນພະຍານ ໃຫ້ດຳເນີນເປັນແຕ່ລະຄົນ ຕາມເປົ້າໝາຍປະເດັນຂັດແຍ່ງທີ່ຕັ້ງໄວ້. ກ່ອນການໄຕ່ສວນພະຍານ ປະທານຄະນະສານ ຕ້ອງອະທິບາຍເຫດຜົນຂອງປະເດັນທີ່ພົວພັນກັບຄະດີ ພ້ອມທັງແຈ້ງຄວາມຮັບຜິດຊອບຕໍ່ການໃຫ້ການເທັດ.

ໃນການໄຕ່ສວນນັ້ນ ພະຍານ ຕ້ອງລາຍງານລະອຽດ ກ່ຽວກັບເຫດການ ຫຼື ຄະດີນັ້ນ ຈາກນັ້ນຄະນະສານກໍຈະຖາມບັນຫາທີ່ຍັງບໍ່ທັນຈະແຈ້ງ ຫຼື ໃຫ້ຊີ້ແຈງຄຳໃຫ້ການຂອງຕົນ ທີ່ຂັດກັບຄຳໃຫ້ການຜ່ານມາ ແລະບັນຫາອື່ນທີ່ພົວພັນກັບຄະດີ.

ເມື່ອຄະນະສານໄຕ່ສວນແລ້ວ ກໍຕ້ອງໃຫ້ສິດແກ່ ໂຈດ ແລະ ຈຳເລີຍ ຫຼື ຜູ້ປົກປ້ອງຂອງຄູ່ຄວາມຖາມພະຍານຕື່ມອີກ.

**ມາດຕາ 247 ການສະເໜີຫຼັກຖານທາງດ້ານວັດຖຸ**

ຕາມຄຳເຫັນຂອງສານ ຫຼື ຕາມການສະເໜີຂອງຄູ່ຄວາມ ຄະນະສານ ຈະໃຫ້ຄູ່ຄວາມ ນຳເອົາຫຼັກຖານທາງດ້ານວັດຖຸ ມາສະເໜີ ຫຼື ຢັ້ງຢືນ ຕໍ່ທີ່ປະຊຸມສານ ເພື່ອຄວາມຊັດເຈນໃນເຫດການຂອງຄະດີ.

**ມາດຕາ 248 ການສະເໜີຫຼັກຖານທາງດ້ານເອກະສານ**

ການສະເໜີຫຼັກຖານ ທາງດ້ານເອກະສານໃນທີ່ປະຊຸມສານ ຕ້ອງດຳເນີນ ດັ່ງນີ້:

1. ຜູ້ບໍ່ໄດ້ເຂົ້າຮ່ວມໃນການໄຕ່ສວນ ແຕ່ຫາກມີຄຳໃຫ້ການມາແລ້ວ ຄະນະສານ ຕ້ອງເອົາຄຳໃຫ້ການດັ່ງກ່າວຂອງຜູ້ກ່ຽວມາອ່ານ ຕໍ່ທີ່ປະຊຸມສານ;

2. ຄຳໃຫ້ການໃນເວລາໄຕ່ສວນ ຖ້າຫາກຂັດກັບຄຳໃຫ້ການຜ່ານມາ ຄະນະສານ ຈະໃຫ້ຜູ້ກ່ຽວຊີ້ແຈງຫຼື ອະທິບາຍ;

3. ເອກະສານທີ່ນຳສະເໜີເປັນຫຼັກຖານນັ້ນ ບໍ່ຈະແຈ້ງ ຫຼື ມີຂໍ້ສົງໄສ ຊຶ່ງຕ້ອງໄດ້ຊີ້ແຈງ;

4. ເອກະສານອື່ນ ທີ່ກ່ຽວຂ້ອງກັບຄະດີ ຕາມການຮ້ອງຂໍຂອງຄູ່ຄວາມ.

ຫຼັກຖານທາງດ້ານເອກະສານ ທີ່ເປັນຄວາມລັບຂອງລັດ, ທາງລັດຖະການ ຫຼື ຂອງບຸກຄົນ ຈະບໍ່ຖືກນຳອອກສະເໜີ ຕໍ່ທີ່ປະຊຸມສານ.

ການສະເໜີຫຼັກຖານທາງດ້ານເອກະສານ ກໍຄືຫຼັກຖານທາງດ້ານວັດຖຸຂອງຄູ່ຄວາມ ໃນທີ່ປະຊຸມສານຕ້ອງໃຫ້ຍື່ນຜ່ານຈ່າສານ.

**ມາດຕາ 249 (ປັບປຸງ) ການສະເໜີຫຼັກຖານທາງດ້ານບຸກຄົນ**

ໂຈດ, ຈຳເລີຍ ມີສິດສະເໜີຫຼັກຖານທາງດ້ານບຸກຄົນ ຕໍ່ທີ່ປະຊຸມສານ ເພື່ອໃຫ້ຄະນະສານທຳການໄຕ່ສວນຖ້າຫາກຜ່ານມາບຸກຄົນດັ່ງກ່າວ ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ.

ການໄຕ່ສວນບຸກຄົນດັ່ງກ່າວ ໃຫ້ປະຕິບັດດັ່ງດຽວກັນກັບການໄຕ່ສວນພະຍານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 246 ຂອງກົດໝາຍສະບັບນີ້.

**ມາດຕາ 250 ການຟັງຄຳເຫັນຂອງຜູ້ຊ່ຽວຊານ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງ**

ໃນການໄຕ່ສວນຄະດີ ເມື່ອມີຜູ້ຊ່ຽວຊານເຂົ້າຮ່ວມ ພາຍຫຼັງການສະເໜີຫຼັກຖານຕ່າງໆແລ້ວ ຄະນະສານຈະໃຫ້ ຜູ້ຊ່ຽວຊານ, ຜູ້ຊຳນານ ມີຄຳເຫັນ ໃນປະເດັນທີ່ມີຂໍ້ສົງໄສ ຕໍ່ຜົນການພິສູດ ຕາມຫຼັກວິຊາສະເພາະຂອງຜູ້ຊ່ຽວຊານ, .

ຖ້າມີການເຂົ້າຮ່ວມ ຂອງຜູ້ຕາງໜ້າອົງການຈັດຕັ້ງທີ່ກ່ຽວຂ້ອງໃນຄະດີ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງ ພະນັກງານ ຫຼື ຜູ້ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຄະນະສານຕ້ອງໃຫ້ຜູ້ຕາງໜ້າອົງການຈັດຕັ້ງດັ່ງກ່າວມີຄຳເຫັນຕໍ່ທີ່ປະຊຸມສານ.

## ໝວດທີ 3
## ການໂຕ້ຖຽງ

### ມາດຕາ 251 ການໂຕ້ຖຽງຂອງຄູ່ຄວາມ

ການໂຕ້ຖຽງຂອງຄູ່ຄວາມ ແມ່ນ ການອອກຄຳຄິດຄຳເຫັນ ທີ່ມີລັກສະນະໂຕ້ແຍ່ງກັນ ລະຫວ່າງ ໂຈດ ກັບ ຈຳເລີຍ ໃນທີ່ປະຊຸມສານກ່ຽວກັບຄວາມເປັນຈິງຂອງຄະດີ.

ຄະນະສານ ນຳເອົາບັນດາຫຼັກຖານໃນຄະດີມາສະເໜີຕໍ່ທີ່ປະຊຸມສານ ແລ້ວຈຶ່ງເປີດການໂຕ້ຖຽງ ລະຫວ່າງ ໂຈດ ກັບ ຈຳເລີຍ ພ້ອມທັງຜູ້ປົກປ້ອງຂອງພວກກ່ຽວ (ຖ້າມີ).

ໂຈດ ແລະ ຈຳເລີຍ ຈະນຳເອົາເອກະສານ ຫຼື ຫຼັກຖານຕ່າງໆ ທີ່ຕົນມີ ແລະ ເປັນຜົນປະໂຫຍດໃຫ້ແກ່ຕົນ ອອກມາສະເໜີຕໍ່ຄະນະສານຕື່ມອີກກໍໄດ້. ຄະນະສານ ຕ້ອງວາງຕົວເປັນກາງ ໃນການຖາມ ໂຈດ ແລະ ຈຳເລີຍ ດ້ວຍເຫດຜົນຢ່າງມີຈຸດສຸມ.

ໃນການໂຕ້ຖຽງນັ້ນ ຕ້ອງໃຫ້ແຕ່ລະຝ່າຍມີຄຳເຫັນໂຕ້ຕອບກັນ ເພື່ອຊອກຫາຄວາມຖືກຕ້ອງ ແລະ ຄວາມເປັນຈິງໃນຄະດີ.

### ມາດຕາ 252 ລຳດັບການໂຕ້ຖຽງ

ເມື່ອສິ້ນສຸດການໄຕ່ສວນແລ້ວ ຄະນະສານ ຈະສັງລວມປະເດັນທີ່ຍັງມີຂໍ້ສົງໄສ ຫຼື ຂໍ້ຂັດແຍ່ງ ເພື່ອຍົກຂຶ້ນມາໂຕ້ຖຽງ ໃນທີ່ປະຊຸມສານ ຕາມລຳດັບ ຄື ຝ່າຍໂຈດ, ຝ່າຍຈຳເລີຍ ຫຼື ບຸກຄົນທີສາມ ຊຶ່ງຕ້ອງນຳເອົາຫຼັກຖານມາ ຢັ້ງຢືນ ຫຼື ຊີ້ແຈງ ກ່ຽວກັບປະເດັນທີ່ມີ ຂໍ້ສົງໄສ ຫຼື ຂັດແຍ່ງນັ້ນ.

ຄະນະສານ ອາດຈະນຳເອົາ ຂໍ້ມູນ ຫຼັກຖານ ໃດໜຶ່ງ ທີ່ບໍ່ທັນເປັນເອກະພາບກັນນັ້ນ ຍົກຂຶ້ນມາໂຕ້ຖຽງ ໃນທີ່ປະຊຸມສານຕື່ມອີກກໍໄດ້.

### ມາດຕາ 253 ຂອບເຂດຂອງການໂຕ້ຖຽງ

ການໂຕ້ຖຽງ ແລະ ການຊີ້ແຈງ ຂອງຄູ່ຄວາມ ຈະບໍ່ຈຳກັດເວລາ ແຕ່ຄະນະສານຕ້ອງຄວບຄຸມການໂຕ້ຖຽງນັ້ນ ໃຫ້ຢູ່ໃນຂອບເຂດປະເດັນທີ່ຂັດແຍ່ງກັນ, ຖ້າຫາກຄູ່ຄວາມມີຄຳເຫັນ ຫຼື ຍົກຫຼັກຖານນອກປະເດັນທີ່ບໍ່ກ່ຽວຂ້ອງກັບຄະດີແລ້ວ ຄະນະສານຕ້ອງຄວບຄຸມໃຫ້ເຂົ້າສູ່ປະເດັນຂອງຄະດີ.

### ມາດຕາ 254 ການມີຄຳເຫັນສຸດທ້າຍຂອງຄູ່ຄວາມ

ເມື່ອຄູ່ຄວາມ ໄດ້ຍົກ ຂໍ້ມູນ ຫຼັກຖານ ຄົບຖ້ວນ ແລະ ຈະແຈ້ງແລ້ວ ຄະນະສານຕ້ອງໃຫ້ຝ່າຍໂຈດ ແລະ ຈຳເລີຍ ສັງລວມການຮ້ອງຟ້ອງ ແລະ ການແກ້ຟ້ອງ ຫຼື ການຟ້ອງແຍ່ງ ຂອງຕົນ ແລະ ມີຄຳເຫັນສຸດທ້າຍກ່ຽວກັບ ຂໍ້ມູນ ຫຼັກຖານ ທີ່ໄດ້ສະເໜີຕໍ່ສານນັ້ນ ວ່າຄົບຖ້ວນ ຫຼື ຍັງມີຫຼັກຖານໃດຕື່ມ ທີ່ບໍ່ທັນນຳມາສະເໜີ ທັງນີ້ກໍເພື່ອຮັບປະກັນໃຫ້ການພິຈາລະນາຕັດສິນຂອງສານ ຖືກຕ້ອງ ແລະ ຍຸຕິທຳ.

## ໝວດທີ 4
## ການພິຈາລະນາໃນຫ້ອງປະຊຸມລັບ ແລະ ການປະກາດຄຳຕັດສິນ

### ມາດຕາ 255 ການພິຈາລະນາໃນຫ້ອງປະຊຸມລັບ

ມີແຕ່ຄະນະສານຕັດສິນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມພິຈາລະນາຄະດີ ໃນຫ້ອງປະຊຸມລັບ.

ການພິຈາລະນາຄະດີ ໃນຫ້ອງປະຊຸມລັບ ຕ້ອງເຮັດ ຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ໂດຍອີງໃສ່ຜົນການໄຕ່ສວນຄະດີ ໃນທີ່ປະຊຸມສານເປັນຕົ້ນຕໍ ເພື່ອໃຫ້ຄຳຕັດສິນ ຖືກຕ້ອງ ແລະ ຍຸຕິທຳ.

ຄະນະສານ ຕ້ອງນໍາເອົາປະເດັນທີ່ຂັດແຍ່ງ ຫຼື ຮ້ອງຟ້ອງ ຫຼື ຟ້ອງແຍ່ງກັນ ມາພິຈາລະນາເປັນແຕ່ລະປະເດັນ ພ້ອມທັງນໍາເອົາຫຼັກຖານ ໃນສໍານວນຄະດີຂຶ້ນມາກວດກາ ຕີລາຄາດ້ວຍຄວາມໝັ້ນໃຈ ແລະ ເປັນເອກະລາດ ບົນພື້ນຖານ ຂໍ້ມູນ ຫຼັກຖານ ຕົວຈິງ ແລະ ເຫດຜົນທາງດ້ານກົດໝາຍ.

**ມາດຕາ 256 ການລົງຄໍາເຫັນ ໃນຫ້ອງປະຊຸມລັບ**

ການລົງຄໍາເຫັນຊີ້ຂາດ ໃນຫ້ອງປະຊຸມລັບ ຕ້ອງຖືເອົາຕາມສຽງສ່ວນຫຼາຍ ໂດຍໃຫ້ຄະນະສານຜູ້ທີ່ມີຄຸນວຸດທິຕໍ່າກວ່າເປັນຜູ້ ອອກຄໍາເຫັນ ແລະ ອອກສຽງກ່ອນ, ສ່ວນປະທານຄະນະສານຕັດສິນ ອອກຄໍາເຫັນ ແລະ ອອກສຽງ ເປັນຜູ້ສຸດທ້າຍ.

ຜູ້ທີ່ບໍ່ເຫັນດີ ຕາມສຽງສ່ວນຫຼາຍນັ້ນ ກໍມີສິດສະແດງຄໍາເຫັນຂອງຕົນ ເປັນລາຍລັກອັກສອນໄວ້ໃນສໍານວນຄະດີ ເພື່ອໃຫ້ສານຂັ້ນເທິງພິຈາລະນາ ໃນກໍລະນີມີການຂໍອຸທອນ ຫຼື ຂໍລົບລ້າງ.

**ມາດຕາ 257 ບົດບັນທຶກການພິຈາລະນາ ໃນຫ້ອງປະຊຸມລັບ**

ການພິຈາລະນາໃນຫ້ອງປະຊຸມລັບ ຕ້ອງເຮັດບົດບັນທຶກ. ປະທານຄະນະສານ ມອບໃຫ້ຄະນະສານຜູ້ໃດໜຶ່ງ ເປັນຜູ້ບັນທຶກຄໍາເຫັນ ພ້ອມດ້ວຍເຫດຜົນ ແລະ ການລົງຄະແນນສຽງ ຂອງຄະນະສານຕັດສິນແຕ່ລະຄົນ ພ້ອມທັງໃຫ້ແຕ່ລະຄົນ ເຊັນໃສ່ບົດບັນທຶກດັ່ງກ່າວ.

**ມາດຕາ 258 ຂອບເຂດການພິຈາລະນາຕັດສິນຂອງສານຂັ້ນຕົ້ນ**

ສານຂັ້ນຕົ້ນ ພິຈາລະນາຕັດສິນ ຕາມການຮ້ອງຟ້ອງ ຫຼື ການຮ້ອງຂໍ ຂອງຄູ່ຄວາມ ບົນພື້ນຖານ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ. ທຸກບັນຫາທີ່ຄູ່ຄວາມສະເໜີ ຄະນະສານຕ້ອງໄດ້ນໍາມາພິຈາລະນາ, ບັນຫາໃດທີ່ຄູ່ຄວາມບໍ່ໄດ້ສະເໜີນັ້ນ ກໍບໍ່ໃຫ້ຄະນະສານນໍາມາພິຈາລະນາຕັດສິນ.

**ມາດຕາ 259 (ປັບປຸງ) ການຮ່າງ ແລະ ການລົງຄໍາເຫັນໃນຄໍາຕັດສິນ**

ຜູ້ພິພາກສາໃນຄະນະສານ ທີ່ຮັບຜິດຊອບຄະດີ ຕ້ອງຮ່າງຄໍາຕັດສິນ ຕາມເຫດການ, ເນື້ອໃນຂອງຄະດີ ແລະ ລົງຄໍາເຫັນໃນແຕ່ລະປະເດັນ ທີ່ເປັນການສະເໜີຂອງຄູ່ຄວາມ, ທຸກການສະເໜີຂອງຄູ່ຄວາມ ທີ່ມີເຫດຜົນ ຫຼື ບໍ່ມີເຫດຜົນ ຄະນະສານຕ້ອງ ຊີ້ແຈງ, ລົງຄໍາເຫັນ ຫຼື ວິນິດໄສ ໃຫ້ລະອຽດ ບົນພື້ນຖານ ຂໍ້ມູນ ຫຼັກຖານ ແລະ ວາງມາດຕາຂອງກົດໝາຍທີ່ກ່ຽວຂ້ອງນັ້ນໃສ່.

**ມາດຕາ 260 ການປະກາດຄໍາຕັດສິນ**

ພາຍຫຼັງ ໄດ້ພິຈາລະນາຄະດີ ໃນຫ້ອງປະຊຸມລັບແລ້ວ ຄະນະສານຕ້ອງນໍາເອົາຄໍາຕັດສິນ ອອກມາ ປະກາດ ຫຼື ອ່ານ ໃນທີ່ປະຊຸມສານຢ່າງເປີດເຜີຍ.

ກ່ອນການອ່ານຄໍາຕັດສິນ ຕ້ອງໃຫ້ຄູ່ຄວາມໃນຄະດີ ອອກມາຢືນຕໍ່ໜ້າຄະນະສານ ເພື່ອຟັງຄໍາຕັດສິນ, ເວັ້ນເສຍແຕ່ຜູ້ມີສຸຂະພາບບໍ່ແຂງແຮງ ຊຶ່ງໄດ້ຮັບອະນຸຍາດ ຈາກຄະນະສານເທົ່ານັ້ນ.

ປະທານຄະນະສານ ເປັນຜູ້ຮັບຜິດຊອບອ່ານຄໍາຕັດສິນ ໂດຍເລີ່ມຈາກພາກວິນິດໄສ ເປັນຕົ້ນໄປ.

**ມາດຕາ 261 ການເລື່ອນການປະກາດຄໍາຕັດສິນ**

ຖ້າຫາກເຫັນວ່າ ການພິຈາລະນາຄະດີໃນຫ້ອງປະຊຸມລັບ ຈະບໍ່ສໍາເລັດ ຫຼື ມີເຫດຜົນໃດໜຶ່ງ ຊຶ່ງເປັນສາເຫດທີ່ບໍ່ສາມາດປະກາດຄໍາຕັດສິນໃນວັນນັ້ນໄດ້ ຄະນະສານ ກໍຈະເລື່ອນການອ່ານຄໍາຕັດສິນ ໄປໃສ່ວັນໃໝ່ ແຕ່ຢ່າງຊ້າບໍ່ໃຫ້ກາຍ ເຈັດວັນ.

ການເລື່ອນການປະກາດຄໍາຕັດສິນ ບໍ່ອະນຸຍາດໃຫ້ເຮັດ ພາຍຫຼັງຄະນະສານໄດ້ນໍາເອົາຄະດີເຂົ້າພິຈາລະນາ ໃນຫ້ອງປະຊຸມລັບແລ້ວ.

**ມາດຕາ 262 (ປັບປຸງ) ຄຳຕັດສິນຂອງສານຂັ້ນຕົ້ນ**

ສານ ອອກຄຳຕັດສິນໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳຕັດສິນຂອງສານ ປະກອບດ້ວຍ ພາກສະເໜີ, ພາກເນື້ອຄະດີ, ພາກວິນິດໄສ ແລະ ພາກຕັດສິນ. ສຳລັບ ການຮື້ຟື້ນຄະດີ ຫຼື ສານຂັ້ນເທິງພິພາກສາຄະດີ ໃຫ້ສານຂັ້ນຕົ້ນ ຕັດສິນຄືນໃໝ່ນັ້ນ ຕ້ອງກຳນົດຮູບຄະດີ ໃສ່ໃນຄຳຕັດສິນດັ່ງກ່າວ.

ພາກສະເໜີ ຕ້ອງບົ່ງບອກ ນະຄອນຫຼວງ, ແຂວງ ຫຼື ເຂດ ຂອງຄະນະສານຂັ້ນຕົ້ນ, ເລກທີຄຳຕັດສິນ, ຊື່ ແລະ ນາມສະກຸນ ຂອງຄະນະສານ, ຈ່າສານ ແລະ ພະນັກງານໄອຍະການປະຊາຊົນ, ເລກທີ, ລົງວັນທີ ຂອງຄະດີ, ວັນ, ເວລາ ເປີດປະຊຸມສານ, ຂໍ້ມູນຂອງຄູ່ຄວາມ, ຂໍ້ຂັດແຍ່ງຂອງຄະດີ ແລະ ສິດອຳນາດສານ ໃນການພິຈາລະນາ.

ພາກເນື້ອຄະດີ ຕ້ອງຂຽນໂດຍສັງເຂບ ເນື້ອໃນຄຳຮ້ອງຟ້ອງຂອງໂຈດ ແລະ ຄຳແກ້ຟ້ອງ ຫຼື ຄຳຟ້ອງແຍ່ງ ຂອງຈຳເລີຍ ລວມທັງຂອງບຸກຄົນທີສາມ ຊຶ່ງກວມເອົາ ສິດທວງ, ເງື່ອນໄຂທີ່ພາໃຫ້ເກີດສິດທວງ, ເຫດການທີ່ມີ ສາຍພົວພັນທາງດ້ານກົດໝາຍ, ການລະເມີດ ແລະ ການສະເໜີໃຫ້ສານພິຈາລະນາກ່ຽວກັບບັນຫາໃດໜຶ່ງ.

ພາກວິນິດໄສ ຕ້ອງກຳນົດລະອຽດເຫດການທີ່ເປັນຂໍ້ເທັດຈິງ, ກຳນົດປະເດັນຂັດແຍ່ງ ແລະ ປະເດັນອື່ນ ທີ່ສານຕ້ອງວິນິດໄສຢ່າງຄົບຖ້ວນ, ໃຫ້ເຫດຜົນເປັນແຕ່ລະປະເດັນຢ່າງ ລະອຽດ ຈະແຈ້ງ ໂດຍອີງໃສ່ຜົນການ ໂຕ້ແຍ່ງທີ່ສິ້ນສຸດຕາມ ຂໍ້ມູນ ຫຼັກຖານ ຢ່າງຄົບຖ້ວນ ແລະ ໃສ່ມາດຕາຂອງກົດໝາຍທີ່ກ່ຽວຂ້ອງ.

ພາກຕັດສິນ ຕ້ອງກຳນົດການເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມຂອງຄູ່ຄວາມ, ຜົນການລົງຄຳຕັດສິນ ໃນແຕ່ລະ ປະເດັນ, ຄ່າທຳນຽມຂອງຜູ້ເສຍຄະດີ ຫຼື ຄ່າທຳນຽມສານອື່ນ ແລະ ສິດໃນການຂໍອຸທອນ ຫຼື ສະເໜີຄັດຄ້ານ.

ຄຳຕັດສິນ ຕ້ອງເຮັດເປັນ ສາມສະບັບ ຄື ສະບັບໜຶ່ງໄວ້ໃນສຳເນົາ, ສ່ວນອີກສະບັບໜຶ່ງ ໄວ້ໃນສຳນວນ ຄະດີ, ສະບັບໜຶ່ງໃຫ້ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ. ຄຳຕັດສິນທີ່ຄູ່ຄວາມ ຫຼື ພາກສ່ວນອື່ນ ຕ້ອງການນັ້ນ ໃຫ້ເອົາສະບັບສຳເນົາ ໂດຍຈ່າສານເປັນຜູ້ຢັ້ງຢືນ.

**ມາດຕາ 263 (ປັບປຸງ) ປະເພດຄຳຕັດສິນຂອງສານຂັ້ນຕົ້ນ**

ປະເພດຄຳຕັດສິນຄະດີຂອງສານຂັ້ນຕົ້ນ ມີ ດັ່ງນີ້:

1. ຖ້າຫາກເຫັນວ່າຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍ ບໍ່ມີເຫດຜົນພຽງພໍ ສານຕ້ອງ ຕັດສິນຍົກເລີກຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍ;

2. ຖ້າຫາກເຫັນວ່າ ຄຳຮ້ອງຟ້ອງຂອງໂຈດ ຫຼື ຄຳຟ້ອງແຍ່ງຂອງຈຳເລີຍ ມີເຫດຜົນພຽງພໍ ສານຕ້ອງ ລົງຄຳຕັດສິນ:

2.1 ໃຫ້ຈຳເລີຍໃຊ້ແທນຄ່າເສຍຫາຍ ຫຼື ຄ່າປັບໃໝ ຫຼື ຄ່າປ່ອຍການຊັບແກ່ໂຈດ ຕາມແຕ່ລະ ກໍລະນີ ຫຼື ກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;

2.2 ໃຫ້ຈຳເລີຍ ສົ່ງຊັບສິ່ງຂອງ ເປັນຕົ້ນ ພາຫະນະ, ສັດ ຄືນແກ່ໂຈດ ໃນກໍລະນີ ແມ່ນການຢືມໄປໃຊ້ ຫຼື ກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;

2.3 ໃຫ້ຈຳເລີຍ ສົ່ງເງິນຕົ້ນທຶນພ້ອມດ້ວຍດອກເບ້ຍ (ຖ້າມີ) ຄືນແກ່ໂຈດ ໃນກໍລະນີ ແມ່ນການກູ້ຢືມ ຫຼື ກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;

2.4 ໃຫ້ຈຳເລີຍ ຍົກຍ້າຍອອກຈາກທີ່ດິນ ຫຼື ເຮືອນຂອງໂຈດ ໃນກໍລະນີ ແມ່ນການເຊົ່າ ຫຼື ການຕົກລົງອື່ນ ຫຼື ກົງກັນຂ້າມ ຖ້າຫາກແມ່ນຄຳຟ້ອງແຍ່ງ;

2.5 ໃຫ້ໂຈດ ແລະ ຈຳເລີຍ ຂາດຈາກສາຍຜົວເມຍ;

2.6 ໃຫ້ຈຳເລີຍ ຈ່າຍຄ່າລ້ຽງດູລູກ, ຄ່າປົວແປງຈິດໃຈ;

2.7 ໃຫ້ຄູ່ຄວາມຝ່າຍໃດໜຶ່ງປະຕິບັດພາງ ສ່ວນໃດໜຶ່ງກ່ອນ;

2.8 ການຕົກລົງອື່ນ.

ສານຂັ້ນຕົ້ນທີ່ໄດ້ຕັດສິນຄະດີແລ້ວ ຕ້ອງພິມຄຳຕັດສິນໃຫ້ສຳເລັດ ພາຍໃນເວລາ ຊາວວັນ ນັບແຕ່ວັນລົງຄຳຕັດສິນເປັນຕົ້ນໄປ.

**ມາດຕາ 264 (ປັບປຸງ) ການລົງຄຳຕັດສິນໃຫ້ປະຕິບັດພາງ**

ການປະຕິບັດພາງ ແມ່ນ ການປະຕິບັດຄຳຕັດສິນຂອງສານສ່ວນໃດໜຶ່ງ ກ່ອນຄຳຕັດສິນນັ້ນໃຊ້ໄດ້ຢ່າງເດັດຂາດ ເພື່ອຊ່ວຍບັນເທົາຄວາມເສຍຫາຍ, ຄວາມຈຳເປັນຮີບດ່ວນຂອງຄູ່ຄວາມ.

ຄຳຕັດສິນຂອງສານ ໃຫ້ປະຕິບັດພາງສ່ວນໃດໜຶ່ງກ່ອນນັ້ນ ຕ້ອງສົ່ງໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ ບ່ອນກ່ຽວຂ້ອງໃນທັນໃດ ເພື່ອຈັດຕັ້ງປະຕິບັດ ເຖິງວ່າຈະມີການຂໍອຸທອນກໍຕາມ.

ການລົງຄຳຕັດສິນ ຫຼື ພິພາກສາ ໃຫ້ປະຕິບັດພາງ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ຄະດີທີ່ມີຂໍ້ຂັດແຍ່ງກ່ຽວກັບຄວາມເສຍຫາຍ ຫຼື ໜີ້ສິນ, ສ່ວນບັນຫາຂໍ້ຂັດແຍ່ງກ່ຽວກັບ ສັງຫາລິມະຊັບ ຫຼື ອະສັງຫາລິມະຊັບ ຈະນຳມາເປັນເງື່ອນໄຂໃນການປະຕິບັດພາງບໍ່ໄດ້;

2. ຄະດີດັ່ງກ່າວ ໂຈດ ແລະ ຈຳເລີຍ ຮັບຮູ້ຄ່າເສຍຫາຍ ຫຼື ໜີ້ສິນ ນຳກັນ ແລະ ຮັບປະກັນວ່າສານຂັ້ນເທິງຈະພິພາກສາຢັ້ງຢືນເອົາຕາມ;

3. ຄະດີດັ່ງກ່າວ ຄູ່ຄວາມທີ່ຮ້ອງຂໍໃຫ້ປະຕິບັດພາງນັ້ນ ຕ້ອງມີຄວາມຈຳເປັນ, ຮີບດ່ວນ ເພື່ອບັນເທົາ, ແກ້ໄຂຄວາມເສຍຫາຍທີ່ເກີດຂຶ້ນ ແລະ ອື່ນໆ ພ້ອມທັງມີຫຼັກຖານຢັ້ງຢືນ;

4. ຄຳຕັດສິນ ຫຼື ຄຳພິພາກສາໃຫ້ປະຕິບັດພາງນັ້ນ ຕ້ອງຮັບປະກັນວ່າ ສາມາດຈັດຕັ້ງປະຕິບັດໄດ້ ເປັນຕົ້ນ ມີຫຼັກຖານຢັ້ງຢືນກ່ຽວກັບຊັບສິນ ທີ່ຈະຕ້ອງນຳມາປະຕິບັດພາງນັ້ນ;

5. ການລົງຄຳຕັດສິນ ຫຼື ຄຳພິພາກສາ ໃຫ້ປະຕິບັດພາງ ແມ່ນບໍ່ໃຫ້ເກີນ ໜຶ່ງສ່ວນສາມ ຂອງຈຳນວນທີ່ສານຕັດສິນ ຫຼື ພິພາກສາໃຫ້ ເປັນຕົ້ນ ການໃຊ້ແທນຄ່າເສຍຫາຍ ຫຼື ໜີ້ສິນ.

**ມາດຕາ 265 (ປັບປຸງ) ການເຊັນຄຳຕັດສິນ**

ປະທານຄະນະສານຕັດສິນ ແລະ ຈ່າສານ ຕ້ອງລົງລາຍເຊັນໃສ່ຄຳຕັດສິນ, ຖ້າຫາກປະທານຄະນະສານ ຫຼື ຈ່າສານ ບໍ່ສາມາດເຊັນຄຳຕັດສິນ ຍ້ອນສາເຫດພາວະວິໄສ ກໍໃຫ້ພິມ ຊື່ ແລະ ນາມສະກຸນ ຂອງຜູ້ກ່ຽວໃສ່ຄຳຕັດສິນ ແລ້ວໃຫ້ຈ່າສານຜູ້ຮັບມອບໝາຍເປັນຜູ້ເຊັນຢັ້ງຢືນ.

**ມາດຕາ 266 (ປັບປຸງ) ການເຮັດປະເດັນຄຳຕັດສິນໃຫ້ຄູ່ຄວາມ**

ສານຂັ້ນຕົ້ນທີ່ໄດ້ຕັດສິນຄະດີແລ້ວ ຖ້າຫາກບໍ່ສາມາດພິມຄຳຕັດສິນ ໃຫ້ສຳເລັດຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນມາດຕາ 263 ຂອງກົດໝາຍສະບັບນີ້ ຕ້ອງເຮັດປະເດັນຄຳຕັດສິນ ຕາມທີ່ໄດ້ບັນທຶກໄວ້ໃນປຶ້ມປະຊຸມສານ ສົ່ງໃຫ້ຄູ່ຄວາມກ່ອນກໍໄດ້ ໃນກໍລະນີ ມີການຮ້ອງຂໍ ໂດຍໃຫ້ປະທານຄະນະສານຕັດສິນເປັນຜູ້ເຊັນ.

**ມາດຕາ 267 (ປັບປຸງ) ການດັດແກ້ຄຳຜິດ ໃນຄຳຕັດສິນ**

ເມື່ອມີຄວາມຜິດພາດ ທາງດ້ານການພິມ, ການຄຳນວນຕົວເລກ ແລະ ທາງດ້ານເຕັກນິກອື່ນ ຊຶ່ງຈຳເປັນຕ້ອງໄດ້ດັດແກ້ ແຕ່ການດັດແກ້ນັ້ນ ຕ້ອງບໍ່ກະທົບເຖິງ ຂໍ້ເທັດຈິງໃນຄະດີ ແລະ ຜົນການຕັດສິນ.

ການດັດແກ້ຄຳຕັດສິນ ຕ້ອງເຮັດເປັນຄຳຊີ້ຂາດ ຂອງປະທານຄະນະສານ ຫຼື ຄະນະສານ ຫຼື ຫົວໜ້າຄະນະສານທີ່ກ່ຽວຂ້ອງ ແລ້ວແຈ້ງໃຫ້ຄູ່ຄວາມ, ຫົວໜ້າອົງການໄອຍະການປະຊາຊົນ ຫຼື ພະນັກງານປະຕິບັດຄຳຕັດສິນຂອງສານ ທີ່ກ່ຽວຂ້ອງໃນທັນໃດ.

**ມາດຕາ 268 (ປັບປຸງ) ການຮັບຊາບຄຳຕັດສິນ ໃນກໍລະນີຕັດສິນລັບຫຼັງ**

ເມື່ອມີການຕັດສິນລັບຫຼັງ ສານຂັ້ນຕົ້ນ ຕ້ອງຮຽກຄູ່ຄວາມມາ ຮັບຊາບ ແລະ ເຮັດບົດບັນທຶກຮັບຊາບຄຳຕັດສິນ ພ້ອມທັງແຈ້ງສິດໃນການຂໍຄັດຄ້ານ ແລະ ຂໍອຸທອນ ໃຫ້ຜູ້ກ່ຽວ.

ໃນກໍລະນີ ສານໄດ້ສົ່ງໝາຍຮຽກ ໃຫ້ຄູ່ຄວາມມາຮັບຊາບ ເຖິງສາມຄັ້ງແລ້ວ ແຕ່ຄູ່ຄວາມບໍ່ເຂົ້າມາໂດຍບໍ່ມີເຫດຜົນພຽງພໍ ຊຶ່ງມີການຢັ້ງຢືນຈາກຫ້ອງການບ້ານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສານສາມາດສົ່ງສຳນວນຄະດີດັ່ງກ່າວ ໄປປະຕິບັດ ຫຼື ໃຫ້ສານຂັ້ນອຸທອນພິຈາລະນາຕາມກົດໝາຍ ໃນກໍລະນີ ມີການຂໍອຸທອນ ຫຼື ສະເໜີຄັດຄ້ານ.

ໃນກໍລະນີ ຄູ່ຄວາມໜີອອກຈາກບ່ອນຢູ່ປະຈຳ ໂດຍມີການຢັ້ງຢືນຂອງຫ້ອງການບ້ານ ສານກໍຈະຕິດປະກາດທາງສາທາລະນະ ຫຼື ແຈ້ງຜ່ານພາຫະນະສື່ມວນຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 154 ແລະ 155 ຂອງກົດໝາຍສະບັບນີ້.

**ມາດຕາ 269 ການດຳເນີນການເມື່ອມີການຄັດຄ້ານການຕັດສິນລັບຫຼັງ**

ເມື່ອຄູ່ຄວາມໄດ້ຄັດຄ້ານຄຳຕັດສິນລັບຫຼັງແລ້ວ ໃຫ້ສານພິຈາລະນາຕັດສິນຄືນໃໝ່ ໂດຍຊ້ອງໜ້າຜູ້ກ່ຽວນັ້ນ ຄູ່ຄວາມຕ້ອງຍື່ນຄຳຮ້ອງຂໍຄັດຄ້ານ ຕໍ່ປະທານສານບ່ອນກ່ຽວຂ້ອງ ເພື່ອໃຫ້ຄະນະສານເກົ່າພິຈາລະນາຄືນໂດຍຊ້ອງໜ້າຜູ້ກ່ຽວ ຕາມລະບຽບການພິຈາລະນາຄະດີຢູ່ສານຂັ້ນຕົ້ນ.

ຄຳຕັດສິນລັບຫຼັງດັ່ງກ່າວ ຈະຖືກລົບລ້າງດ້ວຍຄຳຕັດສິນສະບັບໃໝ່.

**ມາດຕາ 270 ການດຳເນີນການເມື່ອມີການຂໍອຸທອນ**

ພາຍຫຼັງ ໄດ້ຮັບຊາບຄຳຕັດສິນແລ້ວ ຄູ່ຄວາມໃນຄະດີມີສິດຂໍອຸທອນ ດ້ວຍການຈອງ ຫຼື ຍື່ນຄຳຮ້ອງຂໍອຸທອນຕໍ່ສານ ທີ່ຕັດສິນເປັນຂັ້ນຕົ້ນ.

ສານຂັ້ນຕົ້ນ ຕ້ອງກວດກາຄຳຮ້ອງຂໍອຸທອນ ຕາມຮ່າງແບບພິມຂອງສານ ພ້ອມທັງກວດກາເບິ່ງວ່າການຂໍອຸທອນດັ່ງກ່າວຖືກຕ້ອງ ຕາມກຳນົດເວລາຂໍອຸທອນ ຫຼື ບໍ່. ຖ້າວ່າ ຄຳຮ້ອງຂໍອຸທອນ ມີເນື້ອໃນບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ສານຂັ້ນຕົ້ນ ຕ້ອງແນະນຳໃຫ້ຜູ້ຂໍອຸທອນ ແກ້ໄຂຂໍ້ບົກພ່ອງນັ້ນເສຍກ່ອນ. ຖ້າເຫັນວ່າຖືກຕ້ອງແລ້ວ ຕ້ອງຮັບຄຳຮ້ອງຂໍອຸທອນ ແລະ ແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຊາບ.

ສານຂັ້ນຕົ້ນ ຕ້ອງຮັບຄຳຮ້ອງຂໍອຸທອນ ເຖິງວ່າກຳນົດເວລາຂໍອຸທອນນັ້ນ ຈະໝົດແລ້ວກໍຕາມ. ແຕ່ສານຕ້ອງໃຫ້ຜູ້ຂໍອຸທອນຊີ້ແຈງ ເຫດຜົນຂອງການຊັກຊ້າ ໃນການຍື່ນຄຳຮ້ອງຂໍອຸທອນ ພ້ອມທັງອະທິບາຍຜົນສະທ້ອນຂອງການຍື່ນຄຳຮ້ອງຂໍອຸທອນ ກາຍກຳນົດໃຫ້ຜູ້ກ່ຽວເຂົ້າໃຈ.

ຖ້າຫາກມີການ ຈອງ ຫຼື ຍື່ນຄຳຮ້ອງຂໍອຸທອນ ສານຕ້ອງສົ່ງສຳນວນຄະດີ ໄປຍັງສານຂັ້ນອຸທອນພາຍໃນເວລາ ຊາວສາມວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ວັນຮັບຊາບຄຳຕັດສິນເປັນຕົ້ນໄປ.

**ມາດຕາ 271 (ປັບປຸງ) ຄຳຕັດສິນເປັນຂັ້ນຕົ້ນ ຊຶ່ງບໍ່ຖືກຂໍອຸທອນ**

ຄຳຕັດສິນເປັນຂັ້ນຕົ້ນຂອງ ສານປະຊາຊົນເຂດ ແລະ ສານປະຊາຊົນ ນະຄອນຫຼວງ, ແຂວງ ແລະ ສານເດັກ ຊຶ່ງບໍ່ຖືກຂໍອຸທອນໂດຍຄູ່ຄວາມ ຫຼື ບໍ່ຖືກສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ ຕາມກຳນົດເວລາ ຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນ ໃຫ້ຖືວ່າເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ.

ພາຍໃນເວລາ ຊາວສາມວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ວັນຮັບຊາບຄຳຕັດສິນເປັນຕົ້ນໄປ ສານຂັ້ນຕົ້ນຕ້ອງສົ່ງສຳນວນຄະດີດັ່ງກ່າວໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ ບ່ອນທີ່ກ່ຽວຂ້ອງ.

## ພາກທີ XII
## ການດຳເນີນຄະດີຢູ່ສານຂັ້ນອຸທອນ
## ໝວດທີ 1
## ສິດໃນການຂໍອຸທອນ ແລະ ການສະເໜີຄັດຄ້ານ ຄຳຕັດສິນຂອງສານຂັ້ນຕົ້ນ

**ມາດຕາ 272 (ປັບປຸງ) ສານທີ່ມີສິດພິພາກສາເປັນຂັ້ນອຸທອນ**

ສານປະຊາຊົນ ນະຄອນຫຼວງ, ແຂວງ ມີສິດພິພາກສາຄະດີເປັນຂັ້ນອຸທອນ ຕາມ ຂໍ້ມູນ ຫຼັກຖານ ແລະ ຕາມກົດໝາຍ ຄະດີທີ່ສານປະຊາຊົນເຂດໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ.

ສານປະຊາຊົນພາກ ມີສິດພິພາກສາເປັນຂັ້ນອຸທອນ ຕາມ ຂໍ້ມູນ ຫຼັກຖານ ແລະ ຕາມກົດໝາຍ ຄະດີທີ່ສານປະຊາຊົນ ນະຄອນຫຼວງ, ແຂວງ ແລະ ສານເດັກ ໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ.

**ມາດຕາ 273 (ປັບປຸງ) ບຸກຄົນທີ່ມີສິດ ໃນການຂໍອຸທອນ ຫຼື ສະເໜີຄັດຄ້ານ**

ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຂອງແຕ່ລະຝ່າຍ ຊຶ່ງເປັນຄູ່ຄວາມໃນຄະດີ ມີສິດຂໍອຸທອນ ຄຳສັ່ງຊີ້ດມ້ຽນ, ຄຳຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ, ຄຳສັ່ງ, ຄຳຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ ແລະ ຄຳຕັດສິນຂອງສານ.

ຫົວໜ້າອົງການໄອຍະການປະຊາຊົນ ກໍມີສິດສະເໜີຄັດຄ້ານຄຳຕັດສິນຂອງສານ ໃນຄະດີທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງ ເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

**ມາດຕາ 274 ການຄັດຄ້ານຄຳຕັດສິນຂອງບຸກຄົນທີສາມ**

ການຄັດຄ້ານຄຳຕັດສິນຂອງສານ ໂດຍບຸກຄົນທີສາມ ໃຫ້ປະຕິບັດດັ່ງດຽວກັນກັບການຕັດສິນລັບຫຼັງ ຫຼື ການດຳເນີນຄະດີທົ່ວໄປ ແລ້ວແຕ່ລະກໍລະນີ.

ເມື່ອບຸກຄົນທີສາມ ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີແຕ່ເບື້ອງຕົ້ນ ຖ້າຄະດີພວມດຳເນີນຢູ່ສານຂັ້ນອຸທອນ ຜູ້ກ່ຽວມີສິດຄັດຄ້ານ ໃຫ້ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ທີ່ແຕະຕ້ອງເຖິງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງຕົນ ເພື່ອໃຫ້ພິຈາລະນາຕັດສິນຄືນໂດຍຊ້ອງໜ້າຜູ້ກ່ຽວ.

**ມາດຕາ 275 (ປັບປຸງ) ກຳນົດເວລາ ຂໍອຸທອນ ແລະ ສະເໜີຄັດຄ້ານ**

ຄູ່ຄວາມ ມີສິດຂໍອຸທອນ ແລະ ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນ ພາຍໃນເວລາ ຊາວວັນ ນັບແຕ່ວັນລົງຄຳຕັດສິນ ສຳລັບຜູ້ຖືກສານຕັດສິນຊ້ອງໜ້າ ຫຼື ຖືວ່າຊ້ອງໜ້າ ຫຼື ນັບແຕ່ວັນຮັບຊາບຄຳຕັດສິນເປັນຕົ້ນໄປ ສຳລັບຜູ້ຖືກສານຕັດສິນລັບຫຼັງ.

ສຳລັບການຂໍອຸທອນຄຳສັ່ງຊີ້ດມ້ຽນຄະດີ ຫຼື ຄຳຊີ້ຂາດບໍ່ຮັບເອົາຄະດີມາພິຈາລະນາ, ຄຳສັ່ງ, ຄຳຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ ຂອງສານນັ້ນ ກຳນົດເວລາຂໍອຸທອນ ແມ່ນ ເຈັດວັນ ນັບແຕ່ວັນຮັບຊາບ ຄຳສັ່ງ ຫຼື ຄຳຊີ້ຂາດ ເປັນຕົ້ນໄປ.

ຄູ່ຄວາມ ທີ່ຂໍອຸທອນນັ້ນ ໃຫ້ນຳເອົາເງິນມາວາງສານ ແລະ ເສຍຄ່າຂໍອຸທອນ ຕາມກົດໝາຍ.

ຖ້າກຳນົດເວລາໃນການຂໍອຸທອນ ຄຳສັ່ງຊີ້ດມ້ຽນຄະດີ, ຄຳຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ, ຄຳສັ່ງ, ຄຳຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ ແລະ ຄຳຕັດສິນຂອງສານ ວັນສຸດທ້າຍຫາກເປັນວັນພັກທາງລັດຖະການ ໃຫ້ເລື່ອນເປັນວັນລັດຖະການຖັດໄປ.

**ມາດຕາ 276 (ປັບປຸງ) ການຂໍອຸທອນ**

ການຂໍອຸທອນ ອາດຈະເຮັດດ້ວຍການຈອງການຂໍອຸທອນ ຫຼື ຍື່ນຄໍາຮ້ອງຂໍອຸທອນຕໍ່ສານ ທີ່ໄດ້ຕັດສິນຄະດີດັ່ງກ່າວເປັນຂັ້ນຕົ້ນ.

ຄູ່ຄວາມ ສາມາດຂໍອຸທອນ ບັນຫາທາງດ້ານ ຂໍ້ມູນ ຫຼັກຖານ ຫຼື ກົດໝາຍ ຕໍ່ຄໍາຕັດສິນຂອງສານຂັ້ນຕົ້ນ ຊຶ່ງຕົນບໍ່ພໍໃຈຕໍ່ການຕັດສິນດັ່ງກ່າວ ຫຼື ບັນຫາທີ່ຄູ່ຄວາມໄດ້ຮ້ອງຟ້ອງ, ຮ້ອງຂໍ ຫຼື ຟ້ອງແຍ່ງ ຕໍ່ສານຂັ້ນຕົ້ນແລ້ວ ແຕ່ບໍ່ໄດ້ຮັບການພິຈາລະນາ.

ຄໍາຕັດສິນໃຫ້ປະຕິບັດພາງ, ຄໍາສັ່ງປະຕິບັດຜົນການໄກ່ເກ່ຍ, ຄໍາສັ່ງຂອງສານ ກ່ຽວກັບການນໍາໃຊ້ມາດຕະການຂອງສານຕໍ່ຄົນເສຍຈິດ, ຕໍ່ນິຕິບຸກຄົນທີ່ຖືກຍຸບເລີກ, ຕໍ່ ຜົວ ຫຼື ເມຍ, ຕໍ່ເດັກ ແລະ ມາດຕະການຊົ່ວຄາວອື່ນຂອງສານ ຈະຂໍອຸທອນບໍ່ໄດ້.

**ມາດຕາ 277 (ປັບປຸງ) ເນື້ອໃນຄໍາຮ້ອງຂໍອຸທອນ**

ຄໍາຮ້ອງຂໍອຸທອນ ຕ້ອງປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ ຂອງຜູ້ຂໍອຸທອນ;
2. ເລກທີຄໍາຕັດສິນທີ່ຂໍອຸທອນ;
3. ປະເດັນທີ່ຂໍອຸທອນ ພ້ອມດ້ວຍເຫດຜົນ ແລະ ຫຼັກຖານຢັ້ງຢືນ;
4. ວັນ, ເດືອນ, ປີ ຍື່ນຄໍາຮ້ອງຂໍອຸທອນ, ລາຍເຊັນ ແລະ ແປະໂປ້ມື;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 278 (ປັບປຸງ) ລະບຽບການ ແລະ ເວລາໃນການຍື່ນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ**

ໃນກໍລະນີ ມີການຈອງຂໍອຸທອນ ຫຼື ສະເໜີຄັດຄ້ານ ຄໍາສັ່ງຊັດມ້ຽນ, ຄໍາຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ ແລະ ຄໍາສັ່ງ, ຄໍາຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ ແລະ ຄໍາຕັດສິນຂອງສານ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງຍື່ນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານຂອງຕົນ ຕໍ່ສານຂັ້ນອຸທອນ ໂດຍຜ່ານສານທີ່ໄດ້ຕັດສິນຄະດີເປັນຂັ້ນຕົ້ນ.

ໃນກໍລະນີ ສານຂັ້ນຕົ້ນ ຫາກບໍ່ຮັບ ຫຼື ແກ່ຍາວການຮັບຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ ຄໍາຕັດສິນຂອງສານນັ້ນ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຍື່ນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານໂດຍກົງຕໍ່ສານຂັ້ນອຸທອນ.

ຫຼັງຈາກກໍານົດຂໍອຸທອນໄດ້ສິ້ນສຸດແລ້ວ ຖ້າສານຂັ້ນຕົ້ນທີ່ໄດ້ຮັບຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ ຫາກແກ່ຍາວເກີນກໍານົດເວລາ ໃນການສົ່ງສໍານວນຄະດີຂຶ້ນສານຂັ້ນອຸທອນນັ້ນ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຕໍ່ສານຂັ້ນອຸທອນ ເພື່ອທວງເອົາຄະດີດັ່ງກ່າວ ມາພິຈາລະນາ.

ໃນກໍລະນີ ມີການຈອງຂໍອຸທອນ ຫຼື ສະເໜີຄັດຄ້ານ ຄໍາຕັດສິນຂອງສານ ຕ້ອງຍື່ນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ ພາຍໃນເວລາ ຊາວວັນ ນັບແຕ່ວັນຈອງຂໍອຸທອນ ຫຼື ສະເໜີຄັດຄ້ານ ເປັນຕົ້ນໄປ.

**ມາດຕາ 279 ສິດໃນການຖອນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ**

ກ່ອນການປິດການໂຕ້ຖຽງ ໃນທີ່ປະຊຸມສານຂອງສານຂັ້ນອຸທອນນັ້ນ ຄູ່ຄວາມ ແລະ ບຸກຄົນທີສາມໃນຄະດີ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຖອນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ ຂອງຕົນທັງໝົດ ຫຼື ບາງສ່ວນ ກໍໄດ້.

ໃນກໍລະນີ ມີການຖອນຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານແລ້ວ ຄູ່ຄວາມ ແລະ ບຸກຄົນທີສາມໃນຄະດີ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານ ຄືນໃໝ່ອີກ.

**ມາດຕາ 280 (ປັບປຸງ) ການດຳເນີນການເມື່ອມີການຖອນ ຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ**

ຜູ້ຮ້ອງຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ສະເໜີຄັດຄ້ານ ຄຳສັ່ງຊັດມ້ຽນ, ຄຳຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ, ຄຳສັ່ງ, ຄຳຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ມີຈຸດປະສົງຖອນ ການຂໍອຸທອນ ຫຼື ການສະເໜີຄັດຄ້ານ ຂອງຕົນ ຕ້ອງຂຽນຄຳຮ້ອງຂໍຖອນ ຫຼື ຄຳສະເໜີຄັດຄ້ານ ຍື່ນຕໍ່ສານປະຊາຊົນທີ່ກ່ຽວຂ້ອງ ເພື່ອພິຈາລະນາ, ເວັ້ນເສຍແຕ່ການຂໍຖອນໃນທີ່ປະຊຸມສານນັ້ນ ໃຫ້ຈ່າສານເປັນຜູ້ບັນທຶກ.

ເມື່ອໄດ້ຮັບຄຳຮ້ອງຂໍຖອນການອຸທອນ ຫຼື ການສະເໜີຄັດຄ້ານ ສານປະຊາຊົນທີ່ກ່ຽວຂ້ອງ ຕ້ອງນຳເອົາບັນຫາດັ່ງກ່າວມາພິຈາລະນາ ຖ້າເຫັນວ່າການຂໍຖອນດັ່ງກ່າວ ບໍ່ຂັດກັບກົດໝາຍ ຫຼື ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ ສານຕ້ອງອອກຄຳຊີ້ຂາດ ໃຫ້ຖອນຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ ດັ່ງກ່າວ ແລ້ວສົ່ງສຳນວນຄະດີໄປປະຕິບັດ ຖ້າແມ່ນການຖອນຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ ທັງໝົດ.

ໃນກໍລະນີ ການຖອນຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ ບາງສ່ວນ ສານຈະນຳມາພິຈາລະນາໃນສ່ວນທີ່ບໍ່ໄດ້ຖອນ.

ສຳລັບ ການຖອນຄຳຮ້ອງຂໍຄັດຄ້ານຂອງຄູ່ຄວາມ ກໍໃຫ້ປະຕິບັດດັ່ງດຽວກັນກັບການຖອນຄຳຮ້ອງຂໍອຸທອນ.

**ມາດຕາ 281 (ປັບປຸງ) ຜົນສະທ້ອນຂອງການຂໍອຸທອນ ຫຼື ການສະເໜີຄັດຄ້ານ**

ການຂໍອຸທອນ ຫຼື ການສະເໜີຄັດຄ້ານຄຳຕັດສິນ ເປັນສາເຫດພາໃຫ້ໂຈະການປະຕິບັດຄຳຕັດສິນ ຊຶ່ງຖືກຂໍອຸທອນ ຫຼື ຖືກສະເໜີຄັດຄ້ານ, ເວັ້ນເສຍແຕ່ມີຄຳຕັດສິນຂອງສານໃຫ້ປະຕິບັດພາງ ຊຶ່ງຕ້ອງສົ່ງໄປປະຕິບັດ ເຖິງຈະມີການຂໍອຸທອນຄຳຕັດສິນ ຫຼື ສະເໜີຄັດຄ້ານຄຳຕັດສິນ ໃນສ່ວນອື່ນກໍຕາມ.

## ໝວດທີ 2
## ການພິຈາລະນາຄະດີຂອງສານຂັ້ນອຸທອນ

**ມາດຕາ 282 (ປັບປຸງ) ການຮັບເອົາຄະດີມາພິຈາລະນາເປັນຂັ້ນອຸທອນ**

ເມື່ອມີການຂໍອຸທອນ ຫຼື ການສະເໜີຄັດຄ້ານ ຖືກຕ້ອງຕາມກຳນົດເວລາ ແລະ ປະຕິບັດຕາມລະບຽບການຂໍອຸທອນ ຫຼື ສະເໜີຄັດຄ້ານແລ້ວ ສານຂັ້ນອຸທອນ ກໍຈະຮັບເອົາຄະດີມາພິຈາລະນາເປັນຂັ້ນອຸທອນ ຕາມລະບຽບການ. ຫົວໜ້າຄະນະສານ ຈະມອບສຳນວນຄະດີ ໃຫ້ຜູ້ພິພາກສາຄົ້ນຄວ້າ ເພື່ອກະກຽມນຳອອກໄຕ່ສວນໃນທີ່ປະຊຸມສານ.

**ມາດຕາ 283 (ປັບປຸງ) ການພິຈາລະນາຄຳຮ້ອງຂໍອຸທອນທີ່ຍື່ນກາຍເວລາ**

ຄຳຮ້ອງຂໍອຸທອນ ທີ່ຍື່ນກາຍເວລາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 278 ວັກທີສີ່ ຂອງກົດໝາຍສະບັບນີ້ ສານຕ້ອງອອກຄຳຊີ້ຂາດ ບໍ່ຮັບເອົາຄຳຮ້ອງດັ່ງກ່າວມາພິຈາລະນາ ເພາະຖືວ່າຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ.

ຄຳຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ ເນື່ອງຈາກຄຳຮ້ອງຂໍອຸທອນຍື່ນກາຍເວລາທີ່ໄດ້ກຳນົດໄວ້ນັ້ນ ຈະບໍ່ໃຫ້ສິດໃນການຂໍລົບລ້າງ.

**ມາດຕາ 284 ການຄົ້ນຄວ້າຄະດີຂອງສານຂັ້ນອຸທອນ**

ການຄົ້ນຄວ້າຄະດີ ຂອງສານຂັ້ນອຸທອນ ຕ້ອງລົງເລິກບັນຫາທີ່ມີການຂໍອຸທອນເປັນຕົ້ນຕໍ ໂດຍເລັ່ງໃສ່ບັນຫາ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ.

**ມາດຕາ 285 (ປັບປຸງ) ການຮັບຫຼັກຖານຢູ່ສານຂັ້ນອຸທອນ**

ສານຂັ້ນອຸທອນ ສາມາດຮັບຫຼັກຖານທີ່ຄູ່ຄວາມ ໄດ້ຍື່ນບັນຊີຫຼັກຖານ ຕໍ່ສານຂັ້ນຕົ້ນແລ້ວນັ້ນ ມາພິຈາລະນາ, ເວັ້ນເສຍແຕ່ ຍັງມີບາງຫຼັກຖານ ທີ່ຈະຍື່ນຕໍ່ສານຂັ້ນອຸທອນ ໂດຍມີການຢັ້ງຢືນຈາກສານຂັ້ນຕົ້ນ.

**ມາດຕາ 286 (ປັບປຸງ) ຂອບເຂດການພິຈາລະນາຂອງສານຂັ້ນອຸທອນ**

ສານຂັ້ນອຸທອນ ພິຈາລະນາບັນຫາ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ ທີ່ສານຂັ້ນຕົ້ນໄດ້ຕັດສິນ ຊຶ່ງຖືກຂໍອຸທອນ ຫຼື ສະເໜີຄັດຄ້ານ. ບັນຫາໃດທີ່ສານຂັ້ນຕົ້ນ ຍັງບໍ່ໄດ້ພິຈາລະນາຕັດສິນ ຫຼື ຄູ່ຄວາມບໍ່ໄດ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ບໍ່ໄດ້ສະເໜີຄັດຄ້ານ ສານຂັ້ນອຸທອນຈະນຳມາພິຈາລະນາ ເປັນຂັ້ນອຸທອນແມ່ນບໍ່ໄດ້.

## ໝວດທີ 3
## ການໄຕ່ສວນຄະດີຢູ່ສານຂັ້ນອຸທອນ

**ມາດຕາ 287 (ປັບປຸງ) ບຸກຄົນທີ່ເຂົ້າຮ່ວມ ໃນທີ່ປະຊຸມສານ ຂອງສານຂັ້ນອຸທອນ**

ສານຂັ້ນອຸທອນ ຕ້ອງຮຽກຄູ່ຄວາມເຂົ້າມາຮ່ວມ ໃນທີ່ປະຊຸມສານ.

ພະນັກງານໄອຍະການປະຊາຊົນ ມີສິດເຂົ້າຮ່ວມໃນທີ່ປະຊຸມສານຂອງສານຂັ້ນອຸທອນ ໃນຄະດີທີ່ພົວພັນກັບຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ສັງຄົມ, ສິດ ແລະ ຜົນປະໂຫຍດຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

ຄູ່ຄວາມ ມີສິດສະເໜີພະຍານມາໃຫ້ການໃນທີ່ປະຊຸມສານ ຫຼື ສະເໜີຫຼັກຖານເພີ່ມໄດ້ ໃນເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນມາດຕາ 285 ຂອງກົດໝາຍສະບັບນີ້ ກ່ອນປິດການໂຕ້ຖຽງ.

**ມາດຕາ 288 (ປັບປຸງ) ລະບຽບການໄຕ່ສວນຂອງສານຂັ້ນອຸທອນ**

ລະບຽບການໄຕ່ສວນຄະດີຢູ່ທີ່ປະຊຸມສານຂັ້ນອຸທອນ ໃຫ້ປະຕິບັດດັ່ງດຽວກັນ ກັບລະບຽບການໄຕ່ສວນຢູ່ສານຂັ້ນຕົ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 236 ຫາ ມາດຕາ 254 ຂອງກົດໝາຍສະບັບນີ້.

ພາຍຫຼັງປະທານຄະນະສານຕັດສິນ ໄດ້ກ່າວເປີດປະຊຸມສານຕາມລະບຽບການ ແລະ ຄະນະສານຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານຕັດສິນ ສະເໜີໃຫ້ຜູ້ຂໍອຸທອນ ຫຼື ພະນັກງານໄອຍະການປະຊາຊົນທີ່ເຂົ້າຮ່ວມປະຊຸມສານນັ້ນ ໃຫ້ເຫດຜົນກ່ຽວກັບການຂໍອຸທອນ ຫຼື ການສະເໜີຄັດຄ້ານຂອງຕົນຕໍ່ທີ່ປະຊຸມສານ.

ການໄຕ່ສວນໃນທີ່ປະຊຸມສານ ຕ້ອງເນັ້ນໃສ່ສະເພາະບັນຫາທີ່ມີການ ຂໍອຸທອນ ຫຼື ສະເໜີຄັດຄ້ານ.

ໃນກໍລະນີ ທີ່ມີການສະເໜີຫຼັກຖານເພີ່ມ ບຸກຄົນທີ່ໄດ້ຍື່ນບັນຊີຫຼັກຖານຕໍ່ສານຂັ້ນຕົ້ນນັ້ນ ຄະນະສານຕ້ອງແຈ້ງໃຫ້ພະນັກງານໄອຍະການປະຊາຊົນ ແລະ ບັນດາຜູ້ເຂົ້າຮ່ວມໃນທີ່ປະຊຸມສານຮັບຮູ້ ແລະ ໃຫ້ຄູ່ຄວາມອະທິບາຍ, ຊີ້ແຈງ ກ່ຽວກັບຫຼັກຖານດັ່ງກ່າວ. ພາຍຫຼັງ ໄດ້ປິດການໂຕ້ຖຽງ ແລະ ໄດ້ຟັງຄຳຖະແຫຼງ ຂອງພະນັກງານໄອຍະການປະຊາຊົນແລ້ວ ປະທານຄະນະສານ ກໍປະກາດປິດປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ.

ການພິຈາລະນາໃນຫ້ອງປະຊຸມລັບ, ການຮ່າງ ແລະ ການລົງຄຳເຫັນໃນຄຳພິພາກສາ, ການປະກາດຄຳພິພາກສາ ແລະ ການເລື່ອນການປະກາດຄຳພິພາກສາ ໃນທີ່ປະຊຸມສານ ກໍໃຫ້ປະຕິບັດດັ່ງດຽວກັນກັບການພິຈາລະນາຢູ່ສານຂັ້ນຕົ້ນ.

**ມາດຕາ 289 (ປັບປຸງ) ຄໍາພິພາກສາຂອງສານຂັ້ນອຸທອນ**

ຄະນະສານ ຂອງສານຂັ້ນອຸທອນພິພາກສາຄະດີ ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄໍາພິພາກສາ ຂອງສານຂັ້ນອຸທອນ ປະກອບດ້ວຍ ພາກສະເໜີ, ພາກເນື້ອຄະດີ, ພາກຮູບຄະດີ, ພາກວິນິດໄສ ແລະ ພາກຕັດສິນ.

ເນື້ອໃນຂອງພາກສະເໜີ, ພາກເນື້ອຄະດີ ແລະ ພາກວິນິດໄສນັ້ນ ໃຫ້ປະຕິບັດດັ່ງດຽວກັນກັບຄໍາຕັດສິນຂອງສານຂັ້ນຕົ້ນ.

ສໍາລັບ ພາກຮູບຄະດີ ໃຫ້ກໍານົດຂັ້ນຕອນຂອງການດໍາເນີນຄະດີຜ່ານມາ ເປັນຕົ້ນ ການຕັດສິນ, ການຂໍອຸທອນ. ສ່ວນພາກຕັດສິນ ໃຫ້ກໍານົດການເຂົ້າຮ່ວມ ຫຼື ບໍ່ເຂົ້າຮ່ວມຂອງຄູ່ຄວາມ (ຊ້ອງໜ້າ ຫຼື ລັບຫຼັງ), ຮູບຄະດີ, ເນື້ອຄະດີ, ຜົນການລົງຄໍາພິພາກສາ ໃນແຕ່ລະປະເດັນ, ຄ່າທໍານຽມຂອງຜູ້ເສຍຄະດີ ຫຼື ຄ່າທໍານຽມສານອື່ນ ແລະ ສິດໃນການຂໍລຶບລ້າງ ຫຼື ສະເໜີຄັດຄ້ານ ໃຫ້ປະຕິບັດດັ່ງດຽວກັນກັບ ຄໍາຕັດສິນຂອງສານຂັ້ນຕົ້ນ.

ຄໍາພິພາກສາ ຕ້ອງເຮັດເປັນ ສາມສະບັບ ສະບັບໜຶ່ງໄວ້ໃນສໍານວນ, ສ່ວນອີກສະບັບໜຶ່ງໄວ້ ໃນສໍານວນຄະດີ, ສະບັບໜຶ່ງໃຫ້ ກອງ ຫຼື ຫ້ອງ ປະຕິບັດຄໍາຕັດສິນຂອງສານ. ຄໍາພິພາກສາທີ່ຄູ່ຄວາມ ຫຼື ພາກສ່ວນອື່ນຕ້ອງການນັ້ນ ໃຫ້ເອົາສະບັບສໍາເນົາ ໂດຍແມ່ນຈ່າສານເປັນຜູ້ຢັ້ງຢືນ.

**ມາດຕາ 290 (ປັບປຸງ) ປະເພດຄໍາພິພາກສາຂອງສານຂັ້ນອຸທອນ**

ປະເພດຄໍາພິພາກສາຂອງສານຂັ້ນອຸທອນ ມີ ດັ່ງນີ້:

1. ບໍ່ຮັບເອົາຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍອຸທອນ;

2. ຍົກເລີກຄໍາຮ້ອງຂໍອຸທອນ ຫຼື ຄໍາສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄໍາຕັດສິນຂອງສານຂັ້ນຕົ້ນທັງໝົດ;

3. ປ່ຽນແປງ ຄໍາຕັດສິນຂອງສານຂັ້ນຕົ້ນ ບາງສ່ວນ ຫຼື ທັງໝົດ ແລ້ວພິພາກສາໃໝ່;

4. ລຶບລ້າງຄໍາຕັດສິນ ແລ້ວສົ່ງສໍານວນຄະດີໄປໃຫ້ສານຂັ້ນຕົ້ນຄະນະໃໝ່ ພິຈາລະນາຄືນ ຫຼື ຄະນະເກົ່າ ໃນກໍລະນີ ທີ່ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄໍາຮ້ອງຂໍອັນໃດໜຶ່ງຂອງຄູ່ຄວາມ ຫຼື ຄໍາສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນ;

5. ລຶບລ້າງຄໍາຕັດສິນຂອງສານຂັ້ນຕົ້ນ ໂດຍບໍ່ສົ່ງໃຫ້ສານໃດໜຶ່ງ ພິຈາລະນາ;

6. ລົງຄໍາພິພາກສາ ໃຫ້ປະຕິບັດພາງສ່ວນໃດໜຶ່ງ ເຖິງວ່າຈະມີການຂໍລຶບລ້າງ ຫຼື ສະເໜີຄັດຄ້ານກໍຕາມ.

ຄໍາພິພາກສາຂອງສານຂັ້ນອຸທອນ ເປັນຄໍາພິພາກສາຂັ້ນສຸດທ້າຍທາງດ້ານ ຂໍ້ມູນ ຫຼັກຖານ.

ສານຂັ້ນອຸທອນ ຕ້ອງພິມຄໍາພິພາກສາໃຫ້ສໍາເລັດ ພາຍໃນເວລາ ຊາວວັນ ນັບແຕ່ວັນ ລົງຄໍາພິພາກສາເປັນຕົ້ນໄປ.

**ມາດຕາ 291 (ໃໝ່) ການບໍ່ພິຈາລະນາຄໍາຮ້ອງຂໍອຸທອນ**

ຄໍາຮ້ອງຂໍອຸທອນ ຂອງຄູ່ຄວາມ ກ່ຽວກັບບັນຫາໃດໜຶ່ງ ທີ່ຄູ່ຄວາມບໍ່ໄດ້ສະເໜີຕໍ່ສານຂັ້ນຕົ້ນ ແລະ ສານຂັ້ນຕົ້ນ ບໍ່ໄດ້ນໍາເອົາບັນຫາດັ່ງກ່າວມາພິຈາລະນານັ້ນ ສານຂັ້ນອຸທອນ ຈະບໍ່ຮັບເອົາຄໍາຮ້ອງນັ້ນມາ ພິຈາລະນາ.

**ມາດຕາ 292 (ປັບປຸງ) ສາເຫດພາໃຫ້ມີການລຶບລ້າງ ຫຼື ປ່ຽນແປງຄໍາຕັດສິນ**

ສາເຫດພາໃຫ້ມີການລຶບລ້າງ ຫຼື ປ່ຽນແປງຄໍາຕັດສິນຂອງສານຂັ້ນຕົ້ນ ມີກໍລະນີ ດັ່ງນີ້:

1. ການອະທິບາຍເຫດການຂອງຄະດີບໍ່ຊັດເຈນ;

2. ການນໍາເອົາຫຼັກຖານໃນຄະດີ ອອກມາພິຈາລະນາບໍ່ຄົບຖ້ວນ;

3. ການວິນິດໄສຂອງສານ ບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ;

4. ການນຳໃຊ້ກົດໝາຍບໍ່ຖືກຕ້ອງ;

5. ການລະເມີດລະບຽບການດຳເນີນຄະດີແພ່ງ;

6. ສານຂັ້ນຕົ້ນ ໄດ້ວິນິດໄສແລ້ວ ແຕ່ບໍ່ໄດ້ລົງຄຳຕັດສິນ ຫຼື ບໍ່ໄດ້ພິຈາລະນາບັນຫາໃດໜຶ່ງ;

7. ສາເຫດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 293 (ປັບປຸງ) ການລົບລ້າງຄຳຕັດສິນໂດຍບໍ່ສົ່ງໃຫ້ສານໃດໜຶ່ງ ພິຈາລະນາ**

ສານຂັ້ນອຸທອນ ຈະພິພາກສາລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນ ໂດຍບໍ່ສົ່ງໃຫ້ສານໃດໜຶ່ງ ພິຈາລະນາ ໃນກໍລະນີ ເຫັນວ່າ:

1. ຄູ່ຄວາມຝ່າຍໃດໜຶ່ງໃນຄະດີ ເສຍຊີວິດໂດຍບໍ່ມີຜູ້ສືບຕໍ່ແທນຕົວ ໃນການດຳເນີນຄະດີ;

2. ນິຕິບຸກຄົນ ທີ່ເປັນຄູ່ຄວາມໃນຄະດີ ຫາກຖືກຍຸບເລີກ ຫຼື ຖືກສານຕັດສິນໃຫ້ລົ້ມລະລາຍ ໂດຍບໍ່ມີຜູ້ສືບຕໍ່ແທນຕົວ ໃນການດຳເນີນຄະດີ;

3. ຄະດີ ທີ່ໂຈດບໍ່ມີສິດຮ້ອງຟ້ອງ ເຊັ່ນ ໂຈດບໍ່ມີກຳມະສິດໃນຊັບ ທີ່ເປັນເປົ້າໝາຍການຮ້ອງຟ້ອງ; ສິດ ແລະ ຜົນປະໂຫຍດຂອງໂຈດ ບໍ່ໄດ້ຖືກລະເມີດ; ສິດ ແລະ ຜົນປະໂຫຍດຂອງໂຈດ ຍັງບໍ່ທັນເກີດຂຶ້ນເທື່ອ; ຜົວຂໍຢ່າຮ້າງ ໃນເວລາທີ່ເມຍພວມຖືພາ ຫຼື ຫຼັງຈາກທີ່ລູກນັ້ນ ເກີດມາບໍ່ທັນຮອດ ໜຶ່ງປີ; ການມອບຊັບສິ່ງຂອງ ທີ່ຜູ້ມອບບໍ່ມີສິດທວງຄືນ;

4. ຄະດີ ໄດ້ຖືກຕັດສິນ ສຳເລັດມາກ່ອນແລ້ວ;

5. ຄະດີ ທີ່ໝົດອາຍຸຄວາມໃນການຮ້ອງຟ້ອງ.

**ມາດຕາ 294 (ປັບປຸງ) ການລົບລ້າງຄຳຕັດສິນ ແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນຕົ້ນ ພິຈາລະນາ**

ສານຂັ້ນອຸທອນ ຈະພິພາກສາລົບລ້າງ ຄຳຕັດສິນຂອງສານຂັ້ນຕົ້ນ ແລ້ວສົ່ງສຳນວນຄະດີ ໃຫ້ສານຂັ້ນຕົ້ນພິຈາລະນາ ໃນກໍລະນີ ເຫັນວ່າ:

1. ການຕັດສິນຂອງສານຂັ້ນຕົ້ນ ບໍ່ໄດ້ນຳເອົາຂໍ້ສະເໜີ ຫຼື ຫຼັກຖານມາພິຈາລະນາຢ່າງຄົບຖ້ວນ;

2. ການປະກອບຄະນະສານບໍ່ຖືກຕ້ອງ;

3. ການດຳເນີນຄະດີແພ່ງ ມີການລະເມີດກົດໝາຍ.

ສານຂັ້ນອຸທອນ ຕ້ອງວິນິດໄສກ່ຽວກັບປະເດັນທີ່ສົ່ງກັບໃຫ້ຊັດເຈນ ແລະ ມີຄຳເຫັນຊີ້ແຈງຕໍ່ແຕ່ລະປະເດັນທີ່ສົ່ງກັບນັ້ນຢ່າງລະອຽດ ແລະ ມີເປົ້າໝາຍ ເພື່ອເປັນບ່ອນອີງໃຫ້ສານຂັ້ນຕົ້ນ ນຳໄປຄົ້ນຄວ້າ ພິຈາລະນາ.

**ມາດຕາ 295 (ປັບປຸງ) ການພິຈາລະນາຄືນຂອງສານຂັ້ນຕົ້ນ**

ສານຂັ້ນຕົ້ນ ຕ້ອງນຳເອົາຄະດີ ທີ່ສານຂັ້ນອຸທອນສົ່ງຄືນໃຫ້ນັ້ນ ມາພິຈາລະນາ ແລະ ລົງຄຳຕັດສິນບົນພື້ນຖານ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ.

ສານຂັ້ນຕົ້ນ ຈະພິຈາລະນາຕັດສິນຕາມການວິນິດໄສ ຂອງສານຂັ້ນອຸທອນ ເມື່ອເຫັນວ່າ ມີ ຂໍ້ມູນ ຫຼັກຖານ ຕົວຈິງ ແລະ ຖືກຕ້ອງ.

**ມາດຕາ 296 (ປັບປຸງ) ການເຮັດປະເດັນຄຳພິພາກສາໃຫ້ຄູ່ຄວາມ**

ສານຂັ້ນອຸທອນ ທີ່ໄດ້ພິພາກສາຄະດີແລ້ວ ຖ້າຫາກບໍ່ສາມາດພິມຄຳພິພາກສາ ໃຫ້ສຳເລັດຕາມເວລາທີ່ໄດ້ກຳນົດໄວ້ໃນມາດຕາ 290 ຂອງກົດໝາຍສະບັບນີ້ ຕ້ອງເຮັດປະເດັນຄຳພິພາກສາ ຕາມທີ່ໄດ້ບັນທຶກໄວ້ໃນປຶ້ມປະຊຸມສານ ໃຫ້ຄູ່ຄວາມກ່ອນກໍໄດ້ ໃນກໍລະນີມີການຮ້ອງຂໍ ໂດຍໃຫ້ປະທານຄະນະສານຕັດສິນ ເປັນຜູ້ເຊັນ.

**ມາດຕາ 297 (ປັບປຸງ) ການດຳເນີນການເມື່ອບໍ່ມີການຂໍລົບລ້າງ ຫຼື ສະເໜີຄັດຄ້ານ**

ເມື່ອຄຳພິພາກສາຂັ້ນອຸທອນ ບໍ່ຖືກຂໍລົບລ້າງ ຫຼື ບໍ່ຖືກສະເໜີຄັດຄ້ານແລ້ວ ສານຂັ້ນອຸທອນ ຕ້ອງສົ່ງຄຳພິພາກສາ ພ້ອມດ້ວຍສຳນວນຄະດີຄືນ ໃຫ້ສານປະຊາຊົນ ທີ່ຕັດສິນເປັນຂັ້ນຕົ້ນ ພາຍໃນເວລາ ສາມວັນ ຫຼັງຈາກໝົດກຳນົດເວລາຂໍລົບລ້າງ ເພື່ອສົ່ງໃຫ້ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ.

**ມາດຕາ 298 ການດຳເນີນການເມື່ອມີການຂໍລົບລ້າງ ຫຼື ສະເໜີຄັດຄ້ານ**

ພາຍຫຼັງ ໄດ້ຮັບຊາບຄຳພິພາກສາແລ້ວ ຄູ່ຄວາມໃນຄະດີມີສິດຂໍລົບລ້າງດ້ວຍການຈອງ ຫຼື ຍື່ນຄຳຮ້ອງຂໍລົບລ້າງຕໍ່ສານ ທີ່ໄດ້ພິພາກສາເປັນຂັ້ນອຸທອນ.

ສານຂັ້ນອຸທອນ ຕ້ອງກວດກາຄຳຮ້ອງຂໍລົບລ້າງ ຕາມຮ່າງແບບພິມຂອງສານ ພ້ອມທັງກວດກາເບິ່ງວ່າ ການຂໍລົບລ້າງດັ່ງກ່າວຖືກຕ້ອງ ຕາມກຳນົດເວລາຂໍລົບລ້າງ ຫຼື ບໍ່. ຖ້າວ່າຄຳຮ້ອງຂໍລົບລ້າງ ຫາກມີເນື້ອໃນບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງແລ້ວ ສານຂັ້ນອຸທອນ ຕ້ອງແນະນຳໃຫ້ຜູ້ຂໍລົບລ້າງ ແກ້ໄຂຂໍ້ບົກພ່ອງນັ້ນເສຍກ່ອນ. ຖ້າເຫັນວ່າຖືກຕ້ອງແລ້ວ ຕ້ອງຮັບຄຳຮ້ອງຂໍລົບລ້າງ ແລະ ແຈ້ງໃຫ້ຄູ່ຄວາມຝ່າຍກົງກັນຂ້າມຮັບຊາບ.

ຖ້າເຫັນວ່າ ການຂໍລົບລ້າງ ບໍ່ແມ່ນບັນຫາທາງດ້ານກົດໝາຍ ຫຼື ບໍ່ກ່ຽວຂ້ອງກັບຄະດີ ຊຶ່ງສານໄດ້ແນະນຳໃຫ້ຄູ່ຄວາມແກ້ໄຂ ແລະ ອະທິບາຍເຖິງ ສິດ ແລະ ໜ້າທີ່ ຂອງສານຂັ້ນລົບລ້າງ ໃຫ້ຄູ່ຄວາມເຂົ້າໃຈແລ້ວ. ແຕ່ຜູ້ກ່ຽວບໍ່ຍອມແກ້ໄຂ ແລະ ຍັງຢັ້ງຢືນຕາມການຂໍລົບລ້າງເດີມ ສານຂັ້ນອຸທອນ ຕ້ອງຮັບເອົາຄຳຮ້ອງຂໍລົບລ້າງເພື່ອດຳເນີນຕາມຂັ້ນຕອນຂອງກົດໝາຍ.

**ມາດຕາ 299 (ປັບປຸງ) ການບໍ່ອະນຸຍາດໃຫ້ຂໍລົບລ້າງ**

ຄຳພິພາກສາຂອງສານຂັ້ນອຸທອນ ທີ່ບໍ່ອະນຸຍາດໃຫ້ຂໍລົບລ້າງ ມີກໍລະນີ ດັ່ງນີ້:

1. ຄຳພິພາກສາຂອງສານຂັ້ນອຸທອນ ທີ່ຢັ້ງຢືນເອົາຕາມຄຳຕັດສິນ ຂອງສານຂັ້ນຕົ້ນ ໃນກໍລະນີຈຳເລີຍຮັບຮູ້ ການຮ້ອງຟ້ອງຂອງໂຈດ;
2. ຄຳສັ່ງຊັດມ້ຽນຄະດີ, ຄຳຊີ້ຂາດບໍ່ຮັບເອົາຄະດີມາພິຈາລະນາ ແລະ ຄຳສັ່ງ, ຄຳຊີ້ຂາດອື່ນ ກ່ຽວກັບເນື້ອຄະດີ;
3. ຄະດີກ່ຽວກັບກຳມະສິດສັດ;
4. ຄະດີກ່ຽວກັບການຂໍອະນຸຍາດໃຫ້ມີທາງຜ່ານ;
5. ຄະດີທີ່ມີມູນຄ່າ ບໍ່ເກີນ 100,000,000 (ໜຶ່ງຮ້ອຍລ້ານ) ກີບ;
6. ຄຳພິພາກສາຂັ້ນອຸທອນ ທີ່ສົ່ງໃຫ້ສານຂັ້ນຕົ້ນພິຈາລະນາຄືນ;
7. ຄຳຕັດສິນຂອງສານຂັ້ນຕົ້ນ ທີ່ຈອງຂໍອຸທອນ ແຕ່ບໍ່ຍື່ນຄຳຮ້ອງຂໍອຸທອນ;
8. ຄຳຊີ້ຂາດ ບໍ່ຮັບເອົາຄະດີມາພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 283 ຂອງກົດໝາຍສະບັບນີ້;
9. ບັນຫາທີ່ບໍ່ໄດ້ສະເໜີໃຫ້ສານຂັ້ນຕົ້ນ ແລະ ຂັ້ນອຸທອນ ພິຈາລະນາມາກ່ອນ.

ຖ້າສານຂັ້ນອຸທອນ ຫາກພິພາກສາປ່ຽນແປງ ຄຳຕັດສິນຂອງສານຂັ້ນຕົ້ນ ຄູ່ຄວາມມີສິດຂໍລົບລ້າງໄດ້ໃນກໍລະນີ ຂໍ້ 2, 3, 4 ແລະ ຂໍ້ 5 ຂອງມາດຕານີ້.

# ພາກທີ XIII
# ການດຳເນີນຄະດີຢູ່ສານຂັ້ນລົບລ້າງ
## ໝວດທີ 1
## ສິດໃນການຂໍລົບລ້າງ ແລະ ການສະເໜີຄັດຄ້ານ ຄຳພິພາກສາຂອງສານ

### ມາດຕາ 300 ສານປະຊາຊົນທີ່ພິພາກສາເປັນຂັ້ນລົບລ້າງ

ສານປະຊາຊົນສູງສຸດ ພິພາກສາເປັນຂັ້ນລົບລ້າງ ແລະ ຂັ້ນສຸດທ້າຍ ທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນພາກພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ.

ສານປະຊາຊົນພາກ ມີສິດພິພາກສາຄະດີ ເປັນຂັ້ນລົບລ້າງ ແລະ ຂັ້ນສຸດທ້າຍ ທາງດ້ານກົດໝາຍ ຄະດີທີ່ສານປະຊາຊົນ ນະຄອນຫຼວງ, ແຂວງ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານ ໂດຍຫົວໜ້າອົງການໄອຍະການປະຊາຊົນ.

### ມາດຕາ 301 (ປັບປຸງ) ບຸກຄົນທີ່ມີສິດໃນການຂໍລົບລ້າງ ຫຼື ສະເໜີຄັດຄ້ານ

ໂຈດ, ຈຳເລີຍ ຫຼື ບຸກຄົນທີສາມ ຊຶ່ງເປັນຄູ່ຄວາມໃນຄະດີ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານ ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຂອງສານ ໂດຍອະທິບາຍເຫດຜົນກ່ຽວກັບການຂໍລົບລ້າງ ຫຼື ສະເໜີຄັດຄ້ານຂອງຕົນຕໍ່ສານ.

ຄຳຕັດສິນຂອງສານຂັ້ນຕົ້ນທີ່ ບໍ່ຖືກຂໍອຸທອນ ຫຼື ບໍ່ຖືກສະເໜີຄັດຄ້ານນັ້ນ ຈະຂໍລົບລ້າງບໍ່ໄດ້.

### ມາດຕາ 302 (ປັບປຸງ) ການຂໍລົບລ້າງ

ການຂໍລົບລ້າງ ອາດຈະເຮັດດ້ວຍການຈອງຂໍລົບລ້າງ ຫຼື ຍື່ນຄຳຮ້ອງຂໍລົບລ້າງຕໍ່ສານ ທີ່ໄດ້ພິພາກສາຄະດີນັ້ນ ເປັນຂັ້ນອຸທອນ.

ຄູ່ຄວາມ ສາມາດຂໍລົບລ້າງ ສະເພາະແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ ສ່ວນບັນຫາເນື້ອຄະດີທີ່ຄູ່ຄວາມຂໍລົບລ້າງຂຶ້ນມານັ້ນ ສານຂັ້ນລົບລ້າງຈະພິຈາລະນາໃຫ້ບໍ່ໄດ້.

ຄຳຮ້ອງຂໍລົບລ້າງ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ ຂອງຜູ້ຂໍລົບລ້າງ;
2. ເລກທີຄຳພິພາກສາ ທີ່ຂໍລົບລ້າງ;
3. ປະເດັນທີ່ຂໍລົບລ້າງ ພ້ອມດ້ວຍເຫດຜົນທາງດ້ານກົດໝາຍ;
4. ວັນ, ເດືອນ, ປີ ຍື່ນຄຳຮ້ອງຂໍລົບລ້າງ ແລະ ລາຍເຊັນ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 303 ກຳນົດເວລາໃນການຂໍລົບລ້າງ

ຄູ່ຄວາມ ມີສິດຂໍລົບລ້າງ ແລະ ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳພິພາກສາຂອງສານຂັ້ນອຸທອນ ພາຍໃນເວລາ ສາມສິບວັນ ນັບແຕ່ວັນລົງຄຳພິພາກສາ ສຳລັບຜູ້ຖືກສານຕັດສິນຊ້ອງໜ້າ ຫຼື ນັບແຕ່ວັນຮັບຊາບຄຳພິພາກສາ ເປັນຕົ້ນໄປ ສຳລັບຜູ້ຖືກສານຕັດສິນລັບຫຼັງ.

ການຂໍລົບລ້າງ ຫຼື ການສະເໜີຄັດຄ້ານ ຄຳສັ່ງ ຫຼື ຄຳຊີ້ຂາດ ຂອງສານຂັ້ນອຸທອນ ໃຫ້ດຳເນີນພາຍໃນເວລາ ສິບວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ.

ໃນກໍລະນີຄູ່ຄວາມ ໄດ້ຈອງຂໍລົບລ້າງ ແຕ່ບໍ່ສາມາດຍື່ນຄຳຮ້ອງ ໃຫ້ສານຂັ້ນອຸທອນ ທັນກຳນົດເວລາ ກໍສາມາດ ຍື່ນຄຳຮ້ອງດັ່ງກ່າວ ຕໍ່ສານຂັ້ນລົບລ້າງ ກ່ອນການພິພາກສາຄະດີດັ່ງກ່າວ.

**ມາດຕາ 304 (ປັບປຸງ) ການຍື່ນຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ**

ໃນກໍລະນີ ມີການຂໍລົບລ້າງ ຫຼື ສະເໜີຄັດຄ້ານຄໍາສັ່ງ, ຄໍາຊີ້ຂາດ ແລະ ຄໍາພິພາກສາຂັ້ນອຸທອນນັ້ນ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຕ້ອງຍື່ນຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານຂອງຕົນ ຕໍ່ສານຂັ້ນລົບລ້າງ ໂດຍຜ່ານສານໄດ້ພິພາກສາຄະດີເປັນຂັ້ນອຸທອນ.

ໃນກໍລະນີ ສານຂັ້ນອຸທອນ ຫາກບໍ່ຮັບ ຫຼື ແກ່ຍາວການຮັບຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ຄໍາພິພາກສາຂອງສານນັ້ນ, ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດຍື່ນຄໍາຮ້ອງ ຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ໂດຍກົງຕໍ່ສານຂັ້ນລົບລ້າງ.

ຫຼັງຈາກ ສິ້ນສຸດກໍານົດເວລາຂໍລົບລ້າງແລ້ວ ຖ້າສານຂັ້ນອຸທອນທີ່ໄດ້ຮັບຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ຫາກແກ່ຍາວເກີນກໍານົດເວລາ ໃນການສົ່ງສໍານວນຄະດີ ຂຶ້ນສານຂັ້ນລົບລ້າງແລ້ວ ຄູ່ຄວາມ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຕໍ່ສານຂັ້ນລົບລ້າງ ເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.

ຄູ່ຄວາມທີ່ຂໍລົບລ້າງຄໍາພິພາກສາ ຕ້ອງຍື່ນຄໍາຮ້ອງຂໍລົບລ້າງ ພາຍໃນເວລາ ສາມສິບວັນ ນັບແຕ່ ວັນອ່ານ ຫຼື ວັນຮັບຊາບຄໍາພິພາກສາ ເປັນຕົ້ນໄປ.

**ມາດຕາ 305 (ປັບປຸງ) ວິທີປະຕິບັດສິດໃນການຂໍລົບລ້າງ**

ຄູ່ຄວາມ ຂໍລົບລ້າງນັ້ນ ໃຫ້ນໍາເງິນມາວາງສານ ແລະ ເສຍຄ່າຂໍລົບລ້າງ ຕາມກົດໝາຍ.

ຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານນັ້ນ ຕ້ອງຍື່ນຕໍ່ສານປະຊາຊົນພາກ ຫຼື ສານປະຊາຊົນສູງສຸດ ໂດຍຜ່ານສານທີ່ໄດ້ພິພາກສາຄະດີດັ່ງກ່າວ ເປັນຂັ້ນອຸທອນ. ສານຂັ້ນອຸທອນນັ້ນ ຕ້ອງແນະນໍາໃຫ້ຜູ້ຂໍລົບລ້າງ ກ່ຽວກັບກໍານົດການຂໍລົບລ້າງ, ການຂຽນຄໍາຮ້ອງຂໍລົບລ້າງ, ຄ່າຂໍລົບລ້າງ ແລະ ສິດຕ່າງໆຂອງຜູ້ກ່ຽວ.

ສານຂັ້ນອຸທອນຕ້ອງຮັບຄໍາຮ້ອງ ຂໍລົບລ້າງ ເຖິງວ່າຈະກາຍກໍານົດເວລາຂໍລົບລ້າງແລ້ວກໍຕາມ.

ພາຍຫຼັງໄດ້ ຮັບຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານແລ້ວ ສານຂັ້ນອຸທອນ ຕ້ອງແຈ້ງ ໃຫ້ຄູ່ຄວາມ ອີກຝ່າຍໜຶ່ງ ພາຍໃນເວລາ ເຈັດວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງດັ່ງກ່າວ ເປັນຕົ້ນໄປ. ຖ້າຫາກໝົດກໍານົດເວລາ ຂໍລົບລ້າງ ຫຼື ສະເໜີຄັດຄ້ານ ແລ້ວສານຂັ້ນອຸທອນ ຕ້ອງສົ່ງຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ພ້ອມທັງ ສໍານວນຄະດີໄປຍັງ ສານຂັ້ນລົບລ້າງ ພາຍໃນເວລາ ສາມວັນ.

**ມາດຕາ 306 (ປັບປຸງ) ສິດໃນການຖອນຄໍາຮ້ອງຂໍລົບລ້າງ**

ຄູ່ຄວາມ ຍື່ນຄໍາຮ້ອງຂໍລົບລ້າງຕໍ່ສານແລ້ວ ມີສິດຖອນຄໍາຮ້ອງຂອງຕົນໄດ້.

ການຂໍຖອນຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ຄໍາສັ່ງ, ຄໍາຊີ້ຂາດ ຫຼື ຄໍາພິພາກສາ ຂັ້ນອຸທອນ ຕ້ອງເຮັດເປັນລາຍລັກອັກສອນ ແລ້ວຍື່ນຕໍ່ສານປະຊາຊົນທີ່ກ່ຽວຂ້ອງ.

ຄະນະສານຂອງສານຂັ້ນລົບລ້າງ ຕ້ອງນໍາເອົາຄໍາຮ້ອງຂໍຖອນການຂໍລົບລ້າງ ຫຼື ການສະເໜີຄັດຄ້ານນັ້ນ ມາພິຈາລະນາ. ເມື່ອເຫັນວ່າ ການຂໍຖອນດັ່ງກ່າວ ບໍ່ຂັດກັບກົດໝາຍ ຫຼື ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ສັງຄົມ ແລ້ວຄະນະສານຕ້ອງອອກຄໍາຊີ້ຂາດ ໃຫ້ຖອນຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານດັ່ງກ່າວ ແລ້ວສົ່ງ ສໍານວນຄະດີໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄໍາຕັດສິນຂອງສານທີ່ກ່ຽວຂ້ອງ, ເວັ້ນເສຍແຕ່ຍັງມີການຂໍລົບລ້າງ ຂອງບຸກຄົນອື່ນ.

**ມາດຕາ 307 (ປັບປຸງ) ຜົນສະທ້ອນຂອງການຍື່ນຄໍາຮ້ອງຂໍລົບລ້າງ**

ຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ທີ່ໄດ້ຍື່ນເຖິງສານຂັ້ນລົບລ້າງນັ້ນ ເປັນສາເຫດພາໃຫ້ໂຈະ ການປະຕິບັດຄໍາພິພາກສາຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງ ຫຼື ຖືກສະເໜີຄັດຄ້ານ, ເວັ້ນເສຍແຕ່ມີຄໍາພິພາກສາ ໃຫ້ປະຕິບັດພາງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 264 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ຂັ້ນຕອນການພິຈາລະນາຄະດີຂອງສານຂັ້ນລົບລ້າງ

**ມາດຕາ 308 (ປັບປຸງ) ການຮັບເອົາຄະດີມາພິຈາລະນາເປັນຂັ້ນລົບລ້າງ**

ເມື່ອສານຂັ້ນລົບລ້າງ ໄດ້ຮັບສຳນວນຄະດີແລ້ວ ຫົວໜ້າຄະນະສານ ຈະມອບໃຫ້ຜູ້ພິພາກສາຜູ້ໃດໜຶ່ງ ຄົ້ນຄວ້າ ເພື່ອກະກຽມນຳອອກພິພາກສາ.

ຖ້າເຫັນວ່າ ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ຫາກກາຍກຳນົດເວລາຂອງການຂໍລົບລ້າງແລ້ວ ຄະນະສານຂັ້ນລົບລ້າງ ຕ້ອງລົງຄຳພິພາກສາ ບໍ່ຮັບເອົາຄະດີດັ່ງກ່າວມາພິຈາລະນາ ແລ້ວສົ່ງສຳນວນຄະດີນັ້ນ ໃຫ້ສານທີ່ຕັດສິນເປັນຂັ້ນຕົ້ນ ເພື່ອສົ່ງໄປຍັງ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ.

**ມາດຕາ 309 (ປັບປຸງ) ການຄົ້ນຄວ້າຄະດີຂອງສານຂັ້ນລົບລ້າງ**

ເມື່ອຄຳຮ້ອງຂໍລົບລ້າງ ປະຕິບັດຖືກຕ້ອງຕາມກຳນົດເວລາແລ້ວ ສານຂັ້ນລົບລ້າງ ຕ້ອງນຳເອົາຄຳຮ້ອງຂໍ ລົບລ້າງດັ່ງກ່າວ ມາຄົ້ນຄວ້າພິຈາລະນາ ວ່າເປັນການຂໍລົບລ້າງ ທາງດ້ານກົດໝາຍ ຫຼື ບໍ່, ຖ້າເປັນການຂໍລົບລ້າງ ທາງດ້ານກົດໝາຍນັ້ນ ສານຂັ້ນລົບລ້າງ ຕ້ອງກວດກາການດຳເນີນຄະດີຂອງສານຂັ້ນລຸ່ມ ກ່ຽວກັບການກຳນົດ ເຫດການຂອງຄະດີ, ການນຳໃຊ້ກົດໝາຍ ຫຼື ລະບຽບການດຳເນີນຄະດີ.

ຖ້າຫາກບໍ່ແມ່ນການຂໍລົບລ້າງທາງດ້ານກົດໝາຍ ສານຂັ້ນລົບລ້າງຈະພິຈາລະນາໃຫ້ບໍ່ໄດ້.

ເມື່ອໄດ້ຮັບສຳນວນຄະດີແລ້ວ ຜູ້ພິພາກສາຕ້ອງຄົ້ນຄວ້າໃຫ້ສຳເລັດ ພາຍໃນເວລາ ສາມເດືອນ, ຖ້າຫາກບໍ່ສຳເລັດພາຍໃນເວລາດັ່ງກ່າວ ຜູ້ພິພາກສາຕ້ອງສະເໜີຂໍຕໍ່ເວລາໃນການພິຈາລະນາ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 32 ຂອງກົດໝາຍສະບັບນີ້.

**ມາດຕາ 310 (ປັບປຸງ) ຂອບເຂດການພິຈາລະນາຄະດີຂອງສານຂັ້ນລົບລ້າງ**

ສານຂັ້ນລົບລ້າງ ພິຈາລະນາແຕ່ບັນຫາທາງດ້ານກົດໝາຍ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ. ບັນຫາໃດ ທີ່ສານຂັ້ນອຸທອນຍັງບໍ່ໄດ້ພິພາກສາ ຫຼື ຄູ່ຄວາມບໍ່ໄດ້ຂໍລົບລ້າງ ຫຼື ຂໍລົບລ້າງບັນຫາເນື້ອຄະດີ ສານຂັ້ນລົບລ້າງ ຈະນຳມາພິຈາລະນາເປັນຂັ້ນລົບລ້າງ ບໍ່ໄດ້.

**ມາດຕາ 311 (ໃໝ່) ການພິຈາລະນາທາງດ້ານກົດໝາຍ**

ສານພິຈາລະນາທາງດ້ານກົດໝາຍ ໃນກໍລະນີ ດັ່ງນີ້:

1. ການປະຕິບັດກົດໝາຍວ່າດ້ວຍການດຳເນີນຄະດີ;
2. ການຕີຄວາມໝາຍຂອງເຫດການຄະດີ;
3. ການນຳໃຊ້ມາດຕາ, ກົດໝາຍ ຕໍ່ເນື້ອໃນ, ເຫດການຂອງຄະດີ.

**ມາດຕາ 312 ການພິພາກສາໂດຍບໍ່ເປີດການໄຕ່ສວນໃນທີ່ປະຊຸມສານ**

ເຫດການຕ່າງໆ ທາງດ້ານ ຂໍ້ມູນ ຫຼັກຖານ ໃນເນື້ອຄະດີ ຊຶ່ງສານຂັ້ນອຸທອນໄດ້ລົງຄຳພິພາກສາແລ້ວນັ້ນ ໃຫ້ຖືວ່າເປັນທີ່ສິ້ນສຸດ.

ສານຂັ້ນລົບລ້າງ ພິພາກສາ ຕາມສຳນວນຄະດີທາງດ້ານກົດໝາຍເທົ່ານັ້ນ ໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ. ໃນກໍລະນີຈຳເປັນ ສານຂັ້ນລົບລ້າງ ຈະຮຽກຄູ່ຄວາມເຂົ້າມາຮ່ວມໃນການດຳເນີນຄະດີ ຢູ່ສານຂັ້ນລົບລ້າງ ຫຼື ລົງກວດກາເຫດການຕົວຈິງຂອງຄະດີກໍໄດ້.

**ມາດຕາ 313 (ປັບປຸງ) ລະບຽບການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ**

ລະບຽບການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 288 ຂອງກົດໝາຍສະບັບນີ້.

ພາຍຫຼັງປະທານຄະນະສານ ໄດ້ກ່າວເປີດປະຊຸມສານຕາມລະບຽບການແລ້ວ ຄະນະສານຜູ້ຄົ້ນຄວ້າຄະດີລາຍງານຄະດີ ຕໍ່ປະທານຄະນະສານ ແລະ ຜູ້ຂໍລົບລ້າງ ຫຼື ພະນັກງານໄອຍະການປະຊາຊົນ ທີ່ເຂົ້າຮ່ວມປະຊຸມສານ ຂຶ້ນຊີ້ແຈງເຫດຜົນກ່ຽວກັບການຂໍລົບລ້າງ ຫຼື ການສະເໜີຄັດຄ້ານຂອງຕົນ.

ໃນກໍລະນີ ບໍ່ໄດ້ຮຽກຄູ່ຄວາມເຂົ້າມາຮ່ວມໃນທີ່ປະຊຸມສານ ພາຍຫຼັງຮັບຟັງການລາຍງານຂອງ ຄະນະສານຜູ້ຄົ້ນຄວ້າຄະດີແລ້ວ ປະທານຄະນະສານ ກໍປະກາດປິດການປະຊຸມສານຊົ່ວຄາວ ເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບ ຫຼັງຈາກນັ້ນ ກໍນຳເອົາຄຳພິພາກສາອອກມາອ່ານໃນທີ່ປະຊຸມສານ.

**ມາດຕາ 314 (ປັບປຸງ) ຄຳພິພາກສາຂອງສານຂັ້ນລົບລ້າງ**

ຄະນະສານ ຂອງສານຂັ້ນລົບລ້າງ ພິພາກສາຄະດີ ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຄຳພິພາກສາຂອງສານຂັ້ນລົບລ້າງ ປະກອບດ້ວຍ ພາກສະເໜີ, ພາກເນື້ອຄະດີ, ພາກຮູບຄະດີ, ພາກວິນິດໄສ ແລະ ພາກຕັດສິນ.

ເນື້ອໃນຂອງພາກສະເໜີ, ພາກເນື້ອຄະດີ ແລະພາກວິນິດໄສນັ້ນ ໃຫ້ປະຕິບັດດັ່ງດຽວກັນກັບຄຳຕັດສິນຂອງສານຂັ້ນຕົ້ນ.

ສຳລັບ ພາກຮູບຄະດີ ໃຫ້ກຳນົດຂັ້ນຕອນຂອງການດຳເນີນຄະດີຜ່ານມາ ເປັນຕົ້ນ ການຕັດສິນ, ການຂໍອຸທອນ ຫຼື ການຂໍລົບລ້າງ. ສ່ວນພາກຕັດສິນ ໃຫ້ກຳນົດ ຮູບຄະດີ, ເນື້ອຄະດີ, ຜົນການລົງຄຳພິພາກສາທາງດ້ານກົດໝາຍ, ຄ່າທຳນຽມຂອງຜູ້ເສຍຄະດີ ຫຼື ຄ່າທຳນຽມສານອື່ນ ແລະ ຜົນບັງຄັບປະຕິບັດຄຳພິພາກສາ.

ຄຳພິພາກສາ ຕ້ອງເຮັດເປັນ ສາມສະບັບ ຄື ສະບັບໜຶ່ງ ໄວ້ໃນສຳເນົາ, ສ່ວນອີກສະບັບໜຶ່ງ ໄວ້ໃນສຳນວນຄະດີ, ສະບັບໜຶ່ງ ໃຫ້ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ. ຄຳພິພາກສາທີ່ຄູ່ຄວາມ ຫຼື ພາກສ່ວນອື່ນຕ້ອງການນັ້ນ ໃຫ້ເອົາສະບັບສຳເນົາ ໂດຍຈ່າສານເປັນຜູ້ຢັ້ງຢືນ.

**ມາດຕາ 315 (ປັບປຸງ) ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ**

ປະເພດຄຳພິພາກສາຂອງສານຂັ້ນລົບລ້າງ ມີ ດັ່ງນີ້:

1. ບໍ່ຮັບຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາ ຖ້າຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍລົບລ້າງ;

2. ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ແລ້ວພິພາກສາຢັ້ງຢືນເອົາຕາມຄຳພິພາກສາຂອງສານຂັ້ນອຸທອນທັງໝົດ;

3. ປ່ຽນແປງຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດ ທາງດ້ານກົດໝາຍ ແລ້ວພິພາກສາໃໝ່ບົນພື້ນຖານເຫດການຂອງຄະດີ ທີ່ສານຂັ້ນລຸ່ມໄດ້ກຳນົດຂຶ້ນ;

4. ລົບລ້າງຄຳພິພາກສາ ແລ້ວສົ່ງສຳນວນຄະດີໄປໃຫ້ສານຂັ້ນອຸທອນ ຄະນະໃໝ່ພິຈາລະນາຄືນ ໃນກໍລະນີມີການລະເມີດກົດໝາຍ ຫຼື ຄະນະເກົ່າ ໃນກໍລະນີ ສານຄະນະເກົ່ານີ້ ຫາກຍັງບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍອຸທອນອັນໃດໜຶ່ງຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການປະຊາຊົນ;

5. ລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ໂດຍບໍ່ສົ່ງຄະດີໃຫ້ສານໃດໜຶ່ງພິຈາລະນາ.

**ມາດຕາ 316 (ໃໝ່) ການບໍ່ພິຈາລະນາຄຳຮ້ອງຂໍລົບລ້າງ**

ຄຳຮ້ອງຂໍລົບລ້າງ ຂອງຄູ່ຄວາມ ກ່ຽວກັບບັນຫາໃດໜຶ່ງ ທີ່ຄູ່ຄວາມບໍ່ໄດ້ຂໍອຸທອນ ແລະ ສານຂັ້ນອຸທອນບໍ່ໄດ້ນຳເອົາບັນຫາດັ່ງກ່າວມາພິພາກສານັ້ນ ສານຂັ້ນລົບລ້າງ ຈະບໍ່ຮັບເອົາຄຳຮ້ອງຂໍລົບລ້າງດັ່ງກ່າວມາພິຈາລະນາ.

**ມາດຕາ 317 (ໃໝ່) ການປ່ຽນແປງຄຳພິພາກສາ ຂອງສານຂັ້ນອຸທອນ ບາງສ່ວນ ຫຼື ທັງໝົດ ແລ້ວພິພາກສາໃໝ່**

ສາເຫດພາໃຫ້ມີການປ່ຽນແປງຄຳພິພາກສາຂັ້ນອຸທອນ ບາງສ່ວນ ຫຼື ທັງໝົດ ແລ້ວພິພາກສາໃໝ່ ມີດັ່ງນີ້:

1. ສານຂັ້ນອຸທອນ ນຳໃຊ້ກົດໝາຍ ໃນການແກ້ໄຂຄະດີບໍ່ຖືກຕ້ອງ;
2. ສານຂັ້ນອຸທອນ ພິພາກສາເກີນຂອບເຂດ ການພິຈາລະນາ;
3. ສານຂັ້ນອຸທອນ ພິພາກສາບໍ່ຄົບຖ້ວນ ຕາມການຮ້ອງຂໍອຸທອນ;
4. ສານຂັ້ນອຸທອນ ລະເມີດລະບຽບການດຳເນີນຄະດີ;
5. ສານຂັ້ນອຸທອນ ພິຈາລະນາກ່ຽວກັບ ຄ່າທຳນຽມຂອງຜູ້ເສຍຄະດີ ແລະ ຄ່າທຳນຽມສານອື່ນ ບໍ່ຖືກຕ້ອງ;
6. ສານຂັ້ນອຸທອນ ພິພາກສາຢັ້ງຢືນເອົາຕາມຄຳຕັດສິນ ຂອງສານຂັ້ນຕົ້ນ ທີ່ລະເມີດກົດໝາຍ;
7. ຄຳພິພາກສາຂອງສານຂັ້ນອຸທອນຄະນະໃໝ່ ບໍ່ກົງກັບຄຳພິພາກສາຂອງສານຂັ້ນລົບລ້າງ;
8. ສາເຫດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 318 (ປັບປຸງ) ການລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ໂດຍບໍ່ສົ່ງໃຫ້ສານໃດພິຈາລະນາຄືນ**

ສານຂັ້ນລົບລ້າງ ສາມາດພິພາກສາລົບລ້າງຄຳພິພາກສາຂອງສານຂັ້ນອຸທອນ ໂດຍບໍ່ສົ່ງໃຫ້ສານໃດພິຈາລະນາຄືນ ຕາມກໍລະນີທີ່ໄດ້ກຳນົດໄວ້ໃນມາດຕາ 293 ຂອງກົດໝາຍສະບັບນີ້.

**ມາດຕາ 319 (ປັບປຸງ) ການລົບລ້າງຄຳພິພາກສາ ແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນອຸທອນພິຈາລະນາຄືນ**

ສານຂັ້ນລົບລ້າງ ສາມາດພິພາກສາລົບລ້າງຄຳພິພາກສາ ຂອງສານຂັ້ນອຸທອນ ແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນອຸທອນພິຈາລະນາຄືນ ໃນກໍລະນີ ສານຂັ້ນອຸທອນ ກຳນົດເຫດການຂອງຄະດີ ບໍ່ຖືກຕ້ອງ.

**ມາດຕາ 320 ການພິຈາລະນາຄືນຂອງສານຂັ້ນອຸທອນ**

ສານຂັ້ນອຸທອນ ຕ້ອງນຳເອົາຄະດີ ທີ່ສານຂັ້ນລົບລ້າງ ສົ່ງໃຫ້ນັ້ນ ມາພິຈາລະນາຄືນ ແລະ ລົງຄຳພິພາກສາໃໝ່ ບົນພື້ນຖານ ຂໍ້ມູນ ຫຼັກຖານ ແລະ ກົດໝາຍ.

ສານຂັ້ນອຸທອນ ຈະພິຈາລະນາພິພາກສາ ຕາມການວິນິດໄສ ຂອງສານຂັ້ນລົບລ້າງ ເມື່ອເຫັນວ່າ ມີຂໍ້ມູນ ຫຼັກຖານ ຕົວຈິງ ແລະ ຖືກຕ້ອງຕາມກົດໝາຍ.

**ມາດຕາ 321 (ປັບປຸງ) ການພິພາກສາຕາມຄຳພິພາກສາຂອງສານຂັ້ນລົບລ້າງ**

ໃນກໍລະນີ ຄຳພິພາກສາຂອງສານຂັ້ນອຸທອນຄະນະໃໝ່ ຫາກໄດ້ລົງຄຳພິພາກສາບໍ່ກົງກັບຄຳພິພາກສາຂອງສານຂັ້ນລົບລ້າງນັ້ນ ເມື່ອຄູ່ຄວາມຫາກບໍ່ໄດ້ຂໍລົບລ້າງແລ້ວ ກໍໃຫ້ຫົວໜ້າອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງສະເໜີຄັດຄ້ານ ຕໍ່ສານຂັ້ນລົບລ້າງໂດຍໜ້າທີ່.

ໃນກໍລະນີດັ່ງກ່າວ ສານຂັ້ນລົບລ້າງ ຕ້ອງພິພາກສາໃໝ່ ບົນພື້ນຖານເຫດການທີ່ສານຂັ້ນອຸທອນຄະນະໃໝ່ໄດ້ກຳນົດຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 315 ຂໍ້ 3 ຂອງກົດໝາຍສະບັບນີ້.

**ມາດຕາ 322 (ໃໝ່) ການແຈ້ງຄຳພິພາກສາ ໃຫ້ຄູ່ຄວາມຮັບຊາບ**

ພາຍຫຼັງສານທີ່ຕັດສິນເປັນຂັ້ນຕົ້ນ ໄດ້ຮັບຄຳພິພາກສາ ແລະ ສຳນວນຄະດີ ຈາກສານຂັ້ນລົບລ້າງແລ້ວພາຍໃນເວລາ ເຈັດວັນ ຈ່າສານຕ້ອງຮຽກຄູ່ຄວາມມາຮັບຊາບ ເນື້ອໃນຄຳພິພາກສາ ແລະ ເຮັດບົດບັນທຶກຮັບຊາບ ເປັນລາຍລັກອັກສອນໄວ້ເປັນຫຼັກຖານ ພ້ອມທັງອະທິບາຍ ສິດ ແລະ ພັນທະ ໃຫ້ຄູ່ຄວາມຮັບຊາບ.

## ພາກທີ XIV
## ການປະຕິບັດຄຳຕັດສິນຂອງສານ

### ມາດຕາ 323 (ປັບປຸງ) ການປະຕິບັດຄຳຕັດສິນຂອງສານ

ການປະຕິບັດຄຳຕັດສິນຂອງສານ ແມ່ນ ການເຄື່ອນໄຫວຂອງອົງການປະຕິບັດຄຳຕັດສິນຂອງສານ ແລະ/ຫຼື ຄູ່ຄວາມ ໃນການນຳເອົາ ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ມາປະຕິບັດໃຫ້ ຖືກຕ້ອງ ແລະ ປາກົດເປັນຈິງ ເພື່ອຟື້ນຟູຜົນປະໂຫຍດຂອງ ລັດ, ລວມໝູ່, ສັງຄົມ, ການຈັດຕັ້ງ, ສິດ ແລະ ຜົນປະໂຫຍດຂອງບຸກຄົນ ທີ່ຖືກລະເມີດ ຫຼື ສູນເສຍໄປ.

### ມາດຕາ 324 (ປັບປຸງ) ຄຳຕົກລົງຂອງສານທີ່ນຳເອົາມາປະຕິບັດ

ຄຳຕົກລົງຂອງສານ ທີ່ນຳເອົາມາປະຕິບັດ ມີ ດັ່ງນີ້:

1. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນຄະດີແຜ່ງຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນ ເຂດ ຫຼື ສານປະຊາຊົນ ນະຄອນຫຼວງ, ແຂວງ;
2. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແຜ່ງຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານປະຊາຊົນ ນະຄອນຫຼວງ, ແຂວງ ແລະ ສານປະຊາຊົນພາກ;
3. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຄະດີແຜ່ງ ຂອງສານປະຊາຊົນສູງສຸດ ແລະ ສານປະຊາຊົນພາກ ຂັ້ນລົບລ້າງ ທີ່ບໍ່ສົ່ງຄະດີ ໃຫ້ສານຂັ້ນໃດພິຈາລະນາ;
4. ຄຳຕັດສິນ ຫຼື ຄຳພິພາກສາຂອງສານ ໃຫ້ປະຕິບັດພາງ;
5. ຄຳສັ່ງໃຫ້ປະຕິບັດບົດບັນທຶກການໄກ່ເກ່ຍຂອງສານ;
6. ບົດບັນທຶກການໄກ່ເກ່ຍ ແລະ ຄຳຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານ ເສດຖະກິດພາຍໃນ ແລະ ຕ່າງປະເທດ ຕາມສັນຍາ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ ກ່ຽວຂ້ອງ ຊຶ່ງໄດ້ຮັບການຢັ້ງຢືນຈາກສານປະຊາຊົນ ແຫ່ງ ສປປ ລາວ;
7. ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ຂອງສານຕ່າງປະເທດ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງສານປະຊາຊົນ ແຫ່ງ ສປປ ລາວ ຮັບຮູ້ ແລະ ໃຫ້ປະຕິບັດ.

### ມາດຕາ 325 (ປັບປຸງ) ຜົນສັກສິດຂອງຄຳຕົກລົງຂອງສານ

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 324 ຂອງກົດໝາຍສະບັບນີ້ ທຸກອົງການຈັດຕັ້ງຂອງພັກ, ອົງການຈັດຕັ້ງ ຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ ແລະ ພົນລະເມືອງທຸກຄົນ ຕ້ອງເຄົາລົບ, ບຸກຄົນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງປະຕິບັດຢ່າງ ເຂັ້ມງວດ.

ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ບໍ່ສາມາດປ່ຽນແປງແຕ່ຢ່າງໃດ, ເວັ້ນເສຍແຕ່ໃນກໍລະນີ ມີການຮື້ຟື້ນຄະດີ.

### ມາດຕາ 326 (ປັບປຸງ) ວິທີປະຕິບັດຄຳຕົກລົງຂອງສານ

ພະນັກງານປະຕິບັດຄຳຕັດສິນຂອງສານທີ່ກ່ຽວຂ້ອງ ເປັນຜູ້ຮັບຜິດຊອບປະຕິບັດຄຳຕົກລົງຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໂດຍຄົ້ນຄວ້າ ແລະ ຮຽກເອົາຄູ່ຄວາມໃນຄະດີທີ່ກ່ຽວຂ້ອງເຂົ້າມາ ເພື່ອແຈ້ງເນື້ອໃນ, ແນະນຳ, ປຸກລະດົມ ແລະ ວາງກຳນົດເວລາ ໃນການປະຕິບັດຄຳຕົກລົງດັ່ງກ່າວຂອງສານ ໂດຍອີງໃສ່ເງື່ອນໄຂ ຕົວຈິງທາງດ້ານເສດຖະກິດ ຂອງຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍ.

ໃນກໍລະນີ ຜູ້ຖືກປະຕິບັດ ບໍ່ຍອມປະຕິບັດດ້ວຍຄວາມສະໝັກໃຈແລ້ວ ອົງການປະຕິບັດຄຳຕັດສີນຂອງສານ ກໍຈະອອກຄຳສັ່ງຕັດເງິນເດືອນ ຫຼື ລາຍໄດ້ອື່ນຂອງຜູ້ກ່ຽວ ຫຼື ອອກຄຳສັ່ງຍຶດ ຫຼື ອາຍັດຊັບຂອງຜູ້ກ່ຽວ ເພື່ອຂາຍເລຫຼັງ ຫຼື ນຳມາຊຳລະສະສາງ ຕາມແຕ່ກໍລະນີ.

ນອກຈາກນັ້ນ ອົງການປະຕິບັດຄຳຕັດສີນຂອງສານ ກໍຍັງມີສິດອອກຄຳສັ່ງອື່ນ ເພື່ອເຮັດໃຫ້ຄຳຕົກລົງຂອງສານໄດ້ຮັບການປະຕິບັດໃນພາກຕົວຈິງ.

ຮູບການ, ວິທີ, ຂັ້ນຕອນ ປະຕິບັດຄຳຕົກລົງຂອງສານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການປະຕິບັດຄຳຕັດສີນຂອງສານ.

**ມາດຕາ 327 (ປັບປຸງ) ການໂຈະການປະຕິບັດຄຳຕົກລົງຂອງສານ**

ອົງການປະຕິບັດຄຳຕັດສີນຂອງສານ ຈະໂຈະການປະຕິບັດຄຳຕົກລົງຂອງສານ ໃນກໍລະນີ ດັ່ງນີ້:

1. ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍນັ້ນ ໄດ້ເສຍຊີວິດ ແຕ່ຜູ້ກ່ຽວຫາກຍັງມີຜູ້ສືບທອດ;

2. ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍນັ້ນ ໄດ້ສູນເສຍຄວາມສາມາດທາງດ້ານການປະພຶດ ຫຼື ເປັນຄົນບ້າເສຍຈິດ;

3. ຜູ້ຮັບຜິດຊອບທາງແພ່ງ ຫຼື ຜູ້ໃຊ້ແທນຄ່າເສຍຫາຍນັ້ນ ໄປເຮັດວຽກທາງລັດຖະການ ຢູ່ນອກສະຖານທີ່ປະຕິບັດ ຫຼື ໄປປິ່ນປົວ ຫຼື ເຈັບປ່ວຍໜັກ ທີ່ມີການຢັ້ງຢືນຈາກການຈັດຕັ້ງ ຫຼື ຄະນະແພດ;

4. ນິຕິບຸກຄົນ ທີ່ຮັບຜິດຊອບທາງແພ່ງ ຫຼື ໃຊ້ແທນຄ່າເສຍຫາຍນັ້ນ ໄດ້ຖືກຍຸບເລີກ ຫຼື ລົ້ມລະລາຍ;

5. ສານປະຊາຊົນສູງສຸດ ຫຼື ອົງການໄອຍະການປະຊາຊົນສູງສຸດ ສະເໜີໂຈະ ເມື່ອມີການຂໍຮື້ຟື້ນຄະດີຕາມເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ;

6. ຫົວໜ້າອົງການໄອຍະການປະຊາຊົນ ສະເໜີໂຈະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄຳຕັດສີນຂອງສານ;

7. ຄຳຕັດສີນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງບໍ່ກົງກັບຕົວຈິງ ເຮັດໃຫ້ບໍ່ສາມາດປະຕິບັດໄດ້;

8. ຄະນະປະຈຳສະພາແຫ່ງຊາດ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ມີຄຳເຫັນ ພາຍຫຼັງໄດ້ປະສານສົມທົບກັບຂະແໜງການຍຸຕິທຳແລ້ວ ວ່າມີສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີ.

ເມື່ອກໍລະນີ ພາໃຫ້ໂຈະການປະຕິບັດຄຳຕົກລົງຂອງສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ຫາກຕົກໄປແລ້ວ ກໍໃຫ້ສືບຕໍ່ປະຕິບັດ.

**ມາດຕາ 328 (ປັບປຸງ) ການສິ້ນສຸດການປະຕິບັດຄຳຕົກລົງຂອງສານ**

ການປະຕິບັດຄຳຕົກລົງຂອງສານ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຄຳຕົກລົງຂອງສານໄດ້ຮັບການປະຕິບັດຢ່າງຄົບຖ້ວນແລ້ວ;

2. ເຈົ້າໜີ້ໄດ້ສະລະສິດ. ໃນກໍລະນີເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕົວຕໍ່ພະນັກງານປະຕິບັດຄຳຕັດສີນຂອງສານ ໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືວ່າເປັນການສະລະສິດເຊັ່ນດຽວກັນ;

3. ຜູ້ຖືກປະຕິບັດໄດ້ເສຍຊີວິດ ໂດຍບໍ່ມີຊັບ, ບໍ່ມີສິດ ຫຼື ບໍ່ມີພັນທະ ໃຫ້ຜູ້ອື່ນສືບທອດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

4. ຄຳຕັດສີນ ຫຼື ຄຳພິພາກສາຂອງສານ ໄດ້ຖືກປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ໂດຍບໍ່ໃຫ້ຄູ່ຄວາມມີພັນທະປະຕິບັດ.

ເມື່ອການປະຕິບັດຄຳຕົກລົງຂອງສານໄດ້ສິ້ນສຸດແລ້ວ ພະນັກງານປະຕິບັດຄຳຕັດສີນຂອງສານ ຕ້ອງສະເໜີໃຫ້ຫົວໜ້າ ກົມ, ກອງ ຫຼື ຫ້ອງ ປະຕິບັດຄຳຕັດສີນຂອງສານ ເພື່ອອອກຄຳສັ່ງປິດການປະຕິບັດຄຳຕັດສີນ

ຂອງສານ ແລະ ແຈ້ງໃຫ້ຄູ່ຄວາມ, ພະນັກງານໄອຍະການປະຊາຊົນ, ສານປະຊາຊົນ, ສະພາປະຊາຊົນ ຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຊາບ.

# ພາກທີ XV
# ການຮື້ຟື້ນຄະດີ

### ມາດຕາ 329 (ປັບປຸງ) ການຮັບເອົາຄະດີທີ່ມີການຮື້ຟື້ນມາພິຈາລະນາ

ການຮື້ຟື້ນຄະດີ ດຳເນີນຕາມຄຳຮ້ອງຂໍຂອງຄູ່ຄວາມ ຫຼື ການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອປົກປ້ອງຜົນປະໂຫຍດຂອງ ລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດ ຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

ຄຳສັ່ງ, ຄຳຊີ້ຂາດ ກ່ຽວກັບເນື້ອຄະດີ, ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ສາມາດມີການຮື້ຟື້ນໄດ້.

ມີແຕ່ສານປະຊາຊົນສູງສຸດເທົ່ານັ້ນ ຈຶ່ງມີສິດອຳນາດ ພິຈາລະນາ ກ່ຽວກັບການຮື້ຟື້ນ.

### ມາດຕາ 330 (ປັບປຸງ) ການບໍ່ຮັບເອົາຄະດີ ທີ່ຕົກລົງບໍ່ໃຫ້ມີການຮື້ຟື້ນມາພິຈາລະນາຄືນ

ຄະດີທີ່ ສານປະຊາຊົນສູງສຸດ ຕົກລົງ ຫຼື ພິພາກສາຍົກເລີກຄຳສະເໜີ ຮື້ຟື້ນຄະດີແລ້ວນັ້ນ ຄູ່ຄວາມບໍ່ສາມາດນຳເອົາບັນຫາເກົ່ານັ້ນ ມາສະເໜີຂໍຮື້ຟື້ນຄືນອີກ.

### ມາດຕາ 331 ສາເຫດພາໃຫ້ມີການຮື້ຟື້ນຄະດີ

ສາເຫດພາໃຫ້ມີການຮື້ຟື້ນຄະດີ ໃນກໍລະນີໄດ້ພົບເຫັນ ຂໍ້ມູນ ຫຼັກຖານ ໃໝ່ ມີ ດັ່ງນີ້:

1. ພະຍານ ໃນຄະດີໄດ້ໃຫ້ການເທັດ ຫຼື ຜູ້ຊ່ຽວຊານ, ຜູ້ຊຳນານ ໄດ້ໃຫ້ຄຳເຫັນເທັດ, ການແປພາສາເທັດ ຫຼື ການໃຊ້ຫຼັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
2. ຜູ້ພິພາກສາ ໄດ້ເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ;
3. ຂໍ້ມູນ ຫຼັກຖານ ໃໝ່ທີ່ກ່ຽວຂ້ອງກັບຄະດີ ຍັງບໍ່ທັນໄດ້ສະເໜີຂຶ້ນໃນຄະດີນັ້ນ ແລະ ຜູ້ຮ້ອງຂໍຮື້ຟື້ນນັ້ນ ກໍບໍ່ສາມາດຮູ້ໄດ້ກ່ຽວກັບ ຂໍ້ມູນ ຫຼັກຖານ ໃໝ່ ໃນເວລາຕັດສິນ;
4. ເຫດການອື່ນ ທີ່ຊີ້ບອກເຖິງ ຂໍ້ມູນ ຫຼັກຖານ ໃໝ່ ຊຶ່ງສານບໍ່ໄດ້ຮູ້ໃນເວລາລົງຄຳຕັດສິນ ຫຼື ຄຳພິພາກສາ;
5. ການຂໍຮື້ຟື້ນ ຂອງບຸກຄົນທີ່ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ກ່ຽວກັບຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

### ມາດຕາ 332 (ປັບປຸງ) ກຳນົດເວລາຂໍຮື້ຟື້ນຄະດີ

ຄູ່ຄວາມສາມາດ ຂໍຮື້ຟື້ນຄະດີ ພາຍໃນເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບຊາບ ຄຳຕັດສິນ, ຄຳພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ເປັນຕົ້ນໄປ. ໃນກໍລະນີ ບຸກຄົນທີສາມ ບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີນັ້ນ ໃຫ້ນັບແຕ່ວັນຮັບຊາບ ຄຳຕັດສິນ ຫຼື ຄຳພິພາກສາດັ່ງກ່າວ ຂອງສານ ເປັນຕົ້ນໄປ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີສິດສະເໜີຮື້ຟື້ນຄະດີ ເພື່ອປົກປ້ອງ ຜົນປະໂຫຍດຂອງລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດ ຂອງເດັກ, ບຸກຄົນອື່ນ ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ໂດຍບໍ່ມີກຳນົດ.

**ມາດຕາ 333 (ປັບປຸງ) ການຍື່ນຄໍາຮ້ອງຂໍຮື້ຟື້ນຄະດີ**

ຄູ່ຄວາມ ຫຼື ບຸກຄົນທີສາມ ມີສິດຍື່ນຄໍາຮ້ອງຂໍຮື້ຟື້ນຄະດີ ໃນກໍລະນີໄດ້ພົບເຫັນ ຂໍ້ມູນ ຫຼັກຖານ ໃໝ່ ຕໍ່ສານປະຊາຊົນສູງສຸດ, ຍົກເວັ້ນກໍລະນີ ທີ່ໄດ້ກໍານົດໄວ້ໃນມາດຕາ 332 ວັກທີສອງ ຂອງກົດໝາຍສະບັບນີ້. ຄູ່ຄວາມທີ່ຂໍຮື້ຟື້ນຄະດີນັ້ນ ໃຫ້ເສຍເງິນຄ່າຂໍຮື້ຟື້ນ ຕາມກົດໝາຍ.

ສານປະຊາຊົນສູງສຸດ ພິຈາລະນາການຮື້ຟື້ນຄະດີ ໃຫ້ປະຕິບັດດັ່ງດຽວກັນກັບລະບຽບການພິຈາລະນາຄະດີຢູ່ສານຂັ້ນລົບລ້າງ.

**ມາດຕາ 334 (ປັບປຸງ) ການດໍາເນີນການຮື້ຟື້ນຄະດີ**

ເມື່ອໄດ້ຮັບຄໍາຮ້ອງຂໍຮື້ຟື້ນຄະດີ ຂອງຄູ່ຄວາມ ຫຼື ການສະເໜີຂອງອົງການໄອຍະການປະຊາຊົນສູງສຸດ ແລ້ວສານປະຊາຊົນສູງສຸດ ຕ້ອງຮຽກຄູ່ຄວາມ, ບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີ ມາຮັບຊາບ ແລະ ຊີ້ແຈງເຫດຜົນຂອງຕົນ ກ່ຽວກັບການຂໍຮື້ຟື້ນຄະດີ ພ້ອມທັງກວດກາ ຂໍ້ມູນ ຫຼັກຖານ ຢ່າງລະອຽດ, ຖ້າຫາກບໍ່ມີສາເຫດພາໃຫ້ມີການຮື້ຟື້ນ ກໍອອກຄໍາຕົກລົງບໍ່ຮື້ຟື້ນ. ຄໍາຕົກລົງບໍ່ຮື້ຟື້ນ ໃຫ້ແຈ້ງຕໍ່ຄູ່ຄວາມ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ໃນຄະດີຮັບຊາບ.

ໃນກໍລະນີ ມີສາເຫດພາໃຫ້ມີການຮື້ຟື້ນຕາມຄໍາຮ້ອງຂໍຮື້ຟື້ນຄະດີຂອງຄູ່ຄວາມ ຫຼື ການສະເໜີຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ກໍນໍາສະເໜີ ຕໍ່ກອງປະຊຸມສະພາຜູ້ພິພາກສາ ພິຈາລະນາຕາມກົດໝາຍ.

ໃນກໍລະນີ ການຕົກລົງບໍ່ຮື້ຟື້ນຄະດີ ຂອງສະພາຜູ້ພິພາກສາ ມີການລະເມີດກົດໝາຍຢ່າງຮ້າຍແຮງ ຫຼື ພົບເຫັນຫຼັກຖານໃໝ່ສໍາຄັນ ທີ່ເປັນພື້ນຖານເຮັດໃຫ້ມີການປ່ຽນແປງການຕົກລົງ ຊຶ່ງສະພາຜູ້ພິພາກສາ ຫຼື ຄູ່ຄວາມບໍ່ສາມາດຮູ້ໄດ້ໃນເວລາອອກຄໍາຕົກລົງດັ່ງກ່າວ, ຖ້າຫາກມີການສະເໜີຂອງ ຄະນະປະຈໍາສະພາແຫ່ງຊາດ, ກໍາມາທິການທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ, ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຫຼື ການສະເໜີຂອງປະທານສານປະຊາຊົນສູງສຸດ ແມ່ນສະພາຜູ້ພິພາກສາ ສານປະຊາຊົນສູງສຸດ ຈະພິຈາລະນາຄືນຄໍາຕົກລົງດັ່ງກ່າວ.

**ມາດຕາ 335 (ປັບປຸງ) ປະເພດຄໍາຕົກລົງຂອງການຮື້ຟື້ນຄະດີ**

ປະເພດຄໍາຕົກລົງຂອງສະພາຜູ້ພິພາກສາ ສານປະຊາຊົນສູງສຸດ ທີ່ພິຈາລະນາການຮື້ຟື້ນ ມີ ດັ່ງນີ້:

1. ຍົກເລີກ ຄໍາຮ້ອງຂໍຂອງຄູ່ຄວາມ ຫຼື ຄໍາສະເໜີຮື້ຟື້ນຄະດີ ແລ້ວຕົກລົງບໍ່ຮື້ຟື້ນຄະດີ;
2. ລົບລ້າງ ຄໍາຕັດສິນ ຫຼື ຄໍາພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດຂອງສານ ແລ້ວສົ່ງສໍານວນຄະດີໃຫ້ສານຂັ້ນຕົ້ນຄະນະໃໝ່ ພິຈາລະນາຕາມກົດໝາຍ.

**ມາດຕາ 336 (ປັບປຸງ) ການດໍາເນີນການເມື່ອມີການຕົກລົງບໍ່ຮື້ຟື້ນຄະດີ**

ເມື່ອສານປະຊາຊົນສູງສຸດຄົ້ນຄວ້າເຫັນວ່າ ຄໍາຮ້ອງຂໍ ຫຼື ຄໍາສະເໜີຮື້ຟື້ນຄະດີ ບໍ່ມີເຫດຜົນທີ່ເປັນພື້ນຖານໃຫ້ແກ່ການຮື້ຟື້ນຄະດີດັ່ງກ່າວ ສານປະຊາຊົນສູງສຸດ ຈະອອກຄໍາຕົກລົງບໍ່ຮື້ຟື້ນຄະດີ ແລ້ວສົ່ງໄປຍັງ ກອງ ຫຼື ຫ້ອງປະຕິບັດຄໍາຕັດສິນຂອງສານ ທີ່ກ່ຽວຂ້ອງ.

**ມາດຕາ 337 (ປັບປຸງ) ການດໍາເນີນການເມື່ອມີການຕົກລົງໃຫ້ຮື້ຟື້ນຄະດີ**

ພາຍຫຼັງ ສານປະຊາຊົນສູງສຸດ ໄດ້ຕົກລົງໃຫ້ຮື້ຟື້ນຄະດີແລ້ວ ຕ້ອງສົ່ງສໍານວນຄະດີດັ່ງກ່າວ ໃຫ້ສານຂັ້ນຕົ້ນທີ່ກ່ຽວຂ້ອງຄະນະໃໝ່ ພິຈາລະນາຕາມຂັ້ນຕອນຂອງກົດໝາຍ.

ສານຂັ້ນຕົ້ນ ຕ້ອງເລີ່ມດໍາເນີນຄະດີດັ່ງກ່າວ ຄືນໃໝ່ທັງໝົດ ຕາມລະບຽບການພິຈາລະນາຄະດີຢູ່ສານຂັ້ນຕົ້ນ ໂດຍໃຫ້ນໍາໃຊ້ ຂໍ້ມູນ ຫຼັກຖານ ເກົ່າ ແລະ ຂໍ້ມູນ ຫຼັກຖານ ໃໝ່ ທີ່ມີໃນສໍານວນຄະດີ.

ຄໍາຕັດສິນຂອງສານຂັ້ນຕົ້ນ ໃນກໍລະນີດັ່ງກ່າວ ຕ້ອງບົ່ງບອກຮູບຄະດີ ທີ່ສານແຕ່ລະຂັ້ນໄດ້ດໍາເນີນຜ່ານມາ.

# ພາກທີ XVI
# ການດຳເນີນຄະດີ ການຮ້ອງຂໍທາງແພ່ງ
## ໝວດທີ 1
## ຂໍ້ບັນຍັດທົ່ວໄປສຳລັບການຮ້ອງຂໍທາງແພ່ງ

### ມາດຕາ 338 (ປັບປຸງ) ການພິຈາລະນາການຮ້ອງຂໍທາງແພ່ງ

ການຮ້ອງຂໍທາງແພ່ງ ແມ່ນ ບັນຫາບໍ່ເປັນຂໍ້ຂັດແຍ່ງ ແຕ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃດໜຶ່ງ ມີຄວາມຈຳເປັນຕ້ອງຮ້ອງຂໍຕໍ່ສານ ເພື່ອໃຫ້ສານພິຈາລະນາ ອອກຄຳຕັດສິນ ຢັ້ງຢືນ ຫຼື ຮັບຮູ້ ບັນຫາໃດໜຶ່ງ ຊຶ່ງສານຈະດຳເນີນໂດຍບໍ່ມີ ຈຳເລີຍ ຫຼື ຝ່າຍກົງກັນຂ້າມເຂົ້າຮ່ວມ ຄືດັ່ງຄະດີທົ່ວໄປ.

### ມາດຕາ 339 ຂອບເຂດການພິຈາລະນາການຮ້ອງຂໍ

ສານ ພິຈາລະນາການຮ້ອງຂໍໄດ້ ກໍຕໍ່ເມື່ອການຮ້ອງຂໍນັ້ນ ຖືກຕ້ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ ມາດຕາ 347, 353, 359 ແລະ ມາດຕາ 367 ຂອງກົດໝາຍສະບັບນີ້.

ສານປະຊາຊົນເຂດ ມີສິດອຳນາດພິຈາລະນາການຮ້ອງຂໍທາງແພ່ງ ກ່ຽວກັບບັນຫາທາງແພ່ງ ແລະ ຄອບຄົວ, ສ່ວນການຮ້ອງຂໍກ່ຽວກັບບັນຫາການຄ້າ ແລະ ເດັກ ແມ່ນ ສິດ ແລະ ໜ້າທີ່ຂອງສານປະຊາຊົນ ນະຄອນຫຼວງ, ແຂວງ ແລະ ສານເດັກ ເປັນຜູ້ພິຈາລະນາ.

### ມາດຕາ 340 (ປັບປຸງ) ຄຳຮ້ອງຂໍໃຫ້ສານພິຈາລະນາ

ຄຳຮ້ອງຂໍ ໃຫ້ສານພິຈາລະນາ ຕ້ອງເຮັດເປັນລາຍລັກອັກສອນ ແລະ ຍື່ນຕໍ່ສານ ທີ່ມີສິດອຳນາດ.

ຄຳຮ້ອງຂໍ ຕ້ອງປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຊື່ຂອງສານທີ່ຄຳຮ້ອງຂໍຍື່ນເຖິງ;
2. ຊື່, ນາມສະກຸນ, ອາຍຸ, ອາຊີບ, ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ;
3. ສາຍພົວພັນຂອງຜູ້ຮ້ອງຂໍກັບເຫດການທີ່ຮ້ອງຂໍ;
4. ເຫດການຂອງຄະດີໂດຍຫຍໍ້;
5. ບັນຫາທີ່ຮ້ອງຂໍໃຫ້ສານພິຈາລະນາ;
6. ລາຍເຊັນ ແລະ ການແປະໂປ້ມື ຂອງຜູ້ຮ້ອງຂໍ;
7. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

ຜູ້ຮ້ອງຂໍ ຕ້ອງປະກອບເອກະສານ, ຫຼັກຖານທີ່ກ່ຽວຂ້ອງ ຄັດຕິດໄປພ້ອມກັບຄຳຮ້ອງຂໍ ໂດຍຜ່ານ ຫ້ອງການບ້ານ.

### ມາດຕາ 341 (ປັບປຸງ) ຜູ້ເຂົ້າຮ່ວມໃນການດຳເນີນຄະດີ

ຜູ້ເຂົ້າຮ່ວມໃນການດຳເນີນຄະດີ ກ່ຽວກັບການຮ້ອງຂໍ ປະກອບດ້ວຍ ຜູ້ຮ້ອງຂໍ, ຜູ້ຕາງໜ້າ ອົງການ ປົກຄອງທ້ອງຖິ່ນ ຫຼື ອົງການຈັດຕັ້ງ, ພະຍານ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ.

ຜູ້ຮ້ອງຂໍ ຕ້ອງເຂົ້າຮ່ວມໃນການດຳເນີນຄະດີ ແລະ ຕ້ອງຊີ້ແຈງ ກ່ຽວກັບການຮ້ອງຂໍຕໍ່ສານ, ສານອາດ ຈະເຊີນບຸກຄົນອື່ນທີ່ກ່ຽວຂ້ອງ ເຂົ້າມາຮ່ວມໃນການດຳເນີນຄະດີ ເພື່ອໃຫ້ຂໍ້ມູນ ແລະ ຊີ້ແຈງ ກ່ຽວກັບປະເດັນ ຮ້ອງຂໍ. ໃນກໍລະນີ ການຮ້ອງຂໍ ພົວພັນກັບຜົນປະໂຫຍດຂອງລັດ, ລວມໝູ່, ສັງຄົມ, ສິດ ແລະ ຜົນປະໂຫຍດ ຂອງເດັກ, ບຸກຄົນອື່ນທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ກໍຕ້ອງເຊີນພະນັກງານໄອຍະການປະຊາຊົນເຂົ້າ ຮ່ວມ.

**ມາດຕາ 342 ການພິຈາລະນາການຮ້ອງຂໍ ໃນທີ່ປະຊຸມສານ**

ສານ ຕ້ອງດຳເນີນການພິຈາລະນາການຮ້ອງຂໍ ໃນທີ່ປະຊຸມສານຢ່າງເປີດເຜີຍ. ລະບຽບການເປີດປະຊຸມສານ ໃຫ້ປະຕິບັດດັ່ງດຽວກັນກັບຂັ້ນຕອນ ຂອງການປະຊຸມສານທົ່ວໄປຢູ່ສານຂັ້ນຕົ້ນ.

ຄະນະສານ ສະເໜີໃຫ້ຜູ້ຮ້ອງຂໍມີຄຳເຫັນ ແລະ ໄຕ່ສວນພະຍານ ລວມທັງບຸກຄົນອື່ນ ທີ່ກ່ຽວຂ້ອງ.

ຄະນະສານ ນຳເອົາ ຂໍ້ມູນ ຫຼັກຖານ ມາພິຈາລະນາໃນທີ່ປະຊຸມສານ ແລະ ສະເໜີໃຫ້ພະນັກງານໄອຍະການປະຊາຊົນ ມີຄຳເຫັນກ່ອນການພິຈາລະນາ ໃນຫ້ອງປະຊຸມລັບ.

**ມາດຕາ 343 (ປັບປຸງ) ການຕົກລົງກ່ຽວກັບການຮ້ອງຂໍທາງແພ່ງ**

ໃນການຕົກລົງກ່ຽວກັບການຮ້ອງຂໍທາງແພ່ງ ສານຕ້ອງອອກເປັນຄຳຕັດສິນ ຊຶ່ງເນື້ອໃນຄຳຕັດສິນດັ່ງກ່າວ ຕ້ອງບົ່ງບອກເຖິງເຫດການຂອງຄະດີ ແລະ ໃຫ້ເຫດຜົນແຕ່ລະປະເດັນຢ່າງລະອຽດ.

ຄຳຕັດສິນກ່ຽວກັບການຮ້ອງຂໍທາງແພ່ງ ຕ້ອງສົ່ງໃຫ້ ອົງການໄອຍະການປະຊາຊົນຂັ້ນຂອງຕົນເພື່ອກວດກາ ແລະ ກອງ ຫຼື ຫ້ອງ ປະຕິບັດຄຳຕັດສິນຂອງສານ ເພື່ອປະຕິບັດ ຖ້າຫາກບໍ່ມີການຂໍອຸທອນ ຫຼື ສະເໜີຄັດຄ້ານ.

**ມາດຕາ 344 (ປັບປຸງ) ການຂໍອຸທອນ ຫຼື ສະເໜີຄັດຄ້ານ**

ຜູ້ຮ້ອງຂໍ, ບຸກຄົນອື່ນທີ່ກ່ຽວຂ້ອງ ມີສິດຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳຕັດສິນຂອງສານ ກ່ຽວກັບການຮ້ອງຂໍທາງແພ່ງ ຕາມກຳນົດເວລາຂໍອຸທອນ ຫຼື ສະເໜີຄັດຄ້ານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 345 ຂອງກົດໝາຍສະບັບນີ້.

**ມາດຕາ 345 (ປັບປຸງ) ກຳນົດເວລາຂໍອຸທອນ ຫຼື ສະເໜີຄັດຄ້ານ**

ຜູ້ຮ້ອງຂໍ, ບຸກຄົນອື່ນ ທີ່ກ່ຽວຂ້ອງ ມີສິດຂໍອຸທອນ, ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳຕັດສິນຂອງສານ ພາຍໃນເວລາ ຊາວວັນ ນັບແຕ່ວັນຮັບຊາບຄຳຕັດສິນ ເປັນຕົ້ນໄປ.

**ມາດຕາ 346 (ປັບປຸງ) ປະເພດການຮ້ອງຂໍທາງແພ່ງ**

ການຮ້ອງຂໍທາງແພ່ງ ແບ່ງອອກເປັນປະເພດ ດັ່ງນີ້:

1. ການຮ້ອງຂໍໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ການຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ;
3. ການຮ້ອງຂໍໃຫ້ຢັ້ງຢືນໃບຕາດິນເສຍຫາຍ;
4. ການຮ້ອງຂໍໃຫ້ສານຕັດສິນ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ;
5. ການຮ້ອງຂໍອື່ນທີ່ເຫັນວ່າມີຄວາມຈຳເປັນ.

## ໝວດທີ 2
## ການຮ້ອງຂໍໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ

**ມາດຕາ 347 ຄຳຮ້ອງຂໍ ໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ພໍ່ແມ່, ຜູ້ປົກຄອງ, ຜູ້ຕາງໜ້າໂຮງຮຽນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານ ໃຫ້ພິຈາລະນາຕັດສິນຮັບຮູ້ວ່າ ບຸກຄົນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ.

ຄຳຮ້ອງຂໍ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີເນື້ອໃນຄົບຖ້ວນ ຕາມຮ່າງແບບພິມຂອງສານ ແລະ ປະກອບເອກະສານຫຼັກຖານ ທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ເປັນຕົ້ນໃບຢັ້ງຢືນຂອງຄະນະແພດ.

ຜູ້ຮ້ອງຂໍ ຫຼື ຜູ້ຮັບມອບໝາຍ ຕ້ອງຍື່ນຄຳຮ້ອງຕໍ່ສານຂັ້ນຕົ້ນ ທີ່ມີສິດອຳນາດ.

**ມາດຕາ 348 (ປັບປຸງ) ການຮັບຄຳຮ້ອງຂໍໃຫ້ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດມາພິຈາລະນາ**

ເມື່ອໄດ້ຮັບຄຳຮ້ອງຂໍແລ້ວ ສານຕ້ອງນຳມາພິຈາລະນາ, ເວັ້ນເສຍແຕ່ຄຳຮ້ອງຂໍດັ່ງກ່າວຫາກ ບໍ່ຖືກຕ້ອງ, ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 340 ຂອງກົດໝາຍສະບັບນີ້. ໃນກໍລະນີບໍ່ຖືກຕ້ອງ ສານຕ້ອງແນະນຳໃຫ້ຜູ້ຮ້ອງຂໍແກ້ໄຂຂໍ້ບົກພ່ອງນັ້ນເສຍກ່ອນ ຈຶ່ງຮັບມາພິຈາລະນາ.

ເມື່ອເຫັນວ່າຄຳຮ້ອງຂໍຖືກຕ້ອງແລ້ວ ສານຕ້ອງຂຶ້ນຟ້ອງຄະດີ ແລ້ວນຳເອົາອອກມາພິຈາລະນາພາຍໃນເວລາ ສິບຫ້າວັນ.

**ມາດຕາ 349 (ປັບປຸງ) ລະບຽບການນຳ ຄະດີ ກ່ຽວກັບການຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ຫົວໜ້າຄະນະສານ ຕ້ອງມອບສຳນວນຄະດີ ໃຫ້ຜູ້ພິພາກສາຜູ້ໃດໜຶ່ງ ຄົ້ນຄວ້າ, ກວດກາ ຂໍ້ມູນ ຫຼັກຖານ ໃບຢັ້ງຢືນຂອງຄະນະແພດ, ສອບຖາມຜູ້ຄຸ້ມຄອງ ແລະ ພະຍານອື່ນທີ່ກ່ຽວຂ້ອງ. ເມື່ອເຫັນວ່າ ຂໍ້ມູນ ຫຼັກຖານ ຄົບຖ້ວນ ພຽງພໍແລ້ວຜູ້ພິພາກສາ ກໍສະຫຼຸບເຫດການຂອງຄະດີ ເພື່ອນຳອອກພິຈາລະນາຕັດສີນ.

ລະບຽບການພິຈາລະນາ ໃນທີ່ປະຊຸມສານ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 342 ຂອງກົດໝາຍສະບັບນີ້.

ໃນໄລຍະເວລາດຳເນີນຄະດີ ຖ້າຜູ້ຖືກຮ້ອງຂໍ ໃຫ້ຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫາກຄືນສູ່ສະພາບປົກກະຕິ ຕາມການຢັ້ງຢືນຂອງຄະນະແພດແລ້ວ ຜູ້ຮ້ອງຂໍຕ້ອງຖອນຄຳຮ້ອງຂໍຂອງຕົນ ແລະ ສານຕ້ອງຊັດມ້ຽນຄະດີດັ່ງກ່າວ.

**ມາດຕາ 350 ຄຳຕັດສີນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ສານ ຈະລົງຄຳຕັດສີນ ຮັບຮູ້ ຫຼື ບໍ່ຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ. ໃນກໍລະນີ ສານລົງຄຳຕັດສີນຮັບຮູ້ວ່າ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວ ໃນຄຳຕັດສີນນັ້ນ ຍັງຕ້ອງກຳນົດຜູ້ປົກຄອງຂອງຜູ້ກ່ຽວ ເຖິງຈະບໍ່ມີການຮ້ອງຂໍກໍຕາມ.

**ມາດຕາ 351 ຜົນສະທ້ອນຂອງຄຳຕັດສີນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດ ທາງດ້ານການປະພຶດ**

ເມື່ອມີຄຳຕັດສີນຮັບຮູ້ວ່າບຸກຄົນໃດໜຶ່ງ ເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດແລ້ວ ການກະທຳຂອງຜູ້ກ່ຽວ ຈະບໍ່ມີຜົນທາງດ້ານກົດໝາຍແຕ່ຢ່າງໃດ ເປັນຕົ້ນ ການເຮັດສັນຍາ.

ຊັບສິນບັດ ຂອງຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຈະຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ປົກຄອງຂອງຜູ້ກ່ຽວ. ຜູ້ປົກຄອງດັ່ງກ່າວມີສິດນຳໃຊ້ຊັບສິນບັດນັ້ນ ເຂົ້າໃນເປົ້າໝາຍການ ເບິ່ງແຍງ, ລ້ຽງດູ ຜູ້ກ່ຽວ ຫຼື ປົກປັກຮັກສາຊັບສິນບັດນັ້ນ ບໍ່ໃຫ້ຕົກເຮ່ຍເສຍຫາຍ.

**ມາດຕາ 352 ການລົບລ້າງຄຳຕັດສີນ ຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ**

ເມື່ອຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ກັບຄືນສູ່ສະພາບປົກກະຕິ ຕາມການຢັ້ງຢືນຂອງຄະນະແພດແລ້ວ ຜູ້ຮ້ອງຂໍ ຫຼື ຜູ້ກ່ຽວເອງ ມີສິດສະເໜີຕໍ່ສານຂັ້ນຕົ້ນ ທີ່ກ່ຽວຂ້ອງພິຈາລະນາຕັດສີນລົບລ້າງຄຳຕັດສີນຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດນັ້ນ.

ການພິຈາລະນາຄຳຮ້ອງຂໍລົບລ້າງຄຳຕັດສີນນັ້ນ ຕ້ອງໃຫ້ສຳເລັດພາຍໃນເວລາ ສິບຫ້າວັນ.

ເມື່ອສານໄດ້ລົບລ້າງຄຳຕັດສີນດັ່ງກ່າວແລ້ວ ສິດທັງໝົດຂອງຜູ້ກ່ຽວ ກໍຈະຖືກຟື້ນຟູຄືນ.

## ໝວດທີ 3
## ການຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ

**ມາດຕາ 353 ຄໍາຮ້ອງຂໍໃຫ້ປະກາດວ່າເປັນ ຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ**

ຜົວ ຫຼື ເມຍ, ພໍ່, ແມ່, ຍາດພີ່ນ້ອງ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ພິຈາລະນາຕັດສິນປະກາດວ່າ ບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ; ຄໍາຮ້ອງຂໍຕ້ອງຂຽນເປັນລາຍລັກອັກສອນ ແລະ ມີເນື້ອໃນຄົບຖ້ວນຕາມຮ່າງແບບພິມຂອງສານ ແລະ ປະກອບເອກະສານທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວ ຫາຍສາບສູນ ຫຼື ເສຍຊີວິດ.

ສໍາລັບຄໍາຮ້ອງຂໍປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ນັ້ນຍັງຕ້ອງບົ່ງບອກວ່າບຸກຄົນດັ່ງກ່າວໄດ້ຫາຍໄປຈາກຄອບຄົວ ໂດຍຂາດການຕິດຕໍ່ເປັນເວລາ ສອງປີ ຫຼື ກໍລະນີເກີດອຸບປະຕິເຫດຫາກບໍ່ຮູ້ຂ່າວຄາວເປັນເວລາ ຫົກເດືອນ ພ້ອມຄັດຕິດເອກະສານທີ່ຢັ້ງຢືນ ວ່າໄດ້ຊອກຫາດ້ວຍ ການແຈ້ງຄວາມ, ປະກາດ ຫຼື ດ້ວຍວິທີການອື່ນແລ້ວ. ສ່ວນຄໍາຮ້ອງຂໍປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ເສຍຊີວິດນັ້ນ ຍັງຕ້ອງບົ່ງບອກຫຼັກຖານທີ່ຢັ້ງຢືນວ່າບຸກຄົນດັ່ງກ່າວໄດ້ຫາຍໄປ ໃນສົງຄາມ, ໃນເວລາມີໄພພິບັດ, ພາຍຫຼັງສິ້ນສຸດ ສົງຄາມ ຫຼື ໄພພິບັດແລ້ວ ກໍໄດ້ພະຍາຍາມ ຊອກຫາ, ຊອກຄົ້ນ ແຕ່ບໍ່ພົບເຫັນ ຊາກສົບ ຫຼື ຮ່ອງຮອຍ ພາຍໃນເວລາ ສອງປີ ແຕ່ບໍ່ພົບໂດຍມີການຢັ້ງຢືນຂອງ ພະຍານ, ຜູ້ຊ່ຽວຊານ, ຜູ້ຊໍານານ ຫຼື ນັກວິຊາການທາງການແພດ.

ຜູ້ຮ້ອງຂໍ ຫຼື ຜູ້ຮັບມອບໝາຍ ຕ້ອງຍື່ນຄໍາຮ້ອງຂໍ ຕໍ່ສານຂັ້ນຕົ້ນ ທີ່ມີສິດອໍານາດ.

**ມາດຕາ 354 ການຮັບຄໍາຮ້ອງຂໍໃຫ້ປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດມາພິຈາລະນາ**

ເມື່ອໄດ້ຮັບຄໍາຮ້ອງຂໍແລ້ວ ສານຕ້ອງກວດກາເບິ່ງວ່າ ຄໍາຮ້ອງຂໍນັ້ນ ແມ່ນບຸກຄົນທີ່ມີສິດ ຫຼື ບໍ່, ຄໍາຮ້ອງຂໍດັ່ງກ່າວປະຕິບັດຕາມແບບພິມ ແລະ ມີເນື້ອໃນຄົບຖ້ວນ ຖືກຕ້ອງ ແລະ ມີ ຂໍ້ມູນ ຫຼັກຖານ ທີ່ພົວພັນກັບການຮ້ອງຂໍດັ່ງກ່າວພຽງພໍ ຫຼື ບໍ່. ຖ້າຄໍາຮ້ອງຂໍບໍ່ຖືກຕ້ອງ ສານຈະແນະນໍາໃຫ້ຜູ້ຮ້ອງຂໍແກ້ໄຂຂໍ້ບົກພ່ອງດັ່ງກ່າວເສຍກ່ອນ ຈຶ່ງຮັບມາພິຈາລະນາ.

ເມື່ອເຫັນວ່າ ຄໍາຮ້ອງຂໍຖືກຕ້ອງແລ້ວ ສານຕ້ອງຂຶ້ນຟ້ອງຄະດີ ແລ້ວນໍາເອົາອອກມາພິຈາລະນາພາຍໃນເວລາ ສິບຫ້າວັນ.

**ມາດຕາ 355 (ປັບປຸງ) ການດໍາເນີນຄະດີ ກ່ຽວກັບການປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ**

ຫົວໜ້າຄະນະສານ ຕ້ອງມອບສໍານວນຄະດີ ໃຫ້ຜູ້ພິພາກສາຜູ້ໃດໜຶ່ງ ຄົ້ນຄວ້າ, ກວດກາ ຂໍ້ມູນ ຫຼັກຖານ ໃບຢັ້ງຢືນເຫດການທີ່ແຈ້ງຄວາມ ແລະ ການຊອກຫາບຸກຄົນທີ່ກ່ຽວຂ້ອງ. ຖ້າເຫັນວ່າມີ ຂໍ້ມູນ ຫຼັກຖານຄົບຖ້ວນແລ້ວ ຄະນະສານຕ້ອງອອກຄໍາຕົກລົງປະກາດຫາບຸກຄົນດັ່ງກ່າວ ຜ່ານທາງພາຫະນະສື່ມວນຊົນ, ຕິດປະກາດຢູ່ຫ້ອງ ການສານປະຊາຊົນທີ່ກ່ຽວຂ້ອງ, ຫ້ອງການບ້ານ ແລະ ບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວ ພາຍໃນເວລາ ສາມເດືອນ.

ເມື່ອໝົດກໍານົດເວລາຂອງການປະກາດແລ້ວ ຄະນະສານຕ້ອງນໍາເອົາຄະດີດັ່ງກ່າວ ອອກພິຈາລະນາຕັດສິນໃນທີ່ປະຊຸມສານ. ການພິຈາລະນາໃນທີ່ປະຊຸມສານ ໃຫ້ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 342 ຂອງກົດໝາຍສະບັບນີ້.

ໃນໄລຍະເວລາດໍາເນີນຄະດີ ຖ້າຜູ້ກ່ຽວຫາກກັບມາ ຫຼື ມີການຖອນຄໍາຮ້ອງຂໍແລ້ວ ສານຕ້ອງຊັດມ້ຽນຄະດີດັ່ງກ່າວ.

**ມາດຕາ 356 ຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ**

ສານ ອາດຈະລົງຄຳຕັດສິນ ປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ ຫຼື ຍົກເລີກການຮ້ອງຂໍ ຫຼື ຕັດສິນບໍ່ປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ, ເມື່ອສານລົງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ ໃນຄຳຕັດສິນນັ້ນ ຕ້ອງລົງຄຳຕັດສິນແຕ່ງຕັ້ງຜູ້ຄຸ້ມຄອງຊັບສິນມໍລະດົກຂອງຜູ້ກ່ຽວ.

**ມາດຕາ 357 ຜົນສະທ້ອນຂອງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ**

ເມື່ອສານໄດ້ຕັດສິນປະກາດວ່າ ບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ ຖ້າຫາກຜູ້ກ່ຽວມີຊັບສິນມໍລະດົກ ເຈົ້າໜີ້ຂອງຜູ້ກ່ຽວມີສິດຮ້ອງຂໍຕໍ່ສານ ເພື່ອທວງເອົາການໃຊ້ແທນໜີ້ສິນ ແລະ ໃຫ້ປະກາດຂາຍຊັບສິນມໍລະດົກຂອງຜູ້ກ່ຽວ ເພື່ອໃຊ້ແທນ.

ຜູ້ສືບທອດຂອງຜູ້ກ່ຽວ ມີສິດໄດ້ຮັບການແບ່ງປັນມູນມໍລະດົກ ຕາມກົດໝາຍ.

ຜູ້ຄຸ້ມຄອງຊັບສິນມໍລະດົກຂອງຜູ້ກ່ຽວ ມີສິດຊີ້ຂາດກ່ຽວກັບຊັບສິນມໍລະດົກ ເພື່ອໃຊ້ຈ່າຍໃນການປົກປັກຮັກສາຊັບສິນມໍລະດົກ ຫຼື ເປັນຄ່າລ້ຽງດູລູກ (ຖ້າມີ).

**ມາດຕາ 358 ການຮ້ອງຂໍລົບລ້າງຄຳຕັດສິນປະກາດວ່າເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ**

ເມື່ອເຫັນວ່າ ບຸກຄົນໃດໜຶ່ງທີ່ສານໄດ້ລົງຄຳຕັດສິນປະກາດວ່າ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດ ກັບຄືນມາ ຫຼື ມີຫຼັກຖານ ທີ່ເຊື່ອຖືໄດ້ວ່າຜູ້ກ່ຽວຍັງມີຊີວິດຢູ່ ຜູ້ຮ້ອງຂໍ ຫຼື ຜູ້ກ່ຽວເອງ ມີສິດຮ້ອງຂໍຕໍ່ສານຂັ້ນຕົ້ນທີ່ກ່ຽວຂ້ອງ ເພື່ອພິຈາລະນາຕັດສິນລົບລ້າງຄຳຕັດສິນ ປະກາດວ່າ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດນັ້ນ.

ຄຳຮ້ອງຂໍລົບລ້າງຄຳຕັດສິນດັ່ງກ່າວ ຕ້ອງຄັດຕິດເອກະສານ ແລະ ຫຼັກຖານ ທີ່ຢັ້ງຢືນວ່າຜູ້ກ່ຽວຍັງມີຊີວິດຢູ່ ພ້ອມທັງໃຫ້ເຫດຜົນທີ່ບໍ່ໄດ້ຕິດຕໍ່ຫາຄອບຄົວ.

ການພິຈາລະນາລົບລ້າງຄຳຕັດສິນປະກາດວ່າບຸກຄົນໃດໜຶ່ງ ເປັນຜູ້ຫາຍສາບສູນ ຫຼື ຜູ້ເສຍຊີວິດນັ້ນຕ້ອງໃຫ້ສຳເລັດ ພາຍໃນເວລາ ສິບຫ້າວັນ.

ເມື່ອສານ ໄດ້ລົບລ້າງຄຳຕັດສິນດັ່ງກ່າວແລ້ວ ສິດທັງໝົດຂອງຜູ້ກ່ຽວກໍຈະຖືກຟື້ນຟູຄືນ. ຊັບສິນມໍລະດົກທີ່ຍັງເຫຼືອຢູ່ ຕ້ອງສົ່ງຄືນໃຫ້ຜູ້ກ່ຽວ.

## ໝວດທີ 4
## ການຮ້ອງຂໍໃຫ້ຢັ້ງຢືນໃບຕາດິນເສຍຫາຍ

**ມາດຕາ 359 ຄຳຮ້ອງຂໍໃຫ້ຢັ້ງຢືນໃບຕາດິນເສຍຫາຍ**

ຄຳຮ້ອງຂໍໃຫ້ສານພິຈາລະນາຢັ້ງຢືນໃບຕາດິນເສຍຫາຍ ຕ້ອງຍື່ນຜ່ານອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນປະຈຳຂັ້ນເມືອງທີ່ກ່ຽວຂ້ອງ. ຄຳຮ້ອງຂໍຕ້ອງບົ່ງບອກປະຫວັດຄວາມເປັນມາຂອງ ທີ່ດິນ, ເຫດຜົນຂອງການເສຍຫາຍຂອງໃບຕາດິນ ແລະ ຄັດຕິດເອກະສານຫຼັກຖານ ທີ່ກ່ຽວຂ້ອງກັບທີ່ດິນດັ່ງກ່າວ (ຖ້າມີ).

**ມາດຕາ 360 (ປັບປຸງ) ການຄົ້ນຄວ້າ ຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ**

ພາຍຫຼັງ ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນ ໄດ້ຮັບຄຳຮ້ອງຂໍແລ້ວ ຕ້ອງໄດ້ຄົ້ນຄວ້າ, ເກັບກຳ ຂໍ້ມູນຫຼັກຖານ ແລະ ປະຫວັດຄວາມເປັນມາຂອງທີ່ດິນນັ້ນ ແລ້ວເຮັດບົດສະຫຼຸບ ພ້ອມດ້ວຍຄຳເຫັນກ່ຽວກັບເຫດການດັ່ງກ່າວ ເພື່ອໃຫ້ສານພິຈາລະນາຢັ້ງຢືນການເສຍຫາຍຂອງໃບຕາດິນ.

**ມາດຕາ 361 ການຮັບປະກັນຂອງເຈົ້າຂອງສິດນຳໃຊ້ທີ່ດິນ**

ເມື່ອສານ ໄດ້ຮັບຄຳຮ້ອງຂໍພ້ອມດ້ວຍ ຂໍ້ມູນ ຫຼັກຖານ ຈາກອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນແລ້ວ ສານກໍຕ້ອງຮຽກເຈົ້າຂອງສິດນຳໃຊ້ທີ່ດິນ ເຂົ້າມາໃຫ້ການ, ຢັ້ງຢືນກ່ຽວກັບການໄດ້ມາ ຊຶ່ງສິດນຳໃຊ້ທີ່ດິນຕອນດັ່ງກ່າວ ທັງຮັບປະກັນການເສຍຫາຍຂອງໃບຕາດິນນັ້ນ.

**ມາດຕາ 362 (ປັບປຸງ) ການພິຈາລະນາຂອງສານກ່ຽວກັບການຢັ້ງຢືນໃບຕາດິນເສຍຫາຍ**

ກ່ອນການພິຈາລະນາຕັດສິນຂອງສານນັ້ນ ຕ້ອງໄດ້ລົງກວດກາທີ່ດິນດັ່ງກ່າວ ຮ່ວມກັບຫ້ອງການບ້ານ ແລະ ພາກສ່ວນທີ່ກ່ຽວຂ້ອງ ແລ້ວອອກແຈ້ງການ ຫຼື ປະກາດຜ່ານພາຫະນະສື່ມວນຊົນ ກ່ຽວກັບການຮ້ອງຂໍດັ່ງກ່າວ ໂດຍຕິດໄວ້ຢູ່ບ່ອນທີ່ດິນຕັ້ງຢູ່, ຫ້ອງການບ້ານ ບ່ອນດິນຕັ້ງຢູ່ ແລະ ຫ້ອງການສານປະຊາຊົນທີ່ກ່ຽວຂ້ອງ ເປັນເວລາ ສາມສິບວັນ. ຖ້າຫາກບໍ່ມີບຸກຄົນໃດ ຄັດຄ້ານ ຫຼື ທັກທ້ວງແລ້ວ ສານກໍຈະລົງຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ.

**ມາດຕາ 363 ຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ**

ຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ ມີໂຄງຮ່າງສະເພາະ ຕາມການກຳນົດຂອງສານປະຊາຊົນສູງສຸດ. ຄຳຕັດສິນຕ້ອງບົ່ງບອກປະຫວັດຄວາມເປັນມາຂອງດິນ ແລະ ສາເຫດຂອງການເສຍຫາຍ ຂອງໃບຕາດິນ.

ຄຳຕັດສິນຢັ້ງຢືນໃບຕາດິນເສຍຫາຍ ມີຜົນບັງຄັບປະຕິບັດ ນັບແຕ່ວັນລົງຄຳຕັດສິນ ເປັນຕົ້ນໄປ.

**ມາດຕາ 364 ການອອກສຳເນົາໃບຕາດິນໃໝ່**

ພາຍຫຼັງສານໄດ້ຕັດສິນແລ້ວ ຜູ້ຮ້ອງຂໍຕ້ອງນຳເອົາຄຳຕັດສິນດັ່ງກ່າວ ໄປຢັ້ງຢືນອອກສຳເນົາໃບຕາດິນໃໝ່. ອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນບ່ອນກ່ຽວຂ້ອງ ຕ້ອງອອກສຳເນົາໃບຕາດິນໃໝ່ ຕາມຄຳຕັດສິນຂອງສານບົນພື້ນຖານການຮ້ອງຂໍຕາມລະບຽບການ.

**ມາດຕາ 365 ການຂໍອຸທອນ ຫຼື ຂໍຄັດຄ້ານຄຳຕັດສິນ ຢັ້ງຢືນໃບຕາດິນເສຍຫາຍ**

ຜູ້ຮ້ອງຂໍ ມີສິດຂໍອຸທອນຄຳຕັດສິນຂອງສານ ທີ່ບໍ່ຢັ້ງຢືນໃບຕາດິນເສຍຫາຍ ພາຍໃນເວລາ ຊາວວັນ ນັບແຕ່ວັນຮັບຊາບຄຳຕັດສິນ ເປັນຕົ້ນໄປ.

ໃນຂັ້ນຕອນຂອງການອອກສຳເນົາໃບຕາດິນ ຂອງອົງການທີ່ຮັບຜິດຊອບຄຸ້ມຄອງທີ່ດິນນັ້ນ ຖ້າຫາກມີບຸກຄົນໃດໜຶ່ງມາຄັດຄ້ານ ຜູ້ກ່ຽວຕ້ອງຍື່ນຄຳຮ້ອງຂໍຄັດຄ້ານນັ້ນ ຕໍ່ສານທີ່ກ່ຽວຂ້ອງເພື່ອພິຈາລະນາ.

ເມື່ອມີການຮ້ອງຂໍຄັດຄ້ານຄຳຕັດສິນ ສານຕ້ອງອອກຄຳສັ່ງອາຍັດການອອກສຳເນົາໃບຕາດິນ ແລ້ວນຳເອົາຄຳຮ້ອງຂໍຄັດຄ້ານນັ້ນ ມາພິຈາລະນາຕາມກົດໝາຍ.

## ໝວດທີ 5

## ການຮ້ອງຂໍໃຫ້ສານຕັດສິນໃນກໍລະນີລູກໜີ້ເອົາຕົວຫຼົບໜີ

**ມາດຕາ 366 (ປັບປຸງ) ປະເພດຄະດີ ທີ່ສາມາດຮ້ອງຂໍໃຫ້ສານຕັດສິນ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ສານ ສາມາດນຳເອົາຄະດີມາພິຈາລະນາຕັດສິນ ໃນກໍລະນີ ລູກໜີ້ ເອົາຕົວຫຼົບໜີຈາກການດຳເນີນຄະດີ ແລະ ການຕັດສິນດັ່ງກ່າວຖືວ່າຊ້ອງໜ້າໃນກໍລະນີ ດັ່ງນີ້:

1. ຄະດີກ່ຽວກັບສັນຍາກູ້ຢືມ ທີ່ໂຈດຮ້ອງຟ້ອງທວງເອົາເງິນຄືນ ແຕ່ລູກໜີ້ໄດ້ເອົາຕົວຫຼົບໜີຈາກການດຳເນີນຄະດີ ໂດຍບໍ່ມີເຫດຜົນ ຫຼື ບໍ່ສາມາດຕິດຕໍ່ໄດ້ ແຕ່ຫາກປະຊຸມສົນໄວ້;
2. ຄະດີກ່ຽວກັບສາຍຜົວເມຍ ຊຶ່ງ ຜົວ ຫຼື ເມຍ ເອົາຕົວຫຼົບໜີ ໂດຍບໍ່ມີເຫດຜົນ ຫຼື ບໍ່ ສາມາດຕິດຕໍ່ໄດ້;
3. ຄະດີອື່ນ ທີ່ລູກໜີ້ເອົາຕົວຫຼົບໜີ ໂດຍບໍ່ມີເຫດຜົນ ຫຼື ບໍ່ສາມາດຕິດຕໍ່ໄດ້.

**ມາດຕາ 367 (ປັບປຸງ) ຄຳຮ້ອງຂໍໃຫ້ສານພິຈາລະນາ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ເມື່ອສານບໍ່ສາມາດຮຽກລູກໜີ້ ເຂົ້າມາແກ້ຟ້ອງ ແລະ ເຈົ້າໜີ້ ກໍບໍ່ຮູ້ທີ່ຢູ່ໃໝ່ຂອງລູກໜີ້ ຫຼື ຕິດຕໍ່ກັບລູກໜີ້ບໍ່ໄດ້ ເຈົ້າໜີ້ສາມາດຍື່ນຄຳຮ້ອງຂໍຕໍ່ສານ ເພື່ອໃຫ້ພິຈາລະນາ ໂດຍບໍ່ມີລູກໜີ້ເຂົ້າຮ່ວມ ແລະ ນຳເອົາຄຳຮ້ອງຂໍດັ່ງກ່າວມາພິຈາລະນາຕັດສິນ ພາຍຫຼັງໄດ້ປະຕິບັດຂັ້ນຕອນທີ່ໄດ້ກຳນົດໄວ້ໃນມາດຕາ 370 ແລະ ມາດຕາ 371 ຂອງກົດໝາຍສະບັບນີ້ແລ້ວ.

**ມາດຕາ 368 (ປັບປຸງ) ການຮັບຄຳຮ້ອງຂໍ ໃຫ້ສານພິຈາລະນາ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ເມື່ອລູກໜີ້ເອົາຕົວຫຼົບໜີ ແລະ ເຈົ້າໜີ້ໄດ້ຍື່ນຄຳຮ້ອງຂໍຕໍ່ສານ ເພື່ອໃຫ້ພິຈາລະນາຕັດສິນ ໂດຍບໍ່ມີລູກໜີ້ເຂົ້າຮ່ວມນັ້ນ ສານຕ້ອງຮັບຄຳຮ້ອງຂໍດັ່ງກ່າວມາພິຈາລະນາ, ເວັ້ນເສຍແຕ່ ບໍ່ຖືກຕ້ອງ, ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 340 ຂອງກົດໝາຍສະບັບນີ້. ໃນກໍລະນີ ບໍ່ຖືກຕ້ອງ, ຄົບຖ້ວນ ສານຕ້ອງແນະນຳໃຫ້ຜູ້ຮ້ອງຂໍແກ້ໄຂຂໍ້ບົກຜ່ອງດັ່ງກ່າວ.

ເມື່ອເຫັນວ່າ ຄຳຮ້ອງຂໍຖືກຕ້ອງແລ້ວ ສານຕ້ອງຂຶ້ນຟ້ອງຄະດີ ແລ້ວນຳເອົາອອກມາພິຈາລະນາ.

**ມາດຕາ 369 (ປັບປຸງ) ການດຳເນີນຄະດີ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ຫົວໜ້າຄະນະສານ ຕ້ອງມອບສຳນວນຄະດີ ໃຫ້ຜູ້ພິພາກສາ ຄົ້ນຄວ້າ, ເກັບກຳ ຂໍ້ມູນ ຫຼັກຖານຕາມການຮ້ອງຂໍຂອງເຈົ້າໜີ້ ພ້ອມທັງຮຽກ ຫຼື ເຊີນເອົາ ພໍ່, ແມ່, ຍາດພີ່ນ້ອງໃກ້ຊິດ, ການຈັດຕັ້ງຂອງລູກໜີ້ ຫຼື ນາຍບ້ານທີ່ກ່ຽວຂ້ອງມາໃຫ້ການຕໍ່ສານ ແລະ ຕິດປະກາດ ຫຼື ແຈ້ງຜ່ານພາຫະນະສື່ມວນຊົນ ເພື່ອຊອກຫາລູກໜີ້ໃຫ້ມາແກ້ຄຳຮ້ອງຂໍ ກ່ອນຈະນຳເອົາຄະດີດັ່ງກ່າວອອກພິຈາລະນາຕັດສິນ.

ການພິຈາລະນາໃນທີ່ປະຊຸມສານ ໃຫ້ປະຕິບັດຕາມ ທີ່ໄດ້ກຳນົດໄວ້ໃນມາດຕາ 342 ຂອງກົດໝາຍສະບັບນີ້.

**ມາດຕາ 370 (ປັບປຸງ) ການຕິດປະກາດໝາຍຮຽກຂອງສານ**

ເມື່ອສານໄດ້ຮັບຄຳຮ້ອງຂໍ ແລະ ການຢັ້ງຢືນຮັບປະກັນຈາກຜູ້ຮ້ອງຂໍແລ້ວ ສານຕ້ອງປະກາດໃຫ້ລູກໜີ້ເຂົ້າມາຮັບຊາບຄຳຮ້ອງຂໍ ແລະ ແກ້ຄຳຮ້ອງຂໍ ຕໍ່ການຮ້ອງຂໍຂອງເຈົ້າໜີ້ ໂດຍໃຫ້ເອົາໝາຍຮຽກຂອງສານ ໄປຕິດໄວ້ຢູ່ບ່ອນຢູ່ສຸດທ້າຍຂອງລູກໜີ້, ຫ້ອງການບ້ານ ແລະ ຫ້ອງການສານປະຊາຊົນທີ່ດຳເນີນຄະດີດັ່ງກ່າວ ເປັນເວລາສາມເດືອນ.

**ມາດຕາ 371 (ປັບປຸງ) ການເຂົ້າຮ່ວມຂອງຍາດພີ່ນ້ອງໃນການດຳເນີນຄະດີ**

ສານ ຕ້ອງຮຽກ ພໍ່, ແມ່, ຍາດພີ່ນ້ອງໃກ້ຊິດ ຫຼື ການຈັດຕັ້ງຂອງລູກໜີ້ ມາໃຫ້ການກ່ຽວກັບການຫຼົບໜີ, ຊັບສົມບັດຂອງລູກໜີ້ ຢ່າງລະອຽດ ແລະ ບັນຫາອື່ນ ທີ່ກ່ຽວຂ້ອງ ເພື່ອເປັນຂໍ້ມູນໃນການພິຈາລະນາຕັດສິນ.

ເມື່ອມີຄວາມຈຳເປັນ ສານຕ້ອງລົງກວດກາຊັບສິນຂອງລູກໜີ້.

**ມາດຕາ 372 ຄຳຕັດສິນຂອງສານ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ເມື່ອເຫັນວ່າຄຳຮ້ອງຂໍຂອງເຈົ້າໜີ້ ມີເຫດຜົນ ຫຼື ບໍ່ມີເຫດຜົນ ສານຈະລົງຄຳຕັດສິນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 366 ຂອງກົດໝາຍສະບັບນີ້.

**ມາດຕາ 373 ການແຈ້ງ ແລະ ການປະກາດຄຳຕັດສິນຂອງສານ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ພາຍຫຼັງ ສານຕັດສິນຢັ້ງຢືນ ຕາມການຮ້ອງຂໍຂອງເຈົ້າໜີ້ແລ້ວ ສານຕ້ອງນຳເອົາຄຳຕັດສິນດັ່ງກ່າວແຈ້ງໃຫ້ ພໍ່, ແມ່, ຍາດພີ່ນ້ອງໃກ້ຊິດ, ການຈັດຕັ້ງ ຫຼື ນາຍບ້ານທີ່ກ່ຽວຂ້ອງເພື່ອຮັບຊາບ ໃນກໍລະນີ ມີການຕັດສິນ

ລັບຫຼັງພວກກ່ຽວ, ຈາກນັ້ນ ຈຶ່ງນຳເອົາຄຳຕັດສິນດັ່ງກ່າວໄປຕິດປະກາດຢູ່ບ່ອນຊຸມຕັ້ງຢູ່, ຫ້ອງການບ້ານ, ອົງການທີ່ກ່ຽວຂ້ອງອື່ນ ແລະ ບ່ອນຢູ່ສຸດທ້າຍຂອງລູກໜີ້ ເປັນເວລາ ສາມສິບວັນ.

**ມາດຕາ 374 ການຂໍອຸທອນ ຫຼື ຂໍຄັດຄ້ານຄຳຕັດສິນ ໃນກໍລະນີລູກໜີ້ເອົາຕົວຫຼົບໜີ**

ເຈົ້າໜີ້ ມີສິດຂໍອຸທອນ ຫຼື ຂໍຄັດຄ້ານຄຳຕັດສິນ ພາຍໃນເວລາຊາວວັນ ນັບແຕ່ວັນຮັບຊາບຄຳຕັດສິນເປັນຕົ້ນໄປ.

ລູກໜີ້ ມີສິດຂໍອຸທອນ ຫຼື ຂໍຄັດຄ້ານຄຳຕັດສິນຂອງສານ ພາຍໃນເວລາຕິດປະກາດ ສາມສິບວັນ ຫຼື ຊາວວັນ ຫຼັງຈາກໝົດກຳນົດເວລາຕິດປະກາດແລ້ວ. ຖ້າຫາກບໍ່ມີການຂໍອຸທອນ ຫຼື ຂໍຄັດຄ້ານ ພາຍໃນກຳນົດເວລາດັ່ງກ່າວ ໃຫ້ຖືວ່າຄຳຕັດສິນດັ່ງກ່າວ ເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງຕ້ອງສົ່ງໄປປະຕິບັດ ໃນເວລາ ສາມວັນ.

**ມາດຕາ 375 ການພິຈາລະນາຄືນໃໝ່ຂອງສານ ເມື່ອມີການຄັດຄ້ານຄຳຕັດສິນ**

ເມື່ອມີການຄັດຄ້ານຄຳຕັດສິນນັ້ນ ສານທີ່ກ່ຽວຂ້ອງ ຕ້ອງນຳເອົາຄະດີດັ່ງກ່າວມາດຳເນີນຄືນໃໝ່ ໂດຍໃຫ້ລູກໜີ້ ຂຽນຄຳແກ້ຄຳຮ້ອງຂໍ ແລະ ປະກອບຫຼັກຖານໃຫ້ແກ່ສານ ເພື່ອດຳເນີນຕາມຂັ້ນຕອນຂອງກົດໝາຍ.

ຄຳໃຫ້ການ, ການລົງກວດສະຖານທີ່ຂັດແຍ່ງ ແລະ ຫຼັກຖານອື່ນທີ່ກ່ຽວຂ້ອງທີ່ຜ່ານມາ ກໍໃຫ້ນຳມາເປັນຫຼັກຖານປະກອບເຂົ້າໃນການຄົ້ນຄວ້າພິຈາລະນາຂອງສານ ຕາມລະບຽບການ.

## ພາກທີ XVII
## ການຮ່ວມມືສາກົນກ່ຽວກັບການດຳເນີນຄະດີແພ່ງ

**ມາດຕາ 376 ຫຼັກການຮ່ວມມືສາກົນໃນການດຳເນີນຄະດີແພ່ງ**

ການດຳເນີນຄະດີແພ່ງ ລະຫວ່າງສານປະຊາຊົນ ແຫ່ງ ສປປ ລາວ ກັບ ສານຕ່າງປະເທດ ຕ້ອງປະຕິບັດຕາມຫຼັກການເຄົາລົບເອກະລາດ, ອຳນາດອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ໃນກໍລະນີ ບໍ່ມີສົນທິສັນຍາ ຫຼື ສັນຍາສາກົນກັບຕ່າງປະເທດນັ້ນ ສປປ ລາວ ອາດຮັບເອົາຄະດີມາພິຈາລະນາບົນ ຫຼັກການຮ່ວມມື ຊຶ່ງກັນ ແລະ ກັນ ແຕ່ບໍ່ໃຫ້ຂັດກັບກົດໝາຍຂອງ ສປປ ລາວ.

**ມາດຕາ 377 ການດຳເນີນຄະດີລະຫວ່າງປະເທດ**

ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ຢູ່ ສປປ ລາວ ທີ່ມີຈຸດປະສົງຮ້ອງຟ້ອງ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດຢູ່ຕ່າງປະເທດ ຫຼື ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດຢູ່ຕ່າງປະເທດ ທີ່ມີຈຸດປະສົງຮ້ອງຟ້ອງ ບຸກຄົນ, ອົງການຈັດຕັ້ງ ຫຼື ວິສາຫະກິດ ຢູ່ ສປປ ລາວ ໃຫ້ປະຕິບັດຕາມສົນທິສັນຍາຮ່ວມມືທາງດ້ານຍຸຕິທຳ. ໃນກໍລະນີ ບໍ່ມີສົນທິສັນຍານັ້ນ ກໍໃຫ້ຍື່ນຄຳຮ້ອງຟ້ອງຜ່ານກະຊວງການຕ່າງປະເທດ ເພື່ອນຳສົ່ງໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຂອງປະເທດບ່ອນຈຳເລີຍ ອາໄສຢູ່ພິຈາລະນາ.

ໃນກໍລະນີ ຂໍ້ຂັດແຍ່ງຂອງຄົນຕ່າງປະເທດດ້ວຍກັນ ທີ່ໄດ້ກຳນົດໄວ້ໃນສັນຍາ ໃຫ້ສານ ແຫ່ງ ສປປ ລາວ ເປັນຜູ້ດຳເນີນການແກ້ໄຂນັ້ນ ໃຫ້ປະຕິບັດຕາມກົດໝາຍສະບັບນີ້.

**ມາດຕາ 378 (ປັບປຸງ) ການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ**

ສປປ ລາວ ຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງສານຕ່າງປະເທດ ໂດຍຜ່ານສະຖານທູດ, ກົງສູນ ຫຼື ອົງການຕາງໜ້າ ຂອງ ສປປ ລາວ ຢູ່ຕ່າງປະເທດ ແລະ ໄດ້ແປເປັນພາສາລາວແລ້ວ.

ສານ ແຫ່ງ ສປປ ລາວ ຈະພິຈາລະນາຕັດສິນຮັບຮູ້ ໃນກໍລະນີ ດັ່ງນີ້:

1. ຄຳຕັດສິນຂອງປະເທດພາຄີຂອງສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ;
2. ຄຳຕັດສິນນັ້ນ ບໍ່ແຕະຕ້ອງເຖິງອະທິປະໄຕ, ບໍ່ຂັດກັບລັດຖະທຳມະນູນ ແລະ ກົດໝາຍ ຂອງ ສປປ ລາວ;
3. ຄຳຕັດສິນນັ້ນ ບໍ່ແຕະຕ້ອງເຖິງຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມລາວ.

ການຮັບຮູ້ຄຳຕັດສິນ ຂອງຄະນະກຳມະການຕັດສິນຕ່າງປະເທດ ກໍໃຫ້ປະຕິບັດດັ່ງດຽວກັນກັບການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ.

**ມາດຕາ 379 ຄຳຮ້ອງຂໍໃຫ້ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ**

ຄຳຮ້ອງຂໍ ໃຫ້ພິຈາລະນາຮັບຮູ້ ຄຳຕັດສິນຂອງສານຕ່າງປະເທດ ແລະ ນຳມາປະຕິບັດໃນ ສປປ ລາວ ຕ້ອງຍື່ນຜ່ານກະຊວງການຕ່າງປະເທດ ເພື່ອນຳສະເໜີຕໍ່ກະຊວງຍຸຕິທຳ ພິຈາລະນາກວດກາ ກ່ອນການສະເໜີຕໍ່ສານປະຊາຊົນສູງສຸດ ເພື່ອສັ່ງໃຫ້ສານ ທີ່ມີສິດອຳນາດພິຈາລະນາ ຕາມກົດໝາຍ.

ຄຳຮ້ອງຂໍ ໃຫ້ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ຊື່, ນາມສະກຸນ ແລະ ທີ່ຢູ່ຂອງຜູ້ຮ້ອງຂໍ;
2. ຊື່, ນາມສະກຸນ ແລະ ທີ່ຢູ່ຂອງບຸກຄົນທີ່ເສຍຄະດີ ໃນຄຳຕັດສິນຂອງສານຕ່າງປະເທດ ທີ່ມີທີ່ຢູ່ໃນ ສປປ ລາວ;
3. ຄຳຮ້ອງຂໍ ທີ່ບົ່ງບອກຈຳນວນໜີ້ສິນ, ຊັບສິນທີ່ຍັງຄ້າງປະຕິບັດ;
4. ລາຍເຊັນ, ລາຍໂປ້ມື ຂອງຜູ້ຮ້ອງຂໍ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

ຄຳຮ້ອງຂໍ ຕ້ອງແປເປັນພາສາລາວ ທີ່ມີການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານ.

ຄ່າໃຊ້ຈ່າຍ ກ່ຽວກັບການດຳເນີນຄະດີ ໃນກໍລະນີນີ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຄ່າທຳນຽມສານ.

**ມາດຕາ 380 ເອກະສານທີ່ຄັດຕິດມານຳຄຳຮ້ອງຂໍ**

ເອກະສານທີ່ຄັດຕິດມານຳ ຮ້ອງຂໍ ຕ້ອງປະກອບດ້ວຍ:

1. ຄຳຕັດສິນຂອງສານຕ່າງປະເທດທີ່ກ່ຽວຂ້ອງ;
2. ໜັງສືຢັ້ງຢືນຂອງສານຕ່າງປະເທດ ທີ່ກ່ຽວຂ້ອງວ່າຄຳຕັດສິນດັ່ງກ່າວໃຊ້ໄດ້ຢ່າງເດັດຂາດ;
3. ສົນທິສັນຍາທີ່ກ່ຽວຂ້ອງ ທີ່ ສປປ ລາວ ເປັນພາຄີ;
4. ເອກະສານອື່ນທີ່ກ່ຽວຂ້ອງ.

ເອກະສານດັ່ງກ່າວ ຕ້ອງໄດ້ແປເປັນພາສາລາວ ໂດຍມີການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານ.

**ມາດຕາ 381 ຂັ້ນຕອນການພິຈາລະນາກ່ຽວກັບການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ**

ເມື່ອໄດ້ຮັບຄຳຮ້ອງຂໍ ໃຫ້ຮັບຮູ້ຄຳຕັດສິນຂອງສານຕ່າງປະເທດແລ້ວ ສານທີ່ກ່ຽວຂ້ອງ ແຫ່ງ ສປປ ລາວ ຕ້ອງນຳເອົາເອກະສານມາປະກອບເປັນສຳນວນຄະດີ ແລະ ຂຶ້ນຟ້ອງ ແລ້ວມອບໃຫ້ຜູ້ພິພາກສາ ເປັນຜູ້ຄົ້ນຄວ້າ.

ສານ ຕ້ອງຮຽກຜູ້ເສຍຄະດີ ຕາມຄຳຕັດສິນຂອງສານຕ່າງປະເທດ ທີ່ອາໄສຢູ່ໃນ ສປປ ລາວ ມາຮັບຊາບ ແລະ ຊີ້ແຈງຕໍ່ສານ.

ສານ ຕ້ອງນຳເອົາຄະດີດັ່ງກ່າວ ອອກພິຈາລະນາຕັດສີນ ພາຍໃນເວລາ ສາມສິບວັນ.

ສານ ຕ້ອງເຊີນຫົວໜ້າອົງການໄອຍະການປະຊາຊົນຂັ້ນຂອງຕົນ ເຂົ້າຮ່ວມໃນການພິຈາລະນາບັນຫາດັ່ງກ່າວ.

**ມາດຕາ 382 ຄຳຕັດສີນຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ**

ສານ ຈະພິຈາລະນາຕັດສີນຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ ທີ່ຮ້ອງຂໍມາ.

ສານ ຈະພິຈາລະນາຕັດສີນບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ ຕາມການຮ້ອງຂໍ ໃນກໍລະນີໃດໜຶ່ງດັ່ງນີ້:

1. ຄຳຕັດສີນດັ່ງກ່າວ ຍັງຢູ່ໃນຂັ້ນຕອນການດຳເນີນຄະດີ ຊຶ່ງຍັງບໍ່ເປັນຄຳຕັດສີນທີ່ໃຊ້ໄດ້ຢ່າງເດັດຂາດ;
2. ຜູ້ເສຍຄະດີ ໃນຄຳຕັດສີນຂອງສານຕ່າງປະເທດນັ້ນ ຍັງບໍ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີ ໂດຍມີການຕັດສີນລັບຫຼັງພູກ່ຽວ;
3. ຄະດີທີ່ສານຕ່າງປະເທດດຳເນີນນັ້ນ ຕົກຢູ່ໃນສິດອຳນາດຂອງສານ ແຫ່ງ ສປປ ລາວ ເປັນຜູ້ດຳເນີນ;
4. ຄຳຕັດສີນດັ່ງກ່າວ ຂັດກັບລັດຖະທຳມະນູນ ແລະ ກົດໝາຍ ຂອງ ສປປ ລາວ;
5. ບັນຫາອື່ນ ກ່ຽວກັບຄຳຕັດສີນຂອງສານຕ່າງປະເທດ.

**ມາດຕາ 383 (ປັບປຸງ) ການແຈ້ງການຮັບຮູ້ ຫຼື ການບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ**

ເມື່ອສານ ແຫ່ງ ສປປ ລາວ ໄດ້ພິຈາລະນາຕັດສີນຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ ແລ້ວສານດັ່ງກ່າວຕ້ອງສົ່ງຄຳຕັດສີນ ໃຫ້ແກ່ຄູ່ຄວາມ ແລະ ຫົວໜ້າອົງການໄອຍະການປະຊາຊົນ ເພື່ອຮັບຊາບ. ໃນກໍລະນີ ຄູ່ຄວາມຫາກຢູ່ຕ່າງປະເທດ ສານກໍຈະສົ່ງຄຳຕັດສີນດັ່ງກ່າວຜ່ານກະຊວງຍຸຕິທຳ ເພື່ອດຳເນີນການຕາມລະບຽບການ.

**ມາດຕາ 384 (ປັບປຸງ) ການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສີນ**

ຄູ່ຄວາມ ມີສິດຂໍອຸທອນ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ມີສິດສະເໜີຄັດຄ້ານຄຳຕັດສີນຂອງສານ ແຫ່ງ ສປປ ລາວ ທີ່ຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສີນຂອງສານຕ່າງປະເທດ ພາຍໃນເວລາ ຊາວວັນ ນັບແຕ່ວັນຮັບຊາບຄຳຕັດສີນ ເປັນຕົ້ນໄປ.

ເມື່ອມີການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສີນດັ່ງກ່າວ ສານທີ່ກ່ຽວຂ້ອງ ຕ້ອງສົ່ງສຳນວນຄະດີຂຶ້ນຫາສານຂັ້ນອຸທອນ ເພື່ອພິຈາລະນາເຫດຜົນຂອງການຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນ.

ຄຳພິພາກສາ ຂອງສານຂັ້ນອຸທອນ ກ່ຽວກັບບັນຫາດັ່ງກ່າວ ໃຫ້ຖືເປັນຄຳຕັດສີນທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງບໍ່ສາມາດຂໍລົບລ້າງໄດ້.

## ພາກທີ XVIII
## ບົດບັນຍັດສຸດທ້າຍ

**ມາດຕາ 385 ການຈັດຕັ້ງປະຕິບັດ**

ລັດຖະບານ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 386 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 30 ມັງກອນ 2025 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບເລກທີ 13/ສພຊ, ລົງວັນທີ 4 ກໍລະກົດ 2012.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ